ສະກຸນຕົ້ນດອກເຜົ້ງ ຂອງ ປະເທດໄທ ລາວ, ກຳປູເຈຍ ແລະ ຫວຽດນາມ

Orchid Genera of Thailand Laos, Cambodia and Vietnam



A. Schuiteman E.F. de Vogel

Orchid Genera of Thailand, Laos, Cambodia, and Vietnam

André Schuiteman
&
Ed de Vogel

Lao-English edition

Nationaal Herbarium Nederland
Universiteit Leiden branch
The Netherlands

Universiteit Leiden

Nationaal Herbarium Nederland

Orchid Genera of Thailand, Laos, Cambodia, and Vietnam

Lao-English edition

ISBN 90-71236-42-0

Published:
June 2000

Authors:
André Schuiteman & Ed de Vogel

Khmer translation:
Bouakhaykhone Svengsuksa

Layout:
Connie Baak

Production:
Grafische Vormgeving Kanters, Sliedrecht

Cover design:
André Schuiteman, based on a photograph of
Bulbophyllum lemniscatoides Rolfe by Peter Jongejan

THE WORLD BANK

IUCN
The World Conservation Union

WWF

This publication has been made possible with funding from the CY 99 Environment Component of the World Bank / Netherlands Partnership Programme, through the IUCN Regional Biodiversity Programme for South and Southeast Asia. A donation by the World Wide Fund for Nature towards enlarging the print run is gratefully acknowledged.

Postal address:
P.O. Box 9514
2300 RA Leiden
The Netherlands

© Copyright of the text: Nationaal Herbarium Nederland.
© Copyright of the plates is with the photographers.
No part of this publication may be copied in any way without written permission from the copyright holders.

ສະກຸນຕົ້ນດອກເຜົ້ົ

ຂອງ

ประเทดไท, ลาอ, กำปูเจย และ ทองดมาม

ໂດຍ

André Schuiteman

&

Ed de Vogel

ຫໍພິພິທະພັນພືດ ແຫ່ງຊາດ, ເນເທີແລັນ

ມະຫາວິທະຍາໄລ ໄລເດັນ

ແປໂດຍ **ບົວໄຂຄອນ ສະແຫວງສຶກສາ**

ມະຫາວິທະຍາໄລແຫ່ງຊາດ, ສ.ປ.ປ.ລາວ, ປີ 2000

THE WORLD BANK

IUCN
The World Conservation Union

WWF

ການພິມປຶ້ມເຫຼັ້ມນີ້ສຳເລັດລົງໄດ້ຍ້ອນການສະໜັບສະໜູນຈາກ ຂະແໜງສິ່ງແວດລ້ອມ CY 99 ຂອງ ໂຄງການຮ່ວມມື ທະນາຄານໂລກກັບປະເທດເນເທີແລັນ ໂດຍຜ່ານອົງການ IUCN ດ້ານຄວາມຫຼາກຫຼາຍຊີວະພາບ ສຳລັບ ເອເຊຍພາກໃຕ້ ແລະ ພາກຕາເວັນອອກສ່ຽງໃຕ້. ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ອົງການ World Wide Fund ເພື່ອທຳມະຊາດທີ່ໃຫ້ທຶນ ສຳລັບການພິມກວ້າງຂວາງຕື່ມ.

ພາກເປີດຫົວເລື້ອງ

ຕົ້ນດອກເຜົ້ງເປັນຕົ້ນໄມ້ ທີ່ພິເສດດ້ວຍຫຼາຍດ້ານ. ການດຳລົງຊີວິດຂອງມັນແຕກຕ່າງຈາກຂອງພືດອື່ນ. ມັນເຕີບໂຕດີໃນບ່ອນທີ່ພືດອື່ນ ອາດຕາຍຍ້ອນຂາດອາຫານ ຫຼື ຍ້ອນຄວາມແຫ້ງແລ້ງ ຫຼື ຂາດແສງສະຫວ່າງ. ມັນສາມາດເກີດຢູ່ຕາມງ່າ ຫຼ້ອນຂອງຕົ້ນໄມ້ໃຫຍ່ ໂດຍຖືກແສງແດດເຜົາຢູ່ຕາມເຂດເສັ້ນສູນສູດ ຫຼື ບ່ອນທີ່ຫຸ້ມຫໍ່ດ້ວຍໄຄ ໃນປ່າປຸງກຊຶ້ນ ແລະ ເຢັນຂອງເຂດພູສູງ ຫຼື ໃນບ່ອນມີຮົ່ມຕະຫຼອດປີໃນປ່າຊຸ່ມຊື້ນຂອງເຂດຮ້ອນ ແລະ ຊຸ່ມ. ບັນດາແມ່ເຜົ້ງ, ແມງວັນ, ແຕນ, ແມງກະເບື້ອ ກາງເວັນ ແລະ ແມງກະເບື້ອກາງຄືນ ແລະ ຕະຫຼອດ ຮອດນົກໄດ້ແວະໄປຫາຕົ້ນດອກເຜົ້ງ ແລະ ເຮັດໃຫ້ການປະສົມພັນເກີດຂຶ້ນແຕ່ກໍ່ບໍ່ຄ່ອຍໄດ້ຮັບຜົນສະເໝີໄປ. ຕົ້ນດອກເຜົ້ງມີຈຸດພິເສດຫຼາຍຢູ່ບ່ອນວ່າ ມັນພິຖີພິຖັນໃນການເລືອກແຂກທີ່ຈະເຂົ້າມາເຖິງມັນ. ປະເດັນນີ້ຈະສະແດງອອກຢູ່ໃນຮູບຮ່າງ, ສີສັນ ແລະ ກິ່ນຂອງດອກເຜົ້ງເອງ. ແກ່ນຂອງດອກເຜົ້ງເປັນເມັດແລບໆ ເໝືອນຝຸ່ນບໍ່ສາມາດປິ່ງໜໍ່ດ້ວຍມັນເອງໄດ້ ຍ້ອນມັນຂາດທາດແຮ ໃນໜໍ່ລູກຊຶ່ງມີຂະໜາດນ້ອຍທີ່ສຸດ. ແກ່ນຂອງດອກເຜົ້ງຈະໃຫ້ໜໍ່ໄດ້ກໍ່ຕໍ່ເມື່ອມັນຖືກເຫັດເຊື້ອຣາຊຶມເຊື້ອໃສ່ແລ້ວເທົ່ານັ້ນ. ເຫັດເຊື້ອຣານີ້ອາດນອນໃນຊະນິດກາຝາກ ທີ່ກໍ່ອັນຕະລາຍ ແລະ ສາມາດທຳລາຍຕົ້ນໄມ້ໄດ້. ໃຜໆກໍ່ອາດຄິດວ່າຕົ້ນດອກເຜົ້ງທັງມີຂະໜາດນ້ອຍຫຼາຍ ແລະ ທັງອ່ອນນ້ອຍຈະມີເປີເຊັນນ້ອຍທີ່ສຸດທີ່ຈະລອດຈາກການຊຶມເຊື້ອແບບນີ້ໄດ້. ແຕ່ແລ້ວ, ພາຍໃຕ້ເງື່ອນໄຂສະດວກ, ຕົ້ນດອກເຜົ້ງພັດສາມາດຄວບຄຸມເຊື້ອຣາໄດ້ ແລະ ນຳໃຊ້ ແພຈຸລັງຂອງເຊື້ອຣາໂດຍບໍ່ໄດ້ກຳຈັດມັນຊ້ຳ. ແມ່ນວິທີທີ່ຕົ້ນດອກເຜົ້ງອ່ອນ ຮັບອາຫານຕົ້ນຕໍທີ່ບໍ່ສາມາດເອົາມາຈາກດິນໄດ້. ແຕ່ປຶ້ມເຫຼັ້ມນີ້ບໍ່ໄດ້ບັນລະຍາຍເຖິງຊີວະສາດຂອງຕົ້ນດອກເຜົ້ງ ແລະ ກໍ່ບໍ່ແມ່ນລັກສະນະຊີວະສາດຂອງມັນທີ່ດຶງດູດຄວາມສົນໃຈຂອງຜູ້ຄົນ ເຖິງວ່າລັກສະນະຊີວະສາດນັ້ນຈະ ເປັນທີ່ປະທັບໃຈຢູ່ກໍ່ຕາມ. ແມ່ນຄວາມງາມ, ຄວາມແປກປະຫຼາດ, ຄວາມຫຼາກຫຼາຍໜ້າອັດສະຈັນທາງດ້ານຮູບໂສມ ແລະ ສີສັນຂອງດອກເຜົ້ງທີ່ເຮັດໃຫ້ພວກເຮົາໄດ້ເພີດເພີນນຳ ແລະ ເຮັດໃຫ້ຕົ້ນດອກເຜົ້ງມີຄວາມພິເສດ.

ປຶ້ມເຫຼັ້ມນີ້ເປັນການແນະນຳດ້ານສະກຸນຂອງດອກເຜົ້ງຂອງ ສີ່ ປະເທດທີ່ໃກ້ຄຽງກັນ ໃນເອເຊຍຕາເວັນອອກສ່ຽງໃຕ້: ໄທ, ລາວ, ກຳປູເຈຍ, ຫວຽດນາມ. ໃນຂົງເຂດນີ້ ຄວາມຫຼາກຫຼາຍທາງດ້ານພູມສາດ, ດ້ານນິເວດວິທະຍາ ແລະ ດ້ານວັດທະນາທຳ ແລະ ຄວາມຫຼາກຫຼາຍທາງດ້ານດອກເຜົ້ງກໍ່ມີເທົ່າທຽມກັນ, ຊຶ່ງພໍປະເມີນໄດ້ ປະມານ 1400 ຊະນິດ, ສັ່ງກັດເຂົ້າໃນ 174 ສະກຸນ.

ຂໍ້ມູນກ່ຽວກັບຕົ້ນດອກເຜົ້ງໃນສີ່ປະເທດດັ່ງກ່າວໄດ້ພິມເປັນຈຳນວນຫຼາຍ ແລະ ແຈກຢາຍທົ່ວໄປແລ້ວ, ເອກກະສານພິມຫຼາຍຢ່າງກໍ່ມີລາຄາແພງ ຫຼື ວ່າຖືກຈຳໜ່າຍໝົດແລ້ວ ແລະ ຍາກທີ່ຈະຊອກໄດ້ໃນເອເຊຍ. ໃນປຶ້ມເຫຼັ້ມນີ້, ກ່ອນອື່ນໝົດຈຸດປະສົງຂອງຜູ້ຂຽນ ແມ່ນຢາກສະໜອງເຄື່ອງມືອັນພື້ນຖານເພື່ອຊ່ວຍໃຫ້ຜູ້ທີ່ຢູ່ໃນປະເທດເຫຼົ່ານີ້ສາມາດຈຳແນກສະກຸນຂອງຕົ້ນດອກເຜົ້ງທີ່ພົບໃນທຳມະຊາດໄດ້. ນອກນັ້ນ ຜູ້ຂຽນຍັງຫວັງວ່າຢ່າງໜ້ອຍ ປຶ້ມເຫຼັ້ມນີ້ ກໍຈະເຮັດໃຫ້ຄົນຈຳນວນໜຶ່ງ ມີຄວາມເປັນຫ່ວງເປັນໄຍນຳຄັ່ງສົມບັດ ທີ່ຍັງມີຊີວິດທີ່ມີຢູ່ໃນປ່າຂອງເຂົາເຈົ້າ ແລະ ຍັງຫວັງອີກວ່າມັນຈະກະຕຸກຊຸກຍູ້ ໃຫ້ເຂົາເຈົ້າພະຍາຍາມປົກປັກຮັກສາປ່າເຫຼົ່ານັ້ນອີກ.

ພວກເຮົາ, ຂໍສະແດງຄວາມຂອບໃຈນຳທ່ານ ດຣ. L. Averyanov ທີ່ໄດ້ປະກອບຂໍ້ມູນທີ່ໜ້າສົນໃຈ ຂອງສະກຸນດອກເຜົ້ງທີ່ພົບຢູ່ຫວຽດນາມ, ໂດຍສະເພາະຂໍ້ມູນໃໝ່ໆ ແລະ ໄດ້ສະເໜີກວດແກ້ບາງປະເດັນ. ທ່ານ P. Ormerod ກໍ່ໄດ້ແລກປ່ຽນຂໍ້ມູນທີ່ຍັງບໍ່ທັນໄດ້ພິມຈຳນວນໜຶ່ງແກ່ພວກເຮົາ. ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ ນັກພາບຂອງຮູບດ້ານຫຼັງຂອງປຶ້ມນີ້, ຖ້າຂາດຮູບດັ່ງກ່າວ ປຶ້ມເຫຼັ້ມນີ້ກໍ່ຈະບໍ່ດຶງດູດຄວາມສົນໃຈເທົ່າທີ່ຄວນ.

ຄວາມຫຼາກຫຼາຍ ແລະ ການແຈກຢາຍ

ຕົ້ນດອກເຜົ້ໆ 1400 ຊະນິດທີ່ໄດ້ກ່າວເຖິງຢູ່ໃນພາກເປີດຫົວເລື້ອງບໍ່ໄດ້ແຈກຢາຍໃນທົ່ວພາກພື້ນແບບບັງເອີນ. ຫຼາຍຊະນິດພົບຢູ່ປະເທດໄທເທົ່ານັ້ນ, ມີຊະນິດອື່ນທີ່ບໍ່ທັນເຄີຍພົບຢູ່ບ່ອນອື່ນນອກຈາກຊາຍແດນຂອງປະເທດຫວຽດນາມ ແລະ ຍັງມີບາງຊະນິດອື່ນອີກທີ່ແຈກຢາຍຢ່າງກວ້າງຂວາງແຕ່ສະເພາະໃນທີ່ສູງຂອງເຂດພູສູງ ແລະ ອື່ນໆ. ເວົ້າລວມໆ, ທັງສີ່ປະເທດມີພູມອາກາດລົມມໍລະສຸມຄ້າຍຄືກັນໂດຍມີສອງລະດູການຈະແຈ້ງ. ລົມມໍລະສຸມຕາເວັນຕົກສ່ຽງໃຕ້ເປັນອາກາດຮ້ອນ ແລະ ມີຝົນຕົກ (ແຕ່ເດືອນພຶດສະພາ ເຖິງ ເດືອນກັນຍາ / ເດືອນພະຈິກ), ສ່ວນລົມມໍລະສຸມຕາເວັນອອກສ່ຽງເໜືອ ເປັນອາກາດເຢັນ ແລະ ແຫ້ງ(ແຕ່ເດືອນພະຈິກ / ເດືອນທັນວາ ເຖິງ ເດືອນມີນາ), ແຕ່ ກໍ່ມີການປ່ຽນແປງລະດັບທ້ອງຖິ່ນຫຼາຍຢູ່. ຕົວຢ່າງໃນພາກເໜືອຂອງປະເທດຫວຽດນາມ, ລະດູໜາວ ຊຸ່ມກວ່າຢູ່ບ່ອນອື່ນໆ, ພາກໃຕ້ຂອງປະເທດໄທ ຮ້ອນ ແລະ ຊຸ່ມຕະຫຼອດປີ. ໂດຍອີງຕາມປະລິມານນ້ຳຝົນໃນແຕ່ລະບ່ອນ ປ່າໄມ້ໃນພາກພື້ນນີ້ ສາມາດເປັນປ່າສັບປ່ຽນໃບ ຫຼື ປ່າຂຽວຕະຫຼອດປີ. ບ່ອນໃດທີ່ມີປະລິມານນ້ຳຝົນຕ່ຳ, ເຊັ່ນໃນພາກຕາເວັນອອກສ່ຽງເໜືອຂອງປະເທດໄທ, ທົ່ວທັດຈະເດັ່ນໄປທາງດ້ານປ່າຄ້ຳ ຫຼາຍກວ່າ ປ່າຕົບ. ທັງໝົດ, ຄວາມປ່ຽນແປງໃນພູມອາກາດ ແລະ ໃນພືດພັນ ສະແດງອອກໃນການປະກອບມີຊະນິດຕ່າງໆຂອງດອກເຜົ້ງທ້ອງຖິ່ນ. ລວມຄວາມແລ້ວ, ສະພາບແວດລ້ອມທີ່ອຸດົມສົມບູນກວ່າໝູ່ທາງດ້ານຕົ້ນດອກເຜົ້ງແມ່ນປ່າເຂດພູສູງທີ່ຊຸ່ມຕະຫຼອດປີ ຊຶ່ງສູງເຖິງ 1.000 ມ. ຂຶ້ນເມືອ. ໃນເຂດຕ່ຳ, ຄວາມຮ້ອນຈັດ ແລະ ໄລຍະເວລາຂອງລະດູຮ້ອນເປັນປັດໃຈຕັດສິນ; ໃນເຂດທີ່ແຫ້ງກວ່າໝູ່ກໍ່ຍັງມີຕົ້ນດອກເຜົ້ງຢູ່ ແຕ່ບໍ່ຫຼາຍປານໃດ.

ໃນປະຈຸບັນ, ຕົ້ນດອກເຜົ້ງໃນປະເທດໄທເປັນທີ່ຮູ້ດີກວ່າຕົ້ນດອກເຜົ້ງໃນຫວຽດນາມ ແລະ ຕົ້ນດອກເຜົ້ງຢູ່ຫວຽດນາມ ພັດເປັນທີ່ຮູ້ດີກວ່າຕົ້ນດອກເຜົ້ງໃນລາວ ແລະ ໃນກຳປູເຈຍ. ພວກເຮົາເວົ້າໄດ້ວ່າ ຕົ້ນດອກເຜົ້ງຂອງປະເທດໄທ ເປັນທີ່ຮູ້ກັນດີໃນສູ່ມື້ນີ້ ກ່ຍ້ອນຄວາມພະຍາຍາມຂອງນັກການທູດ ແລະ ທັງເປັນນັກພືດສາດ ຊາວແດນມາກຄົນໜຶ່ງ, ທ່ານ ດຣ. Gunnar Seidenfaden. ທ່ານໄດ້ໃຊ້ເວລາຫວ່າງຂອງທ່ານເກືອບທັງໝົດ ເຂົ້າໃນການສຶກສາຕົ້ນດອກເຜົ້ງໃນພາກພື້ນ ຕະຫຼອດໄລຍະເວລາຍາວກວ່າ 40 ປີ. ເອກກະສານພິມຂອງທ່ານໄດ້ກາຍເປັນເອກກະສານຫຼັກໃຫ້ນັກສຶກສາໄດ້ອ່ານກ່ຽວກັບຕົ້ນດອກເຜົ້ງຢູ່ໃນໄທ ແລະ ໃນປະເທດໃກ້ຄຽງ. ໄດ້ມີການເກັບກຳວ່າຢູ່ໄທມີ 1.100 ຊະນິດຈັດຢູ່ໃນ 162 ສະກຸນ. ສ່ວນຫຼວງຫຼາຍດອກເຜົ້ງເຫຼົ່ານີ້ໄດ້ແຈກຢາຍຢ່າງຄັບຄັ່ງຢູ່ພາກໃຕ້ ແລະ ພາກຕາເວັນຕົກສ່ຽງເໜືອຂອງປະເທດ. ປະເທດໄທເປັນປະເທດທີ່ກວ້າງໃຫຍ່ກວ່າໝູ່ໃນຈຳນວນສີ່ປະເທດນີ້, ໂດຍມີເນື້ອທີ່ 514.000 ກມ^2. ພູສູງກວ່າໝູ່, ດອຍອິນທະນົນຢູ່ພາກຕາເວັນຕົກສ່ຽງເໜືອ, ມີລະດັບສູງ 2.576 ມ.

ສ່ວນປະເທດລາວ ເປັນປະເທດທີ່ຜູ້ຄົນຍັງຮູ້ຈັກໜ້ອຍທີ່ສຸດ ເປັນຕົ້ນແມ່ນກ່ຽວກັບຕົ້ນດອກເຜົ້ງ. ເບິ່ງໃນແງ່ນີ້ ປະເທດລາວອາດເປັນປະເທດທີ່ລຶກລັບກວ່າໝູ່ໃນໂລກ. ໄດ້ພົບຕົ້ນດອກເຜົ້ງພຽງ 335 ຊະນິດ ຈັດຢູ່ໃນ 85 ສະກຸນເທົ່ານັ້ນຢູ່ໃນປະເທດນີ້. ເຖິງຢ່າງໃດກໍ່ຕາມ, ເນື້ອທີ່ຂອງປະເທດລາວ, 236.800 ກມ^2, ກໍ່ພຽງແຕ່ນ້ອຍກວ່າເຄິ່ງໜຶ່ງຂອງປະເທດໄທໜ້ອຍດຽວເທົ່ານັ້ນ, ແຕ່ກໍ່ຍັງມີປ່າໄມ້ຫຼາຍກວ່າ, ມີພູຜາຫຼາຍກວ່າ ແລະ ສູງກວ່າ (ພູເບ້ຍ 2.817 ມ) ແລະ ຈຳນວນປະຊາກອນກໍ່ຕ່ຳກວ່າ. ທັງໝົດເປັນເຫດຜົນທີ່ເຮັດໃຫ້ເຊື່ອວ່ານັກພືດສາດໃນອານາຄົດຈະໄດ້ຄົ້ນພົບ ແລະ ເກັບກຳຈຳນວນຊະນິດຂອງດອກເຜົ້ງຫຼາຍກວ່າຈຳນວນທີ່ເກັບກຳໄດ້ໃນປະຈຸບັນສາມເທົ່າ.

ຢູ່ປະເທດກະປູເຈຍ, ຍັງເກັບກຳຈຳນວນຊະນິດຂອງຕົ້ນດອກເຜົ້ງໜ້ອຍກວ່າອີກ: 164 ຊະນິດ ຈັດໃນ 61 ສະກຸນ. ອີກເທື່ອໜຶ່ງ, ອັນນີ້ເປັນການປະເມີນຕ່ຳເກີນໄປເຖິງວ່າຈະຖືວ່າປະເທດກຳປູເຈຍນ້ອຍກວ່າປະເທດ

ลาว, ซึ่งมีเนื้อที่ 181.040 กม^2, มีพูผาหน้อยกว่า และ ต่ำกว่า, เช่น พูพะนิมอิอราม มีละดับสูง 1810 ม.

ประเทดหวุดนามซึ่งเป็นประเทดที่ยู่เบื้องตาเอ้นออกกว่าพม่, เป็นประเทดใหย่อันดับ สอง ในจำนอน สี่ประเทดนี้, มีเนื้อที่ทั่งหมิด 330.991 กม^2. ประเทดนี้ก่อุดิมรั่งมีหาๆด้านติ้นดอกเผิ้งเหมือนกัน, มี 751 ชะนิด จัดยู่ใน 142 สะกุน. เหมือนกันกับประเทดลาอที่ใก้ญ่ๆ, หวุดนามมีพูผายู่หาๆพากเหือสูงเกิๆ 3.143 ม (พูฟันซิปาน), กานสำหวดด้านพืดก่ยังบ่ทันกอ้างขอางเช่นดวุอ. ในซุ่มปีหั้งๆนี้, ดร. Leonid Averyanov ที่เมืองแซ้งเปเติดสะบอก, ประเทดรัดเซย, ก่ได้พะยายามหวายเพื่อเร็ดใก้ความรับรู้ของพวกเราก่วุกับพืดในตะกุนดอกเผิ้งของหวุดนามเพิ่มขึ้น.

กานเก้บรักสา

พืดที่เกิดที่อๆไปจำนอนหวุองหวายได้ถิกไพคึ่มซู่จะดับสูนย้อนความซุดโซมของสะพาบแวดล้อม หื้ กานทำลายสะพาบแวดล้อมของมัน. บันหานี้แรงร้ายแรง ในเขดที่มีความหากหวายซิอะพาบ ดั่งในบันดาประเทดในเอเซยตาเอ้นออกส่วงใต้. ในนั้น ติ้นตะกุนดอกเผิ้งย่ิงถิกคึ่มซู่หวายกว่าพม่. อันนี้แม่นความจิง, ผู้เก้บแรงเพิ่มติ่มบันหาอิก, เช่นก่ละนิ ติ้นดอกเผิ้งรูบเกิบหุ้ม.

ติ้นดอกเผิ้งรูบเกิบหุ้มของสะกุน *Paphiopedilum* ก่บ่ได้แม่นพืดทุกคินจะมัก, แต่ชะนิดที่พิบยู่หวุดนาม, ชะนิด *P . delenatii* ก่แม่นชะนิดที่ได้รับกานนิยมกอ้างขอาๆ. ได้มีผู้พิบ สองคั้ง ในปี 1913 และ 1922 โดยคินฝรั่งแล้วนำสิ่งติอแบบซวุอไปยูริบ. ชะนิดดั่งก่าอ, ต่างจากดอกเผิ้งรูบเกิบหุ้มอื่นๆในเอลานั้น, มันต้อง เป็นสิ่งซ่าลิพิเสดแก่ผู้นิยิมดอกเผิ้ง. พวกเราบ่รู้ได้อ่าได้มีกานเก้บติอแบบเท่าใดกันแท้, แต่เหดที่หน้าเสยใจ แล้วแม่นดอกเผิ้งที่เก้บไป ตายพืดในเอลาอันสั้นๆ. พืด ยิกเอ้นติอแบบ 1 อันเพื่อใหถิกแท้, ติอแบบนั้น เพิ่นได้เอิาไปปูกไอ้ในส่วนก้าเบ้ยดอกเผิ้งที่มีชื่สูงๆ แห่งหนึ่ๆ, สวน Vacherot & Lecoufle ยู่ประเทดฝรั่ง. ติอแบบนี้ใหดอก และ แก่นสิมบูนดีซึ่งเพิ่นได้นำเอิาไปแผ่พัน. ต่มาดอกเผิ้งชะนิด *P. delenatii* ได้กายมาเป็นชะนิดที่นิกนิยิม และ มืออาชิบปูกดอกเผิ้งนำเอิาไปปูกเที่อละขั้น และ จินรอดไลยะหั้งๆนี้, ดอกเผิ้งหั้งหมิดที่คินเอิามาปูกก่อาด สิบหอดจากชะนิดดวุอนั้นเป็นลุ้นๆมา.

แต่ปี 1922 มา, ชะนิด *P. delenatii* บ่ปะกิดใหเห็นอิกในหำมะชาด และ บางคินก่เชื่ออ่ามันดับสูนแล้อ. แต่ปะกิดอ่า กานขันหิกบ่อนเก้บหำอิดบ่จะแจ้งปานใด และ ผู้ไปเก้บใหม่ก่ไปบ่ถิกบ่อน. ตะหวดไลยะหวายๆปี, ก่บ่ได้มีคินสามาดซอกหาติ้นดอกเผิ้งในหวุดนามจักหน้อยเลีย. ต่ม, ในติ้นปี 1990, ได้มีกานพิบอ่ามีติ้นดอกเผิ้งชะนิด *P. delenatii* จำนอนหวาย และ เก้บแบบหำมะชาด ขายยู่ไต้หอัน และ ริงกิง. หั้งหมิดได้ยั้งยืนอ่าได้มีกานพิบติ้นดอกเผิ้ง *Paphiopedilum delenatii* อิก !. ดร. Averyanov ได้ปะเมินอ่าอาดมีกานเก้บดอกเผิ้งที่หายากชะนิดนี้หวายๆโตน สิ่งออกย่างผิดกิดหมายผ่านพู บิดับ, บ่อนที่เอ้าใจอ่ามันสามาดเติบใหย่ได้. ได้มีหวายต่หวายชะนิดถิกเก้บจากหำมะชาด, ดวุอนี้มีแต่ชะนิด *P.delenatii* เท่านั้นที่ยังลอดเหือยู่ในบ่อนห่างไกลออกหิก. ผินกะทิบแม่นหักห่องหวาย. จำนอนของดอกเผิ้งถิกเก้บหวายดีแนอนี้สามาดเร็ดใหมันดับสูนได้ เกิองอ่าจะมีกานปกปักรักสาจำนอนที่ยังเหือยู่ย่างเอ้มงอดก่ตาม. บันหาที่สอง, ส่อนหวองหวายของดอกเผิ้งที่เก้บไปแล้อ สามาดตายในไอๆย่างบ่ต้องสิงใส. พ่ค้าจำนอนหน้อยหึ่ง และ ผู้สะสิมได้เงินย้อนแต่ผินเสยแม่นผู้อื่นๆจะบ่มีโอกาดได้เห็นดอกไม้ที่ วิดงามยู่ในแวดล้อมแบบหำมะชาดของมัน.

ບັນຫາທີສາມ, ສ່ວນໜວງໜາຍຂອງພືດທີ່ເກັບໄປແລ້ວຈະບໍ່ມີຫຍັງທີ່ແຕກຕ່າງໄປຈາກພືດທີ່ໄດ້ຢ່າງງ່າຍດາຍຈາກສວນກ້າເບ້ຍເລີຍ, ເວັ້ນເສຍແຕ່ຕົ້ນທີ່ເກັບຈາກທຳມະຊາດຈະຮັກສາມັນໃຫ້ຍັງມີຊີວິດໄດ້ຍາກກວ່າອີກ. ບັນຫາສຸດທ້າຍ, ໂອກາດທີ່ຈະເລືອກເຟັ້ນ ແລະ ແຜ່ ພັນອັນດີເລີດແບບນີ້ກໍ່ເສຍໄປ. ຖ້າວ່າຫາກມີການຄຸ້ມຄອງຢ່າງດີ, ມັນອາດຈະເປັນແຫ່ງລາຍຮັບທີ່ໝັ້ນຄົງໃຫ້ແກ່ໜາຍໆຄົນແທນທີ່ຈະແມ່ນຜົນໄດ້ໄລຍະສັ້ນໆແກ່ຄົນຈຳນວນໜ້ອຍໜຶ່ງເທົ່ານັ້ນ.

ແຕ່ຍ້ອນວ່າຜູ້ຂາຍສາມາດຂາຍສິ່ງທີ່ລັກມາໄດ້ຢ່າງງ່າຍດາຍໜາຍ, ເຂົາກໍ່ຮຽກຮ້ອງໃຫ້ຫາມາໜາຍຂຶ້ນຊັກໄຊ້. ທີ່ອປະເທດຫວຽດນາມ, ປະເທດລາວ ແລະ ປະເທດຈີນ ກໍເຊັ່ນດຽວ, ໄດ້ມີການລັກເອົາດອກເຜົ້າຮູບເກີບຫຸ້ມຈຳນວນມະຫາສານອອກຈາກແວດລ້ອມທຳມະຊາດຂອງມັນຕະຫຼອດໜາຍໆປີຜ່ານມາ. ມີຜູ້ສັງເກດການຊາວເນເທີແລັນຊຶ່ງຢູ່ສະຖານທູດເນເທີແລັນໄດ້ເປັນພະຍານວ່າດອກເຜົ້າຊະນິດອື່ນອີກກໍ່ຖືກລັກ ແລະ ນຳສິ່ງຈາກລາວໄປຈີນຢ່າງເປີດແປນ. ດອກເຜົ້າເຫຼົ່ານີ້ກໍ່ບໍ່ໄດ້ຈຳເປັນວ່າເກັບໄປເພື່ອການຄ້າສຳລັບການປະດັບໝົດ; ໜາຍໆຊະນິດກໍ່ຖືກນຳໃຊ້ເຂົ້າໃນການຢາພື້ນເມືອງຂອງຈີນເຊັ່ນດຽວ, ໂດຍສະເພາະກໍລະນີດອກເຜົ້ານິນ (*Anoectochilus* ແລະ ສະກຸນທີ່ກ່ຽວພັນອີກ). ຈາກການເຄື່ອນໃຫວເຫຼົ່ານັ້ນ ໄດ້ມີໜາຍຊະນິດໃໝ່ ຫຼື ຖືວ່າໃໝ່ເກີດຂຶ້ນ. ໃນຈຳນວນນັ້ນ, ຕົ້ນດອກເຜົ້າຮູບເກີບຫຸ້ມກໍເປັນເປົ້າໝາຍໂຄສະນາຢ່າງສູງເດັ່ນທີ່ສຸດ. ດອກເຜົ້າຈຳນວນໜຶ່ງກໍ່ແມ່ນນັກນິຍົມ ຫຼື ນັກພືດສາດທີ່ບໍ່ໜ້າເຊື່ອຖື ແລະ ມີຈັນຍາທຳຕ່ຳເປັນຜູ້ໃຫ້ການພັນລະນາ ແລະ ໃຫ້ຊື່ ໂດຍເອົາຊື່ຂອງເຂົາເຈົ້າໄປຕິດພັນກັບຕົ້ນດອກເຜົ້າທີ່ເກັບຈາກທຳມະຊາດແບບບໍ່ຖືກກົດໝາຍ, ທັງໝົດພໍແຕ່ສ້າງຊື່ສຽງໃຫ້ເຂົາເຈົ້າເອງ.

ຈະຄວນໂທດໃຜ ? ກ່ອນອື່ນໝົດແມ່ນຜູ້ຊື້ ຊຶ່ງສ່ວນໜາຍແມ່ນຄົນຕ່າງປະເທດ ຢູ່ຈີນ, ຍີ່ປຸ່ນ ແລະ ຢູ່ປະເທດຕາເວັນຕົກ, ຕໍ່ມາກໍແມ່ນພໍ່ຄ້າ. ຕໍ່ຈາກນັ້ນມາ ຈຶ່ງຄວນແມ່ນເຈົ້າໜ້າທີ່ ທີ່ປ່ອຍໃຫ້ບັນຫານີ້ເກີດຂຶ້ນ. ສ່ວນຜູ້ເກັບ, ປົກກະຕິຈະແມ່ນຊາວຊົນນະບົດທ້ອງຖິ່ນຊຶ່ງເປັນຜູ້ທີ່ໄດ້ເຮັດໜາຍກວ່າໝູ່ແຕ່ຜົນໄດ້ຮັບຕ່ຳກວ່າໝູ່ທີ່ຄວນເປັນຜູ້ສຸດທ້າຍໃນບັນຊີທີ່ຈະຕ້ອງກ່າວ ໂທດ.

ເຖິງວ່າມີບັນຫາທັງໝົດທີ່ເລົ່າມາຂ້າງເທິງນັ້ນກໍ່ຕາມ, ໃນນັ້ນຍັງບໍ່ໄດ້ເວົ້າຮອດການເກັບດອກເຜົ້າທີ່ເກີດແບບທຳມະຊາດຢ່າງໜວງໜາຍ ເພື່ອການຕະຫຼາດພາຍໃນ, ປະເດັນນີ້ຍັງສືບຕໍ່ມີທີ່ບ້ຽກອກຢູ່. ໄພຂົ່ມຂູ່ອັນເດັ່ນກວ່າໝູ່ຕໍ່ການລອດເຫຼືອຂອງຊະນິດຕ່າງໆຂອງຕົ້ນດອກເຜົ້າແມ່ນການທຳລາຍປ່າ, ທຳລາຍດິນຫາມ ແລະ ທີ່ງຫຍ້າ ບ່ອນທີ່ມັນເກີດຢູ່. ຕໍ່ບັນຫານີ້ໄດ້ມີການເວົ້າວ່າກັນໜາຍຕໍ່ໜາຍຄັ້ງແລ້ວ ແລະ ກໍ່ເປັນສິ່ງທີ່ເຫັນໄດ້ງ່າຍໆ, ຖ້າຈະຍົກມາອະທິບາຍຢ່າງລະອຽດອີກກໍຈະເປັນການດູໝິ່ນພູມປັນຍາຂອງຜູ້ອ່ານ. ສິ່ງທີ່ເສົ້າໃຈແມ່ນການທຳລາຍເຫຼົ່ານັ້ນລ້ວນແລ້ວແຕ່ບໍ່ຈຳເປັນ ຫຼື ວ່າຢ່າງໜ້ອຍມັນກໍ່ແມ່ນ ການເບິ່ງແບບສາຍຕາສັ້ນ. ມັນແມ່ນກົດເກນເສດຖະກິດງ່າຍໆຢ່າງໜຶ່ງທີ່ວ່າຖ້າວັດຖຸມີໜ້ອຍ, ມູນຄ່າມັນສູງຂຶ້ນ. ເມື່ອມີການບຸກເບີກເນື້ອທີ່, ສ່ວນປ່າທີ່ເຫຼືອນັ້ນແຮງມີມູນຄ່າສູງຂຶ້ນ. ໃນອານາຄົດ, ມັນຈະເຮັດໃຫ້ມູນຄ່າຂອງປ່າສະຫງວນສູງກວ່າລາຍໄດ້ຈາກການຕັດປ່າ. ການທີ່ບໍ່ປົກປັກຮັກສາເຂດປ່າໃຫ້ເປັນຕົວແທນ ແລະ ຍືນຍົງໄດ້ເປັນການບໍ່ຮັບຜິດຊອບ ແລະ ຂາດເຫດຜົນທີ່ສຸດໃນເມື່ອການບຸກເບີກປ່າຍັງດຳເນີນຢູ່ຢ່າງກວ້າງຂວາງ. ຄວາມນຶກຄິດນີ້ປະກົດວ່າຍັງຂາດຢູ່ນຳຄົນຈຳນວນໜາຍຢູ່.

ການທີ່ຈະບອກວ່າແມ່ນຕົ້ນດອກເຜົ້າຊະນິດໃດ, ສະກຸນໃດ ທີ່ມີຈຳນວນໜຸດຜ່ອນລົງ ຈົນຮຽກຮ້ອງໃຫ້ມີການປົກປັກຮັກສາພິເສດນັ້ນ ເປັນບັນຫາຍາກ. ຕົ້ນດອກເຜົ້າບາງຊະນິດກໍແມ່ນນັກສະສົມຊອກຫາໜາຍ, ບາງຊະນິດກໍ່ບໍ່ມີຄຸນຄ່າທາງດ້ານປະດັບພໍເທົ່າໃດ ຫຼື ສົມມຸດວ່າບໍ່ມີຄຸນຄ່າທາງດ້ານເປັນພືດເປັນຢາຈັກໜ້ອຍແຕ່ກໍ່ມີການສ່ຽງເທົ່າໆກັນຍ້ອນມັນຮຽກຮ້ອງໃຫ້ມີເງື່ອນໄຂສິ່ງແວດລ້ອມສະເພາະມັນຈຶ່ງເກີດໄດ້. ໃນການພັນລະນາສະກຸນຂອງຕົ້ນດອກເຜົ້ານະທີ່ນີ້, ຂໍ້ສັງເກດຫຍ້ຽງກ່ຽວກັບສະພາບການປູກປະດັບກໍ່ໄດ້ເວົ້າເປັນສ່ວນໜາຍ, ອັນຊີ້ໃຫ້ເຫັນວ່າມີສະກຸນໃດແດ່ທີ່ອາດຈະຖືກໄພຂົ່ມຂູ່ຈາກຜູ້ສະສົມເພື່ອການຄ້າ.

ຄວາມຮູ້ຂອງພວກເຮົາກ່ຽວກັບການແຈກຢາຍ ແລະ ນິເວດວິທະຍາຂອງຕົ້ນດອກເຜົ້າຢູ່ໄທ, ຢູ່ລາວ, ຢູ່ກຳປູ ເຈຍ ແລະ ຢູ່ຫວຽດນາມ ຍັງບໍ່ຄົບຖ້ວນຈັກໜ້ອຍເລີຍ. ເພິ່ນໄດ້ພົບໜາຍຊະນິດແຈກຢາຍຢູ່ໃນເຂດກວ້າງ ແຕ່ ພາຍໃນເຂດແຈກຢາຍກໍ່ມີບາງບ່ອນໜ້ອຍໆເທົ່ານັ້ນ. ຊະນິດອື່ນເຈາະຈົ່ງເກີດໃນພູສູງແບບເກີດທົ່ວໆໄປ. ມີຈຳ ນວນໜ້ອຍໜຶ່ງເກີດຢູ່ຕາມເຂດພູໂລ້ນ ແລະ ຕ່ຳ ແລະ ຖືກເຊາະເຈື່ອນແລ້ວ; ໜາຍໆຊະນິດກໍ່ໜ້ອຍຢູ່ຕາມເປືອກ ຂອງຕົ້ນໄມ້ເກົ່າແກ່ ຂອງປ່າໃນເຂດພູສູງ. ຍັງມີຕົ້ນດອກເຜົ້າໜາຍຊະນິດຢູ່ທີ່ພວກເຮົາບໍ່ທັນໄດ້ຄົ້ນພົບ ຫຼື ມີໜາຍຊະນິດເປັນຕົວແບບທີ່ບໍ່ທັນໄດ້ອະທິບາຍໃນການແຈກຢາຍຂອງຕົ້ນດອກເຜົ້າທຳມະຊາດ. ດັ່ງນັ້ນ, ມັນ ຈົ່ງເປັນບັນຫາຮີບດ່ວນສຳລັບນັກພືດສາດທ້ອງຖິ່ນທີ່ຈະຕ້ອງໄດ້ສຶກສາ ແລະ ສ້າງຖານຂໍ້ມູນກ່ຽວຂ້ອງກ່ອນທີ່ ມັນຈະໜ້າສອາຍໂພດ.

ອະນຸກົມວິຖານ

ການຈັດລຽງບັນດາສະກຸນຢູ່ໃນປຶ້ມເຫຼັ້ມນີ້ ແມ່ນເຮັດຕາມລຳດັບຂອງຕົວອັກສອນໂຣມານ. ເຄື່ອງໝາຍ * ຊີ້ ບອກວ່າມີຮູບສີຂອງສະກຸນປະກອບນຳດ້ວຍ. ຮູບກໍ່ເຊັ່ນດຽວໄດ້ມີການຈັດລຽງຕາມລຳດັບຂອງຕົວອັກສອນໂຣ ມານ. ມັນຈະເຮັດໃຫ້ການຊອກເບິ່ງບົດພັນລະນາ ແລະ ຮູບຂອງແຕ່ລະສະກຸນມີປະສິດທິພາບດີ, ແຕ່ສາຍກ່ຽວ ພັນ ລະຫວ່າງສະກຸນໃດໜຶ່ງກັບສະກຸນອື່ນ ຕາມລະດັບທີ່ແຕກຕ່າງກັນຍັງບໍ່ທັນແຈ້ງຢູ່. ຕົວຢ່າງ ສະກຸນ *Vanda* ກ່ຽວພັນກັບສະກຸນ *Aerides* ໜາຍ ແລະ ສະກຸນ *Ludisia* ກໍກ່ຽວພັນກັບສະກຸນ *Anoectochilus* ໜາຍ. ນອກ ນັ້ນສະກຸນ *Vanda* ແລະ *Ludisia* ມີສາຍກ່ຽວພັນກັນຫ່າງໆ, ທັງນີ້ກໍ່ຍ້ອນວ່າສະກຸນ *Vanda* ແລະ ສະກຸນ *Aerides* ມີບັນພະບຸຣຸດໃນໄລຍະຫຼັງໆນີ້ຮ່ວມກັນ, ສ່ວນວ່າ ບັນພະບຸຣຸດຮ່ວມກັນລະຫວ່າງ ສະກຸນ *Vanda* ແລະ ສະກຸນ *Ludisia* ຕ້ອງເຄີຍມີມາກ່ອນແຕ່ເທິງນານແລ້ວ. ແຜ່ນອາດສະແດງກຸ່ມຕ່າງໆຕາມລຳດັບຂອງ ສາຍກ່ຽວພັນນີ້ເອີ້ນວ່າ: ອະນຸກົມວິຖານ. ຕາມເດີມໆແລ້ວ, ອະນຸກົມວິຖານ ອັນນີ້ມີໂຄງສ້າງທີ່ອີງຕາມຂັ້ນຢ່າງ ເຂັ້ມງວດ, ມັນເອງກໍ່ອີງໃສ່ລະບົບຊັ້ນທີ່ສັບໃຊ້ກັນ. ດັ່ງນີ້, ມັນຈຶ່ງປະກົດວ່າຄືສັບສົນໜາຍ ແຕ່ຄວາມໝາຍກໍ່ ແມ່ນ ໜາຍໆຊະນິດທີ່ມີສາຍກ່ຽວພັນກັນໜາຍ ທ້ອນໂຮມເຂົ້າເປັນສະກຸນໜຶ່ງ, ໜາຍສະກຸນທີ່ມີສາຍກ່ຽວພັນກັນ ໜາຍ ທ້ອນໂຮມເຂົ້າເປັນກຸ່ມສຳຮອງໜຶ່ງ, ໜາຍກຸ່ມສຳຮອງທີ່ມີສາຍກ່ຽວພັນກັນ ທ້ອນໂຮມເປັນກຸ່ມໜຶ່ງ, ໜາຍ ກຸ່ມທີ່ມີສາຍກ່ຽວພັນກັນ ທ້ອນໂຮມເຂົ້າເປັນຕະກຸນສຳຮອງໜຶ່ງ, ແລະ ໜາຍຕະກຸນສຳຮອງກໍ່ເຕົ້າໂຮມເຂົ້າເປັນ ຕະກຸນໜຶ່ງ. ຮອດປະຈຸບັນນີ້ຍັງບໍ່ທັນມີອະນຸກົມວິຖານແບບສະໜຸບສຳລັບຕະກຸນຕົ້ນດອກເຜົ້າເທື່ອ. ການສະເໜີ ລາຍສະກຸນຂອງດອກເຜົ້າຕໍ່ໄປນີ້ແມ່ນໄດ້ອີງໃສ່ Dressler (1993), ໂດຍໄດ້ມີການດັດແປງໃນເອກກະສານທີ່ ພິມຄືນໃນໄລຍະຫຼັງໆ [ເບິ່ງເອກກະສານອ້າງອີງ Pridgeon, Cribb, Chase & Rasmussen (1999)] ແລະ ຄຳເຫັນສ່ວນຕົວ. ໃນໜາຍກໍລະນີ ເພິ່ນເຊົາໃຊ້ລຳດັບອະນຸກົມວິຖານຂັ້ນກຸ່ມແລ້ວ, ເວັ້ນເສຍແຕ່ເມື່ອມີກຸ່ມສຳ ຮອງດຽວໃນການຈັດແບ່ງນັ້ນໆ (ຕົວຢ່າງ: Malaxideae) ເພິ່ນໄດ້ເອົາຂັ້ນກຸ່ມສຳຮອງອອກ.

ຕະກຸນສຳຮອງ APOSTASIOIDEAE
- ສະກຸນ *Apostasia*
- ສະກຸນ *Neuwiedia*

ຕະກຸນສຳຮອງ CYPRIPEDIOIDEAE
- ສະກຸນ *Paphiopedilum*

ຕະກຸນສຳຮອງ VANILLOIDEAE

ກຸ່ມສຳຮອງ **Vanillinae**
- ສະກຸນ *Vanilla*

ກຸ່ມສຳຮອງ **Galeolinae**
- ສະກຸນ *Cyrtosia*
- ສະກຸນ *Erythrorchis*
- ສະກຸນ *Galeola*

ກຸ່ມສຳຮອງ **Lecanorchidinae**
- ສະກຸນ *Lecanorchis*

ຕະກຸນສຳຮອງ ORCHIDOIDEAE

ກຸ່ມສຳຮອງ **Coryciinae**

(Coryciinae)
- ສະກຸນ *Disperis*

ກຸ່ມສຳຮອງ **Orchidinae**
- ສະກຸນ *Amitostigma*
- ສະກຸນ *Brachycorythis*
- ສະກຸນ *Hemipilia*
- ສະກຸນ *Platanthera*

ກຸ່ມສຳຮອງ **Habenariinae**

(Habenariinae)
ສະກຸນ *Diplomeris*
ສະກຸນ *Habenaria*
ສະກຸນ *Herminium*
ສະກຸນ *Pecteilis*
ສະກຸນ *Peristylus*
ກຸ່ມສຳຮອງ **Acianthinae**
ສະກຸນ *Corybas*
ກຸ່ມສຳຮອງ **Goodyerinae**
ສະກຸນ *Anoectochilus*
ສະກຸນ *Chamaegastrodia*
ສະກຸນ *Cheirostylis*
ສະກຸນ *Cystorchis*
ສະກຸນ *Erythrodes*
ສະກຸນ *Goodyera*
ສະກຸນ *Herpysma*
ສະກຸນ *Hetaeria*
ສະກຸນ *Hylophila*
ສະກຸນ *Ludisia*
ສະກຸນ *Myrmechis*
ສະກຸນ *Pristiglottis*
ສະກຸນ *Rhomboda*
ສະກຸນ *Vrydagzynea*
ສະກຸນ *Zeuxine*
ກຸ່ມສຳຮອງ **Spiranthinae**
ສະກຸນ *Spiranthes*
ກຸ່ມສຳຮອງ **Cryptostylidinae**
ສະກຸນ *Cryptostylis*
ຕະກຸນສຳຮອງ EPIDENDROIDEAE
ກຸ່ມ **Tropidieae**
ສະກຸນ *Corymborkis*
ສະກຸນ *Tropidia*
ກຸ່ມສຳຮອງ **Limodorinae**
ສະກຸນ *Aphyllorchis*
ສະກຸນ *Cephalanthera*
ສະກຸນ *Epipactis*
ສະກຸນ *Thaia*

ກຸ່ມສຳຮອງ **Listerinae**
ສະກຸນ *Listera*
ກຸ່ມ **Nervilieae**
ສະກຸນ *Nervilia*
ກຸ່ມສຳຮອງ **Gastrodiinae**
ສະກຸນ *Didymoplexiella*
ສະກຸນ *Didymoplexiopsis*
ສະກຸນ *Didymoplexis*
ສະກຸນ *Gastrodia*
ກຸ່ມສຳຮອງ **Epipogiinae**
ສະກຸນ *Epipogium*
ສະກຸນ *Stereosandra*
ກຸ່ມ **Malaxideae**
ສະກຸນ *Liparis*
ສະກຸນ *Malaxis*
ສະກຸນ *Oberonia*
ກຸ່ມສຳຮອງ **Arundinae**
ສະກຸນ *Arundina*
ສະກຸນ *Dilochia*
ກຸ່ມສຳຮອງ **Thuniinae**
ສະກຸນ *Thunia*
ກຸ່ມສຳຮອງ **Coelogyninae**
ສະກຸນ *Coelogyne*
ສະກຸນ *Dendrochilum*
ສະກຸນ *Neogyna*
ສະກຸນ *Otochilus*
ສະກຸນ *Panisea*
ສະກຸນ *Pholidota*
ສະກຸນ *Pleione*
ກຸ່ມສຳຮອງ **Bletiinae**
ສະກຸນ *Acanthephippium*
ສະກຸນ *Anthogonium*
ສະກຸນ *Bletilla*
ສະກຸນ *Calanthe*
ສະກຸນ *Cephalantheropsis*
ສະກຸນ *Eriodes*
ສະກຸນ *Ipsea*

(Bletiinae)
ສະກຸນ *Pachystoma*
ສະກຸນ *Phaius*
ສະກຸນ *Plocoglottis*
ສະກຸນ *Spathoglottis*
ກຸ່ມສຳຮອງ **Collabiinae**
ສະກຸນ *Chrysoglossum*
ສະກຸນ *Collabium*
ສະກຸນ *Diglyphosa*
ສະກຸນ *Hancockia*
ສະກຸນ *Mischobulbum*
ສະກຸນ *Nephelaphyllum*
ສະກຸນ *Tainia*
ກຸ່ມ **Calypsoeae**
ສະກຸນ *Yoania*
ກຸ່ມສຳຮອງ **Corallorhizinae**
ສະກຸນ *Cremastra*
ກຸ່ມສຳຮອງ **Eulophiinae**
ສະກຸນ *Eulophia*
ສະກຸນ *Geodorum*
ກຸ່ມສຳຮອງ **Claderiinae**
ສະກຸນ *Claderia*
ກຸ່ມສຳຮອງ **Bromheadiinae**
ສະກຸນ *Bromheadia*
ກຸ່ມສຳຮອງ **Cyrtopodiinae**
ສະກຸນ *Cymbidium*
ສະກຸນ *Dipodium*
ສະກຸນ *Grammatophyllum*
ກຸ່ມສຳຮອງ **Polystachyinae**
ສະກຸນ *Polystachya*
ກຸ່ມສຳຮອງ **Acriopsidinae**
ສະກຸນ *Acriopsis*
ກຸ່ມສຳຮອງ **Thecostelinae**
ສະກຸນ *Thecopus*
ສະກຸນ *Thecostele*
ກຸ່ມສຳຮອງ **Thelasiinae**
ສະກຸນ *Phreatia*

(Thelasiinae)

ສະກຸນ *Thelasis*

ກຸ່ມສຳຮອງ **Eriinae**

ສະກຸນ *Ceratostylis*

ສະກຸນ *Cryptochilus*

ສະກຸນ *Eria*

ສະກຸນ *Porpax*

ສະກຸນ *Trichotosia*

ກຸ່ມສຳຮອງ **Podochilinae**

ສະກຸນ *Agrostophyllum*

ສະກຸນ *Appendicula*

ສະກຸນ *Poaephyllum*

ສະກຸນ *Podochilus*

ກຸ່ມສຳຮອງ **Dendrobiinae**

ສະກຸນ *Dendrobium*

ສະກຸນ *Epigeneium*

ສະກຸນ *Flickingeria*

ກຸ່ມສຳຮອງ **Bulbophyllinae**

ສະກຸນ *Bulbophyllum*

ສະກຸນ *Drymoda*

ສະກຸນ *Monomeria*

ສະກຸນ *Sunipia*

ສະກຸນ *Trias*

ກຸ່ມສຳຮອງ **Aeridinae**

ສະກຸນ *Abdominea*

ສະກຸນ *Acampe*

ສະກຸນ *Adenoncos*

ສະກຸນ *Aerides*

ສະກຸນ *Arachnis*

ສະກຸນ *Armodorum*

(Aeridinae)

ສະກຸນ *Ascocentrum*

ສະກຸນ *Ascochilopsis*

ສະກຸນ *Ascochilus*

ສະກຸນ *Biermannia*

ສະກຸນ *Brachypeza*

ສະກຸນ *Chamaeanthus*

ສະກຸນ *Chiloschista*

ສະກຸນ *Christensonia*

ສະກຸນ *Chroniochilus*

ສະກຸນ *Cleisocentron*

ສະກຸນ *Cleisomeria*

ສະກຸນ *Cleisostoma*

ສະກຸນ *Cordiglottis*

ສະກຸນ *Cryptopylos*

ສະກຸນ *Deceptor*

ສະກຸນ *Diploprora*

ສະກຸນ *Doritis*

ສະກຸນ *Eparmatostigma*

ສະກຸນ *Esmeralda*

ສະກຸນ *Gastrochilus*

ສະກຸນ *Grosourdya*

ສະກຸນ *Holcoglossum*

ສະກຸນ *Hygrochilus*

ສະກຸນ *Lesliea*

ສະກຸນ *Luisia*

ສະກຸນ *Macropodanthus*

ສະກຸນ *Malleola*

ສະກຸນ *Micropera*

ສະກຸນ *Microsaccus*

(Aeridinae)

ສະກຸນ *Ornithochilus*

ສະກຸນ *Papilionanthe*

ສະກຸນ *Pelatantheria*

ສະກຸນ *Pennilabium*

ສະກຸນ *Phalaenopsis*

ສະກຸນ *Pomatocalpa*

ສະກຸນ *Pteroceras*

ສະກຸນ *Renanthera*

ສະກຸນ *Renantherella*

ສະກຸນ *Rhynchogyna*

ສະກຸນ *Rhynchostylis*

ສະກຸນ *Robiquetia*

ສະກຸນ *Saccolabiopsis*

ສະກຸນ *Sarcoglyphis*

ສະກຸນ *Schoenorchis*

ສະກຸນ *Seidenfadenia*

ສະກຸນ *Smitinandia*

ສະກຸນ *Stereochilus*

ສະກຸນ *Taeniophyllum*

ສະກຸນ *Thrixspermum*

ສະກຸນ *Trichoglottis*

ສະກຸນ *Tuberolabium*

ສະກຸນ *Uncifera*

ສະກຸນ *Vanda*

ສະກຸນ *Vandopsis*

ສະກຸນ *Ventricularia*

ຊື່ພ້ອງ

ຕາມຫຼັກການແລ້ວ ພືດຊະນິດໜຶ່ງສາມາດມີຊື່ຖືກຕ້ອງພຽງຊື່ດຽວເທົ່ານັ້ນ. ຊື່ນີ້ປະກອບດ້ວຍ 2 ສ່ວນ: ຊື່ຂອງ ສະກຸນ (ຕົວຢ່າງ: *Dendrobium*) ແລະ ເອກກະລັກຂອງຊະນິດ (ຕົວຢ່າງ: *lindleyi*). ມັນບໍ່ງ່າຍສະເໝີໄປທີ່ ຈະຕັດສິນວ່າຊື່ໃດເປັນຊື່ທີ່ຖືກຕ້ອງ. ຕົ້ນດອກເຜົ້າທີ່ມີດອກງາມໆສີເຫຼືອງ ທີ່ພວກເຮົາເອີ້ນ ວ່າ *Dendrobium lindleyi* ໃນປະຈຸບັນ, ຄົນເຄີຍໄດ້ຮູ້ມັນດີກວ່າໃນຊື່ *Dendrobium aggregatum* ມາຕະຫຼອດຫຼາຍປີແລ້ວ. ຊື່ນີ້ ແມ່ນທ່ານ Roxburgh ໄດ້ເປັນຜູ້ໃຫ້ໃນປີ 1832, ແຕ່ບໍ່ສາມາດໃຊ້ໄດ້ຍ້ອນມັນແຕກຕ່າງຈາກດອກເຜົ້າທີ່ ເກີດຢູ່ອາເມຣິກາໃຕ້ຫຼາຍ, ມັນມີຊື່ກ່ອນແລ້ວວ່າ *Dendrobium aggregatum*, ແມ່ນທ່ານ Humboldt, ທ່ານ Bonpland ແລະ ທ່ານ Kunth ເປັນຜູ້ໃຫ້ກ່ອນໜ້ານີ້. ຕໍ່ມາທ່ານ Steudel ປ່ຽນຊື່ *Dendrobium aggregatum* ເປັນ *Dendrobium lindleyi* Steud ຕາມເອກກະສານພິມອອກໃນປີ 1841. ດອກເຜົ້າ ຊະ ນິດ *Dendrobium jenkinsii* ຄ້າຍຄືກັບຊະນິດຂ້າງເທິງນີ້ຫຼາຍທີ່ສຸດ, ບາງຄັ້ງ ເພິ່ນກໍ່ຈັດວ່າເປັນຊະນິດ ດຽວກັນກັບ *Dendrobium lindleyi* ແລະ ແຕ່ຍ້ອນໄດ້ມີການພິມເຜີຍແຜ່ ຊື່ *Dendrobium jenkinsii* ກ່ອນ *Dendrobium lindleyi*, ຊື່ທີ່ຖືກຕ້ອງຂອງດອກເຜົ້າຊະນິດນີ້ຄວນເປັນ *Dendrobium jenkinsii*.

ກໍລະນີອື່ນອີກກໍ່ແມ່ນຊະນິດທີ່ແປກປະຫຼາດ, ຊະນິດ *Bulbophyllum fascinator*. ແຕ່ເດີມໄດ້ມີການ ພັນລະນາຊະນິດນີ້ເປັນຊະນິດ *Cirrhopetalum fascinator* ໂດຍທ່ານ Rolfe. ຕໍ່ມາທ່ານໄດ້ສະຫຼຸບວ່າ ສະ ກຸນ *Cirrhopetalum* ກໍ່ບໍ່ແຕກຕ່າງຈາກສະກຸນ *Bulbophyllum* ພໍເທົ່າໃດ. ຍ້ອນວ່າຊື່ສະກຸນ *Bulbophyllum* ເປັນຊື່ທີ່ເກົ່າກວ່າ *Cirrhopetalum*, ຈຶ່ງຕ້ອງໄດ້ປ່ຽນຊື່ຂອງຊະນິດມາເປັນ *Bulbophyllum fascinator* (Rolfe) Rolfe. ພາຍຫຼັງມາຜູ້ຊ່ຽນ ດັ່ງ ທ່ານ Garay, ທ່ານ Hamer, ແລະ ທ່ານ Siegerist ຍັງ ຖືລັກສະນະທີ່ຄ້າຍຄືກັນກັບສະກຸນ *Bulbophyllum* ຈຳນວນໜຶ່ງສຳຄັນຢູ່ ແລ້ວຈຶ່ງຕັ້ງຊື່ສະກຸນໃໝ່ອີກ ຄື ສະ ກຸນ *Mastigion*. ແລ້ວດອກເຜົ້າ ຊະນິດ *Bulbophyllum fascinator* ຈຶ່ງໄດ້ກາຍມາເປັນຊະນິດ *Mastigion fascinator*. ຊື່ທີ່ຖືກຕ້ອງແມ່ນຫຍັງ? ຖ້າວ່າທ່ານຫາກຄິດຄືພວກເຮົາຄິດ ວ່າສະກຸນ *Cirrhopetalum* ແລະ ສະກຸນ *Mastigion* ເປັນສ່ວນຂອງສະກຸນ *Bulbophyllum* ຈະດີກວ່າ, ເວລານັ້ນຊື່ *Bulbophyllum fascinator* ກໍ່ເປັນຊື່ທີ່ຖືກຕ້ອງ. ໃນກໍລະນີນັ້ນ, *Mastigion* ກໍກາຍມາເປັນຊື່ພ້ອງຂອງ *Bulbophyllum*. ແຕ່ຖ້າທ່ານຫາກຄິດວ່າຊື່ ສະກຸນ *Mastigion* ບໍ່ແມ່ນສ່ວນຂອງສະກຸນ *Bulbophyllum* ຫຼື ສະກຸນ *Cirrhopetalum*, ເວລານັ້ນຊື່ *Mastigion fascinator* ກໍເປັນຊື່ທີ່ຖືກຕ້ອງ.

ໃນປຶ້ມເຫຼັ້ມນີ້ ພວກເຮົາໄດ້ໃຫ້ບັນຊີຊື່ພ້ອງຂອງສະກຸນຕ່າງໆດັ່ງລຸ່ມນີ້. ບັນຊີນີ້ຍັງບໍ່ທັນຄົບ ແລະ ນັກພືດ ສາດແຕ່ລະຄົນອາດບໍ່ເຫັນດີນຳໝົດ. ພວກເຮົາໄດ້ຈັດເອົາແຕ່ຊື່ພ້ອງທີ່ເຄີຍໃຊ້ເລື້ອຍ ຫຼື ຊື່ພ້ອງທີ່ຕິດພັນກັບຕົ້ນ ດອກເຜົ້າຂອງໄທ ແລະ ຂອງອິນດູຈີນມາແລ້ວ, ດັ່ງ:

ສະກຸນ *Acrochaene* = ສະກຸນ *Monomeria*
ສະກຸນ *Allochilus* = ສະກຸນ *Goodyera*
ສະກຸນ *Anaphora* = ສະກຸນ *Malaxis*
ສະກຸນ *Ania* = ສະກຸນ *Tainia*
ສະກຸນ *Arachnante* = ສະກຸນ *Arachnis*
ສະກຸນ *Ascidieria* = ສະກຸນ *Eria*
ສະກຸນ *Ascolabium* = ສະກຸນ *Ascocentrum*
ສະກຸນ *Ascotainia* = ສະກຸນ *Tainia*
ສະກຸນ *Appendiculopsis* = ສະກຸນ *Agrostophyllum*
ສະກຸນ *Camarotis* = ສະກຸນ *Micropera*
ສະກຸນ *Callista* = ສະກຸນ *Dendrobium*
ສະກຸນ *Cheirorchis* = ສະກຸນ *Cordiglottis*
ສະກຸນ *Cirrhopetalum* = ສະກຸນ *Bulbophyllum*
ສະກຸນ *Cleisostomopsis* = ສະກຸນ *Cleisocentron*
ສະກຸນ *Collabiopsis* = ສະກຸນ *Collabium*
ສະກຸນ *Cordula* = ສະກຸນ *Paphiopedilum*

ສະກຸນ *Corysanthes* = ສະກຸນ *Corybas*

ສະກຸນ *Crepidium* = ສະກຸນ *Malaxis*

ສະກຸນ *Cyperorchis* = ສະກຸນ *Cymbidium*

ສະກຸນ *Cystopus* = ສະກຸນ *Pristiglottis*

ສະກຸນ *Desmotrichum* = ສະກຸນ *Flickingeria*

ສະກຸນ *Dicerostylis* = ສະກຸນ *Hylophila*

ສະກຸນ *Dienia* = ສະກຸນ *Malaxis*

ສະກຸນ *Donacopsis* = ສະກຸນ *Arundina* + ສະກຸນ *Eulophia*

ສະກຸນ *Echioglossum* = ສະກຸນ *Cleisostoma*

ສະກຸນ *Ephemerantha* = ສະກຸນ *Flickingeria*

ສະກຸນ *Epicranthes* = ສະກຸນ *Bulbophyllum*

ສະກຸນ *Euanthe* = ສະກຸນ *Vanda*

ສະກຸນ *Evrardia* = ສະກຸນ *Chamaegastrodia*

ສະກຸນ *Evrardiana* = ສະກຸນ *Chamaegastrodia*

ສະກຸນ *Evrardianthe* = ສະກຸນ *Chamaegastrodia*

ສະກຸນ *Fingardia* = ສະກຸນ *Malaxis*

ສະກຸນ *Garayanthus* = ສະກຸນ *Cleisostoma*

ສະກຸນ *Glossochilopsis* = ສະກຸນ *Malaxis*

ສະກຸນ *Glossula* = ສະກຸນ *Habenaria*

ສະກຸນ *Grastidium* = ສະກຸນ *Dendrobium*

ສະກຸນ *Gunnarorchis* = ສະກຸນ *Thelasis?*

ສະກຸນ *Haemaria* = ສະກຸນ *Ludisia*

ສະກຸນ *Hemihabenaria* = ສະກຸນ *Pecteilis*

ສະກຸນ *Ione* = ສະກຸນ *Sunipia*

ສະກຸນ *Iridorchis* = ສະກຸນ *Cymbidium*

ສະກຸນ *Kingiella* = ສະກຸນ *Phalaenopsis*

ສະກຸນ *Kingidium* = ສະກຸນ *Phalaenopsis*

ສະກຸນ *Lectandra* = ສະກຸນ *Poaephyllum*

ສະກຸນ *Leucolaena* = ສະກຸນ *Didymoplexiella*

ສະກຸນ *Mastigion* = ສະກຸນ *Bulbophyllum*

ສະກຸນ *Microstylis* = ສະກຸນ *Malaxis*

ສະກຸນ *Oberonioides* = ສະກຸນ *Malaxis*

ສະກຸນ *Odontochilus* = ສະກຸນ *Anoectochilus*

ສະກຸນ *Parapteroceras* = ສະກຸນ *Tuberolabium*

ສະກຸນ *Parhabenaria* = ສະກຸນ *Pecteilis*

ສະກຸນ *Pedilonum* = ສະກຸນ *Dendrobium*

ສະກຸນ *Phyllomphax* = ສະກຸນ *Brachycorythis*

ສະກຸນ *Physurus* = ສະກຸນ *Erythrodes*

ສະກຸນ *Podochilopsis* = ສະກຸນ *Adenoncos*

ສະກຸນ *Polychilos* = ສະກຸນ *Phalaenopsis*

ສະກຸນ *Raciborskanthos* = ສະກຸນ *Cleisostoma*

ສະກຸນ *Rhytioananthos* = ສະກຸນ *Bulbophyllum*

ສະກຸນ *Saccolabium* auctt. = ສະກຸນ *Gastrochilus* + ສະກຸນ *Tuberolabium*

ສະກຸນ *Sarothrochilus* = ສະກຸນ *Trichoglottis*

ສະກຸນ *Sarcanthus* = ສະກຸນ *Cleisostoma*

ສະກຸນ *Sarcopodium* = ສະກຸນ *Epigeneium*

ສະກຸນ *Schoenomorphus* = ສະກຸນ *Tropidia*

ສະກຸນ *Seidenfia* = ສະກຸນ *Malaxis*

ສະກຸນ *Staurochilus* = ສະກຸນ *Trichoglottis*

ສະກຸນ *Tainiopsis* = ສະກຸນ *Eriodes*

ສະກຸນ *Thylacis* = ສະກຸນ *Thrixspermum*

ສະກຸນ *Trachoma* = ສະກຸນ *Tuberolabium*

ສະກຸນ *Trudelia* = ສະກຸນ *Vanda*

ສະກຸນ *Tylostylis* = ສະກຸນ *Eria*

ສະກຸນ *Zetagyne* = ສະກຸນ *Panisea*

ເອກກະສານອ້າງອີງ

ໃນປຶ້ມເຫຼັ້ມນີ້ ພວກເຮົາສະເໜີແຕ່ເອກກະສານຈຳນວນໜ້ອຍໜຶ່ງ ທີ່ເລືອກເຟັ້ນແລ້ວ. ແຕ່ເອກກະສານລຸ່ມນີ້ ກໍ ນຳໄປສູ່ລາຍຊື່ເອກກະສານສຳຄັນໆ ທີ່ກ່ວ້າງອອກໄປ ໂດຍເນັ້ນເຖິງເອກກະສານພິມອື່ນຈຳນວນຫຼວງຫຼາຍ.

Averyanov, L.V. 1994. *Identification guide to Vietnamese Orchids (Orchidaceae Juss.).* St. Petersburg: Russian Academy of Science [ເປັນພາສາຣັດເຊຍ].

Cribb, P.J. 1998. *The genus Paphiopedilum.* ພິມຄັ້ງທີ ສອງ. Kota Kinabalu: Natural History Publications (Borneo).

Dressler, R.L. 1981. *The Orchids: Natural History and Classification. Cambridge.* Mass.: Harvard University Press.

Dressler, R.L. 1993. *Phylogeny and Classification of the Orchid Family.* Cambridge: Cambridge University Press.

Pridgeon, A.M., P.J. Cribb, M.W. Chase & F.N. Rasmussen. 1999. *Genera Orchidacearum.* Vol. 1. Oxford: Oxford University Press.

Seidenfaden, G. 1982. *Contributions to the Orchid Flora of Thailand X.* Nordic Journal of Botany 2: 193–218.

Seidenfaden, G. 1983. *Orchid genera in Thailand XI. Cymbidiae Pfitz.* Opera Botanica 72: 1–124.

Seidenfaden, G. 1985. *Orchid genera in Thailand XII. Dendrobium Sw.* Opera Botanica 83: 1–295.

Seidenfaden, G. 1986. *Orchid genera in Thailand XIII. Thirty-three epidendroid Genera.* Opera Botanica 89: 1–216.

Seidenfaden, G. 1988. *Orchid genera in Thailand XIV. Fifty-nine vandoid Genera.* Opera Botanica 95: 1–398.

Seidenfaden, G. 1992. *The Orchids of Indochina.* Opera Botanica 114: 1–502.

Seidenfaden, G. 1997. *Contributions to the Orchid Flora of Thailand XIII.* Fredensborg: Olsen & Olsen.

ຮິບໂຮມຄຳສັບເຕັກນິກ

ກ້ານຂອງກຸ່ມເມັດລະອອງ (Caudicle): ໝາຍເຖິງຕົ່ງ ຫຼື ແໜງຂອງກຸ່ມເມັດລະອອງຊຶ່ງສັງກັດຢູ່ໃນຮວຍເກສອນ ຫຼື ຮວຍເມັດລະອອງ, ຕົ່ງນີ້ ມັກມີລັກສະນະໜຽວ. (ເບິ່ງກ້ານເຕົ້າໄຂ່ (Stipe) ແລະ ວິຊິດິອັອມ (Viscidium) ຕື່ມ).

ກ້ານຊໍ່ດອກ (Rachis): ແມ່ນແກ່ນກາງຂອງຊໍ່ດອກ.

ກ້ານເຕົ້າໄຂ່ (Stipe): ເປັນຕົ່ງຂອງກຸ່ມເມັດລະອອງ, ຈັບຢູ່ຮວຍເມັດລະອອງ, ມີຮູບຮ່າງຈະແຈ້ງ ແລະ ມີລັກສະນະສະເພາະ. ເບິ່ງຄຳສັບກ້ານ ຂອງກຸ່ມເມັດລະອອງ ແລະ ວິຊິດິອັອມ.

ກ້ານໃບ (Petiole): ແມ່ນກ້ານໃບ ຫຼື ສ່ວນລຸ່ມຂອງໃບ. ໃນດອກເຜົ້ງຈຳນວນໜຶ່ງ ລຳຕົ້ນ ຫຼື ຫົວປອມ ມີລັກສະນະຄ້າຍຄືກັບກ້ານໃບ (ຕົວຢ່າງ: ສະກຸນ *Corybas* ຫຼື ສະກຸນ *Ceratostylis*)

ກາບ (Sheath): ເບິ່ງກາບໃບ.

ກາບດອກ (Sepal): ແມ່ນຊິ້ນສ່ວນທັງ 3 ຢູ່ໃນວົງນອກ ຢູ່ລະດັບດອກ ຂອງ ດອກເຜົ້ງ.

ກາບໃບ (Leaf-sheath):ແມ່ນສ່ວນທີ່ຢູ່ຕິນຂອງໃບ ຊຶ່ງຫຸ້ມເອົາລຳຕົ້ນ. ສ່ວນຫຼາຍກາບໃບຈະຕ່າງຈາກສ່ວນອື່ນຂອງໃບທາງດ້ານໂຄງສ້າງ ແລະ ຄວາມໜຽວແໜ້ນ. ດອກເຜົ້ງທັງໝົດກໍ່ບໍ່ໄດ້ມີກາບໃບໝົດ.


ກີບດອກ (Petal): ໝາຍເຖິງກີບດອກວົງໃນທີ່ຢູ່ສອງຂ້າງ ຂອງດອກເຜົ້ງ.

ກີບດອກຮູບຮີມສິບ (Lip): ໝາຍເຖິງສ່ວນກາງ ຂອງວົງໃນຊຶ່ງສຳລັບດອກເຜົ້ງປະກອບດ້ວຍ 3 ຊິ້ນສ່ວນ. ກີບດອກຮູບຮີມສິບນີ້ເວົ້າທົ່ວໄປ ຈະຕ່າງຈາກ 2 ສ້ົນສ່ວນອື່ນຂອງກີບດອກ (ເບິ່ງກີບດອກ ແລະ ກາບດອກ).

ກຸ່ມເມັດລະອອງ (Pollinia): ແມ່ນກ້ອນເມັດລະອອງເປັນເນື້ອດຽວກັນແດ່ ບໍ່ ແດ່, ມີຮູບຮ່າງ ແລະ ຂະໜາດໃດໜຶ່ງ, ພົບເຫັນນຳດອກເຜົ້ງເປັນສ່ວນຫຼາຍ, ແຕ່ບໍ່ມີນຳສະກຸນ *Apostasia*, ສະກຸນ *Paphiopedilum* ແລະ ສະກຸນອື່ນອີກຈຳນວນໜຶ່ງ.

ເກີດຢູ່ດິນ (Terrestial): ປົ່ງຮາກລົງໃນດິນ.

ຂຽວຕະຫຼອດ (Persistent): ໝາຍເຖິງອະໄວຍະວະໃດໜຶ່ງທີ່ລົ່ນອອກຈາກຕົ້ນເມື່ອມັນຕາຍແລ້ວກໍ່ຕາມ. ໃບຂຽວຕະຫລອດ ບໍ່ມີເຂດຕໍ່ຢູ່ທີ່ຕີນໃບ, ມັນຈະຫ່ຽວແຫ້ງເທື່ອລະນ້ອຍ ແລະ ຫາຍໄປເອງ.


ກາບດອກ
ກີບດອກ
ກີບດອກຮູບຮີມສິບ
ເສົາເກສອນ
ກາບດອກ
ກີບດອກ
ຮອຍເກສອນ
ລິ້ນຂອງຮອງຮັບ
ຮອງຮັບ
ເສົາເກສອນ
ກ້ານເຕົ້າໄຂ່
ກຸ່ມເມັດລະອອງ
ວິຊິດີອ້ອມ
ກ້ານຂອງກຸ່ມເມັດລະອອງ

ຄາງ (Mentum): ໝາຍເຖິງໂຄງສ້າງທີ່ເປັນຮູບຄາງ ຫຼື ຮູບເດືອຍ, ຊຶ່ງເປັນສ່ວນກົກຂອງກາບດອກຂ້າງ; ປົກກະຕິຄາງເຊື່ອມຕິດກັບຕີນຂອງເສົາເກສອນ. ຂໍ້ຄວນເອົາໃຈໃສ່: ໂດຍທົ່ວໄປ ເດືອຍແທ້ໆຈະປະກອບຈາກອະໄວຍະວະອັນດຽວເທົ່ານັ້ນ ຄືກົບດອກຮູບຮີມສົບ.

ເສົາເກສອນ (Column): ໝາຍເຖິງອະໄວຍະວະກາງທີ່ໄດ້ມາຈາກການເຊື່ອມຕິດ ຂອງພາກສ່ວນເພດຜູ້ ແລະ ເພດແມ່ (ເກສອນຜູ້ ແລະ ເກສອນແມ່) ຊຶ່ງມີໃນດອກຂອງສະກຸນດອກເຜົ້ງ.

ສົບປ່ຽນຕາມລະດູການ (Deciduous): ໝາຍເຖິງຊິ້ນສ່ວນທີ່ລົ່ນອອກຈາກຕົ້ນໄມ້ໃນເມື່ອຊິ້ນສ່ວນນັ້ນຕາຍແລ້ວ. ໃບທີ່ສົບປ່ຽນຕາມລະດູການຈະມີເຂດຕໍ່ຢູ່ຕີນໃບ; ເມື່ອໃບລົ່ນອອກແລ້ວມັນຈະປະຮອຍໄວ້ຈະແຈ້ງ (ຕາມລຳຕົ້ນ ຫຼື ກິ່ງງ່າ) ເບິ່ງ ຄຳສັບ ຊຽວຕະຫລອດປີຕື່ມ.

ຊິນ້ຳເທີສ (Synanthous): ກ້ານະນີຊໍ່ດອກອອກຢູ່ປາຍ, ຕາມໜໍ່ບໍ່ແກ່, ມີໃບກຳລັງປົ່ງເວລາອອກດອກ. ເບິ່ງ ເຣເຕຣັງເທີສ, ຣິດສະເຕຣັງເທີສ ຫຼື ໂປເຕລັງເທີສຕື່ມ.

ຊໍ່ດອກແຕກແໜງ (Panicle): ແມ່ນຊໍ່ດອກທີ່ແຕກແໜງອອກເປັນຫຼາຍແໜງ; ແຕ່ລະແໜງຂອງຊໍ່ ກໍ່ເປັນພົ້ອຢູ່ແລ້ວ.

ເຊື່ອມຕິດ (Adnate): ໝາຍເຖິງອະໄວຍະວະໃດໜຶ່ງ ທີ່ເຊື່ອມຕິດເຂົ້າກັນກັບອະໄວຍະວະອື່ນທີ່ມີໂຄງສ້າງຕ່າງກັນ (ຕົວຢ່າງ: ຕີນຂອງກົບດອກຮູບຮີມສົບສາມາດເຊື່ອມຕິດກັບເສົາເກສອນ. ເບິ່ງ ຄວາມໝາຍຂອງຄຳສັບ ເຊື່ອມຕິດ (Connate) ຫຼື ສົບແຍກກັນ ຕື່ມ).

ເຊື່ອມຕິດ (Connate): ໝາຍເຖິງຊິ້ນສ່ວນໜຶ່ງ ຫຼື ຫຼາຍຊິ້ນສ່ວນຂອງອະໄວຍະວະດຽວກັນຊຶ່ງມີໂຄງສ້າງດຽວກັນ ເຊື່ອມຕິດກັນ (ຕົວຢ່າງ: ກາບດອກເຊື່ອມຕິດເຂົ້າກັນ, ຄືດັ່ງໃນສະກຸນ *Paphiopedilum* ເບິ່ງຄວາມໝາຍຂອງຄຳສັບເຊື່ອມຕິດ (Adnate) ແລະ ຄຳສັບແຍກກັນຕື່ມ).

ແຍກກັນ (Free): ບໍ່ເຊື່ອມຕິດກັນ, ຢູ່ຕ່າງໃຜຕ່າງມັນ.

ເດືອຍ (Spur): ເປັນລັກສະນະຫຼອດ ຫຼື ຖົງທີ່ບັນຈຸນ້ຳຫວານ, ປົກກະຕິເປັນສ່ວນຂອງກົບດອກຮູບຮີມສົບ. ກ້ານະນີມັນເປັນສ່ວນຂອງຕີນເສົາເກສອນ ຫຼືສ່ວນຂອງກາບດອກແມ່ນຫາຍາກກວ່າ.

ຕິ່ງເສົາເກສອນ (Stelidia): ໝາຍເຖິງຕຸດ ຫຼື ຕິ່ງທີ່ມີຢູ່ປາຍຂອງເສົາເກສອນ, ມັນມີຮູບແຂ້ວ ຫຼື ຮູບມີດ, ຈັບຢູ່ 2 ພາກຂ້າງຂອງຮອຍເກສອນ.

ຕີນເສົາເກສອນ (Column-foot): ໝາຍເຖິງປົກ ຫຼື ຊິ້ນສ່ວນຍ່ອຍທີ່ຢູ່ໂຄນຂອງເສົາເກສອນ.

ຕົ້ນອາໃສບ່ອນຄ້ຳ (Epiphyte) ແມ່ນພືດທີ່ທ້ອຍ ຫຼື ຄ້ຳ ໃສ່ສິ່ງອື່ນ.

ທ່ອນກົມ (Terete): ເປັນທ່ໍກົມແຄບແດ່ ບໍ່ແດ່, ເມື່ອຕັດຫາງຂວາງແລ້ວໄດ້ຮູບວົງມົນ.

ໂປເຕຣັງເທີສ (Protheranthous): ກ້ານະນີຊໍ່ດອກອອກຢູ່ປາຍ, ຕາມໜໍ່ບໍ່ແກ່, ໃບບໍ່ທັນປົ່ງເທື່ອເວລາອອກດອກ. ເບິ່ງຄຳສັບເຣເຕຣັງເທີສ, ຣິດສະເຕຣັງເທີສ ຫຼື ຊິນ້ຳເທີສ ຕື່ມ.

ຜ່າໄດ້ (Sectile): ກ່ຽວຂ້ອງ ສ່ວນນ້ອຍໆຈະແຈ້ງຫຼາຍສ່ວນ, ທີ່ມີລັກສະນະເມັດ ຫຼື ແກ່ນ ເຊັ່ນກ້ານະນີ ກຸ່ມເມັດລະອອງຂອງ ສະກຸນ *Habenaria* ແລະ ສະກຸນ *Goodyera*.

ແຜ່ນຂັ້ນ (Septum): ໝາຍເຖິງແຜ່ນບາງໆ ທີ່ແບ່ງຂ້າງໃນຂອງເດືອຍ ເປັນສ່ວນໆ.

ພົ້ອ (Raceme): ແມ່ນຊໍ່ດອກບໍ່ແຕກແໜງຊຶ່ງມີດອກແຕ່ຈຳນວນ 2 ຫຼື ຫຼາຍກວ່ານັ້ນຂຶ້ນໄປ, ມີກ້ານດອກ ແລະ ກ້ານຊໍ່ດອກຈະແຈ້ງ.

ພັບເຂົ້າກັນເວລາຍັງຈູມຢູ່ (Duplicate): ໝາຍເຖິງໃບພັບຕາມລວງຍາວຂອງກ່າງກາງເວລາຍັງຈູມຢູ່ພ້ອມທັງມີແຄມຂະໜານໃຫ້ກັນ, ເໝືອນດັ່ງໃບຂອງສະກຸນ *Paphiopedilum*. ໃບພັບເຂົ້າກັນເມື່ອແກ່ ຈະແຜ່ອອກ, ແປ ແລະ ເມື່ອຕັດຫາງຂວາງຈະມີຮູບຕົວ V (ເບິ່ງຄຳສັບມ້ວນເຂົ້າກັນຕາມລວງຍາວຕື່ມ).

ພັບເປັນກີບໆ (Plicate): ພັບຕາມລວງຍາວຂອງກ່າງ, ຄືດັ່ງມີຢູ່ລະດັບໃບຂອງສະກຸນ *Spathoglottis* ແລະ ສະກຸນ *Phaius*. ໃບທີ່ພັບເປັນກີບໆ ໂດຍທົ່ວໄປແລ້ວ, ຈະມີກ່າງໃຫຍ່ເປັນຄູຢູ່ດ້ານລຸ່ມຂອງໃບ ແລະ ເມື່ອຕັດໃບຕາມລວງຂວາງ ຈະໄດ້ເສັ້ນ ເປັນອັກໆ ຫຼື ເສັ້ນຄື້ນ.

ພືດເກີດຢູ່ພື້ນທີ່ຫີນ (Lithophyte): ແມ່ນພືດທີ່ເກີດຢູ່ບ່ອນຫີນເລັກຫີນນ້ອຍ ແລະ ໂງ່ນຫີນໃຫຍ່.

ມີການເຕີບໃຫຍ່ດ້ານປາຍ (Monopodial): ກໍລະນີຕົ້ນໄມ້ປັ່ງຂຶ້ນຢ່າງບໍ່ຢຸດຢັ້ງຢູ່ປາຍຂອງຕົ້ນໃນໄລຍະການເຕີບໃຫຍ່. ຕົ້ນດອກເຜົ້າທີ່ມີການເຕີບໃຫຍ່ແບບນີ້ ມີຊໍ່ດອກອອກທາງຂ້າງ, ບໍ່ມີລຳເລືອ, ບໍ່ມີຫົວປອມ, ບໍ່ມີຫົວໃຕ້ດິນ. ສ່ວນຫຼາຍລຳຕົ້ນນັ້ນຈະບໍ່ແຕກແໜງ (ສັ້ນໆ ຫຼື ຍາວກໍ່ຕາມ), ຖ້າມີການແຕກແໜງກໍ່ຈະບໍ່ແຕກໂລດ, ແໜງຈະບໍ່ປະກົດໃຫ້ເຫັນເມື່ອຕົ້ນນັ້ນຫາກສູງຂຶ້ນໄລຍະໃດໜຶ່ງແລ້ວ. (ໃຫ້ເບິ່ງຄຳສັບທີ່ມີການເຕີບໃຫຍ່ດ້ານຂ້າງຕື່ມ, ຕົວຢ່າງ: ສະກຸນ *Phalaenopsis*, ສະກຸນ *Vanda*, ສະກຸນ *Vanilla*).

ມີການເຕີບໃຫຍ່ດ້ານຂ້າງ (Sympodial): ກໍລະນີຕົ້ນທີ່ມີການເຕີບໃຫຍ່ຢຸດຢູ່ປາຍຕົ້ນ ແຕ່ສືບຕໍ່ດ້ວຍແໜງປັ່ງອອກທາງຂ້າງ. ຕົ້ນດອກເຜົ້າທີ່ມີການເຕີບໃຫຍ່ດ້ານຂ້າງນີ້ມີຊໍ່ດອກອອກທາງຂ້າງ ຫຼື ອອກຢູ່ປາຍ, ມີລຳເລືອຈະແຈ້ງ, ມີຫົວປອມ ຫຼື ມີຫົວແທ້ ຢູ່ໃຕ້ດິນ. ປົກກະຕິແລ້ວຕົ້ນນັ້ນຈະມີ ລຳຕົ້ນ ຫຼື ກິ່ງຫຼາຍກວ່າ 1 ລຳຕົ້ນ ຫຼື 1 ກິ່ງ. ເບິ່ງຄຳສັບ ມີການເຕີບໃຫຍ່ດ້ານປາຍ; ຕົວຢ່າງ: ສະກຸນ *Bulbophyllum*, ສະກຸນ *Paphiopedilum*, ສະກຸນ *Spathoglottis*.

ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່ (Convolute): ກໍລະນີແຄມໃບຊ້ອນເຕັ່ງກັນເມື່ອຍັງຈູມຢູ່, ແລ້ວມ້ວນອອກເວລາມັນຂະຫຍາຍຕົວ, ຕົງກັນຂ້າມກັບໃບພັບເຂົ້າກັນ.

ຢູ່ໃນທ່າປີ້ນ (Resupinate): ໝາຍເຖິງກໍລະນີດອກເຜົ້າທີ່ມີກີບດອກຮູບຮີມສົບຢູ່ກ້ອງເສົາເກສອນ, ທ້ຳໝົດຢູ່ໃນທ່າທຳມະຊາດຂອງດອກ. ສ່ວນຫຼາຍດອກເຜົ້າມີທ່າປີ້ນ.

ລຳເລືອ (Rhizome): ຢູ່ໃນຕົ້ນດອກເຜົ້າທີ່ມີການເຕີບໃຫຍ່ດ້ານຂ້າງ, ແມ່ນພາກສ່ວນກົກຂອງຕົ້ນຊຶ່ງມີຮາກປົ່ງອອກຈາກ.

ລີ້ນຂອງຮອງຮັບ (Rostellum): ເປັນສ່ວນຂອງເສົາເກສອນທີ່ຢູ່ລະຫວ່າງຮວຍເກສອນ ແລະ ຮອງຮັບ; ສ່ວນຫຼາຍຊົ້ນສ່ວນນີ້ຈະໃຄ່ ເປັນຕົ່ງອອກຄ້າຍຄື ສົບນົກ ຫຼື ແຂ້ວແງ.

ຫົວປອມ (Pseudobulb): ແມ່ນລຳທີ່ມຸກດິ, ພົບເຫັນເລື້ອຍໆ ນຳດອກເຜົ້າຫຼາຍຊະນິດທີ່ມີການເຕີບໃຫຍ່ດ້ານປາຍ. ມັນອາດມີ 1 ຫາຫຼາຍສ່ວນລະຫວ່າງຂໍ້. ສ່ວນຫຼາຍຫົວປອມຈະບໍ່ຄືກັບຫົວແທ້ແຕ່ນັກຄົ້ນຄວ້າຫຼາຍໆຄົນໃຊ້ຄຳສັບ "ຫົວປອມ" ເພື່ອໝາຍເຖິງວ່າລຳຕົ້ນບໍ່ມຸກ ຊຶ່ງຄ້າຍຄືກັບກ້ານໃບ; ໃນກໍລະນີນີ້ ໃບບໍ່ມີກາບໃບ (ຕົວຢ່າງ: ລຳຕົ້ນຂອງຫຼາຍຊະນິດ ໃນສະກຸນ *Ceratostylis*).

ເໜັງໄດ້ (Mobile): ກ່ຽວຂ້ອງກັບກີບດອກຮູບຮີມສົບ ຊຶ່ງໝາຍຄວາມວ່າ ມັນຕິດຫ້ອຍກັບສ່ວນອື່ນ ແບບເບົາບາງ ແລະ ສາມາດເຄື່ອນຍ້າຍໄດ້ງ່າຍ.

ວິຊິດີອອມ (Viscidium): ໝາຍເຖິງສ່ວນທີ່ບັນຈຸທາດໜຽວ ມີຢູ່ໃນຫຼາຍຊະນິດຂອງດອກເຜົ້າ, ເປັນສ່ວນທີ່ຕິດກັບກຸ່ມເມັດລະອອງໂດຍກົງ ຫຼື ໂດຍກ້ານຂອງກຸ່ມເມັດລະອອງ ຫຼື ໂດຍກ້ານຂອງເຕົ້າໄຂ່; ມັນເປັນສ່ວນທີ່ຢູ່ນອກຂອງເຕົ້າໄຂ່.

ອາໃສບ່ອນຄ້ຳ (Epiphytic): ກໍລະນີຕົ້ນໄມ້ຫາກມີຮາກຈັບໃສ່ຕົ້ນໄມ້ໃຫຍ່, ຕົ້ນໄມ້ນ້ອຍ ຫຼື ຕົ້ນໄມ້ປະເພດອື່ນ.

ອາຍຸສັ້ນ (Ephemeral): ໝາຍເຖິງດອກໄມ້ທີ່ບານແລ້ວລົ່ນພາຍໃນມື້ໜຶ່ງ ຫຼື ໜຸດມື້ໜຶ່ງ.

ເຮເຕຣັງເທີສ (Heteranthous): ໝາຍເຖິງກໍລະນີມີຊໍ່ດອກອອກຢູ່ປາຍ, ຕາມໜໍ່ ທີ່ບໍ່ມີໃບແບບປົກກະຕິ ແລະ ມີຫົວປອມແບບປະຖິ້ມປະຖານ ໂດຍທົ່ວໄປຊໍ່ດອກແບບນີ້ພົບຢູ່ນຳສະກຸນ *Acriopsis* ແລະ ສະກຸນ *Chrysoglossum* ຊຶ່ງ ປະກົດວ່າໂປອອກດ້ານຂ້າງ ຢູ່ລະດັບຕີນຂອງລຳຕົ້ນ (ເບິ່ງຄຳສັບ ຮິດສະເຕຣັງເທີສ, ໂປເຕຣັງເທີສ ຫຼື ຊີນັງເທີສ ຕື່ມ).

ຮິສເຕຣັງເທີສ (Hysteranthous): ແມ່ນກໍລະນີຊໍ່ດອກອອກຢູ່ປາຍ, ຕາມໜໍ່ແກ່, ຊຶ່ງມີໃບແບບປົກກະຕິເຖິງວ່າໃບຈະລົ່ນກ່ອນລະດູການອອກດອກກໍ່ຕາມ.(ເບິ່ງຄຳສັບ *ເຮເຕຣັງເທີສ, ໂປເຕຣັງເທີສ* ຫຼື *ຊີນັງເທີສ*) ຕື່ມ.

ຮອຍດ້ານ (Callosity, Callus): ໝາຍເຖິງຈຸດໃດໜຶ່ງທີ່ໜາ ຫຼື ເປັນບ່ອນດ້ານຂອງອະໄວຍະວະໃດໜຶ່ງ, ເວົ້າທົ່ວໄປມັກມີຢູ່ກັບດອກຮູບຮີມສິບ.

ຮວງຮັບ (Stigma): ແມ່ນສ່ວນທີ່ຮັບເອົາເມັດລະອອງຂອງດອກ.

ຮວຍເກສອນ ຫຼື ຮວຍເມັດລະອອງ (Stamen): ແມ່ນພາກສ່ວນເພດຜູ້ຂອງດອກຊຶ່ງບັນຈຸເອົາເມັດລະອອງທັງໝົດຂອງດອກ.

ການຈຳແນກຊື່

ຊື່ວິທະຍາສາດຂອງພືດໜຶ່ງໆເປັນຂໍ້ກຸນແຈຕົ້ນຕໍຂອງເອກກະສານພົມທີ່ກ່ຽວຂ້ອງກັບພືດນັ້ນໆ. ນອກນັ້ນຊື່ຍັງໃຫ້ຂໍ້ມູນດ້ານທີ່ຕັ້ງຂອງຕົ້ນນັ້ນໃນລະບົບຈັດແບ່ງຂອງອານາຈັກພືດອີກ. ດັ່ງນັ້ນ, ການຊອກຊື່ທີ່ຖືກຕ້ອງຂອງຕົ້ນໜຶ່ງເປັນສິ່ງສຳຄັນທີ່ສຸດ ຫຼື ເວົ້າແບບງ່າຍໆກໍແມ່ນການຈຳແນກຊື່ຂອງມັນ.

ການຈຳແນກຊື່ຂອງຕົ້ນດອກເຜົ້ງເຖິງວ່າຈະຮອດແຕ່ລະດັບສະກຸນຊຶ່ງກໍ່ຍັງບໍ່ງ່າຍສະເໝີໄປ. ຈຳນວນສະກຸນ ແລະ ຊະນິດຂອງຕົ້ນດອກເຜົ້ງກວ້າງຂວາງໜາຍ, ດອກເຜົ້ງເອງກໍ່ມັກມີໂຄງສ້າງແປກໆ ແລະ ສັບສົນເລື້ອຍໆ ແລະ ພວກເຮົາອາດບໍ່ລົ້ງກັບຄຳສັບທີ່ຈຳເປັນສຳລັບການພັນລະນາໂຄງສ້າງນັ້ນອີກ. ພວກເຮົາໄດ້ຮີບໂຮມເອົາຄຳສັບສະເພາະທີ່ໃຊ້ໃນການພັນລະນາໃນປຶ້ມນີ້ໄວ້ໃນຫົວຂໍ້ຮີບໂຮມຄຳສັບເຕັກນິກ. ຜູ້ອ່ານຄວນຈະໄດ້ພະຍາຍາມໃຫ້ຕົນເອງລົ້ງກັບຄຳສັບທີ່ໃຊ້ຢູ່ໃນທີ່ນີ້ກ່ອນ. ຖ້າວ່າເຮົາຫາກກຳຄຳສັບພື້ນຖານໄດ້ແລ້ວ, ການທີ່ຈະຈຳແນກສະກຸນຕ່າງໆກໍ່ຈະບໍ່ຍາກພໍປານໃດ. ອຸປະກອນທີ່ຕ້ອງການກໍ່ມີແຕ່ແກ້ວຂະຫຍາຍດີໆອັນໜຶ່ງກໍ່ພໍແລ້ວ, ບາງຄັ້ງກໍ່ບໍ່ຈຳເປັນຊ້ຳ. ຕໍ່ໄປນີ້ ພວກເຮົາໄດ້ສະເໜີເຄື່ອງມືເພື່ອຈຳແນກຊື່ ເອີ້ນວ່າ *ຮູບຖານການຈຳແນກຊື່* ຊຶ່ງຈະເປັນປະໂຫຍດ ໃຫ້ແກ່ຄວາມພະຍາຍາມຊອກຊື່ທີ່ຖືກຕ້ອງໃຫ້ຕົ້ນດອກເຜົ້ງທີ່ບໍ່ທັນຮູ້ມາກ່ອນໄດ້. ແຕ່ຮູບຖານການຈຳແນກຊຸດນີ້ ຊ້ຳພັດນຳໃຊ້ໃນກໍລະນີຈະຈຳແນກບັນດາຊະນິດຂອງຕົ້ນດອກເຜົ້ງທີ່ເກີດໃນປະເທດໄທ, ລາວ, ກຳປູເຈຍ ຫຼື ຫວຽດນາມເທົ່ານັ້ນ. ຖ້າວ່າເຮົາຫາກນຳໃຊ້ມັນເພື່ອຈຳແນກຊະນິດຕົ້ນດອກເຜົ້ງທີ່ເກີດຢູ່ເຂດອື່ນ, ພວກເຮົາຈະໄປຮອດບ່ອນໄດ້ຊື່ສະກຸນຜິດເຖິງວ່າຊະນິດດັ່ງກ່າວຈະນອນໃນສະກຸນທີ່ຮູບຖານນີ້ໄດ້ກວມເອົາກໍ່ຕາມ.

ພວກເຮົາຈະໃຊ້ຮູບຖານການຈຳແນກສະກຸນນີ້ແນວໃດ? ກ່ອນອື່ນໝົດ ໃຫ້ອ່ານບັນດາຫົວຂໍ້ຂອງວັກຕ່າງໆທີ່ມີຕົ້ເບີ **1**, **2**, **3**, ແລະ ຕໍ່ໆໄປ, ຈົນໄປຮອດຫົວຂໍ້ທີ່ບັນຈຸຂໍ້ມູນທີ່ເຂົ້າກັບລັກສະນະທຸກຢ່າງຂອງຕົ້ນດອກເຜົ້ງຂອງເຮົາ. ສົມມຸດວ່າ ແມ່ນວັກທີ **4**, ແລ້ວໃຫ້ອ່ານຫົວຂໍ້ຍ່ອຍຂອງວັກນີ້ລະອຽດ, ດັ່ງຫົວຂໍ້ **4A** ແລະ **4B** ແລະ ໃຫ້ເລືອກເອົາຫົວຂໍ້ທີ່ມີຂໍ້ມູນທີ່ເຂົ້າກັບລັກສະນະທຸກຢ່າງຂອງຕົ້ນດອກເຜົ້ງທີ່ເຮົາຕ້ອງການຊອກຫາຊື່. ສົມມຸດ

ວ່າແມ່ນຫົວຂໍ້ **4B**. ຈາກນັ້ນ ຈຶ່ງເລືອກລະຫວ່າງຫົວຂໍ້ **4B1** ແລະ **4B2** ແລະ ເຮັດດັ່ງນີ້ຕໍ່ໆໄປ. ໃນທີ່ສຸດ ເຮົາ ຈະໄປຮອດບັນດາຊື່ຂັ້ນສະກຸນ ຊຶ່ງມີຂໍ້ມູນດ້ານລັກສະນະເດັ່ນໆຂອງແຕ່ລະສະກຸນຢູ່ໃນວົງເລັບໄປພ້ອມ ເພື່ອ ໃຫ້ສາມາດຈຳແນກໄດ້ແບບວິນິໃສ . ຕໍ່ມາ ຈຶ່ງອ່ານແລະ ກວດຄືນແຕ່ເທິງລົງລຸ່ມຈົນກວ່າຈະມາຮອດການວິນິ ໃສທີ່ເຂົ້າກັບຕົ້ນດອກເຜົ້ງທີ່ເຮົາຢາກຊອກຊື່. ຈາກນັ້ນ ຄວນຢັ້ງຢືນຄວາມຖືກຕ້ອງຂອງການຈຳແນກຊື່ຂອງເຮົາ ດ້ວຍການອ່ານບົດພັນລະນາຂອງສະກຸນກ່ຽວຂ້ອງໃຫ້ລະອຽດເສຍກ່ອນ ແລະ ພ້ອມທັງເບິ່ງຕົ້ນດອກເຜົ້ງຕົວຈິງ ໃສ່ກັບຮູບທີ່ມີໃນບົດພັນລະນາ. ຈຶ່ງຖືສຳຄັນວ່າ ບາງສະກຸນມີຄວາມຫຼາກຫຼາຍທີ່ສຸດ. ໃນນັ້ນ ອາດມີຊະນິດ ທີ່ແຕກຕ່າງຢ່າງຊັ້ນເຊີງກັບຈຳພວກທີ່ຖືກພັນລະນາໃນທີ່ນີ້.

1. ຕົ້ນເກີດຢູ່ດິນ ບໍ່ມີຫົວປອມ ແລະ ບໍ່ມີໃບໃນເວລາອອກດອກ (ມັກບໍ່ມີຫາດກລ່ໍລ່ຟັນຢູ່ເລື້ອຍ):

1A. ກາບດອກ ແລະ ກີບດອກ ເຊື່ອມຕິດກັນ

ສະກຸນ *Didymoplexis* (ກາບດອກດ້ານຂ້າງເກືອບບໍ່ຕິດກັບກີບດອກເລີຍ, ເສົາເກສອນບໍ່ມີ ຕີ່ງຍາວ)

ສະກຸນ *Didymoplexiella* (ຄ້າຍຄືກັບສະກຸນ *Didymoplexis* ແຕ່ ເສົາເກສອນມີຕີ່ງຍາວ)

ສະກຸນ *Gastrodia* (ກາບດອກຂ້າງເຊື່ອມຕິດກັບກີບດອກໜາຍ)

1B. ກາບດອກ ແລະ ກີບດອກແຍກກັນ

1B1. ກີບດອກຮູບຮີມສິບມີເດືອຍ

ສະກຸນ *Cystorchis* (ເດືອຍສັ້ນ, ໂຄນຂອງກີບດອກຮູບຮີມສິບໃຄ່ເໝືອນຕຸ່ມໂພງຢູ່ແຕ່ລະ ຂ້າງຂອງເດືອຍ)

ສະກຸນ *Epipogium* (ດອກບໍ່ບານອອກກວ້າງໜາຍ; ເຕົ້າໄຂ່ໃຄ່ໜາຍ ແລະ ມີກ້ານເຫັນໄດ້ຈະ ແຈ້ງຢູ່ນຳດອກກຳລັງບານໃໝ່; ກຸ່ມເມັດລະອອງ ຈຳນວນ 2, ມີລັກສະນະເປັນເມັດ, ອ່ອນ ນຸ້ມ)

ສະກຸນ *Eulophia* (ດອກບານອອກກວ້າງ; ເຕົ້າໄຂ່ໃຄ່ເລັກນ້ອຍ ເຫັນນຳດອກທີ່ກຳລັງບານ ໃໝ່ໆ; ກຸ່ມເມັດລະອອງຈຳນວນ 2, ແຂງແກ່ນ, ແຕກແງ່ມຢູ່ທີ່ໂຄນ)

1B2. ກີບດອກຮູບຮີມສິບບໍ່ມີເດືອຍ

1B2a. ລຳຕົ້ນຫາວຂົ້ນ

ສະກຸນ *Galeola* (ລຳຕົ້ນອອກສີກະເບົາອົມສີແດງ ຫຼື ອົມສີເຫຼືອງ, ມີຂົນລຽບໆມ; ແກ່ນມີ ປີກ)

ສະກຸນ *Erythrorchis* (ຄ້າຍຄືກັບສະກຸນ *Galeola* ແຕ່ ລຳຕົ້ນບໍ່ມີຂົນ)

ສະກຸນ *Vanilla* (ລຳຕົ້ນສີຂຽວ, ບໍ່ມີຂົນ; ແກ່ນເປັນຮູບກົມມົນ)

1B2b. ລຳຕົ້ນບໍ່ຫາວຂົ້ນ

ສະກຸນ *Lecanorchis* (ດ້ານນອກຂອງດອກ ມີໂຄງສ້າງຄ້າຍຄືວົງແຫວນຢູ່ທີ່ໂຄນດອກ)

ສະກຸນ *Chamaegastrodia* (ດອກບໍ່ຢູ່ໃນທ່າປັ້ນ; ປາຍຂອງກີບດອກຮູບຮີມສິບແບ່ງເປັນ 2 ປ່ຽງ ຊຶ່ງເປັນອັກໆຄືຮູບແຂ້ວ)

ສະກຸນ *Cyrtosia* (ດ້ານນອກຂອງກາບດອກ ມີສິ່ງປົກຫຸ້ມຊຶ່ງເປັນເມັດໆອອກສີກະເບົາ)

ສະກຸນ *Stereosandra* (ເຕົ້າໄຂ່ມີກ້ານເຫັນໄດ້ຈະແຈ້ງຢູ່ນຳດອກກຳລັງບານໃໝ່; ກີບດອກຮູບຮີມສິບບໍ່ແບ່ງເປັນປ່ຽງ, ຢູ່ທີ່ໂຄນມີຕູດຢູ່ 2 ອັນ; ເສົາເກສອນສັ້ນໜາຍ, ມີຮອຍເມັດລະອອງໃຫຍ່ໜາຍ)

ສະກຸນ *Nervilia* (ມີຫົວໃຕ້ດິນເປັນຮູບກົມມົນ; ເຕົ້າໄຂ່ມີກ້ານເຫັນໄດ້ຈະແຈ້ງຢູ່ນຳດອກທີ່ກຳລັງບານໃໝ່; ເສົາເກສອນຮຽວ ແລະ ບໍ່ມີຂົນ)

ສະກຸນ *Pachystoma* (ເຕົ້າໄຂ່ ແລະ ເສົາເກສອນມີຂົນຫຸ້ມດົກໜາ ແລະ ລຽບໆມ; ກຸ່ມເມັດລະອອງມີຈຳນວນ 8)

ສະກຸນ *Yoania* (ຊໍ່ດອກມີດອກບໍ່ໜາຍປານໃດ; ກີບດອກຮູບຮີມສິບອ້ຳລົງໜາຍ, ແຄມຂອງສ່ວນປາຍພັບເຂົ້າກັນເກືອບໝົດ, ມີໂຄງສ້າງເປັນຮູບເກີບຫຸ້ມ; ກຸ່ມເມັດລະອອງ ຈຳນວນ 4, ແຂງແກ່ນ)

ສະກຸນ *Cymbidium* (ຊໍ່ດອກຖືດອກຈຳນວນຕ່ຳກວ່າ 10 ດອກ; ກີບດອກຮູບຮີມສິບມີສັນຈຳນວນ 2 ອັນຢູ່ເຄິ່ງສ່ວນລຸ່ມ; ກຸ່ມເມັດລະອອງຈຳນວນ 4, ຈັດເປັນ 2 ຄູ່, ແຂງແກ່ນ)

ສະກຸນ *Thaia* (ຊໍ່ດອກຖືດອກໜາຍກວ່າ 10 ດອກ; ກີບດອກຮູບຮີມສິບບໍ່ມີ ສັນຢູ່ເຄິ່ງສ່ວນລຸ່ມ; ຢູ່ແຄມຂອງສ່ວນກີກຂອງຮອງຮັບມີຕິ່ງຊຶ່ງມີຮູບຮ່າງຄ້າຍຄີລົ້ນ; ກຸ່ມເມັດລະອອງຈຳນວນ 2, ອ່ອນນຸ້ມ)

ສະກຸນ *Didymoplexiopsis* (ຢູ່ປາຍເສົາເກສອນມີຕິ່ງຄ້າຍຮູບດາບສັ້ນໆ; ຕົ້ນເສົາເກສອນມຸກດີ)

ສະກຸນ *Aphyllorchis* (ກີບດອກຮູບຮີມສິບແບ່ງເປັນສ່ວນກີກ ແລະ ສ່ວນປາຍ, ສ່ວນກີກອ້ຳລົງ ພ້ອມທັງມີປ່ຽງຂ້າງ ແລະ ສ່ວນປາຍແບ່ງເປັນສາມປ່ຽງຈະແຈ້ງແດ່ບໍ່ແດ່; ກຸ່ມເມັດລະອອງຈຳນວນ 2, ອ່ອນນຸ້ມ)

ສະກຸນ *Cephalanthera* (ຄ້າຍຄືກັບສະກຸນ *Aphyllorchis* ແຕ່ສ່ວນປາຍຂອງກີບດອກຮູບຮີມສິບບໍ່ແບ່ງເປັນປ່ຽງ)

2. ຕົ້ນອາໃສບ່ອນຄ້ຳ, ບໍ່ມີໃບ, ບໍ່ມີຫົວປອມ (ຕົ້ນມີຮາກເປັນພົ້ວ ແລະ ລຳຕົ້ນສັ້ນ, ຊໍ່ດອກ ແລະ ຮາກ ປົ່ງອອກຈາກລຳຕົ້ນ):

ສະກຸນ *Phalaenopsis* (ກາບດອກແຍກກັນ, ກີບດອກຮູບຮີມສິບເໜັ້ງບໍ່ໄດ້, ຢູ່ລຸ່ມປ່ຽງກາງມີຕິ່ງຄ້າຍຮູບສ້ອມ ຫຼືມີຮອຍດ້ານສັບສົນເປັນວັກໆຮູບແຂ້ວ ຈຳນວນ 2 ຫຼື ໜາຍກວ່າ; ເສົາເກສອນມີຕີນ)

ສະກຸນ *Chiloschista* (ກາບດອກແຍກກັນ; ກີບດອກຮູບຮີມສິບເໜັ້ງໄດ້, ບໍ່ມີຕິ່ງຄ້າຍຮູບສ້ອມ, ຮອຍດ້ານບໍ່ມີວັກຮູບແຂ້ວ; ເສົາເກສອນມີຕີນ)

ສະກຸນ *Taeniophyllum* (ກາບດອກແຍກກັນ ຫຼືເຊື່ອມຕິດກັນ; ກີບດອກຮູບຮີມສິບ ເໜັ້ງບໍ່ໄດ້, ບໍ່ມີຕິ່ງ ຫຼື ມີຮອຍດ້ານຢູ່ລຸ່ມຂອງປ່ຽງກາງ, ເສົາເກສອນບໍ່ມີຕີນ)

3. ຕົ້ນມີໃບແຜ່ອອກທາງຂ້າງ ຫຼື ມີໃບເປັນທ່ອນກົມ ຫຼື ມີໃບແຄບໜາຍ, ອວບນ້ຳ ແລະ ມີຮູບຜ່າທາງຂວາງເປັນຮູບສາມລ່ຽມແດ່ບໍ່ແດ່ (ຕົ້ນອາໃສບ່ອນຄ້ຳເກືອບໝົດ; ໃບເປັນທ່ອນກົມ, ເບື້ອງເທິງຂອງໃບເປັນຮ່ອງຕາມລວງຍາວ)

3A. ໃບແຜ່ອອກທາງຂ້າງຢ່າງຈະແຈ້ງ

ສະກຸນ *Bromheadia* (ຊໍ່ດອກຈັບຢູ່ປາຍ; ດອກຂະໜາດກາງ, ບານເປັນລຳດັບຕາມໆກັນ, ເສົາເກສອນບໍ່ມີຕີນ)

ສະກຸນ *Oberonia* (ຊໍ່ດອກເປັນພົ້ວຈັບຢູ່ປາຍ, ຖືດອກຂະໜາດນ້ອຍໜາຍດອກ, ບານເປັນລຳດັບຕາມໆກັນ; ເສົາເກສອນບໍ່ມີຕີນ)

ສະກຸນ *Cordiglottis* (ລຳຕົ້ນສັ້ນ, ຊໍ່ດອກອອກທາງຂ້າງ, ເປັນພົ້ວມີກ້ານຍາວ, ດອກບານເປັນລຳດັບຕາມໆກັນ)

ສະກຸນ *Microsaccus* (ລຳຕົ້ນຍາວ; ຊໍ່ດອກອອກທາງຂ້າງ, ສັ້ນໜາຍ, ມີ 2 ດອກ; ກີບດອກຮູບຮີມສິບມີເດືອຍ)

ສະກຸນ *Podochilus* (ລຳຕົ້ນຍາວ; ໃບບໍ່ສັບປ່ຽນຕາມລະດູການ, ຄວາມຍາວໜຸດ 1 ຊມ.; ອກຂະໜາດນ້ອຍໜາຍ; ກີບດອກຮູບຮີມສິບມີຕິ່ງປິ່ນໄປດ້ານໜ້າຢູ່ທີ່ໂຄນກີບດອກ; ເສົາເກສອນມີຕີນ; ກຸ່ມເມັດລະອອງມີກາບຫຸ້ມເປັນໜອດ)

ສະກຸນ *Dendrobium* (ລຳຕົ້ນຍາວ, ໃບສັບປ່ຽນຕາມລະດູການ; ເສົາເກສອນມີຕີນ; ກຸ່ມເມັດລະອອງບໍ່ມີກາບຫຸ້ມ)

3B. ໃບ ແຜ່ອອກທາງຂ້າງບໍ່ຈະແຈ້ງປານໃດ

3B1. ກີບດອກຮູບຮີມສິບມີເດືອຍ

3B1a. ເດືອຍຢູ່ຂ້າງໃນ, ຢູ່ຝາດ້ານໜ້າມີຮອຍດ້ານ

ສະກຸນ *Cleisostoma* (ເດືອຍມີຂະໜາດໃຫຍ່, ຮອຍດ້ານຢູ່ໃນເດືອຍ, ເກືອບຕັນໝົດປາກຂອງເດືອຍ; ເດືອຍຢູ່ຂ້າງໃນ, ມີຝາຂັ້ນ)

ສະກຸນ *Rhynchogyna* (ຄ້າຍຄືກັບສະກຸນ *Cleisostoma*, ແຕ່ເດືອຍຢູ່ຂ້າງໃນ, ບໍ່ມີຝາຂັ້ນ)

ສະກຸນ *Cleisocentron* (ຢູ່ໃນເດືອຍ ມີຮອຍດ້ານ, ແຕ່ບໍ່ຕັນປາກເດືອຍຈົນເກືອບໝົດ; ເດືອຍຢູ່ຂ້າງໃນ, ບໍ່ມີຝາຂັ້ນ)

3B1b. ເດືອຍຢູ່ຂ້າງໃນ, ບໍ່ມີຮອຍດ້ານຢູ່ຕາມຝາດ້ານໜ້າ

ສະກຸນ *Pteroceras* (ຕີນເສົາເກສອນຍາວໜາຍ; ກີບດອກຮູບຮີມສິບເໜ້ງໄດ້; ເດືອຍປິ່ນໄປທາງໜ້າ ຕໍ່ໃຫ້ກັບຕີນຂອງເສົາເກສອນ)

ຂໍ້ຄວນເອົາໃຈໃສ່: 5 ສະກຸນຢູ່ລຸ່ມນີ້ມີກີບດອກຮູບຮີບສິບເໜ້ງບໍ່ໄດ້ ແລະ ເກືອບທ້ງໝົດມີຕີນຂອງເສົາເກສອນສັ້ນໆ

ສະກຸນ *Schoenorchis* (ດອກຂະໜາດນ້ອຍໜາຍ; ກຸ່ມເມັດລະອອງຈຳນວນ 4)

ສະກຸນ *Papilionanthe* (ລຳຕົ້ນຍາວ; ດອກຂະໜາດກາງ ຫາ ຂະໜາດໃຫຍ່; ຊໍ່ດອກມີດອກ 1 ດອກ ຫຼື ບໍ່ໜາຍດອກປານໃດ)

ສະກຸນ *Seidenfadenia* (ລຳຕົ້ນສັ້ນ; ເດືອຍໂຄ້ງໄປດ້ານໜ້າຢ່າງກະທັນຫັນ, ເດືອຍສັ້ນກວ່າປ່ຽງກາງຂອງກີບດອກຮູບຮີມສິບໜາຍ; ປ່ຽງກາງບໍ່ມີສັນ)

ສະກຸນ *Ascocentrum* (ລຳຕົ້ນສັ້ນ; ດອກນ້ອຍ, ມີສີກຸໜາບແຈກຢາຍຢ່າງສະໝ່ຳສະເໝີ, ມີສີສົ້ມ, ສີເຫຼືອງ, ສີແດງ ຫຼື ສີແດງຊ້ຳ; ເດືອຍບໍ່ໂຄ້ງໄປດ້ານໜ້າ, ບໍ່ສັ້ນກວ່າປ່ຽງກາງຂອງກີບດອກຮູບຮີມສິບໜາຍປານໃດ; ປ່ຽງກາງບໍ່ມີສັນ)

ສະກຸນ *Holcoglossum* (ລຳຕົ້ນສັ້ນ; ປ່ຽງກາງຂອງກີບດອກຮູບຮີມສິບມີສັນຢູ່ທີ່ໂຄນ)

3B2. ກ້ບດອກຮູບຮີມສິບບໍ່ມີເດືອຍ

ສະກຸນ *Adenoncos* (ຕົ້ນມີກາມເຕັບໃຫຍ່ດ້ານປາຍ; ໃບບໍ່ເປັນທ່ອນກົມ; ຊໍ່ດອກສັ້ນຫຼາຍ, ເສົາເກສອນບໍ່ມີຕີນ; ກຸ່ມເມັດລະອອງຈຳນວນ 4)

ສະກຸນ *Luisia* (ຕົ້ນມີກາມເຕັບໃຫຍ່ດ້ານປາຍ; ໃບເປັນທ່ອນກົມ; ຊໍ່ດອກສັ້ນໆ; ເສົາເກສອນ ບໍ່ມີຕີນ; ກຸ່ມເມັດລະອອງຈຳນວນ 2)

ສະກຸນ *Cordiglottis* (ຕົ້ນມີກາມເຕັບໃຫຍ່ດ້າຍປາຍ; ຊໍ່ດອກເປັນພົ້ອອອກທາງຂ້າງ, ມີກ້ານ ຍາວ, ດອກບານເປັນລຳດັບຕາມໆກັນ; ເສົາເກສອນມີຕີນ; ກຸ່ມເມັດລະອອງຈຳນວນ 4)

ສະກຸນ *Phreatia* (ຊໍ່ດອກເປັນພົ້ອມີຫຼາຍດອກ, ດອກ ນ້ອຍຫຼາຍ, ບໍ່ມີຂົ້ນ; ກຸ່ມເມັດລະອອງ ຈຳນວນ 8)

ສະກຸນ *Ceratostylis* (ຕົ້ນມີກາມເຕັບໃຫຍ່ດ້ານຂ້າງ; ປາຍຂອງເສົາເກສອນແບ່ງເປັນ 2 ປ່ຽງ)

ສະກຸນ *Eria* (ຕົ້ນມີກາມເຕັບໃຫຍ່ດ້ານຂ້າງ, ເສົາເກສອນມີຕີນຈະແຈ້ງ; ດອກມີຂົ້ນຢູ່ ດ້ານນອກ; ກຸ່ມເມັດລະອອງຈຳນວນ 8)

ສະກຸນ *Dendrobium* (ຕົ້ນມີກາມເຕັບໃຫຍ່ດ້ານຂ້າງ; ຕີນເສົາເກສອນຈະແຈ້ງດີ, ດ້ານນອກ ຂອງດອກບໍ່ມີຂົ້ນ; ກຸ່ມເມັດລະອອງຈຳນວນ 4)

4. ຕົ້ນມີຫ້ອປອມ ຫຼື ຖ້າບໍ່ມີຫ້ອປອມ, ແຕ່ລະໜໍ່ມີໃບພຽງແຕ່ 1 ຫຼື 2 ໃບເທົ່ານັ້ນ:

4A. ຊໍ່ດອກປ່ຳຂົ້ນຈາກສ່ວນລຸ່ມຂອງຕົ້ນ ຫຼື ຈາກປາຍຂອງຫ້ອປອມຊຶ່ງມີຂະໜາດໝຸດຜ່ອນລົງ, ຫ້ອປອມບໍ່ ມີໃບ

4A1. ໃບພັບເປັນກ້ບໆ ຫຼື ມີຮູບຄ້າບໃບຫຍ້າ, ບໍ່ອອບນ້ຳ, ມີລັກສະນະເປັນຄີແຜ່ນໜັງແບບບໍ່ຈະແຈ້ງ (ຍົກເວັ້ນກໍລະນີຊະນິດ *Pholidota imbricata*)

4A1a. ກ້ບດອກຮູບຮີມສິບມີເດືອຍ ຫຼື ຕີນຂອງເສົາເກສອນມີເດືອຍ

ສະກຸນ *Calanthe* (ກ້ບດອກຮູບຮີມສິບ ແລະ ເສົາເກສອນເຊື່ອມຕິດກັນເຄິ່ງໜຶ່ງຂອງລວງ ຍາວຂອງເສົາເກສອນຢ່າງໜ້ອຍ)

ສະກຸນ *Hancockia* (ເດືອຍຍາວ ແລະ ຮຽວ, ລວງຍາວເທົ່າໆກັບຂອງກ້ບດອກຮູບຮີມສິບ, ໜໍ່ ມີໃບ 1 ໃບ)

ສະກຸນ *Chrysoglossum* (ກ້ບດອກຮູບຮີມສິບມີແຄມ ພັບເປັບກ້ບໆ ຢູ່ເບ້ືອງກ້ກ, ເໜັງໄດ້; ກຸ່ມເມັດລະອອງຈຳນວນ 2, ບໍ່ມີກາບຫຸ້ມ)

ສະກຸນ *Collabium* (ເດືອຍປະກອບດ້ວຍຕີນເສົາເກສອນ ແລະ ກາບດອກຂ້າງ; ໜໍ່ມີໃບ 1 ໃບ; ກຸ່ມເມັດລະອອງຈຳນວນ 2, ບໍ່ມີກາບຫຸ້ມ)

ສະກຸນ *Nephelaphyllum* (ດອກບໍ່ຢູ່ໃນທ່າປີ້ນ; ກຸ່ມເມັດລະອອງຈຳນວນ 8, ໜໍ່ມີໃບ 1 ໃບ)

ສະກຸນ *Phaius* (ຢູ່ເບ້ືອງກ້ກ ແຄມຂອງກ້ບດອກຮູບຮີມສິບຕິດກັບເສົາເກສອນ; ກຸ່ມເມັດລະ ອອງຈຳນວນ 8)

ສະກຸນ *Tainia* (ກຸ່ມເມັດລະອອງຈຳນວນ 8, ມີກ້ານ, ບໍ່ມີວ້ຊິດີອ້ອມ; ໜໍ່ມີໃບ 1 ໃບ, ໃບສັບ ປ່ຽນຕາມລະດູການ)

ສະກຸນ *Eulophia* (ກຸ່ມເມັດລະອອງຈຳນວນ 2, ເຕ້ົາໄຂ່ມີກ້ານ ແລະ ມີວ້ຊິດີອ້ອມ)

4A1b. ກີບດອກຮູບຮີມສິບບໍ່ມີເດືອຍ ຫຼື ຕີນເສົາເກສອນບໍ່ມີເດືອຍ

4A1b1. ກຸ່ມເມັດລະອອງຈຳນວນ 4

ສະກຸນ *Anthogonium* (ດອກບໍ່ຢູ່ໃນທ່າປີ້ນ; ກາບດອກເຊື່ອມຕິດກັນເປັນຫຼອດແຄບໆ)

ສະກຸນ *Pholidota* (ເສົາເກສອນແປໆ ແລະ ເປັນຮູບຄ້າຍຮູບໝວກປິ່ນໄປທາງປາຍ; ກີບດອກຮູບຮີມສິບແບ່ງເປັນ 2 ສ່ວນ: ສ່ວນກົກວ້ຳລົງ ແລະ ບໍ່ມີປ່ຽງຂ້າງ ແລະ ສ່ວນປາຍແປໆຫາສວດ)

ສະກຸນ *Neogyna* (ມີເສົາເກສອນຄ້າຍຄືຂອງສະກຸນ *Pholidota* , ແຕ່ກີບດອກຮູບຮີມສິບ ບໍ່ແບ່ງເປັນ 2 ປ່ຽງຈະແຈ້ງ; ສ່ວນຕີນຂອງກາບດອກເປັນຮູບຄ້າຍຮູບຖົງ; ຊໍ່ດອກມີດອກບໍ່ຫຼາຍປານໃດ)

ສະກຸນ *Pleione* (ມີເສົາເກສອນຄ້າຍຄືກັບຂອງສະກຸນ *Pholidota*; ໃບລົ່ນຫຼັງຈາກລະດູການດຽວ; ບໍ່ມີໃບ ເວລາອອກດອກ)

ສະກຸນ *Coelogyne* (ມີເສົາເກສອນຄ້າຍຄືກັບຂອງສະກຸນ *Pholidota*, ໃບລົ່ນຫຼັງຈາກຜ່ານຫຼາຍລະດູການ, ເວລາອອກດອກຕົ້ນມີໃບຢູ່; ກີບດອກຮູບຮີມສິບບໍ່ຄ້າຍຄືກັບຂອງສະກຸນ *Pholidota;* ໂຄນຂອງກາບດອກບໍ່ເປັນຮູບຖົງ)

ສະກຸນ *Plocoglottis* (ເສົາເກສອນບໍ່ແປ, ກີບດອກຮູບຮີມສິບບ່ຽາວຫຼາຍກວ່າກວ້າງ; ດອກບານເປັນລຳດັບຕາມໆກັນ)

ສະກຸນ *Cremastra* (ເສົາເກສອນບໍ່ແປ; ກີບດອກຮູບຮີມສິບຍາວຫຼາຍກວ່າກວ້າງ; ດອກບານເປັນລຳດັບຕາມໆກັນ)

4A1b2. ກຸ່ມເມັດລະອອງຈຳນວນ 2 ຫຼື 8

ສະກຸນ *Nervilia* (ໃບມົນ ຫຼື ເປັນຮູບໄຂ່ຫຼັງ; ກຸ່ມເມັດລະອອງຈຳນວນ 2)

ສະກຸນ *Geodorum* (ຊໍ່ດອກເປັນພົ້ວຕັ້ງຊັນຂຶ້ນ, ກົ່ງລົງລຸ່ມຢູ່ສ່ວນປາຍແບບກະທັນຫັນ; ກຸ່ມເມັດລະອອງຈຳນວນ 2)

ສະກຸນ *Diglyphosa* (ຢູ່ໂຄນຂອງກີບດອກຮູບຮີມສິບ ມີສັນກວ້າງຫຼາຍ ແລະ ເປັນຮູບຄ້າຍຈານ; ກຸ່ມເມັດລະອອງຈຳນວນ 2, ບໍ່ມີກາບຫຸ້ມ)

ສະກຸນ *Eulophia* (ກຸ່ມເມັດລະອອງຈຳນວນ 2, ເຕົ້າໄຂ່ມີກ້ານ ແລະ ມີວິຊີດີອ້ອມ)

ຂໍ້ຄວນເອົາໃຈໃສ່: ທັງໝົດສະກຸນດັ່ງລຸ່ມນີ້ມີເມັດລະອອງຈຳນວນ 8 ໜ່ວ.

ສະກຸນ *Mischobulbum* (ຊໍ່ດອກບໍ່ມີຂົນ, ໂຄນໃບເປັນຮູບຫົວໃຈ; ກີບດອກຮູບຮີມສິບມີສັນຂະໜານໃຫ້ກັນ 2 ຫຼື 3 ອັນ)

ສະກຸນ *Spathoglottis* (ກີບດອກຮູບຮີມສິບມີຮອຍດ່ານຢູ່ຈຸດໃຈກາງ ຫຼື ມີສັນສັ້ນໆ 2 ສັນ)

ສະກຸນ *Tainia* (ຊໍ່ດອກບໍ່ມີຂົນ, ໂຄນໃບບໍ່ເປັນຮູບຫົວໃຈ)

ສະກຸນ *Eriodes* (ຊໍ່ດອກມີຂົນລຽບໆນ; ເສົາເກສອນບໍ່ມີຂົນ)

ສະກຸນ *Ipsea* (ຊໍ່ດອກມີຂົນລຽບໆນ, ເສົາເກສອນມີຂົນລຽບໆນ; ຊໍ່ດອກມີດອກ 1 ດອກ ຫຼື ບໍ່ຫຼາຍດອກປານໃດ)

ສະກຸນ *Pachystoma* (ຄ້າຍຄືກັບສະກຸນ *Ipsea* ແຕ່ຊໍ່ດອກມີດອກຫຼາຍ)

4A2. ใบพับเป็นกิบๆ, บ่ค้ายคือกับใบหย้า, มักออบน้ำ หิ เป็นเหมือนแผ่นหนัง

4A2a. หัวปอม มี ป้อๆ 2 ป้อๆ หิ หายกว่า

สะกุน *Acriopsis* (ดอกน้อย, กาบดอกข้างเชื่อมติดกันย่างชั้นเชิง)

สะกุน *Grammatophyllum* (กาบดอก และ กิบดอกมีจุดยายยู่ที่อ; ก้านของเต้ไข่เป็นรูบโต U)

สะกุน *Cymbidium* (กาบดอก และ กิบดอกมีจุดยายยู่ที่โคนเป็นส่วนหาย; ก้านของเต้ไข่ลงบง่าย)

4A2b. หัวปอม มีป้อๆ 1 ป้อๆ หิ บ่มีหัวปอมเลีย

สะกุน *Cryptostylis* (เป็นต้นเกิดยู่ดิน บ่มีหัวปอม, รากออกยู่ดิน, ดอกบ่ยู่ในห่าปั้น; กาบดอก และ กิบดอกค้ายคือกัน, แถบๆหาย)

สะกุน *Pholidota* (เสาเกสอบแปๆ และ เป็นรูบค้ายฆอกปิ่นไปหาๆปาย; กิบดอกรูบธึมสิบแบ่งเป็น 2 ส่วน: ส่วนกิกอ้ำลิง และ บ่มีปุ่งข้าๆ และ ส่วนปายแปๆ หาสอด; กุ่มเม็ดละออๆจำนอน 4, มีก้าน)

สะกุน *Dendrochilum* (เสาเกสอบ และ กุ่มเม็ดละออๆค้ายคือกับของสะกุน *Pholidota*, แต่เสาเกสอบมีแฆงข้าๆ; กิบดอกรูบธึมสิบลงบง่าย หิ แบ่งเป็น 3 ปุ่งๆ; ดอกน้อย)

สะกุน *Coelogyne* (เสาเกสอบ และ กุ่มเม็ดละออๆค้ายคือกับของสะกุน *Pholidota*; แต่กิบดอกรูบธึมสิบบ่ค้ายคือกับของ *Pholidota*)

สะกุน *Phreatia* (ขุ่ดอกเป็นพิ้อ ถิดอกน้อยๆสิขาอ หิ ออกสิยวอ; ติ่นของเสาเกสอบสั้น, กิบดอกรูบธึมสิบเพังบ่ได้; กุ่มเม็ดละออๆจำนอน 8)

สะกุน *Thelasis* (ค้ายคือกับสะกุน *Phreatia*, แต่เสาเกสอบบ่มีติ่น)

สะกุน *Thecostele* (ติ่นของเสาเกสอบมีรูบร่างค้ายคือกับฆอดที่เปิดเด่งหนึ่งๆ; ขุ่ดอกถิดอกจำนอนหาย, ดอกน้อยหาย, บานเป็นลำดับตามๆกัน; กุ่มเม็ดละออๆจำนอน 2, แตกแง่มส่วนใดส่วนหนึ่งๆ)

สะกุน *Thecopus* (ค้ายคือกับสะกุน *Thecostele* แต่ดอกบ่หาย, ดอกบานติดต่กัน; กุ่มเม็ดละออๆจำนอน 4)

สะกุน *Sunipia* (กุ่มเม็ดละออๆจำนอน 4, จัดเป็น 2 คู่, แต่ละคู่มีก้าน)

สะกุน *Drymoda* (กาบดอกข้าๆห้อยใส่ปายของเสาเกสอบซึ่งมีติ่นยาอ; กุ่มเม็ดละออๆบ่มีก้าน; ขุ่ดอกถิดอก 1 ดอก)

สะกุน *Monomeria* (ค้ายคือกับสะกุน *Drymoda* แต่กุ่มเม็ดละออๆมีก้าน; ขุ่ดอกถิดอกบ่หายปานใด)

สะกุน *Trias* (รอยเกสอบยาอหายยู่ข้างหนึ่งๆ หิ มีตุ่มโพงค้ายรูบเข้า 1 หิ 2 ตุ่ม; ขุ่ดอกถิดอก 1 ดอก)

สะกุน *Bulbophyllum* (บ่มีลักสะบะใดแบบข้าๆเหิงนี้)

4B. ຊໍ່ດອກປ່ຽງອອກທາງຂ້າງຈາກທິອປອມຊຶ່ງຢູ່ຖັດສ່ວນໂຄນຂຶ້ນໄປ ຫຼື ຈາກປາຍຂອງລຳຕົ້ນຊຶ່ງມີໃບຕິດຢູ່ ຫຼື ຈາກທິອປອມ

4B1. ຕົ້ນມີທິອປອມ ຫຼື ມີໃບສັບປ່ຽນຕາມລະດູການ; ບາງຄັ້ງໃບຄືແຜ່ນໜັງ ຫຼື ອອບນ້ຳ, ກຸ່ມເມັດລະອອງແຂງແກ່ນຄືຂີ້ເຜົ້າ

4B1a. -ໝົດທັງ 3 ກາບດອກເຊື່ອມຕິດກັນ

ສະກຸນ *Acanthephippium* (ໃບພັບເປັນກີບໆ; ຊໍ່ດອກຖືດອກບໍ່ຫຼາຍປານໃດ, ຊໍ່ດອກອອກທາງຂ້າງ; ດອກຂະໜາດກາງ)

ສະກຸນ *Cryptochilus* (ຊໍ່ດອກອອກຢູ່ປາຍ, ເປັນພົ້ວ ມີດອກສີເຫຼືອງ ຫຼື ສີແດງ, ດອກບໍ່ຫຼາຍປານໃດ, ຂະໜາດນ້ອຍ, ຈັດ ລຽງເປັນ 2 ແຖວ)

ສະກຸນ *Porpax* (ຊໍ່ດອກມີດອກ 1 ດອກ, ອອກຢູ່ປາຍ)

4B1b. ຢ່າງໜ້ອຍກາບດອກຫຼັງ ແລະ ກາບດອກຂ້າງແຍກກັນ

4B1b1. ກຸ່ມເມັດລະອອງຈຳນວນ 4

ສະກຸນ *Pholidota* (ເສົາເກສອນແປໆ ແລະ ມີລັກສະນະເປັນຮູບໝວກປິ່ນໄປທາງປາຍ; ກີບດອກຮູບຮີມສິບແບ່ງເປັນສ່ວນກີກ ແລະ ສ່ວນປາຍ, ສ່ວນກີກວ້ຳລົງ, ບໍ່ມີປ່ຽງຂ້າງ ແລະ ສ່ວນປາຍແປໆຫາສອດຂຶ້ນ)

ສະກຸນ *Otochilus* (ຄ້າຍຄືກັບສະກຸນ *Pholidota*, ແຕ່ສ່ວນກີກຂອງກີບດອກຮູບຮີມສິບມີປ່ຽງຂ້າງຈະແຈ້ງ, ເສົາເກສອນຍາວ ແລະ ຮຽວ)

ສະກຸນ *Thunia* (ເສົາເກສອນຄ້າຍຄືກັບຂອງສະກຸນ *Pholidota*; ທິອປອມຍາວ,ມີໃບຈຳນວນຫຼາຍ)

ສະກຸນ *Neogyna* (ເສົາເກສອນຄ້າຍຄືກັບຂອງສະກຸນ *Pholidota*, ແຕ່ກີບດອກຮູບຮີມສິບບໍ່ແບ່ງເປັນ 2 ສ່ວນຈະແຈ້ງ; ສ່ວນກີກຂອງກາບດອກເປັນຮູບຄ້າຍຄືຖ້ຽ; ຊໍ່ດອກຖືດອກບໍ່ຫຼາຍປານໃດ)

ສະກຸນ *Dendrochilum* (ເສົາເກສອນຄ້າຍຄືກັບຂອງສະກຸນ *Pholidota*, ແຕ່ມີແໜງຂ້າງ; ກີບດອກຮູບຮີມສິບລຽບງ່າຍ ຫຼື ແບ່ງເປັນ 3 ປ່ຽງ ບໍ່ເດັ່ນຊັດປານໃດ; ຊໍ່ດອກຖືຫຼາຍດອກ, ດອກນ້ອຍ; ທິອປອມ, ມີ 1 ໃບ)

ສະກຸນ *Panisea* (ເສົາເກສອນຄ້າຍຄືກັບຂອງສະກຸນ *Pholidota*, ແຕ່ບາງຄັ້ງກໍ່ມີແໜງຂ້າງ; ໃບບໍ່ພັບເປັນກີບໆ; ກີບດອກຮູບຮີມສິບລຽບງ່າຍ ຫຼື ແບ່ງເປັນ 3 ປ່ຽງບໍ່ເດັ່ນຊັດປານໃດ, ປ່ຽງຂ້າງບໍ່ຮັດໃສ່ກັບເສົາເກສອນ; ຊໍ່ດອກຖືດອກ 1 ຫຼື ບໍ່ຫຼາຍດອກປານໃດ, ດອກຂະໜາດນ້ອຍ; ທິອປອມມີໃບ 1 ຫຼື 2 ໃບ)

ສະກຸນ *Pleione* (ເສົາເກສອນຄ້າຍຄືກັບສະກຸນ *Pholidota*; ໃບພັບເປັນກີບໆ, ໃບລົ່ນຫຼັງຈາກລະດູການດຽວ; ຕົ້ນບໍ່ມີໃບເວລາອອກດອກ; ຊໍ່ດອກຖືດອກ 1 ຫຼື ບໍ່ຫຼາຍດອກປານໃດ, ດອກໃຫຍ່ ແລະ ສະດຸດຕາ)

ສະກຸນ *Coelogyne* (ເສົາເກສອນຄ້າຍຄືກັບຂອງສະກຸນ *Pholidota*, ໃບລົ່ນຫຼັງຈາກຫຼາຍລະດູການ; ຕົ້ນມີໃບເວລາອອກດອກ, ກີບດອກຮູບຮີມສິບມີປ່ຽງຂ້າງຮັດໃສ່ກັບເສົາເກສອນ; ສ່ວນກີກຂອງກາບດອກບໍ່ເປັນຮູບຄ້າຍຄືຖ້ຽ)

ສະກຸນ *Polystachya* (ຊໍ່ດອກເປັນພົ້ອອອກຢູ່ປາຍ, ຕັ້ງຊັນຂຶ້ນ ຫຼື ເປັນຊໍ່ແຕກແໜງ, ດອກນ້ອຍອອກສີເຫຼືອງ, ບໍ່ຢູ່ໃນທ່າປີ້ນ; ກຸ່ມເມັດລະອອງມີກ້ານ ແລະ ມີວິຊີດີອ້ອມ; ໃບພັບເຂົ້າກັນເວລາຍັງຈູມຢູ່, ໃບລົ່ນຕາມລະດູການ)

ສະກຸນ *Flickingeria* (ລຳເລື່ອຕັ້ງຊັນຂຶ້ນ, ແຕກງ່າເໝືອນຕົ້ນໄມ້ນ້ອຍໆ, ບາງຄັ້ງລຳເລື່ອກໍ່ເລື່ອໄປຕາໜ້າດິນ, ແຕ່ຫົວປອມມີກ້ານຈະແຈ້ງ, ຫົວປອມມີໃບ 1 ໃບ, ໃບບໍ່ມີກາບຫຸ້ມຢູ່ຕົ້ນ; ຊໍ່ດອກຖືດອກ 1 ດອກ, ດອກລົ່ນໄວ)

ສະກຸນ *Epigeneium* (ເສົາເກສອນມີຕີນຈະແຈ້ງ; ລຳເລື່ອເລື່ອຕາມໜ້າດິນ, ຫົວປອມບໍ່ມີກ້ານ, ຖືໃບ 1 ຫຼື 2 ໃບ; ໃບບໍ່ມີກາບຫຸ້ມຢູ່ຕົ້ນ; ດອກນານລົ່ນກວ່າ)

ສະກຸນ *Dendrobium* (ບໍ່ມີລັກສະນະໃດຄ້າຍຄ້າງເທິງເລີຍ, ເສົາເກສອນມີຕີນຈະແຈ້ງ)

ສະກຸນ *Liparis* (ເສົາເກສອນບໍ່ມີຕີນ; ດອກຢູ່ໃນທ່າປີ້ນ; ໃບພັບເປັນກີບໆ ຫຼື ພັບເຂົ້າກັນເວລາຍັງຈູມຢູ່)

ສະກຸນ *Malaxis* (ເສົາເກສອນບໍ່ມີຕີນ; ດອກບໍ່ຢູ່ໃນທ່າປີ້ນ; ໃບພັບເປັນກີບໆ)

4B1b2. ກຸ່ມເມັດລະອອງຈຳນວນ 8

ສະກຸນ *Agrostophyllum* (ໜໍ່ມີ 3 ໃບ ຫຼື ຫຼາຍໃບ; ຊໍ່ດອກສັ້ນຫຼາຍ, ປົ່ງເປັນຈຸ້ມຢູ່ປາຍຂອງໜໍ່; ດອກຂະໜາດນ້ອຍ, ອອກສີຂາວ ຫຼື ສີໄຂ່, ບາງຄັ້ງກໍ່ມີຮອຍສີແດງຊ້ຳ)

ສະກຸນ *Thunia* (ເສົາເກສອນແປໆ ແລະ ມີຮູບຄ້າຍໝວກປິ່ນໄປທາງປາຍ; ຫົວປອມຍາວ, ມີໃບຫຼາຍ; ດອກໃຫຍ່ ແລະ ສະດຸດຕາ; ກີບດອກຮູບຮີມສົບມີເດືອຍ)

ສະກຸນ *Bletilla* (ລຳຕົ້ນປົ່ງອອກຈາກລຳເລື່ອໃຕ້ດິນ; ໃບພັບເປັນກີບໆ; ຊໍ່ດອກເປັນປະເພດພົ້ອມີໃບຊ້ອນ ສັບປ່ຽນຕາມລະດູການ)

ສະກຸນ *Ceratostylis* (ໜໍ່ມີໃບ 1 ໃບ, ກ້ານໃບ 2 ໃບແມ່ນຫາຍາກ; ຊໍ່ດອກຖືດອກ 1 ດອກ, ບາງຄັ້ງດອກອອກເປັນຈຸ້ມ, ປົກກະຕິ ດອກມີຂະໜາດນ້ອຍ; ຢູ່ປາຍເສົາເກສອນມີ 2 ປ່ຽງຄ້າຍຮູບແຂນ)

ສະກຸນ *Eria* (ບໍ່ມີລັກສະນະໃດທີ່ຄ້າຍກັບຄ້າງເທິງເລີຍ)

4B2. ຕົ້ນບໍ່ມີຫົວປອມ ແລະ ໃບບໍ່ສັບປ່ຽນຕາມລະດູການ; ໃບບໍ່ເປັນຄືແຜ່ນໜັງ ຫຼື ໃບອວບນ້ຳ; ກຸ່ມເມັດລະອອງຫຼາກຫຼາຍລັກສະນະ

4B2a. ກີບດອກຮູບຮີມສົບມີເດືອຍ

ສະກຸນ *Diplomeris* (ເສົາເກສອນມີລິ້ນຂອງຮອງຮັບມີຮູບຄ້າຍອານມາ ຫຼື ຄ້າຍເຂົາ ກົ່ງໄປທາງໜ້າ; ຮອງຮັບແບ່ງເປັນປ່ຽງຈະແຈ້ງ, ມີກ້ານຍາວ; ກີບດອກກວ້າງກວ່າກາບດອກ; ດອກໃຫຍ່ຢ່າງທຽບຖານ)

ສະກຸນ *Hemipilia* (ເສົາເກສອນມີລິ້ນຂອງຮອງຮັບມີຮູບຄ້າຍຄືກັບຂອງສະກຸນ *Diplomeris*; ປ່ຽງຂອງຮອງຮັບບໍ່ມີກ້ານ, ບໍ່ແຍກກັນຂາດຕົວ; ໜໍ່ມີໃບ 1 ໃບ, ປົກກະຕິ ໃບມີຮອຍໜ້າປະທັບໃຈ; ກີບດອກບໍ່ກວ້າງກວ່າກາບດອກ; ດອກຂະໜາດນ້ອຍ)

ສະກຸນ *Habenaria* (ເສົາເກສອນມີລິ້ນຂອງຮອງຮັບບໍ່ເປັນທີ່ໜ້າສັງເກດເລີຍ, ປ່ຽງຂອງຮອງຮັບແຍກກັນຂາດຕົວ, ມີຕຸ່ມໂພງ ຮູບຄ້າຍກະດຸມ ຫຼື ຄ້າຍຮູບກ້ານຂອງຮອງຮັບ, ແຍກຈາກກີບດອກຮູບຮີມສົບຈະແຈ້ງ)

ສະກຸນ *Peristylus* (ຄ້າຍຄືກັບສະກຸນ *Habenaria*, ແຕ່ປ່ຽງຂອງຮອງຮັບ ມີຕຸ່ມໂພຽຮູບໝອນ ຊຶ່ງເຊື່ອມຕິດກັບສ່ວນກົກ ຂອງກົບດອກຮູບຮົ່ມສົບ)

ສະກຸນ *Platanthera* (ປ່ຽງຂອງຮອງຮັບອ້ຳລົງ ແລະ ບໍ່ແຍກກັນຈະແຈ້ງ; ກົບດອກຮູບຮົ່ມສົບ ລຽບງ່າຍ, ດອກມີສີຂຽວ)

ສະກຸນ *Amitostigma* (ຄ້າຍຄືກັບສະກຸນ *Platanthera*, ແຕ່ກົບດອກຮູບຮົ່ມສົບແບ່ງເປັນ 3 ປ່ຽງ; ດອກມີສີຂຽວ)

4B2b. ກົບດອກຮູບຮົ່ມສົບບໍ່ມີເດືອຍ ຫຼື ມີເດືອຍ 2 ອັນ

ສະກຸນ *Disperis* (ກາບດອກຂ້າງມີເດືອຍ)

ສະກຸນ *Corybas* (ໜໍ່ມີໃບ 1 ໃບ; ຊໍ່ດອກມີດອກ 1 ດອກ; ກາບດອກດ້ານຫຼັງແຕກຕ່າງຈາກກາບດອກດ້ານຂ້າງຫຼາຍ)

ສະກຸນ *Malaxis* (ໃບພັບເປັນກີບໆ; ດອກບໍ່ຢູ່ໃນທ່າປົ້ນ; ກົບດອກຮູບຮົ່ມສົບອ້ຳລົງບໍ່ເລິກປານໃດ; ກຸ່ມເມັດລະອອງແຂງແກ່ນຄືກ້ອນຂີ້ເຜົ້າ)

ສະກຸນ *Listera* (ຕົ້ນນ້ອຍ, ໃບຈັບພາບກັນ, ລັກສະນະຄ້າຍຄືກັບເບ້ຍຂອງພືດປະເພດຕົ້ນ; ກົບດອກຮູບຮົ່ມສົບແປໆ, ປາຍແບ່ງເປັນ 2 ປ່ຽງ; ຮອຍເມັດລະອອງມີອ່ອມຊຶ່ງດຶງອອກງ່າຍ)

ສະກຸນ *Herminium* (ສ່ວນປາຍຂອງກົບດອກຮູບຮົ່ມສົບແບ່ງເປັນ 3 ປ່ຽງ, ຮອຍເມັດລະອອງບໍ່ມີອ່ອມທີ່ດຶງອອກໄດ້ງ່າຍ)

ສະກຸນ *Tropidia* (ໃບພັບເປັນກີບໆ; ກົບດອກຮູບຮົ່ມສົບອ້ຳລົງເລິກ; ດອກບໍ່ຢູ່ໃນທ່າປົ້ນ)

5. ຕົ້ນທີ່ມີລຳຕົ້ນສີຂຽວ, ບໍ່ມີຫຍ້ຳຫຸ້ມ ແລະ ທາວຂຶ້ນ, ມີຮາກແລະໃບຢູ່ແຕ່ລະຂໍ້, ໃບອອບນ້ຳ; ໃບບໍ່ມີກາບຫຸ້ມ:

ສະກຸນ *Vanilla*

6. ຕົ້ນມີກາບເຕີບໃຫຍ່ດ້ານປາຍ (ຕົ້ນບໍ່ມີລຳເລືອ, ບໍ່ມີທໍ່ລຳປອມ ຫຼື ທໍ່ ແລະ ມັກມີລຳຕົ້ນບໍ່ແຕກແໜງ 1 ລຳເລື້ອຍໆ ຫຼື ຖ້າມີຫຼາຍກວ່າ 1 ລຳ, ມັນບໍ່ປ່ຽງອອກລະດັບດຽວກັນໝົດຢູ່ຕົ້ນຕ່ຳໆຂອງຕົ້ນ ແຕ່ຈະປະກົດອອກເໜືອນກັບງ່າຈາກຕົ້ນທີ່ມີລຳຕົ້ນດຽວ; ລຳຕົ້ນມີກາບເຕີບໃຫຍ່ຢູ່ປາຍແບບບໍ່ຊຶ້ນສຸດ; ໃບຈັດລຽງເປັນ 2 ແຖວ, ພັບເຂົ້າກັນເວລາຍັງຈູມຢູ່, ໃບແຂງ; ຊໍ່ດອກອອກທາງຂ້າງເທົ່ານັ້ນ; ກຸ່ມເມັດລະອອງຈຳນວນ 2, 4 ຫຼື 8, ແຂງ ແຕ່ຜ່ານ່ຳໄດ້ ຫຼື ອ່ອນນຸ້ມ):

6A. ກົບດອກຮູບຮົ່ມສົບມີເດືອຍ

6A1. ຕົ້ນເສົ້າເກສອນຂະຫຍາຍດີ (ຖ້າວ່າມີກາບສີງໃສກ່ອນອື່ນໃຫ້ເບິ່ງ **6A2**)

ສະກຸນ *Phalaenopsis* (ກົບດອກຮູບຮົ່ມສົບແບ່ງເປັນ 3 ປ່ຽງ, ສ່ວນກົກຂອງປ່ຽງກາງມີຮອຍດ້ານຮູບສ້ອມ)

ສະກຸນ *Lesliea* (ກົບດອກຮູບຮົ່ມສົບແບ່ງເປັນ 3 ປ່ຽງ, ສ່ວນກົກຂອງປ່ຽງກາງມີຮອຍດ້ານທີ່ເປັນບົ້ງ ແຕ່ບໍ່ເປັນຮູບສ້ອມ; ເດືອຍຢູ່ຂ້າງໃນບໍ່ມີຮອຍດ້ານ)

ສະກຸນ *Cleisostoma* (ຝາດ້ານຫຼັງຂອງເດືອຍມີຮອຍດ້ານໃຫຍ່ ຊຶ່ງເກືອບອັດຕັນປາກຂອງເດືອຍເອງ)

ສະກຸນ *Ascochilus* (ຊໍ່ດອກມີຂົນແຂງຄືໜາມ ແລະ ລຽບໆມ, ເດືອຍມີຝາອອບນ້ຳໜາຍ, ທໍ່ຢູ່ຂ້າງໃນຂອງເດືອຍແຄບໜາຍ; ກຸ່ມເມັດລະອອງຈຳນວນ 2, ແຕກແຍ່ມ)

ສະກຸນ *Grosourdya* (ຊໍ່ດອກມີຂົນແຂງຄືໜາມລຽບໆ ຫຼື ມີແຜ່ນຕຸ່ມຊາມີ; ເດືອຍບໍ່ມີຝາ ອອບນ້ຳ; ເສົາເກສອນຍາວ ແລະ ຮຽວ; ກຸ່ມເມັດລະອອງຈຳນວນ 2, ບໍ່ແຕກແງ່ມ)

ສະກຸນ *Ornithochilus* (ລຳຕົ້ນສັ້ນ, ກີບດອກຮູບຮີມສິບເໜັງບໍ່ໄດ້, ມີປ່ຽງກາງກວ້າງ, ແຄມ ເປັນອັກໆ ຮູບແຂ້ວແບບບໍ່ສະໝ່ຳສະເໝີ ຫຼື ເປັນຍອຍໆ; ກຸ່ມເມັດລະອອງຈຳນວນ 4 ຈັດ ເປັນ 2 ຄູ່, 1 ຄູ່ມີຂະໜາດແຕກຕ່າງກັນຫຼາຍ)

ສະກຸນ *Aerides* (ລຳຕົ້ນຍາວ; ກີບດອກຮູບຮີມສິບມີປ່ຽງກາງແປໆ, ຂະຫຍາຍຕົວດີ; ເດືອຍ ກົ່ງແລະປິ່ນໄປທາງໜ້າ; ກຸ່ມເມັດລະອອງຈຳນວນ 2 , ແຕກແງ່ມ)

ສະກຸນ *Thrixspermum* (ກີບດອກຮູບຮີມສິບເໜັງບໍ່ໄດ້; ກຸ່ມເມັດລະອອງຈຳນວນ 4, ຈັດ ເປັນ 2 ຄູ່)

ສະກຸນ *Brachypeza* (ກີບດອກຮູບຮີມສິບເໜັງໄດ້; ຕົ້ນຂອງເສົາເກສອນສັ້ນ; ກຸ່ມເມັດລະ ອອງຈຳນວນ 2, ແຕກແງ່ມ)

ສະກຸນ *Cryptopylos* (ກີບດອກຮູບຮີມສິບເໜັງໄດ້; ຕົ້ນຂອງເສົາເກສອນຍາວ, ມີແຜ່ນປົ່ງມາ ແຕ່ຝາດ້ານຫຼັງຂອງກີບດອກຮູບຮີມສິບ ປິດປາກເດືອຍໄວ້ສ່ວນໃດສ່ວນໜຶ່ງ; ກຸ່ມເມັດລະ ອອງຈຳນວນ 2, ແຕກແງ່ມຕື້ນໆ)

ສະກຸນ *Macropodanthus* (ກີບດອກຮູບຮີມສິບເໜັງໄດ້; ຕົ້ນຂອງເສົາເກສອນຍາວ; ປາກ ຂອງເດືອຍຖືກປິດສ່ວນໃດສ່ວນໜຶ່ງ; ລິ້ນຂອງຮອງຮັບຍາວຫຼາຍ; ກຸ່ມເມັດລະອອງຈຳນວນ 2, ແຕ່ລະກຸ່ມມີຮູແຄບໆ)

ສະກຸນ *Pteroceras* (ກີບດອກຮູບຮີມສິບເໜັງໄດ້; ຕົ້ນຂອງເສົາເກສອນຍາວ; ປາກຂອງ ເດືອຍບໍ່ຖືກປິດສ່ວນໃດສ່ວນໜຶ່ງ, ລິ້ນຂອງຮອງຮັບບ່ຍາວຫຼາຍ; ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມເລິກໆ ຫຼື ແມ່ນກຸ່ມເມັດລະອອງຈຳນວນ 4)

ສະກຸນ *Biermannia* (ກີບດອກຮູບຮີມສິບເໜັງບໍ່ໄດ້ ແຕ່ມີລັກສະນະອ່ອນໄຫວ ແລະ ຕິດກັບ ຕົ້ນຂອງເສົາເກສອນ, ປ່ຽງກາງຂອງກີບດອກຈະແຈ້ງ ຫຼື ກີບດອກຮູບຮີມສິບມີເດືອຍປິ່ນໄປ ດ້ານໜ້າ; ກຸ່ມເມັດລະອອງຈຳນວນ 2, ບໍ່ແຕກແງ່ມ ຫຼື ມີຮູ)

ສະກຸນ *Tuberolabium* (ກີບດອກຮູບຮີມສິບຕິດທ້ອຍກັບຕົ້ນຂອງເສົາເກສອນຢ່າງແຂງ ແກ່ນ, ປ່ຽງກາງນ້ອຍຫຼາຍ; ເດືອຍບໍ່ປິ່ນໄປດ້ານໜ້າ; ກຸ່ມເມັດລະອອງຈຳນວນ 2, ບໍ່ແຕກ ແງ່ມ ຫຼື ມີຝາອັດສັ້ນໆ)

6A2. ບໍ່ມີຕົ້ນຂອງເສົາເກສອນ ຫຼື ມີແຕ່ບໍ່ແຈ້ງ

6A2a. ເດືອຍຢູ່ຂ້າງໃນ, ມີຮອຍດ້ານຢູ່ຕາມຝາດ້ານຫຼັງ ຫຼື ມີແຜ່ນລາແມນ ຫຼື ມີຝາຂັ້ນ

ສະກຸນ *Cleisomeria* (ຊໍ່ດອກມີໃບຊ້ອນດອກສະດຸດຕາ ແລະ ຍາວກວ່າເຕົ້າໄຂ່)

ສະກຸນ *Trichoglottis* (ຢູ່ຝາດ້ານຫຼັງຂອງເດືອຍມີແຜ່ນລາແມນ ມີຂົນ ຫຼື ຮອຍດ້ານມີຂົນ)

ສະກຸນ *Pomatocalpa* (ຢູ່ຝາດ້ານຫຼັງຂອງເດືອຍ ມີແຜ່ນລາແມນຮູບຄ້າຍລິ້ນບໍ່ມີຂົນ ແລະ ບາງ)

ສະກຸນ *Thrixspermum* (ເດືອຍເປີດກວ້າງ, ຮູບຄ້າຍຖົງ)

ຂໍ້ຄວນເອົາໃຈໃສ່: ບັນດາສະກຸນຕໍ່ລົງໄປນີ້ມີປາກເດືອຍແຄບໆ.

ສະກຸນ *Sarcoglyphis* (ຢູ່ຝາດ້ານຫຼັງຂອງເດືອຍມີຮອຍດ້ານຮູບໝອນ, ເປັນຮ່ອງຕາມລວງ ຍາວ; ລິ້ນຂອງຮອງຮັບດູນເປັນສັນຢູ່ປາຍຂອງເສົາເກສອນ)

ສະກຸນ *Stereochilus* (ເດືອຍຄ້າຍຄືກັບຂອງສະກຸນ *Sarcoglyphis*, ແຕ່ ລິ້ນຂອງຮອງ ຮັບມີຮູບຄ້າຍສິບນິກ, ຍາວໜ້າຍ; ລຳຕົ້ນສັ້ນ)

ສະກຸນ *Pelatantheria* (ເດືອຍຄ້າຍຄືກັບຂອງສະກຸນ *Sarcoglyphis*, ແຕ່ ລິ້ນຂອງຮອງ ຮັບສັ້ນ; ຊໍ່ດອກສັ້ນໜ້າຍ, ຖືດອກບໍ່ໜ້າຍ)

ສະກຸນ *Cleisostoma* (ເດືອຍຄ້າຍຄືກັບຂອງສະກຸນ *Sarcoglyphis*, ແຕ່ ລິ້ນຂອງຮອ ງຮັບສັ້ນ, ຮູບຄ້າຍແຂ້ວ; ຊໍ່ດອກຍາວ, ດອກຢູ່ໃນທ່າປົ້ນ)

ສະກຸນ *Micropera* (ດອກບໍ່ຢູ່ໃນທ່າປົ້ນ, ລິ້ນຂອງຮອງຮັບຍາວ, ມີຮູບຄ້າຍສິບນິກ; ລຳຕົ້ນ ຍາວ)

ສະກຸນ *Robiquetia* (ເດືອຍຢູ່ຂ້າງໃນ, ມີຮອຍດ້ານ, ບໍ່ມີຝາຂັ້ນ; ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມ)

ສະກຸນ *Schoenorchis* (ເດືອຍຢູ່ຂ້າງໃນ, ບໍ່ມີຮອຍດ້ານ, ມີຝາຂັ້ນ; ກຸ່ມເມັດລະອອງຈຳນວນ 4)

6A2b. ເດືອຍຢູ່ຂ້າງໃນບາງຄັ້ງມີຂົນ ຫຼື ບໍ່ມີລວດລາຍ ຢູ່ຕາມຝາດ້ານຫຼັງຂອງເດືອຍ, ບໍ່ມີແຜ່ນຂັ້ນ

6A2b1. ຕົ້ນມີລຳຕົ້ນສັ້ນໜ້າຍ, ໃບບໍ່ເປັນຮູບແຜ່ນຍາວ

ສະກຸນ *Ornithochilus* (ກີບດອກຮູບຮີມສິບບໍ່ມີແຜ່ນກາງກວ້າງ, ແຜ່ນກາງມີແຄມເປັນອັກໆ ເໜືອນຮູບແຂ້ວ, ບໍ່ສະໝ່ຳສະເໝີ ຫຼື ເປັນຍອຍ, ກຸ່ມເມັດລະອອງຈຳນວນ 4, ຈັດລຽງເປັນ 2 ຄູ່, ໃນນັ້ນມີ 1 ຄູ່ ມີຂະໜາດໜຸດລົ່ນກັນໜ້າຍ)

ສະກຸນ *Ascochilopsis* (ແກນຂອງຊໍ່ດອກໃຄ່ໜ້າຍ, ມີດອກຂະໜາດນ້ອຍໜ້າຍ)

ສະກຸນ *Pennilabium* (ດອກບານເປັນລຳດັບຕາມໆກັນ; ປ່ຽງຂ້າງຂອງກີບດອກຮູບຮີມສິບ ຍາວໜ້າຍ, ແຄມເປັນຍອຍໆລຽບໆງາມ; ເດືອຍຍາວ, ເປັນຮູບໄມ້ຄ້ອນ)

ສະກຸນ *Thrixspermum* (ດອກບານເປັນລຳດັບຕາມໆກັນ; ປ່ຽງຂ້າງຂອງກີບດອກຮູບຮີມສິບ ບໍ່ມີແຄມເປັນຍອຍໆ ແຕ່ມັກມີຂົນເລື້ອຍໆ; ເດືອຍສັ້ນ ຄ້າຍຮູບຖົງ; ກຸ່ມເມັດລະອອງຈຳ ນວນ 4)

ສະກຸນ *Abdominea* (ດອກນ້ອຍໜ້າຍ; ຢູ່ສ່ວນກົກຂອງປ່ຽງກາງຂອງກີບດອກຮູບຮີມສິບມີ ແຜ່ນລາແມນ ຕັ້ງຊັນຂຶ້ນ)

ສະກຸນ *Saccolabiopsis* (ດອກນ້ອຍໜ້າຍ; ຢູ່ສ່ວນກົກຂອງປ່ຽງກາງຂອງກີບດອກຮູບຮີມສິບ ບໍ່ມີແຜ່ນລາແມນ; ກ້ານຂອງເຕົ້າໄຂ່ຊື່, ກວ້າງກວ່າວິຊີດີອ້ອມ)

ສະກຸນ *Schoenorchis* (ຄ້າຍຄືກັບສະກຸນ *Saccolabiopsis*, ແຕ່ກ້ານຂອງເຕົ້າໄຂ່ພັບ ເໜືອນຮູບໂຕ L ແລະ ນ້ອຍກວ່າວິຊີດີອ້ອມ)

ສະກຸນ *Ascocentrum* (ດອກມີເສັ້ນຜ່າກາງປະມານ 1 ຊມ., ມີສີສົດໃສ; ປ່ຽງກາງຂອງ ກີບດອກຮູບຮີມສິບຂະຫຍາຍດີ, ບໍ່ອອບນ້ຳປານໃດ; ກຸ່ມເມັດລະອອງຈຳນວນ 2, ມີຮູ ຫຼື ຝາອັດສັ້ນ)

ສະກຸນ *Tuberolabium* (ດອກບໍ່ມີສີສົດໃສ; ປ່ຽງກາງຂອງກີບດອກຮູບຮີມສິບນ້ອຍໜ້າຍ, ອອບນ້ຳໜ້າຍ; ກຸ່ມເມັດລະອອງຈຳນວນ 2, ບໍ່ແຕກແງ່ມ ຫຼື ມີຝາອັດສັ້ນໆ)

6A2b2. ຕົ້ນມີລຳຕົ້ນຍາວ ຫຼື ມີໃບເປັນຮູບແຜ່ນ

6A2b2a. ກຸ່ມເມັດລະອອງຈຳນວນ 2, ບໍ່ແຕກແງ່ມ ຫຼື ແຕກແງ່ມ

ສະກຸນ *Eparmatostigma* (ດອກນ້ອຍ; ຮອງຮັບມີແຄມງໍ້ຂຶ້ນ, ຄ້າຍຄືກັບປາກພູໄຟນ້ອຍ; ກຸ່ມເມັດລະອອງຈຳນວນ 2, ແຕ່ລະກຸ່ມມີຮູນ້ອຍໆ)

ສະກຸນ *Malleola* (ດອກນ້ອຍ; ເດືອຍໃຫຍ່ຫຼາຍກວມເອົາສ່ວນຫຼາຍຂອງກີບດອກຮູບຮີມສິບ; ປ່ຽງກາງຂອງກີບດອກມີປາຍແຫຼມ, ປົກກະຕິກົ່ງອີກ; ກຸ່ມເມັດລະອອງຈຳນວນ 2, ເປັນກ້ອນດຽວ)

ສະກຸນ *Uncifera* (ດອກນ້ອຍ, ປ່ຽງກາງຂອງກີບດອກຮູບຮີມສິບສັ້ນຫຼາຍ; ປາຍຂອງເດືອຍກົ່ງໄປດ້ານຫຼັງ ຫຼື ດ້ານໜ້າຢ່າງກະທັນຫັນ; ກ້ານຂອງເຕົ້າໄຂ່ມີຮູບຂໍ ໂດຍມີສັນໃຫຍ່ຕາມລວງຍາວ)

ສະກຸນ *Tuberolabium* (ດອກນ້ອຍ, ປ່ຽງກາງຂອງກີບດອກຮູບຮີມສິບສັ້ນຫຼາຍ; ເດືອຍສັ້ນ ແລະ ຊີ້, ຄ່ອຍໆເຈີດເປັນຈອມແຫຼມ; ກຸ່ມເມັດລະອອງຈຳນວນ 2, ເປັນກ້ອນດຽວ ຫຼື ມີຝາອັດສັ້ນ)

ສະກຸນ *Robiquetia* (ດອກນ້ອຍ; ຊໍ່ດອກຢ່ອນລົງ, ໃບແຜ່ອອກຕາມແຜ່ນພຽງໜຶ່ງໂດຍມີລຳຕົ້ນເປັນແກນ; ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມເລິກ)

ສະກຸນ *Ascocentrum* (ດອກນ້ອຍ, ສີສົດໄສ; ປ່ຽງກາງຂອງກີບດອກຮູບຮີມສິບຂະຫຍາຍຕົວດີ; ຊໍ່ດອກຕັ້ງຊັນຂຶ້ນ ຫຼື ເລື້ອຕາມລວງນອນ; ໃບບໍ່ແຜ່ຕາມແຜ່ນພຽງໜຶ່ງທີ່ມີລຳຕົ້ນເປັນແກນ; ກຸ່ມເມັດລະອອງຈຳນວນ 2, ແຕ່ລະກຸ່ມມີຮູນ້ອຍ ຫຼື ມີຝາອັດສັ້ນ)

ສະກຸນ *Rhynchostylis* (ດອກຂະໜາດກາງ, ຊໍ່ດອກມີດອກແໜ້ນໜາ; ກີບດອກຮູບຮີມສິບບໍ່ມີປ່ຽງຂ້າງ)

ສະກຸນ *Christensonia* (ດອກຂະໜາດກາງ; ຊໍ່ດອກມີດອກບໍ່ຫຼາຍປານໃດ; ກີບດອກຮູບຮີມສິບມີປ່ຽງຂ້າງ, ບໍ່ມີສັນ)

ສະກຸນ *Vanda* (ດອກຂະໜາດກາງຫາໃຫຍ່; ກີບດອກຮູບຮີມສິບມີປ່ຽງຂ້າງ ຫຼື ບໍ່ມີປ່ຽງຂ້າງ, ຢູ່ສ່ວນກົກຂອງປ່ຽງກາງມີ ສັນຈະແຈ້ງ)

6A2b2b. ກຸ່ມເມັດລະອອງຈຳນວນ 4 (ບາງຄັ້ງຈັດເປັນ 2 ຄູ່ແບບຈັບກັນແໜ້ນ, ເອົາເຂັມເນັ້ນຄ່ອຍໆໃສ່ ເມັດລະອອງກຸ່ມໃດໜຶ່ງເພື່ອເຫັນວ່າມັນຈະແຕກອອກເປັນສອງສ່ວນຢ່າງງ່າຍດາຍ)

ສະກຸນ *Ventricularia* (ຊໍ່ດອກສັ້ນຫຼາຍ, ມີດອກ 1 ຫຼື 2 ດອກ, ດອກນ້ອຍຫຼາຍ)

ສະກຸນ *Deceptor* (ຊໍ່ດອກແຕກແໜງ, ຖືດອກນ້ອຍໆ ແລະ ຈຳນວນຫຼາຍ; ເດືອຍຢູ່ຂ້າງໃນ, ມີຂົນຈຸ້ມກັນເປັນວົງແໜວນໃກ້ໆກັບປາກຂອງເດືອຍ)

ສະກຸນ *Renanthera* (ດອກຂະໜາດນ້ອຍ ຫາກາງ, ສີແດງຮຸ່ງ ຫຼື ສີເຫຼືອງມີຈຸດໆສີແດງ; ກີບດອກຮູບຮີມສິບຂະໜາດນ້ອຍ, ມີຮອຍດ້ານຢູ່ມຸມລະຫວ່າງປ່ຽງກາງ ແລະ ປ່ຽງຂ້າງຂອງແຕ່ລະເບື້ອງຂອງກີບ; ເດືອຍສັ້ນ, ຮູບຄ້າຍຖົງ)

ສະກຸນ *Micropera* (ດອກນ້ອຍ, ບໍ່ຢູ່ໃນທ່າປົ້ນ; ຢູ່ສ່ວນກົກຂອງປ່ຽງກາງຂອງກີບດອກຮູບຮີມສິບ ມີແຜ່ນລາແມນຕັ້ງຊັນຂຶ້ນ ຊຶ່ງອັດປາກຂອງເດືອຍສ່ວນໃດສ່ວນໜຶ່ງ, ລິ້ນຂອງຮອງຮັບສອດຂຶ້ນ, ມີຮູບສິບນິກ)

ສະກຸນ *Smitinandia* (ດອກນ້ອຍໜາຍ, ຢູ່ສ່ວນກົກຂອງປ່ຽງກາງ ຂອງກີບດອກຮູບຮີມສິບມີ ຮອຍດ້ານຕັ້ງຊັນຂຶ້ນ ຊຶ່ງປິດບັງປາກຂອງເດືອຍສ່ວນໃດສ່ວນໜຶ່ງໄວ້; ລິ້ນຂອງຮອງຮັບສັ້ນ)

ສະກຸນ *Schoenorchis* (ດອກນ້ອຍໜາຍ; ຖ້າບໍ່ນັບເອົາເດືອຍ, ກີບດອກຮູບຮີມສິບຍາວກວ່າ ກາບດອກແຜ່ນຫັງ)

ສະກຸນ *Renantherella* (ປ່ຽງກາງຂອງກີບດອກຮູບຮີມສິບໂກບເຂົ້າ, ກາບດອກຂ້າງ ຍາວກວ່າກາບດອກແຜ່ນຫັງໜາຍ; ໃບມີປາຍແໜມ)

ສະກຸນ *Armodorum* (ດອກຂະໜາດກາງ, ດອກຢູ່ຫ່າງກັນໜາຍຊັ້ງຕີແມັດ; ກີບດອກຮູບຮີມ ສິບເໜັ້ງໄດ້)

ສະກຸນ *Acampe* (ກີບດອກຮູບຮີມສິບເຊື່ອມຕິດກັບໂຄນຂອງເສົາເກສອນຢ່າງແໜ້ນໜາ; ປ່ຽງກາງຂະຫຍາຍຕົວດີ, ແປ໋ ແລະ ກວ້າງ, ມັກມີຕຸດເລັ້ອຍ; ກ້ານຂອງເຕົ້າໄຂ່ແຄບໆ)

ສະກຸນ *Thrixspermum* (ກີບດອກຮູບຮີມສິບອ່ອນໄຫວ, ປ່ຽງກາງບໍ່ຈະແຈ້ງ ຫຼື ແຄບໆ, ບໍ່ມີ ຕຸດ; ກ້ານຂອງເຕົ້າໄຂ່ສັ້ນ ແລະ ກວ້າງ)

6B. ກີບດອກຮູບຮີມສິບບໍ່ມີເດືອຍ (ແຕ່ບາງຄັ້ງກໍ່ຄ້ຳລົງໜາຍ ຫຼື ເປັນຮູບຈອກ)

6B1. ຕົ້ນມີລຳຕົ້ນສັ້ນໜາຍ, ໃບບໍ່ເປັນແຜ່ນຍາວ

ສະກຸນ *Phreatia* (ຊໍ່ດອກຖືດອກນ້ອຍສີຂາວ ຫຼື ອອກສີຂຽວ, ຈຳນວນໜາຍ; ກຸ່ມເມັດລະອອງ ຈຳນວນ 8)

ສະກຸນ *Doritis* (ກີບດອກຮູບຮີມສິບແບ່ງເປັນ 3 ປ່ຽງ, ມີຕິ່ງແຄບໆ ແລະ ຕັ້ງຊັນຂຶ້ນຢູ່ຖັດປ່ຽງ ຂ້າງລົງໄປໂລດ; ຊໍ່ດອກຍາວ, ຕັ້ງຊັນຂຶ້ນ, ດອກຂະໜາດກາງ, ສະດຸດຕາ)

ສະກຸນ *Phalaenopsis* (ກີບດອກຮູບຮີມສິບແບ່ງເປັນ 3 ປ່ຽງ, ມີຕິ່ງຮູບສ້ອມຢູ່ຖັດປ່ຽງກາງລົງ ໄປ, ຫຼື ມີຊຸດຮອຍດ້ານ ໂດຍມີວັກໆຮຽວໆເປັນຮູບແຂ້ວ; ຕົ້ນຂອງເສົາເກສອນຍາວ)

ສະກຸນ *Gastrochilus* (ກີບດອກຮູບຮີມສິບແບ່ງເປັນສ່ວນກົກ ແລະ ສ່ວນປາຍ, ສ່ວນກົກເປັນ ຮູບຈອກ ແລະ ສ່ວນປາຍແປໆຊຶ່ງແຊກເຂົ້າເທິງ ຫຼື ເຂົ້າລຸ່ມແຄມຂອງຮູບຈອກ ຂອງສ່ວນ ກົກຂອງກີບດອກດັ່ງກ່າວ)

ສະກຸນ *Chamaeanthus* (ດອກນ້ອຍ, ອອກສີຂຽວ; ກາບດອກ ແລະ ກີບດອກບໍ່ແຄບໜາຍ ແລະ ປາຍແໜມ; ກີບດອກຮູບຮີມສິບຫ້ອຍຢູ່ປາຍຂອງເສົາເກສອນ, ຕົ້ນເສົາເກສອນຍາວ; ກຸ່ມເມັດລະອອງຈຳນວນ 2)

ສະກຸນ *Chroniochilus* (ຄ້າຍຄືກັບສະກຸນ *Chamaeanthus*, ແຕ່ກາບດອກ ແລະ ກີບດອກ ບໍ່ແຄບໜາຍ)

ສະກຸນ *Hygrochilus* (ກາບດອກ ແລະ ກີບດອກກວ້າງໜາຍ, ເກືອບມົນ; ກີບດອກຮູບຮີມສິບ ມີປ່ຽງກາງກວ້າງ, ມີສັນສູງໆຢູ່ສ່ວນກາງ)

ສະກຸນ *Thrixspermum* (ກຸ່ມເມັດລະອອງຈຳນວນ 4)

ສະກຸນ *Tuberolabium* (ກີບດອກຮູບຮີມສິບເປັນຮູບແໜມແບບຫາດ ຖ້າເບິ່ງທາງຂ້າງ, ປ່ຽງ ຂ້າງສັ້ນໜາຍ; ກຸ່ມເມັດລະອອງຈຳນວນ 2)

ສະກຸນ *Biermannia* (ປ່ຽງກາງຂອງກີບດອກຮູບຮີມສິບຂະຫຍາຍຕົວດີ; ກຸ່ມເມັດລະອອງຈຳ ນວນ 2)

6B2. ຕົ້ນມີລຳຕົ້ນຍາວ ຫຼື ມີໃບເປັນແຜ່ນຍາວ

ສະກຸນ *Dipodium* (ເປັນຕົ້ນ ເກີດຢູ່ດິນ ຫຼື ທາວຂຶ້ນ; ປ່ຽງກາງຂອງກີບດອກຮູບຮີມສິບມີສັນ ຕາມລວງຍາວ, ສັນມີຂົນ, ກ້ານຂອງກຸ່ມເມັດລະອອງເປັນຮູບ Y)

ສະກຸນ *Renanthera* (ດອກຂະໜາດນ້ອຍຫາກາງ, ມີສີແດງຮຸ່ງ ຫຼື ສີເຫຼືອງ ມີຈຸດໆສີແດງ; ກີບດອກຮູບຮີມສິບອ່າວນ້ອຍແດ່, ມີຮອຍດ້ານຢູ່ຕາມມຸມລະຫວ່າງປ່ຽງກາງ ແລະ ປ່ຽງຂ້າງ ຂອງແຕ່ລະດ້ານ)

ສະກຸນ *Gastrochilus* (ກີບດອກຮູບຮີມສິບແບ່ງເປັນສ່ວນກົກ ແລະ ສ່ວນປາຍ, ສ່ວນກົກເປັນ ຮູບຈອກ ແລະ ສ່ວນປາຍແປໆເຂົ້າຊຶ່ງແຊກເຂົ້າເທິງ ຫຼື ລຸ່ມແຄມຂອງຈອກ ຂອງສ່ວນກົກ)

ສະກຸນ *Adenoncos* (ຕົ້ນນ້ອຍ, ໃບແຄບໜາຍ ແລະ ອອບນ້ຳ; ຊໍ່ດອກສັ້ນໜາຍ, ຖືດອກບໍ່ໜາຍ ປານໃດ; ດອກອອກສີຂຽວ; ກີບດອກຮູບຮີມສິບລຽບງ່າຍ, ອ່າວກວ້າງ; ກຸ່ມເມັດລະອອງຈຳ ນວນ 4)

ສະກຸນ *Trichoglottis* (ມີແຜ່ນລາແນນທີ່ມີຂົນຈັບຢູ່ໂຄນຂອງເສົາເກສອນ)

ສະກຸນ *Diploprora* (ດອກນ້ອຍ; ປ່ຽງກາງຂອງກີບດອກຮູບຮີມສິບຍາວໆ, ມີຮູບຄ້າຍຊ້ອນ ຫຼື ເປັນງ່ຳ)

ສະກຸນ *Tuberolabium* (ດອກນ້ອຍ; ກີບດອກຮູບຮີມສິບເປັນຮູບຈວຍ, ຕີນເຫວີ ປາຍແໝມຖ້າເບິ່ງດ້ານຂ້າງ; ກຸ່ມເມັດລະອອງຈຳ ນວນ 2)

ສະກຸນ *Vandopsis* (ດອກອ່າວໃຫຍ່; ກີບດອກຮູບຮີມສິບເໜັ້ງບໍ່ໄດ້, ລະຫວ່າງປ່ຽງຂ້າງມີສັນ ໄປຕາມລວງຂວາງຂອງກີບດອກ)

ສະກຸນ *Acampe* (ດອກນ້ອຍ; ກີບດອກຮູບຮີມສິບຮັດໃສ່ກັບເສົາເກສອນຢ່າງແໜ້ນໜາ, ປ່ຽງ ຂ້າງອ່າວກວ້າງ ແລະ ແປ)

ສະກຸນ *Thrixspermum* (ດອກນ້ອຍຫາໃຫຍ່; ກີບດອກຮູບຮີມສິບອ່ອນໄຫວໄດ້ແຕ່ເໜັ້ງບໍ່ ໄດ້, ປ່ຽງກາງແຄບ ແລະ ບໍ່ຈະແຈ້ງ; ຊໍ່ດອກດົກໜາ, ຖືດອກແຕ່ຈຳນວນໜ້ອຍຫາ ໜາຍດອກ, ດອກບານເປັນລຳດັບຕາມໆກັນ ຫຼື ບານບາດຽວກັນ, ດອກອາຍຸສັ້ນ)

ສະກຸນ *Esmeralda* (ດອກຂະໜາດກາງຫາດອກໃຫຍ່, ອາຍຸຍາວ, ດອກຈັບຫ່າງໆກັນ; ກີບດອກຮູບຮີມສິບເໜັ້ງໄດ້, ປ່ຽງກາງໃຫຍ່ບໍ່ຕັ້ງສາກໃຫ້ກັບສ່ວນກົກ ຂອງ ກີບດອກນີ້)

ສະກຸນ *Arachnis* (ຄ້າຍຄືກັບສະກຸນ *Esmeralda* ແຕ່ປ່ຽງກາງຂອງກີບດອກຮູບຮີມສິບກົ່ງ ລົງລຸ່ມແບບກະທັນຫັນ, ຕັ້ງສາກໃຫ້ກັບສ່ວນກົກ ຂອງ ກີບດອກຮູບຮີມສິບ)

7. ຕົ້ນມີກາບເຕີບໃຫຍ່ດ້ານຂ້າງ, ລຳຕົ້ນຍາວ ແລະ ມີໃບຈັບຢູ່ແຕ່ລະລຳຢ່າງໜ້ອຍ 6 ໃບ, ໃບຈັດລຽງເປັນ 2 ແຖວຈະແຈ້ງ:

7A. ຊໍ່ດອກອອກທາງຂ້າງ ຫຼື ປົ່ງຂຶ້ນແຕ່ລຸ່ມ

ສະກຸນ *Trichotosia* (ກາບຫຸ້ມຢູ່ຕີນໃບ ແລະ ແຜ່ນໃບມີຂົນສີກະເບົາ ຫຼື ສີເຫຼືອງຫຸ້ມ; ເສົາເກ ສອນມີຕີນ; ກຸ່ມເມັດລະອອງຈຳນວນ 8)

ສະກຸນ *Tropidia* (ໃບພັບເປັນກີບໆ; ກີບດອກຮູບຮີມສິບອ້ຳລົງເລິກ; ດອກບໍ່ຢູ່ໃນທ່າປີ້ນ; ກຸ່ມ ເມັດລະອອງຈຳນວນ 2, ຜ່າໄດ້)

ສະກຸນ *Phaius* (ໃບພັບເປັນກີບໆ; ກີບດອກຮູບຮີມສິບມີເດືອຍ, ປ່ຽງຂ້າງຮັດໃສ່ກັບເສົາເກ ສອນ; ກຸ່ມເມັດລະອອງຈຳນວນ 8)

ສະກຸນ *Cephalantheropsis* (ໃບພັບເປັນກີບໆ; ກີບດອກຮູບຮີມສິບບໍ່ມີເດືອຍ; ຊໍ່ດອກປົ່ງອອກທາງຂ້າງຈາກລຳຕົ້ນ; ກຸ່ມເມັດລະອອງຈຳນວນ 8)

ສະກຸນ *Plocoglottis* (ໃບພັບເປັນກີບໆ; ຊໍ່ດອກປົ່ງອອກຈາກລຸ່ມຕົ້ນ; ກຸ່ມເມັດລະອອງຈຳນວນ 4)

ສະກຸນ *Podochilus* (ຄວາມຍາວຂອງໃບໜຸດ 1 ຊມ.; ຊໍ່ດອກນ້ອຍໜາຍ; ກຸ່ມເມັດລະອອງຈຳນວນ 4, ມີກາບຫຸ້ມເປັນຮູບທໍ່)

ສະກຸນ *Dendrobium* (ດອກຂະໜາດນ້ອຍຫາໃຫຍ່; ກຸ່ມເມັດລະອອງຈຳນວນ 4, ບໍ່ມີຫຍັງຫຸ້ມທໍ່)

ສະກຸນ *Appendicula* (ດອກນ້ອຍ; ກຸ່ມເມັດລະອອງຈຳນວນ 6)

ສະກຸນ *Poaephyllum* (ດອກນ້ອຍ; ກຸ່ມເມັດລະອອງຈຳນວນ 8)

7B. ຊໍ່ດອກອອກຢູ່ປາຍ ຫຼື ຊໍ່ດອກອອກທັງສອງບ່ອນ: ຢູ່ປາຍ ແລະ ຢູ່ຂ້າງພາຍໃນຕົ້ນດຽວ

ສະກຸນ *Thunia* (ລຳຕົ້ນອອບນ້ຳ; ດອກໃຫຍ່ ແລະ ສະດຸດຕາ; ເສົາເກສອນແປໆ, ປາຍເປັນຮູບຄ້າຍໝວກ, ບໍ່ມີຕີນ)

ສະກຸນ *Arundina* (ລຳຕົ້ນບໍ່ອອບນ້ຳ; ດອກໃຫຍ່ ແລະ ສະດຸດຕາ; ກີບດອກກວ້າງກວ່າກາບດອກໜາຍ; ເສົາເກສອນບໍ່ມີຕີນ)

ສະກຸນ *Bromheadia* (ລຳຕົ້ນບໍ່ອອບນ້ຳ; ໃບພັບເຂົ້າກັນເວລາຍັງຈູມຢູ່; ຊໍ່ດອກມີໃບຊ້ອນດອກແປໆແຜ່ອອກດ້ານຂ້າງ ແລະ ຈັດເປັນ 2 ແຖວ, ດອກໃຫຍ່ ບານເປັນລຳດັບຕາມໆກັນ; ເສົາເກສອນບໍ່ມີຕີນ; ກຸ່ມເມັດລະອອງຈຳນວນ 2)

ສະກຸນ *Dilochia* (ລຳຕົ້ນບໍ່ອອບນ້ຳ; ໃບມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່; ດອກຂະໜາດກາງ; ກີບດອກບໍ່ກວ້າງກວ່າກາບດອກໜາຍ; ເສົາເກສອນບໍ່ມີຕີນ; ກຸ່ມເມັດລະອອງຈຳນວນ 8)

ສະກຸນ *Malaxis* (ຊໍ່ດອກເປັນປະເພດພົ້ອ ມີໜາຍດອກ; ດອກນ້ອຍ, ບໍ່ຢູ່ໃນທ່າປົ້ນ; ເສົາເກສອນບໍ່ມີຕີນ)

ສະກຸນ *Agrostophyllum* (ຊໍ່ດອກສັ້ນໜາຍ, ຖືດອກ 1 ດອກ ຫຼື ບໍ່ໜາຍປານໃດ, ມັກຈັດເປັນຈຸ້ມຄ້າຍຄືກັບຫົວດອກ, ດອກນ້ອຍ; ກຸ່ມເມັດລະອອງຈຳນວນ 8)

ສະກຸນ *Dendrobium* (ດອກນ້ອຍຫາໃຫຍ່; ກຸ່ມເມັດລະອອງຈຳນວນ 4, ບໍ່ມີຫຍັງຫຸ້ມທໍ່)

ສະກຸນ *Podochilus* (ໃບສັ້ນກວ່າ 1 ຊມ.; ດອກນ້ອຍໜາຍ; ກຸ່ມເມັດລະອອງຈຳນວນ 4, ມີກາບຫຸ້ມຮູບທໍ່)

ສະກຸນ *Appendicula* (ດອກນ້ອຍ; ກຸ່ມເມັດລະອອງຈຳນວນ 6)

8. ຕົ້ນທີ່ລັກສະນະບໍ່ຄືກັບກໍລະນີ **1** ຫາ **7** (ຕົ້ນບໍ່ມີຫົວປອມ, ບໍ່ມີກາບເຕີບໃຫຍ່ດ້ານປາຍ, ໜໍ່ມີໃບ 3 ໃບ ຫຼື ໜາຍກວ່າ, ລຳຕົ້ນຍາວ ຫຼື ບໍ່ຍາວ, ຖ້າລຳຕົ້ນຍາວ ແລະ ມີໃບ 6 ໃບ ຫຼື ໜາຍກວ່າ 6ໃບ, ໃບບໍ່ຈັດເປັນ 2 ແຖວຈະແຈ້ງ, ໃບບໍ່ເປັນທ່ອນກົມ, ບໍ່ແປ, ແຜ່ອອກທາງຂ້າງ)

8A. ໃບພັບເປັນກີບໆ

ສະກຸນ *Apostasia* (ດອກມີຮອຍເກສອນສົມບູນ 2 ອັນ; ກີບດອກ ແລະ ກີບດອກຮູບຮີມສິບຄືກັນກັບກາບດອກ; ເຕົ້າໄຂ່ບໍ່ມີຂົ້ນ)

ສະກຸນ *Neuwiedia* (ດອກມີຮອຍເກສອນສົມບູນ 3 ອັນ; ກີບດອກຮູບຮີມສິບບໍ່ແບ່ງເປັນປ່ຽງ ຫຼື ມີສັນ; ເຕົ້າໄຂ່ມີຂົນລຽບໆ)

ສະກຸນ *Calanthe* (ລຳຕົ້ນສັ້ນໜາຍ; ກີບດອກຮູບຮີມສິບ ແລະ ເສົາເກສອນເຊື່ອມຕິດກັນຢູ່ເຄິ່ງໜຶ່ງຂອງລວຍງາວຂອງເສົາເກສອນຢ່າງໜ້ອຍ; ກີບດອກຮູບຮີມສິບມັກມີເດືອຍ)

ສະກຸນ *Claderia* (ລຳຕົ້ນຍາວໜາຍ, ເລືອຕາມໜ້າດິນ ຫຼື ທາວຂຶ້ນ, ໃບຈັດລຽງຫ່າງໆຢູ່ຕາມໜໍ່; ກີບດອກຮູບຮີມສິບແບ່ງເປັນ 4 ປ່ຽງ, ມີເສັ້ນກ່າງສີຂຽວທີ່ສັງເກດໄດ້ຢູ່ຕາມປ່ຽງນັ້ນໆ)

ສະກຸນ *Malaxis* (ຊໍ່ດອກອອກຢູ່ປາຍ, ເປັນປະເພດພົ້ວຕັ້ງຊັນຂຶ້ນ, ຖືດອກຈຳນວນໜາຍ; ດອກນ້ອຍ, ບໍ່ຢູ່ໃນທ່າປີ້ນ; ເສົາເກສອນບໍ່ມີຕີນ)

ສະກຸນ *Plocoglottis* (ກີບດອກຮູບຮີມສິບບໍ່ມີເດືອຍ; ຊໍ່ດອກປ່ຽງອອກຈາກໂຄນຂອງຕົ້ນ)

ສະກຸນ *Tropidia* (ກີບດອກຮູບຮີມສິບອ້ຳລຽງເລິກ; ດອກບໍ່ຢູ່ໃນທ່າປີ້ນ; ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້)

ສະກຸນ *Phaius* (ກີບດອກຮູບຮີມສິບມີເດືອຍ, ປ່ຽງຂ້າງຮັດໃສ່ກັບເສົາເກສອນ)

ສະກຸນ *Cephalantheropsis* (ຊໍ່ດອກປ່ຽງອອກທາງຂ້າງຂອງລຳຕົ້ນ; ກີບດອກຮູບຮີມສິບແບ່ງເປັນ 3 ປ່ຽງ)

ສະກຸນ *Corymborkis* (ຊໍ່ດອກປ່ຽງອອກທາງຂ້າງຂອງລຳຕົ້ນ, ກີບດອກຮູບຮີມສິບບໍ່ແບ່ງເປັນປ່ຽງ)

ສະກຸນ *Bletilla* (ຊໍ່ດອກອອກຢູ່ປາຍ; ໃບຊ້ອນດອກສັບປ່ຽນຕາມລະດູການ; ກຸ່ມເມັດລະອອງຈຳນວນ 8, ເປັນຄີ້ເຜົ້ງ)

ສະກຸນ *Epipactis* (ຊໍ່ດອກອອກຢູ່ປາຍ; ໃບຊ້ອນດອກບໍ່ລົ່ນ; ກຸ່ມເມັດລະອອງຈຳນວນ 2, ອ່ອນນຸ້ມ)

8B. ໃບບໍ່ພັບເປັນກີບໆ

8B1. ກີບດອກຮູບຮີມສິບມີເດືອຍ

8B1a. ກຸ່ມເມັດລະອອງແຊກເຂົ້າດ້ານຫຼັງຂອງເສົາເກສອນ, ມີອ່ອມປົກຫຸ້ມໄວ້

ສະກຸນ *Vrydagzynea* (ເດືອຍຢູ່ຂ້າງໃນມີແໜງເປັນຮູບດົ້ວ)

ສະກຸນ *Anoectochilus* (ດ້ານນອກຂອງກີບດອກຮູບຮີມສິບມີສັນ 2 ອັນ ຕາມລວຍງາວຂອງກີບດອກ ແລະ ຈັບຢູ່ດ້ານຂ້າງ, ສັນເປັນວັກໆຄືຮູບແຂ້ວ ຫຼື ມີຕຸ່ງແລບໆເກືອບຄືກັບຂົນ; ປ່ຽງຂອງຮອງຮັບແຍກກັນຈະແຈ້ງຢູ່ແຕ່ລະຂ້າງຂອງເສົາເກສອນ ແລະ ຢູ່ໃກ້ປາຍ)

ສະກຸນ *Pristiglottis* (ຄ້າຍຄືກັບສະກຸນ *Anoectochilus*, ແຕ່ປ່ຽງຂອງຮອງຮັບບໍ່ໄດ້ແຍກກັນຢູ່ແຕ່ລະຂ້າງຂອງເສົາເກສອນ)

ສະກຸນ *Herpysma* (ດ້ານນອກຂອງກີບດອກຮູບຮີມສິບບໍ່ມີສັນຈັບຢູ່ດ້ານຂ້າງຂອງກີບ; ເດືອຍຢູ່ໃນມີຕຸດນ້ອຍໆຈຳນວນໜາຍພໍຄວນ)

ສະກຸນ *Erythrodes* (ດ້ານນອກຂອງກີບດອກຮູບຮີມສິບບໍ່ມີສັນຈັບຢູ່ດ້ານຂ້າງ; ເດືອຍຢູ່ໃນ, ບໍ່ມີຕຸດ)

8B1b. ກຸ່ມເມັດລະອອງແຊກເຂົ້າດ້ານໜ້າຂອງເສົາເກສອນ, ບໍ່ມີອ່ອມປົກຫຸ້ມໄວ້

ສະກຸນ *Diplomeris* (ກີບດອກກວ້າງກວ່າການດອກໜາຍ)

ສະກຸນ *Brachycorythis* (ໃບຊ້ອນດອກໃຫຍ່ຄ້າຍຄືໃບແທ້)

ສະກຸນ *Pecteilis* (ດອກມີຂະໜາດກາງຫາໃຫຍ່; ປ່ຽງຂອງຮອງຮັບເປັນຮູບໝອນ ຈັດຢູ່ໃກ້ໆ ກັນ)

ສະກຸນ *Amitostigma* (ດອກນ້ອຍ; ກີບດອກຮູບຮີມສິບແບ່ງເປັນ 3 ປ່ຽງ; ປ່ຽງຂອງຮອງຮັບອ້ າ ລີງ ແລະ ຈັດຢູ່ໃກ້ໆກັນ)

ສະກຸນ *Platanthera* (ດອກນ້ອຍ, ສີຂຽວ; ກີບດອກຮູບຮີມສິບບໍ່ແບ່ງເປັນປ່ຽງ; ຮອງຮັບມີ ແຜ່ນໜ້າແຜ່ນດຽວ ແລະ ອ້ າລີງ)

ສະກຸນ *Habenaria* (ດອກຂະໜາດນ້ອຍ ຫາຂະໜາດກາງ; ປ່ຽງຂອງຮອງຮັບແຍກກັນຈະ ແຈ້ງ, ມີຕຸ່ມໂພງເປັນຮູບຄ້າຍກະດຸມ ຫຼື ຄ້າຍຄືກັບຕີ່ງງ່ ານ້ອຍ, ຕຸ່ມໂພງແຍກຈາກກີບດອກ ຮູບຮີມສິບ)

ສະກຸນ *Peristylus* (ດອກນ້ອຍ; ປ່ຽງຂອງຮອງຮັບແຍກກັນຈະແຈ້ງ, ມີຕຸ່ມໂພງຮູບຄ້າຍກະ ດຸມແປໆ, ຕຸ່ມໂພງເຊື່ອມຕິດກັບກີບດອກຮູບຮີມສິບ)

8B2. ກີບດອກຮູບຮີມສິບບໍ່ມີເດືອຍ.

8B2a. ໃບແຂງ, ພັບເຂົ້ ากັນເວລາຍັງຈຸມຢູ່; ຕົ້ນບໍ່ມີຫົວໃຕ້ດິນ, ບໍ່ມີລ ำເລົ ຽ.

ສະກຸນ *Paphiopedilum* (ລ ำຕົ້ນສັ້ນໜາຍ, ດອກໃຫຍ່; ກີບດອກຮູບຮີມສິບເປັນຮູບເກີບຫຸ້ ມ; ມີຮອຍ ເມັດລະອອງສີມຢູນເໜດ 2 ອັນ)

ສະກຸນ *Trichotosia* (ຕົ້ນມີຂົນ)

ສະກຸນ *Phreatia* (ຊໍ່ດອກເປັນປະເພດພົ້ ວ ຖືດອກນ້ອຍໆໜາຍດອກ, ມີສີຂາວ ຫຼື ອອຫສີ ຂຽວ; ເສົ ากສອນມີຕົ້ນ, ກຸ່ມເມັດລະອອງຈ ำນວນ 8)

ສະກຸນ *Thelasis* (ຄ້າຍຄືກັບສະກຸນ *Phreatia*, ແຕ່ເສົ ากສອນບໍ່ມີຕົ້ນ)

ສະກຸນ *Dendrobium* (ຕົ້ນຂອງ ເສົ ากສອນຈະແຈ້ງ; ກຸ່ມເມັດລະອອງຈ ำນວນ 4)

8B2b. ໃບມ້ ວນເຂົ້ ากັນຕາມລວງຍາວເວລາຍັງຈຸມຢູ່, ໃບບໍ່ແຂງ; ບາງຄັ້ ງກ ່ ມີຫົວໃຕ້ດິນ ຫຼື ມີລ ำເລົ ຽ ຊຶ ່ງມີໃບຈັບຢູ່.

ສະກຸນ *Cryptostylis* (ດອກບໍ່ຢູ່ໃນທ ่ າປົ ້ນ, ດອກຂະໜາດກາງ, ບານອອກໜາຍ; ໃບບໍ່ພັບ ເປັນກີບໆ ແຕ່ກົ ມຍາວຄືກ ่ ງ ่ ານ ້ ອຍ)

ສະກຸນ *Malaxis* (ດອກບໍ່ຢູ່ໃນທ ่ າປົ ້ນ, ດອກນ ້ ອຍໆບານອອກໜາຍ; ໃບພັບເປັນກີບໆ ແລະ ບໍ່ ເປັນຮູບກ ่ ງ ่ ານ ້ ອຍແບບຈະແຈ ້ ງ)

ສະກຸນ *Hetaeria* (ດອກບໍ່ຢູ່ໃນທ ่ າປົ ້ນ, ບໍ່ບານອອກໜາຍ, ດອກນ ້ ອຍຫານ ້ ອຍໜາຍ; ໃບມີ ກ ้ ານສັ ้ ນ, ບໍ່ພັບເປັນກີບໆ)

ສະກຸນ *Epipactis* (ໃບມີເສັ ้ นກ ่ າໆໃຫຍ ่ ເບິ ่ ງດ ้ ານລຸ ่ ມ; ກີບດອກຮູບຮີມສິບແບ ่ ງເປັນສ ่ ວນກີກ ແລະ ສ ่ ວນປ ่ າຍ, ສ ่ ວນກີກ ้ ອ ้ ແລະ ສ ่ ວນປ ่ າຍແປ ແລະ ສ ้ ອດຂ ้ ຶ ้ ນ; ກຸ ่ ມເມັ ้ ດລະອ ้ ອງຈ ้ ำນວນ 2, ອ ่ ອນນຸ ่ ม)

ສະກຸນ *Spiranthes* (ດອກສີບົ ວຈັ ้ ດລ ้ ງແບບກ ้ ົ ງ ้ ອກ ้ ົ ນຫ ้ ອຍ ่ ານ ่ ແໜ ้ ນໜ ่ ານ; ກຸ ่ ມເມັ ้ ດລະອ ้ ອງ ຈ ้ ำນວນ 2, ອ ่ ອນນຸ ่ ม)

ຂໍ້ຄວນເອົາໃຈໃສ່: ທັງໝົດສະກຸນດັ່ງຕໍ່ໄປນີ້ມີກຸ່ມເມັດລະອອງທີ່ຜ່າໄດ້.

ສະກຸນ *Herminium* (ກີບດອກຮູບຮີມສິບແບ່ງເປັນ 3 ປ່ຽງຢູ່ປາຍ; ກຸ່ມເມັດລະອອງແຊກເຂົ້າ ດ້ານໜ້າຂອງເສົາເກສອນ, ບໍ່ມີວ່ອມປົກຫຸ້ມໄວ້; ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້)

ສະກຸນ *Cheirostylis* (ກາບດອກຂ້າງເຊື່ອມຕິດກັນຮອດເຄິ່ງສ່ວນລຸ່ມຢ່າງໜ້ອຍ)

ສະກຸນ *Goodyera* (ກີບດອກຮູບຮີມສິບອ້ຳລີ່ງ, ລຽບງ່າຍ, ຂ້າງໃນມີແຜ່ນຕຸ່ມແລບໆຄ້າຍຄື ຂົນໜາຍແຜ່ນປົກຫຸ້ມທໍ່ອ ຫຼື ມີແຜ່ນຕຸ່ມຄ້າຍຄືຂົນແຜ່ນດຽວ)

ສະກຸນ *Hylophila* (ກີບດອກຮູບຮີມສິບເປັນຮູບຄ້າຍຖົ່ງ, ປ່ຽງກາງນ້ອຍ ແລະ ແຄບ)

ສະກຸນ *Ludisia* (ດອກບິດ, ບໍ່ມີຄວາມເຄິ່ງຄືກັນ)

ສະກຸນ *Anoectochilus* (ຂ້າງນອກຂອງກີບດອກຮູບຮີມສິບມີສັນຕາມລວງຍາວ 2 ອັນ, ຈັບຢູ່ ສ່ວນຂ້າງ, ສັນເປັນວັກໆຮູບແຂ້ ຫຼື ມີແໜງຮຽວໆເກືອບຄືຂົນ; ປີ້ກຂອງຮອງຮັບແຍກກັນຈະ ແຈ້ງຢູ່ແຕ່ລະຂ້າງຂອງເສົາເກສອນ, ໃກ້ໆກັບປາຍ)

ສະກຸນ *Pristiglottis* (ຄ້າຍຄືກັບ ສະກຸນ *Anoectochilus*, ແຕ່ປີ້ກຂອງຮອງຮັບບໍ່ແຍກກັນຢູ່ ແຕ່ລະຂ້າງຂອງເສົາເກສອນ ຢູ່ໃກ້ໆປາຍ)

ສະກຸນ *Rhomboda* (ຄ້າຍຄືກັບ ສະກຸນ *Anoectochilus*, ແຕ່ມີສັນຕ່ຳ, ບໍ່ມີວັກໆຄືແຂ້ ຫຼ ບໍ່ມີແໜງ; ໃບມີເສັ້ນກ່າງກາງອອກສີຂາວ ຫຼື ມີສີບົວ)

ສະກຸນ *Myrmechis* (ຕົ້ນນ້ອຍໜ່າຍ; ຊໍ່ດອກຖືດອກບໍ່ໜ່າຍ; ກີບດອກຮູບຮີມສິບມີສ່ວນກາງ ເປັນຫໍ່ຍາວ; ປ່ຽງຂອງຮອງຮັບດູນຂຶ້ນ, ມີຕີ່ງຄ້າຍຮູບແຂນ)

ສະກຸນ *Zeuxine* (ຊໍ່ດອກຖືດອກບໍ່ໜ່າຍປານໃດ; ກີບດອກຮູບຮີມສິບບໍ່ມີສ່ວນກາງເປັນຫໍ່ ຍາວ, ບໍ່ມີສັນແຜ່ອອກທາງຂ້າງ; ປ່ຽງຂອງຮອງຮັບບໍ່ດູນຂຶ້ນ)

ສະກຸນ **Abdominea** J.J.Sm. — *

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍໜາຍ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນໆ. ໃບມີຈຳນວນໜ້ອຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມ. ຊໍ່ດອກອອກທາງຂ້າງ, ເປັນພົ້ອຖືດອກນ້ອຍໆໜາຍດອກ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮີມສົບ ເຊື່ອມຕິດກັບ ເສົາເກສອນ, ມີເດືອຍ, ຢູ່ໂຄນຂອງປ່ຽງກາງມີແຜ່ນລາແມນບາງໆ ຕັ້ງຊັນຂຶ້ນ, ເດືອຍຢູ່ຂ້າງໃນ ບໍ່ມີຮອຍດ້ານ. ລົ້ນຂອງຮອງຮັບມີ 2 ປ່ຽງກວ້າງໆ ແຕ່ກົ່ວຢູ່ຕີນ, ເຫວີອອກ ແລະ ກົ່ວເຂົ້າອີກຢູ່ສ່ວນປາຍ. ເສົາເກສອນບໍ່ມີຕີນ, ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ແຫຼມມາເລເຊຍ, ຊາວາ, ບອກເນວ, ຟີລິບປິນ. ຢູ່ໄທມີ 1 ຊະນິດ; ຊະນິດ [*A. minimiflora* (Hook.f.) J.J. Sm.]. ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນພືດນ້ອຍໆ, ດອກກໍ່ນ້ອຍໆ, ເບິ່ງຜິວເຜີນ ຄ້າຍຄືກັບສະກຸນ *Tuberolabium* ຊຶ່ງ ເພີ່ນຫຍໍ້ຂະໜາດລົງ. ອາດຈະບໍ່ມີການນຳໄປປູກ ຍົກເວັ້ນ ໃນ 1 ຫຼື 2 ຊຸດສະສົມວິທະຍາສາດເທົ່ານັ້ນ.

ສະກຸນ **Acampe** Lindl. — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ. ໃບ ມີຈຳນວນໜາຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ອ ຫຼື ຊໍ່ແຕກແໜງ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ກາບດອກ ຫຼື ກີບດອກມີຮອຍສີແດງອົມສີກະເບົ້າ. ກາບດອກແຍກກັນ. ກີບດອກຮູບຮີມສົບມີເດືອຍຢູ່ຕີນ ຫຼື ບໍ່ມີເດືອຍ, ກີບດອກອ່ອນບ້ຳໜາຍ, ເໜັງບໍ່ໄດ້. ເສົາເກສອນສັ້ນໆ, ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອາຟຼິກກາພາກໃຕ້ ແລະອາຟຼິກກາເຂດຮ້ອນ, ມາດາກັດສະກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ແຫຼມມາເລເຊຍ. ປະມານ 5 ຊະນິດ; 4 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 2 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ໃນປ່າເຂດຕ່ຳ ແລະ ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນດອກເຜົ້ງທີ່ທົນທານ, ມີດອກທີ່ເຮັດໃຫ້ຜິດຫວັງຍ້ອນຂະໜາດ ແລະ ຮູບໂສມພາຍນອກ. ດອກຂອງສະກຸນນີ້ຄ້າຍຄືກັບດອກຂອງບາງຊະນິດໃນສະກຸນ *Trichoglottis* ພໍຄວນ, ແຕ່ໃນນີ້ຢູ່ໂຄນຂອງກີບດອກຮູບຮີມສົບມີແຜ່ນລາແມນບາງໆມີຂົນຫຸ້ມ ຊຶ່ງລັກສະນະນີ້ບໍ່ມີຢູ່ນຳສະກຸນຂອງ *Acampe* ເລີຍ.

ສະກຸນ **Acanthephippium** Blume — *

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ມີລຳເລືອສັ້ນໆ. ຫົວປອມມຸກດີ, ມີປ້ອງ ຈຳນວນໜາຍກວ່າ 1; ມີໃບ 2 ຫາ 4. ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ອ ມີດອກຈຳນວນໜ້ອຍ ຈັບຢູ່ໜໍ່ອ່ອນທີ່ປົ່ງຂຶ້ນມາແຕ່ລຸ່ມຕົ້ນ. ດອກຂະໜາດປານກາງ, ມີທ່າປົ້ນ. ກາບດອກເຊື່ອມຕິດກັນ, ກາບດອກດ້ານຂ້າງຈັດເປັນຮູບຄ້າງອອກ

ມ.ກ. ກີບດອກບໍ່ມີເດືອຍ, ເໜັງໄດ້. ຕີນເສົາເກສອນຍາວໜ້ອຍ, ກົ່ງເຂົ້າຂ້າງໃນ. ກຸ່ມເມັດລະອອງ, ຈຳນວນ 8 (ໃຫຍ່ 4, ນ້ອຍ 4), ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ ແລະ ບໍ່ມີວີຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງໝູ່ເກາະຕິງກາ. 11 ຊະນິດ: 3 ຊະນິດຢູ່ໄທ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ແລະ ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເກີດຢູ່ດິນ, ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ຈຳແນກໄດ້ຈະແຈ້ງ; ບາງໂອກາດມັນກໍຖືກນຳເອົາໄປປູກ ຈາກຜູ້ສະໜອນມັກດ້ານນີ້. ດອກຊຶ່ງມີຮູບຖ້ຽເຮັດໃຫ້ການຈຳແນກຊະນິດດັ່ງກ່າວ ບໍ່ອາດຜິດພາດໄດ້.

ສະກຸນ **Acriopsis** Reinw. ex Blume — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານຂ້າງ, ມີລຳເລືອສັ້ນໆ. ຫົວປອມສັ້ນ ແລະ ໜາ, ປ້ອງ ຈຳນວນໜ້ອຍກວ່າ 1, ມີໃບ 2 ຫາ 4. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກປົ່ງຂຶ້ນຈາກຕີນຂອງຕົ້ນ, ຊໍ່ດອກມີລັກສະນະ ເຮເຕຣັງເທີສ, ຊໍ່ດອກຮຽວ, ຈັດເປັນພົ້ວ ຫຼື ເປັນປະເພດຊໍ່ແຕກແໜງ ບັນຈຸໜ້ອຍດອກ, ດອກ ຂະໜາດນ້ອຍ. ການດອກດ້ານຂ້າງເຊື່ອມຕິດກັນ. ກີບດອກຮູບຮີມສົບເຊື່ອມຕິດກັບເສົາເກສອນ, ບໍ່ມີເດືອຍ. ປາຍເສົາເກສອນເປັນຮູບໝວກ, ມີ ຕິ່ງ 2 ອັນ,ໃສໆ ແລະ ເກືອບສ່ອງຊອດຢູ່ສົ້ນສຸດ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງ ຈຳນວນ 4, ແຂງ, ບໍ່ມີ ກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວີຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊັຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນັຍ, ອິດສະເຕເລຍ. 6 ຊະນິດ: 2 ຊະນິດພົບຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ ແລະ 2 ຊະນິດຢ่ູຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ຢູ່ໃນປ່າເຂດຕ່ຳ, ພົບຢູ່ຕາມຕົ້ນໄມ້ລຽບແຄມທາງ, ມັກຢູ່ນຳຕົ້ນທີ່ມີຮ່ອງນ້ຳ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ແຍກປ່ຽວຈາກໝູ່, ມີຊໍ່ດອກຮຽວໆ, ດອກນ້ອຍໆ ແລະ ບໍ່ເປັນທີ່ສັງເກດເລີຍ. ການດອກດ້ານຂ້າງເຊື່ອມຕິດເຂົ້າກັນ (ດັ່ງໃນສະກຸນ *Paphiopedilum*). ການນຳເອົາສະກຸນນີ້ມາປູກ ແມ່ນຫາຍາກ ແຕ່ການເກີດແບບທຳມະຊາດຍັງມີໜ້ອຍ.

ສະກຸນ **Adenoncos** Blume — *

ຊື່ພ້ອງ: ສະກຸນ *Podochilopsis* Guillaumin

ພືດອາໃສບ່ອນຄ້ຳຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ໃບຈັດລຽງ ເປັນ 2 ແຖວ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່, ອວບນ້ຳ. ຊໍ່ດອກອອກທາງຂ້າງ, ສັ້ນ, ຈັດເປັນພົ້ວ ຫຼື ເປັນດອກດ່ຽວ. ດອກມີຂະໜາດນ້ອຍຫານ້ອຍໜ້ອຍ, ຢູ່ໃນທ່າປົ້ນ, ມີສີຂຽວ ຫຼື ອອກສີເຫຼືອງ. ການດອກແຍກກັນ. ກີບດອກຮູບຮີມສົບ ບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງ ຈຳນວນ 4 , ມີຂະໜາດເທົ່າໆກັນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວີຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ເຊັ່ນ: ອິນດູຈີນ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 15 ຊະນິດ; 4 ຊະນິດຢູ່ໄທ, 1 ຊະນິດຢ่ູຫວຽດນາມ, ສ່ວນຢ่ູລາວ ແລະ ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳຂໍ້ມູນ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢ่ູໃນປ່າຂຽວຕະຫຼອດປີ ເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນດອກເຜົ້ງຊຶ່ງບໍ່ເປັນທີ່ສັງເກດພໍປານໃດ. ລຳຕົ້ນແຂງແກ່ນ, ມີໃບມຸກ ແລະ ນ້ອຍ. ສ່ວນຫຼາຍ ດອກມີສີຂຽວ ແລະ ມີໂຄງສ້າງງ່າຍດາຍ.

ສະກຸນ **Aerides** Lour. — *

ພືດອາໃສບ່ອນຄ້ຳ, ເກີດຢູ່ດິນກໍ່ມີ ແຕ່ຫາຍາກ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ໃບດົກ ຈັດວາງເປັນ 2 ແຖວ. ໃບມີການຫຸ້ມຢູ່ ຕີນ, ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຫຼື ຊໍ່ແຕກແໜງ. ດອກມີຂະໜາດປານກາງ, ສະດຸດຕາ. ການດອກແຍກກັນ. ກີບດອກຮູບຮີມສົບ ເປັນຮູບເດືອຍ, ປົກກະຕິເດືອຍປິ່ນປາຍໄປດ້ານຫນ້າ, ປົກກະຕິ ຕີນກີບດອກຈະແຂງ ແລະ ທ້ອຍຕິດກັບເສົາເກສອນ ຫຼື ວ່າເໜັງບໍ່ໄດ້; ກີບດອກຮູບຮີມສົບ ມີ 3 ປ່ຽງ, ປ່ຽງກາງແປໆເຂົ້າດ້ານໜ້າ ແລະ ດ້ານ ຫຼັງ, ເສົາເກສອນມີຕີນຍາວ. ກຸ່ມເມັດລະອອງ ຈຳນວນ 2, ແຕກແງ່ມ, ແຂງ, ບໍ່ມີກ້ານ, ກ້ານຂອງເຕົ້າໄຂ່ແລບໆເໝືອນເສັ້ນເຊືອກ ແຕ່ສ່ວນຫຼາຍຈະເຫວີ່ອອກຢູ່ສ່ວນປາຍ; ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ , ເຊັ່ນ: ປະເທດມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 20 ຊະນິດ: 7 ຊະນິດຢູ່ໄທ, 6 ຊະນິດຢູ່ລາວ, 3 ຊະນິດຢູ່ກຳປູເຈຍ, 7 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນຕົ້ນອາໃສບ່ອນຄ້ຳ, ເກີດໃນປ່າເຂດຕ່ຳ; ຊະນິດເກີດຢູ່ດິນໃນປ່າໂຄກ ແມ່ນຫາຍາກ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຄົນນິຍົມເອົາມາປູກ, ມັນໃກ້ຄຽງກັບສະກຸນ *Rhynchostylis* ແລະ ສະກຸນ *Vanda*. ສະກຸນ *Aerides* ຈຳແນກຈາກ 2 ສະກຸນເທິງນີ້ ຕົ້ນຕໍ່ດ້ວຍຕີນຂອງເສົາເກສອນໃຫຍ່ ຫຼື ມຸກດີ.

ສະກຸນ **Agrostophyllum** Blume — *

ຊື່ພ້ອງ: *Appendiculopsis* (Schltr.) Szlach.

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານຂ້າງ ຫຼື ມີຈຳນວນໜ້ອຍເກີດຢູ່ດິນ, ລຳເລືອສັ້ນໆ ຫາຍາວ. ລຳຕົ້ນຍາວ, ປ້ອງມີຈຳນວນໜ້ອຍ ຫາ ຫຼາຍ. ລາງເທື່ອປ້ອງໃຄ່ ຫາ ມີຮູບຮ່າງຮຽວ, ຫົວປອມມີລັກສະນະແປ. ໃບ, ມີຈຳນວນໜ້ອຍ ຫາໃບຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນໃບ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່; ປົກກະຕິ, ການໃບມີ ຂອບສີດຳ ຫຼື ສີກະເບົາ. ຊໍ່ດອກອອກຢູ່ປາຍ(ຢ່າງໜ້ອຍເບິ່ງຮູບນອກ ປະກົດວ່າເປັນແນວນັ້ນ) ຫຼື ຊໍ່ດອກອອກທາງຂ້າງແມ່ນຫາຍາກ, ຊໍ່ສັ້ນໆ, ຖືດອກໜຶ່ງຫາ ບໍ່ຫຼາຍດອກປານໃດ, ທີ່ວໄປຊໍ່ດອກອອກເປັນພົ້ວຄ້າຍຄືຊໍ່ປະເພດຫົວດອກ, ດອກມີຂະໜາດນ້ອຍ, ຢູ່ໃນທ່າປົ້ນ ຫຼື ບໍ່, ດອກສີຂາວ ຫຼື ອອກສີເຫຼືອງ, ບາງຄັ້ງມີຮອຍສີມ້ວງ ຫຼື ສີເຫຼືອງ. ການດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ບາງຄັ້ງເປັນຮູບຖ້ວຍຢູ່ຕີນ, ເໜັງບໍ່ໄດ້, ປົກກະຕິ ແບ່ງເປັນສ່ວນກົກ ແລະ ສ່ວນປາຍຈະແຈ້ງ, ສ່ວນກົກເປັນຮູບຈອກ ແລະ ສ່ວນປາຍຮາບພຽງ. ຕີນຂອງເສົາເກສອນບໍ່ຈະແຈ້ງ ຫຼື ບໍ່ມີຕີນຊ້ຳ. ກຸ່ມເມັດລະອອງ ຈຳນວນ 8 , ແຂງ, ບໍ່ມີກ້ານ, ເຕົ້າໄຂ່ກໍ່ບໍ່ມີກ້ານ, ມີວິຊີດີອ້ອມ. ທີ່ວໄປເຕົ້າໄຂ່ມີຂົນທີ່ເປັນເກັດໆຈຳນວນໜ້ອຍໜຶ່ງແຈກຢາຍທົ່ວໆ.

ການແຈກຢາຍ: ພົບຢູ່ເກາະເຊແຊນ, ຢູ່ເອເຊຍເຂດຮ້ອນ, ເຊັ່ນ: ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນັຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງເກາະຊາມົວ. ປະມານ 60 ຊະນິດ: 6 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ ແລະ 2 ຊະນິດຢູ່ຫວຽດນາມ.

ນິເວດ: ໂດຍທົ່ວໄປເປັນພືດອາໄສຄ້ຳໃສ່ລຳຕົ້ນ ຫຼື ງ່າໃຫຍ່ຂອງຕົ້ນໄມ້ໃນປ່າໄມ້ເຂດຕ່ຳ ແລະ ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເວົ້າທົ່ວໄປ ສະກຸນນີ້ເປັນພືດທີ່ຮູ້ໄດ້ງ່າຍຍ້ອນຊໍ່ດອກມີລັກສະນະເປັນພົ້ອຄ້າຍຄືຫົວດອກ. ດອກຂະໜາດນ້ອຍອອກສີຂາວຈັບຢູ່ປາຍກິ່ງ. ແຄມຂອງ ກາບໃບມີສີດຳ ຫຼື ສີກະເບົາ ກໍ່ເປັນລັກສະນະສະເພາະເດັ່ນອັນໜຶ່ງ ຢ່າງໜ້ອຍ ກໍແມ່ນກໍລະນີເຂດທີ່ປົ້ມເຫຼັ້ມນີ້ກວມເອົາ. ເກືອບບໍ່ມີໃຜຮູ້ຈັກສະກຸນ *Agrostophyllum* ໃນດ້ານການປູກ, ແຕ່ວ່າມັນເປັນສະກຸນທີ່ເກີດທົ່ວໆໄປແບບທຳມະຊາດ.

ສະກຸນ **Amitostigma** Schltr.

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ມີຫົວໃຕ້ດິນເປັນຮູບກົມມົນ. ລຳຕົ້ນສັ້ນ, ຖືໃບ 1 ຫາ ຫຼາຍໃບ. ໃບມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ຂຽວຕະຫລອດປີ, ມ້ວນເຂົ້າກັນຕາມລວງຍາວເອລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ອຖືດອກຈຳນວນໜ້ອຍ ຫາບໍ່ຫຼາຍດອກປານໃດ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ມີສີຂາວ ຫຼື ສີບົວ. ກາບດອກແຍກກັນ. ກີບດອກຮູບຮີມສົບມີເດືອຍ, ເໜັງບໍ່ໄດ້, ປົກກະຕິ ແບ່ງເປັນ 3 ປ່ຽງ. ເສົາເກສອນມີຕຸດສັ້ນ ໆ ຢູ່ແຕ່ລະເບ້ືອງ, ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານສັ້ນ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບມີແຜ່ນໜ້າອົ້ລີງ ແລະ ແບ່ງອອກເປັນ 2 ປ່ຽງຕາມລວງຂວາງ.

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍຕາເວັນອອກແຜ່ນດິນໃຫຍ່, ຍີ່ປຸ່ນ. ປະມານ 30 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເກີດຢູ່ຕາມໂງ່ນຫີນ ທີ່ມີໄຄ ເກີດ,ໃນເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ເກີດຢູ່ຫຼາຍກວ່າໝູ່ໃນເອເຊຍຕາເວັນອອກເຂດອົບອຸ່ນ, ຢູ່ໄທ ແລະຫວຽດນາມແມ່ນຫາຍາກຫຼາຍ. ອາດມີການຫຼົງກັບສະກຸນ *Habenaria* ແລະ ສະກຸນ *Diplomeris* ໄດ້, ແຕ່ໃນ 2 ສະກຸນນີ້ປ່ຽງຂອງຮອງຮັບສອດ ແລະ ແຍກອອກຫ່າງກັນຈະແຈ້ງ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Anoectochilus** Blume — *

ຊື່ພ້ອງ: ສະກຸນ *Odontochilus* Blume

ພືດຂະໜາດນ້ອຍເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ຊະນິດທີ່ອາໃສບ່ອນຄ້ຳແມ່ນຫາຍາກ. ລຳຕົ້ນຍາວ, ອອບນ້ຳເລັກນ້ອຍ ແຕ່ສ່ວນໂຄນຂອງຕົ້ນມີລັກສະນະເລືອຕາມໜ້າດິນ ແລະ ປະກອບເປັນລຳເລືອ, ປາຍຂອງລຳຕົ້ນ ຕັ້ງຊັນຂຶ້ນ, ໃບບໍ່ຫຼາຍປານໃດ. ໃບຈຸ້ມຢູ່ປາຍຕົ້ນ, ຈັດລຽງກັນແບບກ້ຽວກົ້ນຫອຍ; ໃບມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເອລາຍັງຈຸມຢູ່, ໂດຍທົ່ວໄປ ໃບມີສີຂຽວຊ້ຳ ຫຼື ສີກະເບົາ, ມີກ່າງໃບເສັ້ນຍາວ ແລະ ເສັ້ນຂວາງອອກສີຂາວ, ສີຄຳ ຫຼື ສີບົວ; ໃນກຸ່ມຊະນິດກຸ່ມໜຶ່ງ(ບາງເທື່ອກໍ່ມີການແຍກພາຍໃນສະກຸນ *Odontochilus*), ໃບສີຂຽວແຈ້ງ. ຊໍ່ດອກ ທົ່ວໆໄປເປັນພົ້ອອອກຢູ່ປາຍ, ດອກມີຈຳນວນໜ້ອຍ. ດອກຂະໜາດນ້ອຍ, ມີທ່າປົ້ນ, ປົກກະຕິ ດອກອອກສີເຂ້ືອງ ສ່ວນກີບດອກຮູບຮີມສົບມີສີຂາວ. ກາບດອກແຍກກັນ. ກີບດອກຮູບຮີມສົບມີເດືອຍ ຫຼື ມີຮູບຖ້ຽຢູ່ຕີນຂອງກີບ, ເໜັງບໍ່ໄດ້, ສ່ວນກາງກົ່ວແບບຍາວໆ ແລະ ຢູ່ບ່ອນນັ້ນ ມີຕຸດບາງໆລຽບຕາມແຄມ. ດ້ານໜ້າຂອງເສົາເກສອນມີແຜ່ນລາແມນຂະໜານກັນ 2 ແຜ່ນ; ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງມີຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບແບ່ງເປັນ 2 ປ່ຽງແຍກກັນຈະແຈ້ງ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງເກາະຮາວາຍ. ປະມານ 40 ຊະນິດ: 10 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 10 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ, ພົບຢູ່ໃນປ່າຂຸງວຕະຫຼອດປີເຂດຕ່ຳ ແລະ ເຂດພູສູງ, ມີບາງຊະນິດທ້ອຍຢູ່ຕາມຕົ້ນໄມ້ຊຶ່ງມີໄຄເກີດຢູ່ນຳແລ້ວ.

ຂໍ້ຄວນເອົາໃຈໃສ່: ແມ່ນໜຶ່ງໃນຈຳນວນຕົ້ນດອກເຜົ້ງທີ່ຖືກເອີ້ນຊື່ວ່າ *'ດອກເຜົ້ງເຄື່ອງນົນ* ທີ່ເພີ່ນປູກຍ້ອນຄວາມສະງ່າງາມຂອງໃບມັນ. ສະກຸນ *Ludisia* ມີໃບຄ້າຍຄືກັນນີ້ ແຕ່ຕ່າງຍ້ອນດອກບໍ່ມີຄວາມເດ່ັ່ງຄື. ກຸ່ມຊະນິດກຸ່ມໜຶ່ງໃນສະກຸນ *Anoectochilus* ຈຳແນກໄດ້ຍ້ອນໃບສີຂຽວ ແລະ ບໍ່ມີແຊກ ແລະ ທາງດ້ານກົບດອກຮູບຮີມສົບກໍ່ບໍ່ມີເດືອຍຢ່າງຈະແຈ້ງ. ບັນດາຊະນິດທີ່ມີໃບອອກສີແຈ້ງເປັນຊະນິດທີ່ດຶງດູດຄວາມສົນໃຈຫຼຸດໜູ່ ແລະ ຖືກຈັດເຂົ້າໃນສະກຸນ *Odontochilus*. ມັນຮຽກຮ້ອງໃຫ້ມີການວິໃຈໃນຕໍ່ໜ້າຕື່ມເພື່ອກຳນົດສະພາບຂອງສະກຸນ *Odontochilus*.

ສະກຸນ **Anthogonium** Wall. ex Lindl. — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນຫຼາຍ. ຫົວປອມມີປ້ອງຫຼາຍກວ່າ 1 ປ້ອງ; ຫົວປອມຢູ່ໃຕ້ດິນສ່ວນໃດສ່ວນໜຶ່ງ, ມີໃບບໍ່ຫຼາຍ. ໃບມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ໃບແຄບ. ຊໍ່ດອກປົ່ງຂຶ້ນທາງຂ້າງຈາກຫົວປອມ, ເປັນພົ້ວຖືດອກຈຳນວນໜ້ອຍ ຫາບໍ່ຫຼາຍດອກປານໃດ. ດອກຂະໜາດນ້ອຍ, ບໍ່ຢູ່ໃນທ່າປີ້ນ, ມີສີຂາວ ຫາ ສີແດງຊ້ຳອົມສີແດງ. ການດອກທັງ 3 ເຊື່ອມຕິດກັນເປັນທໍ່ ຈັບຢູ່ມຸມຂວາຂອງເຕົ້າໄຂ່. ກົບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ພາກຕາເວັນອອກສ່ຽງເໜືອຂອງອິນເດຍ, ຢູ່ຈີນ, ເອເຊຍຕາເວັນອອກສ່ຽງໃຕ້ ຍົກເວັ້ນແຫຼມມາເລເຊຍ. ພົບ 1 ຊະນິດ (ຊະນິດ *A. gracile* Wall. ex Lindl.) ຢູ່ໄທ, ລາວ, ກຳປູເຈຍ ແລະຫ ວຽດນາມ.

ນິເວດ: ພືດເກີດຢູ່ດິນ ໃນປ່າໂຄກ ແລະ ໃນທີ່ງຫຍ້າ ຢູ່ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ການຈຳແນກບໍ່ອາດມີອັນຜິດພາດໄດ້ ຍ້ອນດອກບໍ່ຢູ່ໃນທ່າປີ້ນ ແລະ ດອກເປັນທໍ່ ຫຼື ຫຼອດຢູ່ໂຄນ. ການນຳໄປປູກແມ່ນຫາຍາກ.

ສະກຸນ **Aphyllorchis** Blume — *

ພືດເກີດຢູ່ດິນ, ບໍ່ມີໃບ, ມີການເຕີບໃຫຍ່ດ້ານຂ້າງ ແລະ ມີລຳເລືອໃຕ້ດິນ. ຊໍ່ດອກເປັນພົ້ວ ມີດອກຈຳນວນໜ້ອຍ ຫາ ຫຼາຍ. ດອກຂະໜາດນ້ອຍ ຫາ ກາງ, ມີທ່າປີ້ນ, ສ່ວນຫຼາຍອອກສີຂາວໂດຍມີຮອຍສີອິດ. ການດອກແຍກກັນ. ກົບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງອອກເປັນສ່ວນກົກ ແລະ ສ່ວນປາຍ, ສ່ວນກົກອ້ຳລົງ, ມີປ່ຽງຂ້າງ ແລະ ສ່ວນປາຍຮາບພຽງ, ແບ່ງເປັນ 3 ປ່ຽງ. ເສົາເກສອນບໍ່ມີຕີນ; ກຸ່ມເມັດລະອອງຈຳນວນ 2, ອ່ອນນຸ້ມ, ມີກ້ານ, ເຕົ້າໄຂ່ມີກ້ານ ແລະ ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບທີ່ ສຣີລັງກາ, ເອເຊຍຕາເວັນອອກ, ໄຕ້ຫວັນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ. ປະມານ 45 ຊະນິດ; 4 ຊະນິດຢູ່ໄທ, 1 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫ ວຽດນາມ, ສ່ວນ ຢູ່ລາວ ຍັງບໍ່ທັນໄດ້ເກັບກຳ .

ນິເວດ: ເປັນພືດເກີດຢູ່ດິນທີ່ມີຝຸ່ນເລິກໃນປ່າເຂດຕ່ຳ ແລະ ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນໜຶ່ງໃນຈຳນວນດອກເຜົ້ງຫຼາຍໆສະກຸນທີ່ເກີດຢູ່ດິນ ແລະ ບໍ່ມີໃບຊຶ່ງເອີ້ນວ່າ: ດອກເຜົ້ງເກີດຢູ່ບ່ອນມີເນື້ອເນ່ົ່າ ເຖິງວ່າໃນຕົວຈິງມັນກາຝາກເຊື້ອເຫັດຢູ່ກໍ່ຕາມ. ບັນດາ**ຊະນິດ**ໃນສະກຸນນີ້ມີກລໍ່ລໍ ຟົນເລັກນ້ອຍ ຫຼື ບໍ່ມີຊ້ຳ, ດັ່ງນັ້ນຕົ້ນຂອງມັນຈຶ່ງອອກສີຂາວ, ສີເຫຼືອງ ຫຼື ສີແດງຊ້ຳແທນທີ່ຈະເປັນສີຂຽວ. ສະກຸນ

Aphyllorchis ມີລັກສະນະສະເພາະຢູ່ລະດັບໂຄງສ້າງຂອງກີບດອກຮູບຮີມລິບ. ເປັນສະກຸນທີ່ບໍ່ໄດ້ມີການນຳເອົາໄປປູກ.

ສະກຸນ **Apostasia** Blume

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ ແລະ ບໍ່ມີລຳເລື້ອ. ລຳຕົ້ນຍາວ, ໃບມີຈຳນວນໜ້ອຍຫາຫລາຍ. ໃບຈັດລຽງແບບກ້ຽວກົ້ນຫອຍ, ມີການຫຸ້ມຢູ່ຕີນ, ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເອລາຍັງຈູມຢູ່; ປາຍໃບເປັນຫຼອດ. ຊໍ່ດອກເປັນປະເພດຊໍ່ແຕກແໜງ, ອອກຢູ່ປາຍ. ດອກຂະໜາດນ້ອຍ, ບໍ່ຢູ່ໃນທ່າປີ້ນ. ການດອກແຍກກັນ. ກີບດອກຮູບຮີມລິບບໍ່ມີເດືອຍ, ເໜັງບໍ່ໄດ້, ຄ້າຍຄືກັບກີບດອກອື່ນ. ເສົາເກສອນບໍ່ມີຕີນ. ຮອຍເມັດລະອອງສົມບູນເພດ ຈຳນວນ 2, ເມັດລະອອງບໍ່ຕິດເຂົ້າກັນເປັນກ້ອນ ແຕ່ເປັນຝຸ່ນໃຜມັນ. ເຕົ້າໄຂ່ບໍ່ມີຂົນ.

ການແຈກຢາຍ: ພົບຢູ່ ສຣີລັງກາ, ອິນເດຍ , ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ , ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອົດສະເຕຼເລຍ. ປະມານ 8 ຊະນິດ; 3 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 2 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າຂຽວຕະຫຼອດປີ ທີ່ບໍ່ຖືກລົບກວນ ຢູ່ເຂດຄວາມສູງພໍປານກາງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ມີດອກທີ່ບໍ່ເປັນທີ່ສັງເກດ, ໃນນັ້ນກີບດອກຮູບຮີມລິບມີຮູບຮ່າງຄ້າຍຄືກີບດອກອື່ນ. ນອກຈາກສະກຸນ *Paphiopedilum* ແລະ ສະກຸນໃກ້ຄຽງ ຄືສະກຸນ *Apostasia* ແມ່ນສະກຸນດຽວຂອງຕົ້ນດອກເຜົ້າທີ່ມີຮອຍເມັດລະອອງສົມບູນເພດ 2 ຮອຍ. ຍ້ອນບັນດາຊະນິດຂອງ *Apostasia* ມີ ຄຸນຄ່າທາງດ້ານປະດັບຕ່ຳ ຫຼື ອ່ຳບໍ່ມີຊ້ຳ ແລະ ຍ້ອນວ່າການຮັກສາບໍ່ໃຫ້ມັນຕາຍຍາກຫລາຍ ຈຶ່ງເຮັດໃຫ້ການນຳເອົາໄປປູກຫາຍາກທີ່ສຸດ ຖ້າວ່າມີ ກໍດີ.

ສະກຸນ **Appendicula** Blume — *

ພືດອາໃສບ່ອນຄ້ຳ ຫຼື ບາງຄັ້ງຄາວກໍມີຊະນິດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ມີລຳເລື້ອສັ້ນ ຫຼື ບໍ່ມີ. ລຳຕົ້ນບໍ່ມຸກ, ຍາວ, ບາງຄັ້ງກໍ່ແຕກກິ່ງ, ບໍ່ມຸກ ຫຼື ວ່າມຸກໜ້ອຍໜຶ່ງ. ໃບ ມີຫລາຍ, ຈັດລຽງຖີ່ໆເປັນ 2 ແຖວ, ມີການຫຸ້ມຢູ່ຕີນໃບ, ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈູມຢູ່. ຊໍ່ດອກອອກຢູ່ຂ້າງ ຫຼື ອອກຢູ່ປາຍ, ເປັນປະເພດພົ້ວ ຫຼື ຊໍ່ແຕກແໜງ ຫຼື ແມ່ນດອກດ່ຽວ. ດອກຂະໜາດນ້ອຍ ຫາ ນ້ອຍຫລາຍ, ມີທ່າປີ້ນ, ການດອກດ້ານຂ້າງເຊື່ອມຕິດກັນສ່ວນໃດສ່ວນໜຶ່ງ, ເປັນຮູບຄາງ. ກີບດອກຮູບຮີມລິບບໍ່ມີເດືອຍ, ເໜັງບໍ່ໄດ້, ມັກມີຕິ່ງປິ່ນໄປດ້ານຫລັງ. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 6, ແຂ, ປະກົດວ່າມີກ້ານ 2 ກ້ານ ແຕ່ວ່າໃນຕົວຈິງແມ່ນມັນໄດ້ຖືກປ່ຽນແປງແລ້ວ. ແມ່ນກຸ່ມເມັດລະອອງບໍ່ສົມບູນເພດ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອອມ.

ການແຈກຢາຍ: ພົບຢູ່ ເອເຊຍເຂດຮ້ອນ, ມາເລເຊັຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນັຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງເກາະຕິງກາ. ປະມານ 90 ຊະນິດ; 7 ຊະນິດຢູ່ໄທ, 1 ຊະນິດຢູ່ກຳປູເຈຍ, 4 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຍັງບໍ່ທັນເກັບກຳໄດ້.

ນິເວດ: ເວົ້າທົ່ວໄປ, ເປັນພືດທີ່ມັກຈັບຢູ່ລຳຕົ້ນ ຫຼື ງ່າໄມ້ໃຫຍ່ ໃນປ່າຂຽວຕະຫຼອດປີ, ຢູ່ເຂດຕ່ຳ ຫຼື ເຂດພູສູງ, ສ່ວນຫລາຍຈະມັກຢູ່ບ່ອນຮົ່ມ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ເກືອບວ່າຄ້າຍຄືກັບຜັກກູດຍ້ອນໃບມີລັກສະນະສມ່ຳສເມີ ແຈກຢາຍຕາມ ລວງຍາວຂອງລຳຕົ້ນ. ດອກບໍ່ເປັນທີ່ສັງເກດເລີຍ, ມີຄາງຂະໜາດໃຫ່ຍ ແລະ ມີກຸ່ມເມັດລະອອງຢູ່ 6 ກຸ່ມ (ບໍ່ມີ ລັກສະນະນີ້ອີກໃນຈຳນວນຕົ້ນດອກເຜົ້ງທີ່ເກີດຢູ່ເອເຊຍ).

ສະກຸນ **Arachnis** Blume — *

ຊື່ພ້ອງ: *Arachnanthe* Blume

ພືດອາໃສບ່ອນຄ້ຳ ຫຼື ເກີດຢູ່ດິນ, ມີການເຕີບໃຫຍ່ດ້ານປາຍ. ປົກກະຕິລຳຕົ້ນຍືດຍາວຫລາຍ, ບາງຄັ້ງກໍ່ເປັນ ເຄືອຫາວຂຶ້ນ. ໃບມີຫຼາຍ, ຈັດວາງເປັນ 2 ແຖວ, ມີການຫຸ້ມຢູ່ຕົ້ນ, ມີຂົ້ນ, ສັບປ່ຽນຕາມລະດູການ, ພັບເຂົ້າ ກັນເວລາຍັງຈູມຢູ່. ຊໍ່ດອກອອກດ້ານຂ້າງ, ເປັນປະເພດພົ້ວ ຫຼື ຊໍ່ແຕກແໜງ. ດອກຂະໜາດກາງ ຫາໃຫຍ່, ສະ ດຸດຕາ. ການດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ ແຕ່ມີຮູບຄ້າຍຖົງຢູ່ໂຄນກີບ, ຫ້ອຍໃສ່ເສົາເກສອນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດເທົ່າໆກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ກ້ານ ເຕົ້າໄຂ່ສັ້ນ ແລະ ເຫວີອອກ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ຕາເວັນອອກຂອງໝູ່ເກາະໂຊໂລມົງ. ປະມານ 13 ຊະນິດ; 3 ຊະນິດຢູ່ໄທ, 1 ຊະນິດຢູ່ກຳປູເຈຍ, 4 ຊະນິດ ຢູ່ຫວຽດນາມ, ສ່ວນຢູ່ລາວ ຍັງບໍ່ທັນເກັບກຳໄດ້.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເກີດຢູ່ປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ຮູ້ກັນດີວ່າ *'ຕົ້ນດອກເຜົ້ງແມງເງົ່າ'*, ຖືກນຳໄປປູກຢ່າງກ້ວາງຂວາງ ແລະ ນຳໄປ ຂະຫຍາຍພັນຊອດຢ່າງຫຼວງຫຼາຍ, ຖ້າທຽບໃສ່ສະກຸນໃກ້ຄຽງ (ຕົວຢ່າງ: ສະກຸນ *Vanda*, ສະກຸນ *Renanthera*, ສະກຸນ *Papilionanthe*), ສະກຸນນີ້ແຕກຕ່າງຍ້ອນກີບດອກຮູບຮີມສົບຫ້ອຍຢູ່ໃສ່ເສົາເກສອນທີ່ ບໍ່ມີຕີນ ແລະ ແຕກຕ່າງຍ້ອນບໍ່ມີເດືອຍທີ່ແທ້ຈິງ. ສະກຸນ *Armodorum* ແລະ *Esmeralda* ປະກົດວ່າເປັນສະ ກຸນທີ່ໃກ້ຄຽງກັບສະກຸນ *Arachnis* ຫຼາຍກວ່າໝູ່.

ສະກຸນ **Armodorum** Breda

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ໃບມີຈຳນວນບໍ່ຫຼາຍປານໃດ ຫາຫຼາຍ, ຈັດລຽງເປັນ 2 ແຖວ. ໃບມີການຫຸ້ມຢູ່ຕົ້ນ, ບໍ່ມີຂົ້ນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວຖືດອກຈຳນວນໜ້ອຍ ຫາ ຫຼາຍ. ດອກຂະໜາດກາງ ຫາ ໃຫຍ່ ໂດດເດັ່ນໃນລວງສີກະເບົາ. ການດອກ ແຍກກັນ. ກີບດອກຮູບຮີມສົບມີເດືອຍ, ຫ້ອຍໃສ່ກັບເສົາເກສອນ, ປ່ຽງກາງອ່າວໃຫຍ່, ແປ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດເທົ່າໆກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານສັ້ນ ແລະ ເຫ ວີອອກ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ແຫຼມມາເລເຊຍ, ບອກເນໂອ, ອິນໂດເນເຊຍ (ພາກຕາເວັນອອກຂອງຊຸລາເວຊີ). ມີ 3 ຊະນິດ; 1 ຊະນິດຢູ່ໄທ, ບໍ່ມີຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຄ້າຍຄືກັບສະກຸນ *Arachnis* ຫຼາຍ, ແຕ່ກີບດອກຮູບຮີມສົບບໍ່ມີເດືອຍຈະ ແຈ້ງ. ດອກກໍ່ບໍ່ສະດຸດຕາພິເສດຫຍັງ ແລະເພີ່ນກໍ່ບໍ່ໄດ້ນຳເອົາສະກຸນ *Armodorum* ມາປູກເລື້ອຍເທົ່າກັບສະ ກຸນ *Arachnis*.

ສະກຸນ **Arundina** Blume — *

ຊື່ພ້ອງ: ສະກຸນ: *Donacopsis* Gagnep.

ພືດເກີດຢູ່ດິນ, ມີການຂະຫຍາຍຕົວດ້ານຂ້າງ, ລຳເລືອສັ້ນໆ. ລຳຕົ້ນຍາວ, ບໍ່ມຸກ,ໃບໜາຍ. ໃບມີການຫຸ້ມຢູ່ຕົ້ນ, ໃບຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ແຄບ. ຊໍ່ດອກອອກຢູ່ປາຍ, ເປັນພົ່ວ ຖື ດອກບໍ່ໜາຍປານໃດ, ລາງເທື່ອຊໍ່ດອກ ກໍ່ແຕກແໜງ, ດອກບານຕິດຕໍ່ກັນເທື່ອລະ ດອກ ຫຼື 2 ດອກ. ໃບຊ້ອນດອກຂະໜາດນ້ອຍ; ດອກມີອາຍຸສັ້ນ (ປະມານ 3 ມື້), ດອກໃຫຍ່ສົມຄວນ, ຢູ່ໃນທ່າ ປັ້ນ, ສະດຸດຕາ, ມີສີຂາວ ຫຼື ສີບົວ, ມີກີບດອກຮູບຮີມສົບສີແດງຊ້ຳ ອົມສີມ້ວງ. ການດອກແຍກກັນ. ກີບດອກ ໃຫຍ່ກວ່າການດອກໜາຍ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳ ນວນ 8, ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ສຣີລັງກາ, ຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ (ພາກຕາ ເວັນອອກຂອງຊູລາເວຊີ); ເພີ່ນຍັງໄດ້ນຳໄປປູກໃນໝູ່ເກາະປາຊີຟິກຈຳນວນໜຶ່ງ. ອາດຈະມີຊະນິດໜຶ່ງທີ່ເກີດ ຢ່າງກ້ວາງຂວາງ ແລະຊະນິດທີ່ປ່ຽນແປງເລື້ອຍ [ຊະນິດ *A. graminifolia* (D.Don) Hochr.], ພົບຢູ່ໄທ, ລາວ, ກຳປູເຈຍ ແລະຫວຽດນາມ.

ນິເວດ: ພືດເກີດຢູ່ໃນປ່າໂຄກໃນດິນບ່ຽງນຂອງເຂດຕ່ຳ ແລະເຂດພູບໍ່ສູງປານໃດ, ມັກເກີດຢູ່ຕາມແຄມ ທາງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນດອກເຜົ້າທີ່ຄົນມີຄວາມຊຸ່ນເຄີຍ, ຈຳແນກມັນໄດ້ງ່າຍຍ້ອນລຳຕົ້ນຄືຕົ້ນຜີ, ດອກຄືດອກຂອງສະກຸນ *Cattleya*, ດອກລົ່ນໄອ . ຍ້ອນວ່າດອກເຜົ້າຊະນິດ *Arundina graminifolia* ສາ ມາດເກີດຢູ່ສະຖານທີ່ເປີດແປນ ແລະ ຖືກແສງແດດ, ມັນຈຶ່ງນອນໃນຈຳນວນດອກເຜົ້າເຂດຮ້ອນທີ່ຖືກຄົນລົບ ກວນຢູ່ເລື້ອຍ, ເຊັ່ນ: ການບຸກເບີກທີ່ດິນ, ການກໍ່ສ້າງຕ່າງໆ,...

ສະກຸນ **Ascocentrum** Schltr. — *

ຊື່ພ້ອງ: ສະກຸນ *Ascolabium* S.S.Ying

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ, ໃບຈຳນວນບໍ່ໜາຍປານໃດ ຈັດລຽງເປັນ 2 ແຖວ. ໃບມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່, ແຄບ, ບາງຄັ້ງກໍ່ເປັນທ່ອນ ກົມ. ຊໍ່ດອກອອກທາງຂ້າງ, ເປັນພົ່ວຕັ້ງຊັນຂຶ້ນ, ມີດອກຈຳນວນບໍ່ໜາຍປານໃດ ຫາໜາຍ. ດອກບານຕາມລຳ ດັບ, ດອກຂະໜາດນ້ອຍ ຫາ ຂະໜາດກາງ, ຢູ່ໃນທ່າປັ້ນ, ມີສີຮຸ່ງ (ສີເຫຼືອງ, ສົ້ມ, ແດງ, ແດງອົມມ້ວງ, ສີມ້ວງ). ການດອກແຍກກັນ. ກີບດອກຮູບຮີມສົບມີເດືອຍ, ເໜັງບໍ່ໄດ້, ເດືອຍຢູ່ຂ້າງໃນ ບໍ່ມີຮອຍດ້ານ. ເສົາເກສອນບໍ່ມີ ຕີນ. ກຸ່ມເມັດລະອອງຈຳນວນ 2, ແຕ່ລະອັນມີຮູ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ຟີລິບປິນ, ອິນໂດເນເຊຍ (ພາກຕາເວັນ ອອກຂອງຊູລາເວຊີ). ປະມານ 12 ຊະນິດ; 6 ຊະນິດຢູ່ໄທ, 3 ຢູ່ລາວ, 1 ຢູ່ກຳປູເຈຍ, 4 ຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ຄົນຮູ້ດີໃນດ້ານດອກໄມ້ປະດັບ ຍ້ອນດອກມີສີຮຸ່ງ. ບາງຊະນິດຖືກເກັບ ໜາຍໂພດເພື່ອການຄ້າຕາມຕະໜາດຂອງທ້ອງຖິ່ນຈີນເປັນໄພຂົ່ມຂູ່ແກ່ການຄົງຕົວແບບທຳມະຊາດຂອງຊະນິດ ດັ່ງກ່າວ.

ສະກຸນ **Ascochilopsis** Carr

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ. ໃບມີຈຳນວນໜ້ອຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ, ແກນກາງຂອງຊໍ່ມຸກດີ, ຖືດອກບໍ່ໜາຍປານໃດ, ອອກດອກເປັນລຳດັບ, 1 ດອກຫາບໍ່ໜາຍດອກປານໃດ, ອອກໃນເວລາດຽວກັນ. ດອກຂະໜາດນ້ອຍໜາຍ, ລື່ນໄວ, ບໍ່ຢູ່ໃນທ່າປິ້ນ. ກາບດອກແຍກກັນ. ກີບດອກຮູບຮີມລົບມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມເລິກ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ມາເລເຊຍ, ຊຸມາຕຼາ, ບອກເນວ. 2 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ, ເກີດຢູ່ປ່າຊຽວຕະຫຼອດປີຂອງເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນດອກເຜົ້ງທີ່ບໍ່ເກີດທົ່ວໄປ, ມີດອກນ້ອຍ; ການຈຳແນກສະກຸນນີ້ໄດ້ງ່າຍຍ້ອນແກນກາງຊໍ່ດອກມຸກດີ, ດອກບານເປັນລຳດັບໆ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Ascochilus** Ridl.

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນໜາຍ. ໃບມີຈຳນວນໜ້ອຍ, ມີກາບຫຸ້ມຢູ່ຕີນ, ໃບຢັ່ງຍາຍໃນແຜ່ນພຽງ 1 ແຜ່ນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ມີຂົນແຂງສັ້ນໆ, ເປັນປະເພດພົ້ວຖືດອກບໍ່ໜາຍປານໃດ, ດອກອອກຕາມລຳດັບ ຫຼື ອອກເປັນຈຸ້ມຕາມລຳດັບ. ດອກຂະໜາດນ້ອຍ, ລື່ນໄວ, ບໍ່ຢູ່ໃນທ່າປິ້ນ, ປົກກະຕິ ຈະມີສີເຫຼືອງ ຫຼື ສີສົ້ມ, ມີກີບດອກຮູບຮີມລົບສີຂາວ. ກາບດອກແຍກກັນ. ກີບດອກຮູບຮີມລົບມີເດືອຍ, ຫ້ອຍໃສ່ກັບເສົາເກສອນ; ເດືອຍມຸກໜາຍ, ພໍດີຕໍ່ກັບເສົາເກສອນ, ເດືອຍມີທໍ່ແຄບໆຢູ່ຂ້າງໃນ; ຕີນເສົາເກສອນຍາວ. ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ແຫຼມມາເລເຊຍ, ຊຸມາຕຼາ, ບອກເນວ, ຟີລິບປິນ. ປະມານ 4 ຊະນິດ; 3 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳໃນປ່າຊຽວຕະຫຼອດປີ ເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ມີດອກນ້ອຍ ແລະໃກ້ຄຽງກັບສະກຸນ *Grosourdya* ແລະ ສະກຸນ *Pteroceras*, ລັກສະນະສະເພາະອັນໜຶ່ງແມ່ນເດືອຍມຸກ ແລະມີທໍ່ແຄບໆຢູ່ຂ້າງໃນ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Biermannia** King & Pantl. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ. ໃບມີໜ້ອຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ລາງເທື່ອກໍມີຂົນແຂງ; ເປັນປະເພດພົ້ວຖືດອກບໍ່ໜາຍ. ແກນກາງຂອງຊໍ່ໜາ. ດອກອອກຕາມລຳດັບ, 1 ດອກ ຫຼື ໜາຍກວ່ານັ້ນທີ່ອອກໃນເວລາດຽວກັນ. ດອກມີຂະໜາດນ້ອຍ, ລື່ນໄວ, ຢູ່ໃນທ່າປິ້ນ. ກາບດອກແຍກກັນ. ກີບດອກຮູບຮີມລົບມີເດືອຍ ຫຼື ບໍ່ມີ, ເໜັງບໍ່ໄດ້. ຕີນເສົາເກສອນສັ້ນ. ກຸ່ມເມັດລະອອງຈຳນວນ 2, ແຕ່ລະອັນມີຮູນ້ອຍໆ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ (ພາກຕາເວັນອອກຂອງ ເກາະບາຫຼີ). ປະມານ 12 ຊະນິດ; 1 ຊະນິດຢູ່ໄທ, 2 ຢູ່ຫວຽດນາມ, ຍັງບໍ່ທັນໄດ້ເກັບກຳຢູ່ລາວ ຫຼື ຢູ່ກຳປູເຈຍ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ໃນປ່າເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນພືດບໍ່ເປັນທີ່ສັງເກດ, ຄ້າຍຄືກັບສະກຸນ *Pteroceras*, ແຕ່ ກີບດອກຮູບຮີມສິບ ເໜ້ງບໍ່ໄດ້ ແລະ ບໍ່ໂກນຄີຢູ່ໃນສະກຸນ *Pteroceras*. ແມ່ນສະກຸນທີ່ຫາພົບຍາກໃນສະພາບຍັງເປັນຕົ້ນສົດຢູ່.

ສະກຸນ **Bletilla** Rchb.f. — *

ພືດເກີດຢູ່ດິນ, ມີກາມເຕີບໃຫຍ່ດ້ານຂ້າງ, ລຳເລືອເປັນຫົວໃຕ້ດິນ. ລຳຕົ້ນສັ້ນ, ມີໃບບໍ່ຫຼາຍ. ໃບມີກາບຫຸ້ມຢູ່ ຕົ້ນ, ບໍ່ມີຂົ້ນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກ ຢູ່ປາຍ. ໃບຊ້ອນດອກລິ່ນໄອ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ, ມັກສະດຸດຕາເລື້ອຍໆ, ກາບດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜ້ງບໍ່ໄດ້, ແບ່ງເປັນປ່ຽງຈະແຈ້ງ, ມັກມີສັນຕາມລວງຍາວເລື້ອຍ, ປ່ຽງຂ້າງຕັ້ງ ຊັນຂຶ້ນ, ຮັດເຂົ້າໃສ່ກັບເສົາເກສອນ. ເສົາເກສອນບໍ່ມີຕີນ, ກຸ່ມເມັດລະອອງຈຳນວນ 8, ແກ່ນດີແຕ່ຫາກອ່ອນ, ມີ ກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ມຽນມ້າ, ຕິເບດ, ຈີນ, ຫວຽດນາມ, ໄຕ້ຫວັນ, ຍີ່ປຸ່ນ. ປະມານ 9 ຊະນິດ; 1 ຊະນິດຢູ່ ຫວຽດນາມ (*B. ochracea* Schltr.); ສ່ວນຢູ່ໄທ, ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ໃນປ່າໂຄກມີຕົ້ນໄມ້ນ້ອຍ, ຢູ່ພື້ນທີ່ດິນປະເພດເປັນຫີນປູນ, ຢູ່ລະດັບຄວາມສູງຈາກ ໜ້ານ້ຳທະເລປະມານ 700 ແມັດ.

ຂໍ້ຄວນເອົາໃຈໃສ່: ນອກຈາກຊະນິດ *B. striata* (Thunb.) Rchb.f., ຊຶ່ງໄດ້ມີການປູກຢ່າງກວ້າງຂວາງ ໃນເຂດພູມອາກາດອົບອຸ່ນໃນທົ່ວໂລກ; ບໍ່ມີຜູ້ຮູ້ຈັກ ສະກຸນນີ້ດີປານໃດ. ພືດສະກຸນນີ້ຕ່າງຈາກສະກຸນ *Ipsea* ແລະ ສະກຸນ *Spathoglottis* ດ້ວຍຫຼາຍລັກສະນະ, ໃນນັ້ນ, ກໍ່ມີຊໍ່ດອກອອກຢູ່ປາຍ ແລະ ໃບຊ້ອນດອກທີ່ ລິ່ນໄອ.

ສະກຸນ **Brachycorythis** Lindl. — *

ຊື່ພ້ອງ: ສະກຸນ *Phyllomphax* Schltr.

ພືດເກີດຢູ່ດິນ, ມີກາມເຕີບໃຫຍ່ດ້ານຂ້າງ, ມັກມີຫົວໃຕ້ດິນ. ລຳຕົ້ນຍາວ, ຖືໃບຈຳນວນໜ້ອຍ ຫາບໍ່ຫຼາຍປານ ໃດ. ໃບຈັດລຽງຕາມແບບກ້ຽວກົ້ນຫອຍ, ມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົ້ນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງ ຍາວເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ວຖືດອກຈຳນວນໜ້ອຍຫາຫຼາຍດອກ. ໃບຊ້ອນດອກໃຫຍ່, ຄ້າຍຄືໃບແທ້. ດອກຂະໜາດນ້ອຍ ຫາກາງ, ຢູ່ໃນທ່າປົ້ນ, ກາບດອກແຍກກັນ. ປົກກະຕິ ກີບດອກຮູບຮີມສິບມີ ເດືອຍ (ຊະນິດເກີດຢູ່ເອເຊຍ ມີເດືອຍແນ່ນອນ), ເໜ້ງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບມີແຜ່ນໜ້າອົ່ງລີ.

ການແຈກຢາຍ: ພົບຢູ່ອາຟຼິກກາເຂດຮ້ອນ ແລະ ອາຟຼິກກາໃຕ້, ຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ. ປະມານ 32 ຊະນິດ; 4 ຊະນິດຢູ່ໄທ, 4 ຊະນິດຢູ່ລາວ, 2 ຊະນິດຢູ່ກຳປູເຈຍ, 2 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າຂຽວຕະຫຼອດປີ ແລະ ປ່າປ່ຽນໃບໃນເຂດຕ່ຳ ແລະ ເຂດພູສູງ, ນອກນັ້ນ ຍັງ ເກີດຢູ່ທົ່ງຫຍ້າອີກດ້ວຍ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ບາງຄັ້ງກໍ່ມີຄວາມດຶງດູດຢູ່, ແຕ່ການນຳເອົາໄປປູກແມ່ນຫາຍາກທີ່ສຸດ, ມັນ ໃກ້ຄຽງກັບສະກຸນ *Amitostigma*. ການຈຳແນກເຮັດໄດ້ງ່າຍ, ສ່ວນຫຼາຍແມ່ນຍ້ອນໃບຊ້ອນດອກທີ່ ຄ້າຍຄືໃບ ແທ້.

ສະກຸນ **Brachypeza** Garay — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫ່ຍດ້ານປາຍ. ລຳຕົ້ນສັ້ນຫລາຍ. ໃບມີຈຳນວນໜ້ອຍ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່ . ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ວມີແກນກາງ ໃຄ່. ດອກສັບຊ້ອນຕາມລຳດັບ, ຂະໜາດນ້ອຍທາງກາງ ມີອາຍຸສັ້ນ, ມີທ່າປົ້ນ, ການດອກແຍກກັນ. ກີບດອກ ຮູບຮີມສິບມີເດືອຍ ທ້ອຍຢູ່ກັບເສົາເກສອນ, ຕີນເສົາເກສອນສັ້ນໆ. ກຸ່ມເມັດລະອອງ ຈຳນວນ 2 , ແຕກແງ່ມ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 7 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບ ກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເກີດຢູ່ປ່າຊຽວຕະຫຼອດປີໃນເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ຖ້າເບິ່ງແບບຜິວເຜີນ ຕົ້ນຂອງສະກຸນ *Brachypeza* ຄ້າຍຄືກັບຕົ້ນໃນສະກຸນ *Phalaenopsis*, ແຕ່ດອກນ້ອຍໆ ແຕກຕ່າງກັນຫຼາຍ, ມັນຄ້າຍຄືກັບດອກຂອງສະກຸນ *Pteroceras* ຫຼາຍກວ່າ. ກີບດອກຮູບຮີມສິບປະກອບດ້ວຍເກືອບໝົດເດືອຍເລີຍ, ທັ້ງໝົດທ້ອຍຢູ່ຕີນເສົາເກສອນອັນສັ້ນໆ.

ສະກຸນ **Bromheadia** Lindl. — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫ່ຍດ້ານຂ້າງ ແລະ ມີລຳເລືອສັ້ນ. ລຳຕົ້ນຍາວ, ບໍ່ແຕກແໜງ, ບໍ່ມຸກ, ໃບມີ ຈຳນວນບໍ່ຫຼາຍຈັດລຽງຕາມ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ເປັນແຜ່ນແປທາງດ້ານຫຼັງ ແລະໜ້າ ຫຼື ວ່າແປ ທັ້ງສອງດ້ານ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍ ຫຼື ຊໍ່ດອກອອກທາງ ຂ້າງກໍ່ມີຢູ່ ແຕ່ຫາຍາກ, ເປັນພົ້ວ ຫຼື ຊໍ່ແຕກແໜງແມ່ນຫາຍາກ. ແກນກາງຂອງຊໍ່ດອກ ສ່ວນຫຼາຍໃຄ່ ແລະ ດ້ານ ຂ້າງແປໆ, ບັນດາດອກຈັດລຽງເປັນລຳດັບ. ດອກມີຂະໜາດກາງຫາໃຫ່ຍ, ອາຍຸສັ້ນ, ມີທ່າປົ້ນ, ການດອກ ແລະ ກີບດອກ ປົກກະຕິ ມີສີຂາວ ຫຼື ສີເຫຼືອງອົມສີໄຂ່, ບາງຄັ້ງກໍ່ອອກສີແດງ. ການດອກແຍກກັນ. ກີບດອກຮູບຮີມ ສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຂງ, ມີປ່ອງນ້ອຍໆ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊິດີອ້ອມ (ເຂົ້າຊຸດກັນກັບກ້ານຂອງເຕົ້າໄຂ່ເລີຍ).

ການແຈກຢາຍ: ພົບຢູ່ ສີຣລັງກາ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ (ບໍ່ມີຢູ່ເກາະຊາ ວາ) , ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ. ປະມານ 25 ຊະນິດ; 4 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 1 ຊະ ນິດຢູ່ກຳປູເຈຍ, 2 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ປ່າໂຄກ, ບ່ອນມີດິນຊຸດໂຊມ ຫຼື ເປັນພືດອາໃສບ່ອນຄ້ຳໃນປ່າຊຽວຕະຫຼອດປີໃນ ເຂດຕ່ຳ ຫຼືເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ມີລັກສະນະສະເພາະເດັ່ນ, ການນຳເອົາໄປປູກແມ່ນໜ້ອຍທີ່ສຸດ, ສະກຸນນີ້ ມີໃບຢູ່ 2 ປະເພດ; ໃບປົກກະຕິ (ແປເຂົ້າທາງດ້ານໜ້າ ແລະ ຫຼັງ) ແລະ ໃບແປເຂົ້າທັ້ງ 2 ຂ້າງ. ດອກເປັນທີ່ສະ ດຸດຕາ ແຕ່ມີອາຍຸສັ້ນ, ບໍ່ເຖິງ 1 ມື້; ພາຍໃນຊໍ່ດອກດຽວກັນ ດອກຈະບານເທື່ອລະດອກ ເຮັດໃຫ້ກຸ້ມໄດ້ດົນ.

ສະກຸນ **Bulbophyllum** Thouars — *

ຊື່ພ້ອງ: ສະກຸນ *Cirrhopetalum* Lindl.; ສະກຸນ *Epicranthes* Blume; ສະກຸນ *Mastigion* Garay, Hamer & Siegerist; ສະກຸນ *Rhytionanthos* Garay, Hamer & Siegerist

ພືດອາໃສບ່ອນຄ້ຳ, ມີການເຕີບໃຫ່ຍດ້ານປາຍ ຫຼື ບາງຊະນິດເກີດຢູ່ນຳ້ອນຫີນ ຫຼື ດິນ, ລຳເລືອສັ້ນໆ ຫາ ຍາວ. ຫົວປອມມີປ້ອງ 1 ປ້ອງ, ບາງຄັ້ງກ່ໍນ້ອຍຫຼາຍ, ມີໃບ 1 ຫຼື 2 ໃບ ຈັບຢູ່ປາຍ, ໃບບ່ໍມີການຫຸ້ມຢູ່ຕີນ, ບ່ໍມີຂົນ, ແປດ້ານຫຼັງ ແລະ ໜ້າ ຫຼື ວ່າເປັນທ່ອນກົມໆກ່ໍມີ ແຕ່ຫາຍາກ, ໃບສັບປ່ຽນຕາມລະດູການ, ພັບເຂ້ົາກັນເອ ລາຍ້ງຈຸມຢູ່. ຊໍ່ດອກປ່ີງຂຶ້ນຈາກສຸມຂອງຕົ້ນ, ເປັນພ້ໍ ຫຼື ແມ່ນດອກດ່ຽວ. ດອກມີຂະໜາດນ້ອຍຫຼາຍ ຫາ ໃຫ່ຍ ຫຼາຍ, ບາງຊະນິດກ່ໍມີດອກອາຍຸສັ້ນ. ມີທ່ຳປ້ົນ ຫຼື ບ່ໍ. ການດອກເຊ່ືອມຕິດກັນ ຫຼື ແຍກກັນ, ການດອກດ້ານຂ້າງ ຈັດເປັນຄູ່ໆ. ປົກກະຕິ ກີບດອກອ່ືນຈະມີລັກສະນະແຕກຕ່ າງຈາກການດອກຫຼາຍ. ກີບດອກຮູບຮ່ົມສົບບ່ໍມີ ເດ່ືອຍ, ປົກກະຕິ ຈັບຫ້ອຍກັບເສ້ົາເກສອນ ແລະ ທ້ ງເໜ້ ງໄດ້ຫຼາຍ. ມີຕີນເສ້ົາເກສອນ ຫຼື ບ່ໍມີ(ສຳລັບເຂດທ່ີໄດ້ ເກ້ັບກຳໃນປ້ົມນ້ີ). ກຸ່ມເມັດລະອອງຈຳນອນ 2 ຫຼື 4, ແຂ ງ, ບ່ໍມີກ້ານເສ້ົາເກສອນ, ຊະນິດທ່ີມີກ້ານເຕ້ົາໄຂ່ແມ່ນ ຫາຍາກ, ມີວ ຊ ດ ອ ມ.

ການແຈກຢາຍ: ພົບໃນເຂດຮ້ອນໃນທ່ົວໂລກຢ່ ງກ້ ວຂ ວ ງ, ຢູ່ອາຟ ກກາໃຕ້, ນິວຊ ແລ ນ, ໃນເຂດປາຊ ຟິກ, ພາກຕາເວ ນອອກຂອງໝູ່ເກາະ. ປະມານ 1.000 ຊະນິດ; ປະມານ 150 ຊະນິດເກ ດຢູ່ໄທ, 29 ຊະນິດຢູ່ ລາວ, 8 ຊະນິດຢູ່ກຳປູເຈຍ, 76 ຊະນິດຢູ່ຫ ງດນາມ.

ນິເວດ: ເກ ດຢູ່ເກ ອບໝ ດທຸກປະເພດແວດລ້ ອມທ່ີມີຕ້ົນດອກເຜ້ ງຊະນິດອາໃສບ່ອນຄ້ຳ, ເກ ດຢູ່ຕາມໂງ່ນຫີນ ທ່ີມີໄຄ ຫຼື ຝ ຍລ ມເກ ດເຊ່ັນດ ງ, ສ່ ວນຊະນິດເກ ດຢູ່ດິນແມ່ນຫາຍາກ.

ຂ້ ຄວນເອ ໃຈໃສ່: ແມ່ນສະກຸນທ່ີມີຮູບຮ່ ງລັກສະນະຫາງນອກຫຼາກຫຼາຍ ແຕ່ ກ່ໍມີຈຸດທ່ີເຮັດໃຫ້ຈຳແນກມັນ ໄດ້ ່າຍໂດຍການປະສົມປະສານ ບັນດາລັກສະນະຈຳນອນໜ ່ງດ ່ງ ່ເກ້ັບກຳໄດ້ ເຊ່ັນ: ຫົວປອມມີຂ້ ດ ງ, ຊ ່ ດອກປ່ີງຂ ້ນແຕ່ລຸ່ມຕ ້ນ ແລະ ມີກີບຮູບ ຮ ່ມສົບເໜ ້ ງຕ ງໄດ້. ບາງຊະນິດຂອງສະກຸນນ ້ມີດອກທ່ີມີຄວາມດູດດ ງ ຫຼາຍ, ແຕ່ສ ່ ວນໃຫ່ຍເປັນດອກທ່ີບ ່ເປັນທ່ີສ ງເກດ ຫຼື ດອກແປກປະຫຼາດຫຼາຍກ ່ ວ ່ ງ ່ ງ ່ ມ. ສະກຸນນ ້ເປັນທ່ີຮ ້ ຈ ກ ຂອງນ ກນ ຍົມດອກເຜ ້ ງ ່ ຄ ວນ ເ ງແມ ່ ວ ່ າ ຄ ນ ຄ ່ າ ທ ງ ດ ານ ປ ະ ດ ບ ຂ ອ ງ ສ ະ ກ ຸ ນ ນ ້ ຍ ັ ງ ບ ່ ່ ທ ັ ນ ສ ູ ງ ກ ່ ໍ ຕ ່ ງ ມ. ມ ີ ບ ່ ງ ຊ ະ ນ ິ ດ ຖ ິ ດ ອ ກ ທ ່ ີ ມ ີ ກ ່ ິ ນ ເ ໝ ັ ນ ແ ລ ະ ເ ພ ່ ິ ນ ກ ່ ໍ ໄ ດ ້ ສ ົ ມ ມ ຸ ດ ວ ່ ່ າ ມ ັ ນ ໄ ດ ້ ມ ີ ການ ປ ະ ສ ົ ມ ພ ັ ນ ຍ ້ ອ ນ ບ ັ ນ ດ ່ າ ແ ມ ່ ງ ໄ ມ ້ . ນ ັ ກ ຄ ົ ້ ນ ຄ ້ ່ ວ ບ ່ ງ ຄ ົ ນ ກ ່ ໍ ຮ ັ ບ ຮ ູ ້ ວ ່ ່ າ ມ ີ ສ ະ ກ ຸ ນ ດ ອ ກ ເ ຜ ້ ງ ຈ ຳ ນ ອ ນ ບ ່ ່ ຫ ຼ າ ຍ ປ ານ ໃ ດ ຖ ິ ກ ຈ ັ ດ ເ ຂ ້ ່ ົ າ ເ ພ ່ ິ ມ ໃ ນ ສ ະ ກ ຸ ນ *Bulbophyllum*, ໃ ນ ນ ້ ນ, ສ ະ ກ ຸ ນ ທ ່ ີ ເ ພ ່ ິ ນ ຮ ູ ້ ຈ ັ ກ ດ ີ ກ ວ ່ ່ າ ໝ ູ ່ ແ ມ ່ ນ ສ ະ ກ ຸ ນ *Cirrhopetalum*. ບ ່ ່ ທ ັ ນ ມ ີ ການ ຢ ັ ້ ງ ຢ ນ ທ ງ ສ າ ຍ ກ ຳ ມ ະ ພ ັ ນ ວ ່ ່ າ ບ ັ ນ ດ ່ າ ສ ະ ກ ຸ ນ ນ ້ ີ ຄ ວ ນ ແ ຍ ກ ອ ອ ກ ຈ າ ກ ສ ະ ກ ຸ ນ *Bulbophyllum* ຫຼື ບ ່ ່.

ສະກຸນ **Calanthe** R.Br. — *

ພືດເກ ດຢູ່ດິນ ຫຼື ອາໃສບ່ອນຄ້ຳ, ມີການເຕີບໃຫ່ຍດ້ານຂ້າງ, ມີລຳເລືອຈະແຈ້ງ ຫຼື ບ່ໍ. ລຳຕ ້ນສ ້ນຫຼາຍ ຫຼື ຍາວກ ່ ມ ີ ແ ຕ ່ ່ ຫ ຍ າ ຍ ກ ຫ ຼ ື ວ ່ ່ າ ຫ ົ ວ ປ ອ ມ ມ ຸ ກ ຫ ຼ າ ຍ ແ ລ ະ ມ ີ ປ ້ ອ ງ 1 ປ ້ ອ ງ. ໃ ບ ຈ ຳ ນ ອ ນ ໜ ້ ອ ຍ ຫ າ ຫ ຼ າ ຍ ໃ ບ, ຈ ັ ດ ລ ຽ ງ ຕ າ ມ ແ ບ ບ ກ ້ ຽ ວ ກ ົ ້ ນ ຫ ອ ຍ ຫ ຼ ື ຈ ັ ດ ເ ປ ັ ນ 2 ແ ຖ ວ, ມ ີ ກ ານ ຫ ຸ ້ ມ ຢ ູ ່ ຕ ີ ນ, ບ ່ ່ ມ ີ ຂ ົ ນ ຫ ຼ ື ບ ່ ່ ງ ຄ ັ ້ ງ ມ ີ ຂ ົ ນ ອ ່ ອ ນ ໆ, ພ ັ ບ ເ ປ ັ ນ ກ ີ ບ ໆ, ສ ັ ບ ປ ່ ຽ ນ ຕ າ ມ ລ ະ ດ ູ ກ ານ ຫ ຼ ື ຂ ຽ ວ ຕ ະ ໜ ອ ດ, ໃ ບ ມ ້ ອ ນ ເ ຂ ້ ົ າ ຕ າ ມ ລ ອ ງ ຍ າ ວ ເ ອ ເ ລ າ ຍ ັ ງ ຈ ຸ ມ. ຊ ໍ ່ ດ ອ ກ ຈ ັ ບ ຢ ູ ່ ຂ ້ າ ງ ຫ ຼ ື ປ ່ ີ ງ ມ າ ແ ຕ ່ ລ ຸ ່ ມ ຕ ້ ນ, ເ ປ ັ ນ ປ ະ ເ ພ ດ ພ ້ ໍ, ມ ີ ດ ອ ກ ຈ ຳ ນ ອ ນ ໜ ້ ອ ຍ ຫ ຫ ຼ າ ຍ ດ ອ ກ. ດ ອ ກ ຂ ະ ໜ າ ດ ນ ້ ອ ຍ ຫ ຫ າ ໃ ຫ ່ ຍ, ມ ີ ທ ່ ຳ ປ ້ ົ ນ, ສ ່ ວ ນ ຫ ຼ າ ຍ ແ ມ ່ ນ ດ ອ ກ ທ ່ ີ ສ ະ ດ ຸ ດ ຕ າ ດ ີ. ການ ດ ອ ກ ແ ຍ ກ ກ ັ ນ. ກ ີ ບ ດ ອ ກ ຮ ູ ບ ຮ ່ ົ ມ ສ ົ ບ ເ ຊ ່ ື ອ ມ ຕ ິ ດ ກ ັ ບ ເ ສ ້ ົ າ ເ ກ ສ ອ ນ ຕ າ ມ ລ ອ ງ ຍ າ ວ ຂ ອ ງ ເ ສ ້ ົ າ ນ ັ ້ ນ, ປ ົ ກ ກ ະ ຕ ິ ມ ີ ເ ດ ່ ື ອ ຍ ຈ ະ ແ ຈ ້ ງ, ຊ ະ ນ ິ ດ ບ ່ ່ ມ ີ ເ ດ ່ ື ອ ຍ ກ ່ ໍ ມ ີ ແ ຕ ່ ຫ ຼ າ ຍ ຍ າ ກ. ເ ສ ້ ົ າ ເ ກ ສ ອ ນ ບ ່ ່ ມ ີ ຕ ີ ນ. ກ ຸ ່ ມ ເ ມ ັ ດ ລ ະ ອ ອ ງ ຈ ຳ ນ ອ ນ 8, ແ ຂ ງ, ມ ີ ກ ້ ານ, ເ ຕ ້ ົ າ ໄ ຂ ່ ບ ່ ່ ມ ີ ກ ້ ານ, ບ ່ ່ ມ ີ ວ ຊ ດ ອ ມ.

ການແຈກຢາຍ: ພົບຢູ່ທະວີບອະເມຣິກາພາກກາງ (1 ຊະນິດ), ອາຟຼິກາເຂດຮ້ອນ ແລະ ພາກໃຕ້, ມາດາ ກັດສະກາ, ທີ່ອເອເຊຍເຂດຮ້ອນ, ຈີນ ແລະ ຍີ່ປຸ່ນ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີ ຟິກ, ຕາເວັນອອກຂອງຕາຮີຕີ. ປະມານ 100 ຊະນິດ; 15 ຊະນິດຢູ່ໄທ, 6 ຊະນິດຢູ່ລາວ, 4 ຊະນິດຢູ່ກຳປູເຈຍ, 18 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນເປັນຕົ້ນຕໍ, ຢູ່ໃນປ່າປ່ຽນໃບ ແລະ ປ່າຂຽວຕະຫຼອດປີ, ຊະນິດອາໃສບ່ອນຄ້ຳຢູ່ຕົ້ນ ໄມ້ ຫຼື ງ່າໃຫ່ຍໆກໍ່ມີເຊັ່ນດຽວ. ທັງ 2 ປະເພດນີ້ ເກີດຢູ່ປ່າເຂດຕ່ຳ ແລະ ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ຄົນທົ່ວໄປມີຄວາມນິຍົມຍ້ອນວ່າດອກໜ້າປະທັບໃຈ. ດອກມີເດືອຍຈະ ແຈ້ງ; ແມ່ນດອກເຜີ້ງທີ່ຜ່ອຍກວ່າໝູ່. ເປັນສະກຸນໃກ້ຄຽງກັບສະກຸນ *Phaius* ແລະ ສະກຸນ *Cephalantheropsis*. ທຸກໆສ່ວນຂອງຕົ້ນນັບທັງດອກປ່ຽນເປັນສີຟ້າ ເວລາມັນຖືກຕຳ ຫຼື ຊ້ຳ ຄືກັນກັບ 2 ສະ ກຸນເທິງນີ້.

ສະກຸນ **Cephalanthera** Rich.

ພືດເກີດຢູ່ດິນບໍ່ມີໃບ, ມີຫາມເຕີບໃຫຍ່ດ້ານຂ້າງ, ມີລຳເລືອໃຕ້ດິນ (ຊະນິດທີ່ມີໃບເກີດຢູ່ເຂດອື່ນ ບໍ່ເກີດຢູ່ເຂດ ນີ້). ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງອອກເປັນສ່ວນກີກ ແລະ ສ່ວນປາຍ ໂດຍມີປ່ຽງຂ້າງຢູ່ລະດັບສ່ວນກີກ ແລະ ສ່ວນປາຍ, ແປອອກ ແລະ ບໍ່ແບ່ງເປັນປ່ຽງ. ເສົາເກສອນມີຕີນ. ກຸ່ມເມັດ ລະອອງຈຳນວນ 2, ອ່ອນນຸ້ມ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອະເມຣິກາເໜືອ, ຢູຣົບ, ເອເຊຍເຂດອົບອຸ່ນ. ປະມານ 14 ຊະນິດ; 1 ຊະນິດຢູ່ລາວ, ສ່ວນຢູ່ໄທ, ຫວຽດນາມ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ຍັງບໍ່ທັນໄດ້ເກັບກຳ, ອາດຈະແມ່ນເກີດຢູ່ດິນໃນປ່າຂຽວຕະຫຼອດປີ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ເກີດຢູ່ເຂດອົບອຸ່ນຂອງຊີກໂລກເໜືອເປັນຈຸດໜັກ, ຮູ້ວ່າມີສະກຸນນີ້ຢູ່ເອ ເຊຍຕາເວັນອອກສ່ຽງໃຕ້ດ້ວຍ ພົບ 1 ຊະນິດຢູ່ລາວ. ຊະນິດນີ້ນອນໃນກຸ່ມຊະນິດບໍ່ມີໃບ. ດອກເຜີ້ງໃນສະກຸນນີ້ ຄ້າຍຄືກັບສະກຸນ *Aphyllorchis* ຫຼາຍ, ແຕ່ຕ່າງຢູ່ສ່ວນກາງຂອງກີບດອກຮູບຮີມສົບບໍ່ແບ່ງເປັນ 3 ປ່ຽງ. ບໍ່ໄດ້ມີ ການນຳເອົາໄປປູກເລີຍ.

ສະກຸນ **Cephalantheropsis** Guillaumin — *

ພືດເກີດຢູ່ດິນ, ມີຫາມເຕີບໃຫຍ່ດ້ານຂ້າງ, ມີລຳເລືອສັ້ນຫຼາຍ. ລຳຕົ້ນຍາວ, ໃບບໍ່ຫຼາຍປານໃດ, ເຕົ້າໂຮມກັນຢູ່ ເຄິ່ງທາງເບື້ອງປາຍ. ໃບຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູ ການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງຈາກລຳຕົ້ນ, ເປັນປະເພດພົ້ວຖືດອກຈຳ ນວນຫຼາຍ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງເປັນ 3 ປ່ຽງ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂ໋ງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີ ອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ໄຕ້ຫວັນ, ແຫຼມມາເລເຊຍ, ຊຸມາຕຼາ, ຟີລິບປິນ. ປະ ມານ 5 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າຂຽວຕະຫຼອດປີຂອງເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເຖິງວ່າສະກຸນນີ້ມີຊື່ຄ້າຍຄືກັບສະກຸນ *Cephalanthera* ຢູ່ກໍ່ຕາມ ແຕ່ກໍ່ບໍ່ມີຈຸດທີ່ຄ້າຍຄື ກັນເລີຍ. ມັນໃກ້ຄຽງກັບສະກຸນ *Calanthe* ແລະ ສະກຸນ *Phaius* ແຕ່ດອກບໍ່ສະດຸດຕາເທົ່າ. ກີບດອກບໍ່ມີ

ເດືອຍ, ເກືອບວ່າແຍກຈາກເສົາເກສອນ, ຊຶ່ງມັນເອງກໍ່ສັ້ນໆ. ລັກສະນະນີ້ເຮັດໃຫ້ຈຳແນກລະຫວ່າງສະກຸນ *Cephalantheropsis* ແລະ ສະກຸນ *Calanthe* ແລະ ສະກຸນ *Phaius*. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Ceratostylis** Blume — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫ່ຍດ້ານຂ້າງ, ເກີດຢູ່ໃນປ່າຟຸ່ມ ຫຼື ຕົ້ນມີລຳເລືອຍອ່ນລົງເປັນສ່ວນໜ້ອຍ. ຫົວປອມມີປ້ອງ 1 ສ່ວນ, ຮຽວ, ຄ້າຍຄືກ້ານຂອງໃບ ຫຼື ວ່າບໍ່ມີຫົວປອມຊ້ຳ. ໃບ ມີຈຳນວນ 1 ໃບ ຈັບຢູ່ປາຍ, ສ່ວນກໍລະນີມີ 2 ໃບກໍມີແຕ່ຫາຍາກ, ບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ແປດ້ານໜ້າ ແລະ ຫຼັງ ຫຼື ເປັນທ່ອນກົມ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກຈັບຢູ່ປາຍ, ສັ້ນໆ, ມີດອກດ່ຽວ, ຈັດເປັນພົ້ວ. ດອກມີຂະໜາດນ້ອຍ ຫາ ນ້ອຍຫຼາຍ, ມີທ່າປົ້ນ ຫຼື ບໍ່. ການດອກດ້ານຂ້າງເຊື່ອມຕິດກັນ, ຈັດເປັນຄາງ ຫຼື ຄ້າຍຄືກັບເດືອຍ. ກີບດອກຮູບຮົ່ມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີ 2 ປ່ຽງຈັບຢູ່ປາຍ. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂງ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍຕາເວັນອອກເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງໝູ່ເກາະອາລິວຕູ (ບໍ່ມີຢູ່ອິດສະເຕເລຍ). ປະມານ 80 ຊະນິດ, 6 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 5 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ, ເກີດຢູ່ປ່າເຂດຕ່ຳ ແລະ ປ່າເຂດພູສູງ, ສ່ວນຫຼາຍມີຢູ່ບ່ອນຮົ່ມ.

ຂໍ້ຄວນເອົາໃຈໃສ່: ຍົກເວັ້ນບາງຊະນິດ, ດອກເຜົ້ງໃນສະກຸນນີ້ບໍ່ມີຄວາມໝາຍພໍປານໃດ ຍ້ອນດອກມີຂະໜາດນ້ອຍໂພດ ແລະ ທັງສີກໍ່ຈືດ, ດອກອອກຢູ່ລຸ່ມຕີນຂອງໃບ.

ສະກຸນ **Chamaeanthus** Schltr. — *

ພືດອາໃສບ່ອນຄ້ຳມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ. ໃບບໍ່ຫຼາຍ. ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ວມີດອກຫຼາຍ. ດອກອອກເປັນລຳດັບຕາມໆກັນ, ຈຳນວນບໍ່ຫຼາຍປານໃດທີ່ອອກໃນເວລາດຽວກັນ, ຂະໜາດນ້ອຍ, ລົ່ນໄວ, ຢູ່ໃນທ່າປົ້ນ. ການດອກແຍກກັນ, ມີທາງແໜມ. ກີບດອກຮູບຮົ່ມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ເສົາເກສອນມີຕີນທີ່ມຸກດີ. ກຸ່ມເມັດລະອອງຈຳນວນ 2, ບໍ່ແບ່ງເປັນກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ຊາວາ, ບອກເນວ, ຟີລິບປິນ. ມີ 2 ຊະນິດ, 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ຫວຽດນາມ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນດອກເຜົ້ງທີ່ບໍ່ເປັນໜ້າສົງເກດຈັກໜ້ອຍເລີຍ,ດອກອອກສີຂຽວ, ຈຳແນກໄດ້ງ່າຍຍ້ອນການດອກແຄບໆ ແລະ ກີບດອກຮູບຮົ່ມສົບບໍ່ມີເດືອຍແລະເໜັງໄດ້. ການນຳເອົາໄປປູກແມ່ນຫາຍາກທີ່ສຸດ.

ສະກຸນ **Chamaegastrodia** Makino & Maekawa

ຊື່ພ້ອງ: ສະກຸນ *Evrardia* Gagnep.; ສະກຸນ *Evrardiana* Aver.; ສະກຸນ *Evrardianthe* Rauschert

ພືດເກີດຢູ່ດິນ ບໍ່ມີໃບ, ມີການເຕີບໃຫຍ່ດ້ານປາຍ ແລະ ມີລຳເລືອໃຕ້ດິນ. ຊໍ່ດອກອອກຢູ່ປາຍ, ເປັນພົ້ວຖືດອກຈຳນວນໜ້ອຍ. ດອກຂະໜາດນ້ອຍ ຫາຂະໜາດກາງ, ບໍ່ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮົ່ມສົບບໍ່ມີເດືອຍ, ຢູ່ທີ່ໂຄນມີຕູດ, ຢູ່ດ້ານຂ້າງມີສັນຂອງກີບດອກຈະແຈ້ງ, ເໜັງບໍ່ໄດ້. ເສົາເກສອນຢູ່ກ້ອງຮອງຮັບທີ່ມີ

ປີກອອກຄ້າຍຮູບແຂ້ວ 2 ປີກ, (ຢ່າງນ້ອຍກໍ່ແມ່ນ ສຳລັບ ຊະນິດ *C. poilanei*). ເສົາເກສອນບໍ່ມີຕີນ. ກຸ່ມເມັດ ລະອອງ ຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮວງຮັບ ມີສັນດ່ຽວ, ມີຮູບໂຕ U, ຈັດຢູ່ ປາຍຂອງເສົາເກສອນ (ຢ່າງໜ້ອຍກໍ່ແມ່ນ ສຳລັບຊະນິດ *C. poilanei*; ສຳລັບຊະນິດອື່ນ ຊຶ່ງບໍ່ທັນຮູ້ຂໍ້ມູນຄັກ ແນ່ນັ້ນຮວງຮັບອາດມີ 2 ປ່ຽງແຍກກັນຢ່າງຈະແຈ້ງ).

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ (ບໍ່ມີຢູ່ມາເລເຊຍ), ຢູ່ຈີນ, ຕິເບດ, ຍີ່ປຸ່ນ. ປະມານ 5 ຊະນິດ; 1 ຊະນິດຢູ່ໄທ ແລະຫວຽດນາມ [ຊະນິດ *C. poilanei* (Gagnep.) Seidenf. & A.N.Rao], ສ່ວນຢູ່ ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເກີດຢູ່ປ່າຊຽວຕະຫຼອດປີໃນເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນດອກເຜົ້ງບໍ່ມີໃບເກີດຢູ່ດິນທີ່ຫາຍາກຫຼາຍ, ດອກບໍ່ຢູ່ໃນທ່າປີ້ນ, ອາດໃກ້ຄຽງ ກັບສະກຸນ *Anoectochilus*.

ສະກຸນ **Cheirostylis** Blume — *

ເປັນພືດອາໃສບ່ອນຄົ້ ຫຼື ເກີດຢູ່ດິນ, ມີການເຕີບໃຫ່ຍດ້ານຂ້າງ. ລຳຍາວ, ສ່ວນລຸ່ມເລືອໄປ, ສ່ວນຫຼາຍອອບ ບົ້ ແລະ ໃຄ່, ປະກອບເປັນລຳເລືອ, ສ່ວນປາຍຕັ້ງ ແລະສັ້ນ. ໃບຈຳນວນໜ້ອຍຈັດວາງຕາມລຳຕົ້ນ ຫຼື ວ່າເຕົ້າ ໂຮມເປັນຈຸ້ມຢູ່ປາຍ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ຊຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸ້ມຢູ່. ຊໍ່ ດອກອອກຢູ່ປາຍ, ເປັນພົ້ວມີດອກຈຳນວນໜ້ອຍ. ດອກມີຂະໜາດນ້ອຍ, ຢູ່ໃນທ່າປີ້ນ, ປົກກະຕິ ຈະມີ ການດອກຮູບຮົ່ມສິບອອກສີຂາວ. ການດອກທັງໝົດ 3 ການ ເຊື່ອມຕິດກັນຢູ່ຕີນແຕ່ 1/2 ຫາ 1/3 ຂອງລວງຍາວ ຂອງການດອກ. ກີບດອກຮູບຮົ່ມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີແງ່ມອອກ 2 ແງ່ມ ແລະ ບາງໆຢູ່ປ່າຍ ຂອງເສົາ, ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ. ຮວງ ຮັບແບ່ງເປັນ 2 ປ່ຽງຈະແຈ້ງ.

ການແຈກຢາຍ: ພົບຢູ່ອາຟຼິກການເຂດຮ້ອນ, ມາດາກັດສະກາ, ເອເຊຍແຜ່ນດິນໃຫ່ຍເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງນິວກາ ເລໂດເນຍ. ປະມານ 15 ຊະນິດ; 7 ຊະນິດຢູ່ໄທ, 6 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວແລະກຳປູເຈຍ ຍັງບໍ່ທັນ ເກັບກຳໄດ້.

ນິເວດ: ເປັນພືດເກີດຢູ່ດິນໃນປ່າຊຽວຕະຫຼອດປີເຂດຕ່ຳ ແລະເຂດພູສູງ, ເກີດຢູ່ຕາມໂງ່ນຫີນ ແລະ ຕົ້ນໄມ້ ເຊັ່ນດຽວ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ບໍ່ເປັນທີ່ສົງເກດຈັກໜ້ອຍເລີຍ, ມີສ່ວນໃກ້ຄຽງກັບສະກຸນ *Zeuxine*, ສະ ກຸນ *Myrmechis*, ແລະ ອື່ນໆ. ເພິ່ນຈຳແນກໄດ້ຍ້ອນການດອກເຊື່ອມຕິດກັນເປັນທໍ່ ແລະ ມີຕຸ່ງຢູ່ປາຍຂອງ ເສົາເກສອນ 1 ຄູ່.

ສະກຸນ **Chiloschista** Lindl. — *

ພືດອາໃສບ່ອນຄົ້, ມີການເຕີບໃຫ່ຍດ້ານປາຍ, ບໍ່ມີໃບເກືອບວ່າໝົດປີ. ລຳຕົ້ນສັ້ນຫຼາຍ. ໃບຈຳນວນໜ້ອຍ, ມີ ການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸ້ມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຫຼື ຊໍ່ແຕກແໜງ, ຖືດອກຈຳນວນໜ້ອຍ ຫາ ຫຼາຍ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ. ການດອກແຍກກັນ. ກີບດອກຮູບຮົ່ມສິບມີເດືອຍ ຫຼື ປົກກະຕິ ບໍ່ມີເດືອຍ, ເໜັງໄດ້, ອ້ົ ແລະ ຢູ່ກາງເຄິ່ງມີຮອຍດ້ານຊຶ່ງມີຂົນຫຸ້ມ.

ເສົາເກສອນມີຕີນຍາວໆ, ມີຖົງເມັດລະອອງຢູ່ແຕ່ລະພາກຂ້າງພ້ອມທັງມີແໜງຮູບແຂ້ວ ຫຼື ເສັ້ນດ້າຍ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ (ບໍ່ມີຢູ່ບອກເນວ ແລະ ນິວກີເນຍ), ອິດສະເຕເລຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງໝູ່ເກາະຟີຊີ. ປະມານ 17 ຊະນິດ; 9 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 3 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເກືອບວ່າແມ່ນພືດບໍ່ມີລຳຕົ້ນ, ຕົ້ນຕໍ ມີແຕ່ຮາກມຸກໆ ເປັນຈຸ້ມໆ. ມີໃບໜ້ອຍ, ຂະໜາດນ້ອຍ ຫຼື ບໍ່ມີໃບເລີຍ, ລັກສະນະສະເພາະຂອງສະກຸນນີ້ແມ່ນ ຖົງເມັດລະອອງມີຕີ່ງອອກທາງຂ້າງ. ຍ້ອນວ່າປູກໄດ້ງ່າຍ ແຕ່ ບໍ່ໜ້າຈັບໃຈພໍເທົ່າໃດ, ຫຼາຍຊະນິດຂອງສະກຸນ *Chiloschista* ຈຶ່ງຖືກນຳເອົາໄປປູກຈາກນັກສະສົມດອກເຜົ້ງຢູ່ເລື້ອຍ.

ສະກຸນ **Christensonia** Haager

ພືດອາໃສບ່ອນຄ້ຳ ມີກາບເຕີບໃຫຍ່ດ້ານປາຍ, ລຳຕົ້ນຍາວ. ໃບ ຈຳນວນຫຼາຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຖືດອກບໍ່ຫຼາຍປານໃດ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮີມສົບເໜັງບໍ່ໄດ້, ກ້ຽງ, ແບ່ງເປັນ 3 ປ່ຽງ, ມີເດືອຍ. ເດືອຍຕັ້ງຊື່, ຂະໜານໃຫ້ກັບເຕົ້າໄຂ່, ເດືອຍຢູ່ຂ້າງໃນ ບໍ່ມີຮອຍດ້ານ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຕກແຍ່ມ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ ຍາວໆ ແລະແຄບ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ຫວຽດນາມ. 1 ຊະນິດ (ຊະນິດ *C.vietnamica* Haager)ໄດ້ຖືກເກັບກຳວ່າມີຢູ່ຫວຽດນາມເທົ່ານັ້ນ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າລຽບແຄມແມ່ນ້ຳ ຢູ່ໃນເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Vanda*, ສະກຸນ *Rhynchostylis* ແລະ ສະກຸນ *Aerides*; ເພິ່ນຈຳແນກໄດ້ຍ້ອນເສົາເກສອນບໍ່ມີຕີນ ແລະ ກີບດອກຮູບຮີມສົບແບ່ງເປັນ 3 ປ່ຽງ, ບໍ່ມີສັນ. ການນຳເອົາໄປປູກມີເປັນບາງໂອກາດ.

ສະກຸນ **Chroniochilus** J.J.Sm.

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍ, ມີກາບເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນໆ, ໃບບໍ່ຫຼາຍ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ບໍ່ມີຂົນ ຫຼື ຊາມີເລັກນ້ອຍ, ເປັນພົ້ວ ຖືດອກຈຳນວນໜ້ອຍ ຫາຫຼາຍດອກ, ດອກອອກເປັນລຳດັບຕາມໆກັນ; ແກນກາງຂອງຊໍ່ດອກໃຄ່ເລັກນ້ອຍ ແລະ ແປໆ, ປົກກະຕິ ໃບຊ້ອນດອກຈັດລຽງເປັນ 2 ແຖວ. ດອກຂະໜາດນ້ອຍ, ມີອາຍຸສັ້ນ, ຢູ່ໃນທ່າປົ້ນ, ທົ່ວໄປມັກອອກສີເຫຼືອງ ຫຼື ອອກສີຂຽວ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ທ້ອຍໃສ່ກັບຕີນເສົາເກສອນ, ປາຍກີບດອກນີ້ ສ້ອຍເປັນຮູບຈວຍ, ເບິ່ງທາງນອກຄ້າຍຄືມີເດືອຍ, ແຕ່ບໍ່ເປັນຮ່ອງເລິກ. ຕີນເສົາເກສອນຍາວ. ກຸ່ມເມັດລະອອງຈຳນວນ 2, ບໍ່ແບ່ງເປັນກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ແຫຼມມາເລເຊຍ, ຊຸມາຕຼາ, ຊາວາ, ບອກເນວ. ປະມານ 3 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າຂຽວຕະຫຼອດປີ ເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນຕົ້ນດອກເຜົ້ງຂະໜາດນ້ອຍ ມີການເຕີບໃຫຍ່ດ້ານປາຍ ແລະ ບໍ່ເປັນທີ່ສັງເກດ, ໃກ້ຄຽງກັບສະກຸນ *Chamaeanthus* ຫຼາຍ; ສະກຸນນີ້ຕ່າງຈາກສະກຸນ *Chroniochilus* ຕົ້ນຕໍ ດ້ວຍ ການດອກກວ້າງກວ່າກັນ. ການນຳເອົາໄປປູກແມ່ນຫາຍາກທີ່ສຸດ.

ສະກຸນ **Chrysoglossum** Blume — *

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ ແລະມີລຳເລືອສັ້ນ ຫາລຳເລືອຍາວ, ຫົວປອມມີປ້ອງ 1 ສ່ວນ, ບອບ ບາງ ແລະ ມີໃບ 1 ໃບ. ໃບບໍ່ມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງ ຍາວເວລາຍັງຈູມຢູ່. ຊໍ່ດອກເປັນພົ່ວໃຫ່ຍໆ, ມີດອກຈຳນວນໜ້ອຍ ຫາຫຼາຍດອກ, ປົ່ງຂຶ້ນມາແຕ່ລຸ່ມ, ເປັນໜໍ່ບໍ່ ມີໃບ. ດອກຂະໜາດກາງ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ (ແຕ່ຕົ້ນເສົາເກສອນມີເດືອຍ), ແບ່ງເປັນ 3 ປ່ຽງ, ມີສັນເປັນທີ່ໜ້າສັງເກດ , ແຄມຂອງສ່ວນກົກຂອງກີບດອກຮູບຮີມສິບພັບເປັນກີບໆ, ເໜັງໄດ້. ເສົາເກສອນມີປີກຂ້າງ 2 ປີກ ຊຶ່ງຢູ່ຕ່ຳກວ່າເຄິ່ງກາງລົງໄປ ແລະ ມີສັນຂະໜານກັນ 2 ສັນຈັບຢູ່ລຸ່ມປີກດັ່ງກ່າວ; ເສົາເກສອນມີຕີນ ພ້ອມທັງມີເດືອຍສັ້ນໆ. ກຸ່ມເມັດລະອອງຈຳນວນ 2, ແຂ; ກຸ່ມເມັດລະອອງບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ ແລະ ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ພາກຕາເວັນອອກຂອງໝູ່ເກາະຊາມົວ. 4 ຊະນິດ; 1 ຊະນິດເກີດທົ່ວໆໄປຢູ່ໄທ (ຊະນິດ *C. ornatum* Blume), ຢູ່ກຳປູເຈຍ ແລະ ຫວຽດນາມ, ສ່ວນຢູ່ລາວຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າຂຽວຕະຫຼອດປີ ຂອງເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ເກີດຢູ່ໃນສິ່ງແວດລ້ອມຄ້າຍຄືກັນກັບຂອງສະກຸນ *Tainia*, ສະກຸນ *Collabium*, ແລະ ອື່ນໆ. ການຈຳແນກສະກຸນນີ້ໄດ້ດ້ວຍກີບດອກຮູບຮີມສິບເໜັງໄດ້ ແລະ ແຄມຂອງ ກີບດອກດັ່ງກ່າວເບື້ອງລຸ່ມພັບເປັນກີບ. ເສົາເກສອນອັນສັບສົນກໍ່ຈຳແນກໄດ້ງ່າຍເຊັ່ນດຽວ. ການນຳເອົາດອກ ເຜົ້ງສະກຸນ *Chrysoglossum* ນີ້ໄປປູກແມ່ນຫາຍາກເຖິງວ່າດອກຂອງມັນຈະມີຄວາມປະທັບໃຈຢູ່ກໍ່ຕາມ.

ສະກຸນ **Claderia** Hook. f. — *

ພືດມີການເຕີບໃຫຍ່ດ້ານຂ້າງ, ມີລຳເລືອຍາວ. ລຳຕົ້ນສັ້ນ, ບໍ່ມຸກ. ໃບປະມານ 4 ໃບ, ມີການຫຸ້ມຢູ່ຕົ້ນ, ໃບຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນປະເພດຊໍ່ແຕກແໜງ, ມີກິ່ງ ຫຼື ແໜງຂ້າງສັ້ນໆ. ດອກປະກົດໃຫ້ເຫັນເທື່ອລະດອກ, ມີ ຂະໜາດກາງ, ຢູ່ໃນທ່າປົ້ນ, ອອກສີຂຽວທັງມີເສັ້ນກ່າງສີຊ້ຳກວ່າ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີ ເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2 , ແຕກແຍ່ມ, ແຂ, ບໍ່ມີກ້ານ, ເຕົ້າໄຂ່ກໍ່ບໍ່ ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ (ບໍ່ມີຢູ່ເກາະຊາວາ) , ປາປົວ ນິວກີເນຍ. 2 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ແລະ ຫວຽດນາມ ຍັງບໍ່ໄດ້ເຫັນເກັບກຳ.

ນິເວດ: ເປັນພືດທີ່ເລືອຢູ່ກ້ອງຕົ້ນໄມ້ ຫຼື ນຳທ່ອນໄມ້ ຫຼື ທ່ອນຟືນ ໃນປ່າເຂດຕ່ຳທີ່ບໍ່ໄດ້ຖືກລະຫິບລະເຫີອນ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ມີລັກສະນະສະເພາະເດັ່ນ, ການນຳເອົາໄປປູກ ເຖິງວ່າມີ ກໍ່ເປັນການຫາ ຍາກ, ໜໍ່ທີ່ປົ່ງຂຶ້ນໃໝ່ມີໃບພ້ອມ ຈະອອກຕາມລຳເລືອ. ດອກມີສີຂຽວພ້ອມທັງມີເສັ້ນກ່າງ ໃຫຍ່ເຮັດໃຫ້ດອກ ຂອງມັນຕ່າງຈາກດອກເຜົ້ງຊະນິດອື່ນໆ.

ສະກຸນ **Cleisocentron** Bruehl

ຊື່ພ້ອງ: ສະກຸນ *Cleisostomopsis* Seidenf.

ພືດອາໃສບ່ອນຄ້ຳ ມີກາບເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ. ໃບມີຈຳນວນໜ້ອຍ ຫາໜາຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ແຄບ, ແປເຂົ້າກັນດ້ານຫຼັງ ແລະ ດ້ານໜ້າ ຫຼື ເກືອບເປັນທ່ອນກົມ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວດິກ ຖືດອກຈຳນວນໜາຍ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ, ມີສີສັນ ເປັນໜ້າຈັບໃຈໜາຍ. ກາບດອກແຍກກັນ. ກີບດອກຮູບຮີມສົບເຊື່ອມຕິດກັບເສົ້າເກສອນຢ່າງແໜ້ນ, ມີເດືອຍ, ຢູ່ຝາດ້ານຫຼັງຂອງເດືອຍ ປະມານເຄິ່ງກາງດ້ານໃນມີຮອຍດ້ານນ້ອຍໆ. ຕີນເສົ້າເກສອນສັ້ນໜາຍ ຫຼື ບໍ່ມີເລີຍ. ກຸ່ມເມັດລະອອງຈຳນວນ 4, ບໍ່ເທົ່າກັນປານໃດ, ຈັດເປັນ 2 ຄູ່, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ຊີກກິມ, ຫວຽດນາມ, ບອກເນວ. ປະມານ 5 ຊະນິດ; 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ ໄທ, ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Schoenorchis* ແລະ ສະກຸນ *Cleisostoma*, ມີດອກນ້ອຍ ແຕ່ມີສີງາມໜາຍ (ສີບົວຮຸ່ງ ຫຼື ສີຟ້າທະເລ). ສະກຸນ *Cleisostomopsis* ແລະ ສະກຸນ *Cleisocentron* ແຕກຕ່າງກັນດ້ວຍຈຸດລະອຽດເລັກໆນ້ອຍໆ ຈົນປະກົດວ່າຄວນຈະເອົາທັງ 2 ສະກຸນນີ້ເຂົ້າມຳກັນ. ບັນດາຊະນິດ ຂອງສະກຸນ *Cleisocentron* ຫາຍາກແລ້ວຕາມແບບທຳມະຊາດ ແລະ ການນຳເອົາໄປປູກກໍ່ບໍ່ມີຢ່າງກວ້າງ ຂວາງປານໃດ.

ສະກຸນ **Cleisomeria** Lindl. ex D. Don — *

ພືດອາໃສບ່ອນຄ້ຳ ມີກາບເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ. ມີໃບໜ້ອຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວຢ່ອນລົງ, ຖືດອກຈຳນວນໜາຍ ຫຼື ເປັນຊໍ່ດອກແຕກແໜງ. ໃບຊ້ອນດອກຍາວກວ່າເຕົ້າໄຂ່. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ. ກາບດອກແຍກກັນ, ມີຂົນ, ກີບດອກຮູບຮີມສົບເຊື່ອມຕິດກັບເສົ້າເກສອນຢ່າງແໜ້ນ, ມີເດືອຍ, ຢູ່ຂ້າງໃນຂອງເດືອຍມີຮອຍດ້ານ ແຕ່ປາກຂອງເດືອຍເກືອບວ່າຖືກຕັນໝົດ ຍ້ອນຮອຍດ້ານຂອງປ່ຽງກາງ ຂອງກີບດອກຮູບຮີມສົບ. ເສົ້າເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນປານໃດ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ເປັນຮູບ Y, ມີວິຊີດີອ້ອມ. ເຕົ້າໄຂ່ມີຂົນຫຸ້ມ.

ການແຈກຢາຍ: ພົບຢູ່ເອເຊຍ ຕາເວັນອອກສ່ຽງໃຕ້, ມາເລເຊຍ, ບອກເນວ. 2 ຊະນິດ; 2 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 2 ຊະນິດຢູ່ກຳປູເຈຍ, 1 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ໃກ້ຄຽງກັບສະກຸນ *Cleisostoma*, ຈຳແນກສະກຸນນີ້ໄດ້ງ່າຍຍ້ອນໃບຊ້ອນດອກໃຫຍ່ ແລະ ຍາວກວ່າເຕົ້າໄຂ່. ບາງຄັ້ງຄາວກໍ່ມີການນຳເອົາໄປປູກຈາກຜູ້ນິຍົມ ແຕ່ກໍ່ບໍ່ມີຄຸນຄ່າດ້ານປະດັບພໍປານໃດ.

ສະກຸນ **Cleisostoma** Blume — *

ຊື່ພ້ອງ: ສະກຸນ *Echioglossum* Blume; ສະກຸນ *Garayanthus* Szlach; ສະກຸນ *Raciborskantkos* Szlach; ສະກຸນ *Sarcanthus* Lindl.

ພືດອາໃສບ່ອນຄ້ຳມີການເຕີບໃຫ່ຍດ້ານປາຍ. ລຳຕົ້ນສັ້ນ ຫຼື ຍາວ. ໃບມີຈຳນວນໜ້ອຍຫາຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ແປດ້ານຫຼັງ ແລະ ດ້ານໜ້າ ຫຼື ວ່າເປັນທ່ອນກົມໆ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຫຼື ປະເພດຊໍ່ແຕກແໜງ ຖືດອກຈຳນວນໜ້ອຍ ຫາ ຫຼາຍດອກ. ດອກຂະໜາດນ້ອຍ, ຢູ່ໃນທ່ຳປີ້ນ. ການດອກແຍກກັນ. ກີບດອກຮູບຮີມສິບເຊື່ອມຕິດກັນກັບເສົາເກສອນຢ່ຳແໜ້ນ, ມີເດືອຍ, ເດືອຍຢູ່ຂ້າງໃນ, ມີແຜ່ນຂັ້ນແຜ່ຕາມລວງຍາວ, ຢູ່ດ້ານຫຼັງຂອງເດືອຍໃກ້ໆກັບປາກ ຂອງມັນ ມີຕຸດຂະໜາດໃຫ່ຍ. ຕົ້ນຂອງເສົາເກສອນ ປົກກະຕິຈະບໍ່ມີ. ກຸ່ມເມັດລະອອງຈຳນວນ 4, ຈັດເປັນ 2 ຫຼື 4 ກ້ອນ, ຂະໜາດເທ່ຳກັນ ຫຼື ບໍ່ເທ່ຳກັນ, ແຂ້ງ, ບໍ່ມີກ້ານ, ເຕົ້ຳໄຂ່ມີກ້ານ, ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫ່ຍເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ,ເບື້ອງຕາເວັນອອກຂອງເກາະຟີຊີ (ບໍ່ມີຢູ່ອິດສະເຕເລຍ) . ປະມານ 90 ຊະນິດ; 25 ຊະນິດຢູ່ໄທ, 7 ຊະນິດຢູ່ລາວ, 5 ຊະນິດຢູ່ກຳປູເຈຍ, 17 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳເກີດຢູ່ປ່າເຂດຕ່ຳ ແລະ ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນຕົ້ນດອກເຜົ້ງທີ່ມີການເຕີບໃຫ່ຍດ້ານປາຍທີ່ມີດອກນ້ອຍ, ໃກ້ຄຽງກັບສະກຸນ *Micropera*, ສະກຸນ *Pomatocalpa*, ສະກຸນ *Malleola* ແລະອື່ນໆ... ສະກຸນ *Cleisostoma* ຕ່າງຈາກບັນດາສະກຸນໃກ້ຄຽງນີ້ດ້ວຍຕຸດອັນແປກປະຫຼາດຊຶ່ງອັດຕັນປາກຂອງເດືອຍເກືອບໝົດເລີຍ. ສະກຸນ *Cleisostoma* ແມ່ນສະກຸນທີ່ໃຫຍ່ກວ່າໝູ່ໃນກຸ່ມນີ້. ຍ້ອນວ່າດອກບໍ່ເປັນທີ່ສັງເກດສະກຸນນີ້ຈຶ່ງມີຄຸນຄ່າທາງດ້ານປະດັບບໍ່ສູງ.

ສະກຸນ **Coelogyne** Lindl. — *

ພືດອາໃສບ່ອນຄ້ຳເກີດຢູ່ດິນ, ມີການເຕີບໃຫ່ຍດ້ານຂ້າງ, ລຳເລືອສັ້ນຫາຍາວ. ຫົວປອມເປັນທີ່ສັງເກດ, ປະກອບມີປ້ອງ 1 ສ່ວນ, ມີໃບ 1 ຫາ 2 ໃບ, ບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ ຫຼື ມີຂົນເປັນລັກສະນະເກັດນ້ອຍໆ, ປົກກະຕິໃບພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸມຢູ່ ຫຼື ພັບເຂົ້າກັນເວລາຍັງຈຸມຢູ່ ລັກສະນະນີ້ຫາຍາກ. ຊໍ່ດອກປົ່ງຂຶ້ນແຕ່ລຸ່ມຕົ້ນ (ເຣເຕຣັງເທີສ) ຫຼື ວ່າມີຊໍ່ດອກອອກຢູ່ປາຍ ຂອງໜໍ່ທີ່ປົ່ງຂຶ້ນໃໝ່ (ໂປຼໂຕຣັງເທີສ ຫຼື ຊີນັງເທີສ) ຫຼື ວ່າມີຊໍ່ດອກອອກຢູ່ປາຍຫົວປອມທີ່ແກ່ແລ້ວ (ຣິດສະເຕຣັງເທີສ), ເປັນປະເພດພົ້ວມີດອກຈຳນວນໜ້ອຍຫາຫຼາຍດອກ, ສ່ວນວ່າດອກດ່ຽວແມ່ນຫາຍາກ. ດອກມີຂະໜາດກາງຫາໃຫ່ຍ, ຢູ່ໃນທ່ຳປີ້ນ, ສ່ວນຫຼາຍເຫັນສະດຸດຕາ. ການດອກແຍກກັນ, ມີສີຂາວ, ຂຽວ, ອອກສີເຂ້ືອງ ຫຼື ອອກສີເຫຼືອງ. ກີບດອກຮູບຮີມສິບບໍ່ມີເດືອຍ, ເປັນຮູບຖ້ຽຢູ່ທີ່ໂຄນຂອງກີບ, ລັກສະນະນີ້ຫາຍາກ, ເໜັງບໍ່ໄດ້, ແບ່ງເປັນ 3 ປ່ຽງ, ປ່ຽງຂ້າງຕັ້ງຊັນຂຶ້ນ. ເສົາເກສອນມີວ່ອມຢູ່ປາຍກວມເອົາເບື້ອງເທິງຂອງຮອຍເມັດລະອອງ, ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂ້ງ, ມີກ້ານ, ເຕົ້ຳໄຂ່ບໍ່ມີກ້ານ ແລະ ບໍ່ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ສີຣລັງກາ, ເອເຊຍເຂດຮ້ອນ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ເບື້ອງຕາເວັນອອກຂອງເກາະຊາມົວ (ບໍ່ມີຢູ່ອິດສະເຕເລຍ). ປະມານ 250 ຊະນິດ; 27 ຊະນິດຢູ່ໄທ, 14 ຊະນິດຢູ່ລາວ, 4 ຊະນິດຢູ່ກຳປູເຈຍ, 24 ຊະນິດຢູ່ຫວຽດນາມ.

ນິເວດ: ປົກກະຕິ ເປັນພືດອາໃສບ່ອນຄ້ຳເກີດຢູ່ປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ຄົນນິຍົມຊົມຊອບຍ້ອນດອກມີຄວາມປະທັບໃຈສູງແຕ່ຫາກລິ້ນໄວ. ເພິ່ນຈຳແນກໄດ້ງ່າຍຍ້ອນເສົາເກສອນແປ ແລະ ປາຍມີວ່ອມ. 3 ປ່ຽງຂອງກີບດອກຮູບຮີບສິບ ປົກກະຕິແລ້ວມີ ສັນເປັນທີ່ສັງເກດ ແລະ ມີແຊກສີກະເບົາຊ້ຳ ຫຼື ສີເຫຼືອງຮຸ່ງ. ຮອດຕຽວນີ້, ສະກຸນ *Coelogyne* ຖືກນຳມາໃຊ້ໃນໂຄງການສ້າງພັນຊອດໜ້ອຍ ບາງເທື່ອກ່ຳຍ້ອນດອກບໍ່ມີອາຍຸຍາວພໍ.

ສະກຸນ **Collabium** Blume — *

ຊື່ພ້ອງ: ສະກຸນ *Collabiopsis* S.S.Ying

ພືດເກີດຢູ່ດິນ, ມີການເຕີບໃຫ່ຍດ້ານຂ້າງ; ມີລຳເລືອສັ້ນຫາຍາວ. ຫົວປອມມີປ້ອງ 1 ປ້ອງ, ມີໃບ 1 ໃບ. ໃບບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ,ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ມີຈຸດສີຊຳ ຢູ່ເລື້ອຍ. ຊໍ່ດອກອອກຢູ່ປາຍ, ເປັນພົ້ອຊຶ່ງຈັບຢູ່ໜໍ່ສະເພາະ ແລະ ບໍ່ມີໃບ. ດອກມີຂະໜາດກາງ, ຢູ່ໃນທ່າປົ້ນ (ສ່ວນໃດສ່ວນໜຶ່ງຢູ່ໃນທ່າປົ້ນມີເລື້ອຍຢູ່), ປົກກະຕິ ດອກບໍ່ມີຄວາມເຄິ່ງຄີ. ການດອກແຍກກັນ. ກີບດອກຮູບ ຮີມລົບບໍ່ມີເດືອຍ (ແຕ່ຕີນເສົາເກສອນມີເດືອຍ!), ແບ່ງເປັນ 3 ປ່ຽງ, ຢູ່ສ່ວນກົກ ມີສັນກີບອ່າວມຸກແດ່ ຕັ້ງຊັ້ນ 2 ອັນ, ບໍ່ເໜັງ. ເສົາເກສອນມີຕີນ ທັ້ງມີເດືອຍສັ້ນໆ. ກຸ່ມເມັດລະອອງຈຳນວນ 2, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ ແລະ ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ເບື້ອງຕາເວັນອອກຂອງເກາະຟີຊີ. 11 ຊະນິດ; 1 ຊະນິດຢູ່ໄທ, 4 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Chrysoglossum* ແຕ່ກີບດອກຮູບຮີມລົບເໜັງບໍ່ໄດ້ ແລະ ສ່ວນກົກບໍ່ມີແຄມພັບເປັນກີບໆ. ດອກຂອງສະກຸນ *Collabium* ສ່ວນຫຼາຍຈະບິດບ້ຽວ (ຢູ່ໃນທ່າປົ້ນສ່ວນໃດສ່ວນໜຶ່ງ) ແລະ ບໍ່ເຄິ່ງຄີປານໃດ. ສະກຸນນີ້ບໍ່ຄ່ອຍພົບໃນທຳມະຊາດປານໃດ ແລະການນຳເອົາໄປປູກ ແຮງຫາຍາກ.

ສະກຸນ **Cordiglottis** J.J. Sm.

ຊື່ພ້ອງ: ສະກຸນ *Cheirorchis* Carr

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ. ໃບມີໜ້ອຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສົບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່, ເປັນທ່ອນກົມ ຫຼື ແປເຂົ້າທາງຂ້າງ. ຊໍ່ດອກອອກທາງຂ້າງ, ເປັນພົ້ວດົກ, ຊຶ່ງຈຳນວນດອກມີແຕ່ໜ້ອຍ ຫາຫຼາຍ ແລະ ດອກບານເປັນລຳດັບຕາມໆກັນ. ດອກນ້ອຍ, ມີອາຍຸສັ້ນ, ຢູ່ໃນທ່າປົ້ນ. ການດອກແຍກກັນ, ກີບດອກຮູບຮີມລົບບໍ່ມີເດືອຍ, ວ່ຳລົງ, ທ້ອຍໃສ່ຕີນເສົາເກສອນຊຶ່ງມັນເອງກໍ່ຂະຫຍາຍດີຢູ່. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ມາເລເຊຍ, ອິນໂດເນເຊຍ (ຊຸມາຕຣາ, ບອກເນໂອ). ປະມານ 7 ຊະນິດ; 1 ຊະນິດ ຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ຫຼາຍຈຸດພິເສດ, ດັ່ງ: ໃບເປັນທ່ອນກົມ ຫຼື ແປເຂົ້າທາງຂ້າງ ແລະ ຊໍ່ດອກອອກທາງຂ້າງ, ດອກນ້ອຍ, ອາຍຸສັ້ນ ແລະ ອອກເປັນລຳດັບຕາມໆກັນ ເປັນອັນສະເພາະຂອງສະກຸນ *Cordiglottis*. ມັນແມ່ນ ສະກຸນທີ່ຄົນຮູ້ຈັກໜ້ອຍ, ບໍ່ມີທົ່ວໄປໃນທຳມະຊາດ ແລະ ແຮງບໍ່ມີໃນການສະສົມວິທະຍາສາດ.

ສະກຸນ **Corybas** Salisb. — *

ຊື່ພ້ອງ: ສະກຸນ *Corysanthes* R.Br.

ພືດຂະໜາດນ້ອຍມີການເຕີບໃຫຍ່ຢູ່ດ້ານຂ້າງ, ເກີດຢູ່ດິນ ຫຼື ຂະນິດອາໃສບ່ອນຄ້ຳແມ່ນຫາຍາກ, ຕົ້ນຂະຫຍາຍຈາກຫົວໃຕ້ດິນນ້ອຍໆ. ລຳຕົ້ນສັ້ນມີໃບ 1 ໃບ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ມ້ວນກັນເຂົ້າຕາມລວງຍາວເວລາຍັງຈູມຢູ່, ໃບເປັນຮູບຫົວໃຈ ຫາຮູບເກືອບມົນ, ມັກພົບເສັ້ນກ່ຳໆສີເງິນເລື້ອຍ. ຊໍ່ດອກອອກຢູ່ປາຍ, ມີດອກດ່ຽວ. ດອກຂະໜາດປານກາງ, ສຳລັບຕົ້ນແລ້ວດອກມີຂະໜາດໃຫຍ່ ຫຼາຍ. ກາບດອກດ້ານຂ້າງແຍກກັນ ຫຼື ເຊື່ອມຕິດກັນຢູ່ຕີນກາບ. ກີບດອກຮູບຮີມສົບມີເດືອຍສັ້ນ 2 ເດືອຍ ຫຼື ອ່ຳບໍ່ມີເດືອຍເລີຍ, ເໜັງບໍ່ໄດ້. ກາບດອກດ້ານຫຼັງກວ້ຳງກວ່ຳກາບຂ້ຳງ. ທັງໝົດກາບ ແລະກີບດອກຮູບຮີມສົບຮວມກັນເຮັດໃຫ້ມີໂຄງສ້ຳງຂອງເຕົ້ຳນ້ຳ. ເສົ້ຳເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ອ່ອນນຸ້ມ, ບໍ່ມີກ້ຳນ, ເຕົ້ຳໄຂ່ບໍ່ມີກ້ຳນ, ມີວິຊີດີອອມ.

ການແຈກຢາຍ: ພົບຢູ່ອິນເດຍ, ພາກໃຕ້ຂອງຈີນ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອີດສະເຕເລຍ, ໝູ່ເກາະປາຊີຟິກ, ເບ້ືອງຕາເວັນອອກຂອງນິວຊີແລັນ. ປະມານ 100 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ຍັງບໍ່ທັນໄດ້ເກັບກຳຢູ່ລາວ ຫຼື ກຳປູເຈຍ.

ນິເວດ: ພືດເກີດຢູ່ເຂດພູສູງເປັນຈຸດໜັກແລະຕາມບ່ອນຮົ່ມ ແລະ ມີໄຄເກີດ, ຮົ່ມບໍ່ຫຼາຍເກີນໄປ ແລະ ປົນຢູ່ນຳປ່ຳໜາມ. ບາງຄັ້ງເປັນພືດອາໃສບ່ອນຄ້ຳຢູ່ຕົ້ນທີ່ມີໄຄຢູ່ນຳແລ້ວ.

ຂໍ້ຄວນເອົາໃຈໃສ່: ແມ່ນໜຶ່ງໃນຈຳນວນສະກຸນດອກເຜ້ືງທີ່ໃຫ້ຄວາມເພີດເພີນ ແລະ ມີເອກກະລັກສະເພາະສູງກວ່ຳໝູ່. ຈາກຫົວໃຕ້ດິນນ້ອຍໆ ຂະໜາດໝາກຖົ່ວນ້ອຍ ແລ້ວມີລຳຕົ້ນສັ້ນໆປ່ຳຂຶ້ນ ທັງມີໃບ 1 ໃບ ແລະ ມີດອກໃຫຍ່ຊ່ຶງບໍ່ສົມສ່ວນກັນເລີຍ. ດອກມີຮູບຄ້ຳຍຄືກັບໝວກກັນກະທົບ ຫຼື ເຕົ້ຳນ້ຳ ແລະ ມີແຊກສີແດງ ແລະ ສີແດງຊ້ຳ ງຳມຫຼາຍຢູ່ນຳດອກເລື້ອຍໆ.

ສະກຸນ **Corymborkis** Thouars — *

ເປັນຕົ້ນສູງເກີດຢູ່ດິນ, ມີລຳເລືອສັ້ນ, ມີການເຕີບໃຫຍ່ດ້ານຂ້ຳງ. ລຳຕົ້ນຍາວ, ບໍ່ມຸກ, ຊາ, ໃບມີຈຳນວນໜ້ອຍ ຫາບໍ່ຫຼາຍປານໃດ, ມີກາບຫຸ້ມຢູ່ຕີນ, ຈັດລຽງຕາມແບບກ້ຽວກົ້ນຫອຍ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້ຳກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກຫາງຂ້ຳງ, ເປັນຊໍ່ແຕກແໜງ, ດອກຂະໜາດກາງ, ອາຍຸສັ້ນ, ຢູ່ໃນທ່ຳປົ້ນ ຫຼື ບໍ່, ມີສີຂາວ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເປັນຮູບບ່ວງ, ເໜັງບໍ່ໄດ້. ເສົ້ຳເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່ຳໄດ້, ມີກ້ຳນ, ແຕ່ເຕົ້ຳໄຂ່ບໍ່ມີກ້ຳນ, ມີວິຊີດີອອມ.

ການແຈກຢາຍ: ແຜ່ຂະຫຍາຍທົ່ວເຂດຮ້ອນໃນໂລກ. ປະມານ 5 ຊະນິດ; 1 ຊະນິດທີ່ແຜ່ຂະຫຍາຍຢ່ຳງກວ້ຳງຂວ້ຳງ [ຊະນິດ *C. veratrifolia* (Reinw.) Blume] ພົບຢູ່ໄທ, ລາວ ແລະ ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່ຳເຂດຕ່ຳ (ປ່ຳຊັ້ນ 1 ຫຼື ຊັ້ນ 2) ແລະ ໃນພື້ນທີ່ເຮ້ືອ ຫຼັງຈາກມີການປູກຝ້ຳໃສ່ແລ້ວ.

ຂໍ້ຄວນເອົາໃຈໃສ່: ແມ່ນພືດທີ່ມີລຳຕົ້ນແຂ້ງແກ່ນ, ມີໃບໃຫຍ່, ບ້ຳງຄັ້ງຕົ້ນສູງເທ່ຳໆກັບຄົນ, ຊໍ່ດອກສັ້ນອອກຫາງຂ້ຳງ, ດອກອາຍຸສັ້ນ, ມີສີຂາວ. ເປັນສະກຸນດອກເຜ້ືງທີ່ພົບທົ່ວໆໄປໃນທຳມະຊາດ ແຕ່ການນຳເອົ້ຳໄປປູກ ແມ່ນຫາຍາກຢູ່. ສະກຸນ *Corymborkis* ໃກ້ຄຽງກັບສະກຸນ *Tropidia*.

ສະກຸນ **Cremastra** Lindl.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້ຳງ, ລຳເລືອງຢູ່ຕາມໜ້ຳດິນ. ຫົວປອມ ບັນຈຸປ້ອງກວ່ຳ 1 ປ້ອງ, ຫົວປອມຢູ່ໃຕ້ດິນສ່ວນໃດສ່ວນໜຶ່ງ, ມີໃບ 1 ຫຼື 2. ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນນຕາມລະດູ

ການ, ມ້ອນເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກປ່ຽອອກທາງຂ້າງ ຈາກຫົວປອມ, ເປັນພົ້ວ ຖືດອກຈຳນວນໜ້ອຍ. ດອກຂະໜາດກາງ, ຢູ່ໃນທ່າປີ້ນ, ບໍ່ບານໜ້ອຍ, ອອກສີກະເບີ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ (ນອນໃນໂຄງສ້າງດຽວກັບກ້ານຂອງເຕົ້າໄຂ່).

ການແຈກຢາຍ: ພົບຢູ່ເນປານ, ອິນເດຍ, ຈີນ, ໄທ, ຫວຽດນາມ, ຍີ່ປຸ່ນ. 2 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດ ຢູ່ຫວຽດນາມ, ລ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ໃນປ່າໂຄກຢູ່ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເບິ່ງຜິວເຜີນ ສະກຸນນີ້ ຄ້າຍຄືກັບສະກຸນ *Eulophia*, ດອກບໍ່ບານກວ້າງ, ເສົາເກສອນບໍ່ມີຕີນ, ກຸ່ມເມັດລະອອງຈຳນວນ 4. ພືດສະກຸນນີ້ເກີດບ່ອນລະເລັກບ່ອນລະນ້ອຍ ໃນເຂດທີ່ປົ້ມເຫັ້ມນີ້ກ່ອນເອົາ.

ສະກຸນ **Cryptochilus** Wall. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນ. ຫົວປອມ ບັນຈຸປ້ອງ 2 ປ້ອງ (1 ປ້ອງຍາວ ແລະ 1 ປ້ອງສັ້ນ), ມີໃບ 2 ໃບ. ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ປ່ຽຂຶ້ນຕາມແໜງກຳລັງປ່ຽໃໝ່ (ຊິນ້ຽເທີສ), ເປັນພົ້ວ ຖືດອກໜາຍ, ດອກຈັດລຽງເປັນ 2 ແຖວ. ດອກຂະໜາດນ້ອຍ ຫາກາງ, ຢູ່ໃນທ່າປີ້ນ, ສີເຫຼືອງຮຸ່ງ ຫຼືແດງ. ກາບດອກເຊື່ອມຕິດກັບຍົກເວັ້ນຢູ່ປາຍ ແລະ ປະກອບເປັນຫລອດຮູບໂຖ, ຂ້າງນອກມີຂົນ ອ່ອນໆຫຸ້ມລຽບໆ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ບໍ່ແບ່ງເປັນປ່ຽງ. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ມ່ຽນມ້າ, ຈີນ, ລຽດນາມ. 2 ຫຼື 3 ຊະນິດ; 1 ຊະນິດຢູ່ຫວຽດນາມ, ລ່ວນຢູ່ໄທ, ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ຢູ່ປ່າ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ມີລັກສະນະສະເພາະເດັ່ນ, ຈຳແນກໄດ້ງ່າຍ ຍ້ອນພົ້ວດອກຕັ້ງຊັນຂຶ້ນ, ແລະ ມີກາບດອກເຊື່ອມຕິດກັນ, ມີສີແດງຮຸ່ງ ຫຼື ເຫຼືອງ. ການນຳເອົາໄປປູກໃນອາກາດເຢັນໂດຍນັກສະສົມ ມີເປັນບາງໂອກາດ.

ສະກຸນ **Cryptopylos** Garay — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ, ລຳຕົ້ນສັ້ນ. ໃບຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຖືດອກຈຳນວນບໍ່ໜ້ອຍປານໃດ. ດອກຂະໜາດກາງ, (ມີອາຍຸສັ້ນ?), ຢູ່ໃນທ່າປີ້ນ. ກາບດອກແຍກກັນ. ກີບດອກຮູບຮີມສົບ ມີເດືອຍ, ທ້ອຍໃສ່ຕີນເສົາເກສອນ, ປາກຂອງເດືອຍ ຖືກແຜ່ນພຽງອັດ ລ່ວນໃດລ່ວນໜຶ່ງ, ແຜ່ນພຽງປ່ຽງມາຈາກຝາດ້ານຫຼັງຂອງ ກີບດອກຮູບຮີມສົບ. ຕີນເສົາເກສອນຍາວໜ້ອຍ, ກຸ່ມເມັດລະອອງຈຳນວນ 2, ມີປ່ອງແຄບໆ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ລາວ, ຫວຽດນາມ, ແຫຼມມາເລເຊຍ, ຊຸມາຕຼາ. 1 ຊະນິດ [ຊະນິດ *C. clausus* (J.J.Sm.) Garay] ພົບທົ່ວໆໄປໃນເຂດທີ່ປົ້ມເຫັ້ມນີ້ກ່ອນເອົາ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າຍ່ອຕະຫຼອດປີ ໃນເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Macropodanthus* ຫຼາຍທີ່ສຸດ, ມັນຕ່າງກັນຕົ້ນຕໍແມ່ນດ້ວຍລັກສະນະບໍ່ປົກກະຕິຂອງປາກເດືອຍ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Cryptostylis** R.Br. — *

ພືດເກີດຢູ່ດິນ, ບໍ່ມີລຳຕົ້ນ, ມີການເຕີບໃຫ່ຍດ້ານຂ້າງ, ບໍ່ມີລຳເລືອ. ໜໍ່ມີໃບໜຶ່ງ, ໜໍ່ອອກເປັນຈຸ້ມ, ໃບບໍ່ມີກ້ານ ຫຸ້ມຢູ່ຕີນ, ມີກ້ານຈະແຈ້ງ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່ . ຊໍ່ດອກປົ່ງຂຶ້ນແຕ່ລຸ່ມຕົ້ນ, ເປັນປະເພດພົ້ວ. ດອກຂະໜາດກາງ, ບໍ່ຢູ່ໃນທ່າປົ້ນ. ການດອກແຍກກັນ, ແຄບ, ຄ້າຍຄືກັບກີບດອກ. ກີບດອກຮູບຮີມລົບບໍ່ມີເດືອຍ, ເໜັງບໍ່ໄດ້, ປົກກະຕິ ອອກສີເຫຼືອງ ຫຼື ສີແດງແກມສີກະເບົາ ແລະ ມີຈຸດຊ້ຳໆ. ເສົາເກສອນຖືກປົດບັງຢູ່ສ່ວນພື້ນຂອງກີບດອກຮູບຮີມລົບ, ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ອ່ອນນຸ້ມ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ ສຣີລັງກາ, ອິນເດຍ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ຟີຊີ, ຊາມົວ. ປະມານ 15 ຊະນິດ; 1 ຊະນິດເກີດຢ່າງກວ້າງຂວາງ [*C. arachnites* (Blume) Hassk.] ພົບຢູ່ໄທ, ກຳປູເຈຍ ແລະ ຫວຽດນາມ, ສ່ວນຢູ່ລາວ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ, ໃນປ່າຕະຫຼອດປີໃນເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຈຳແນກໄດ້ຢ່າງບໍ່ຜິດພາດ, ຈຳແນກໄດ້ງ່າຍຍ້ອນໃບມີກ້ານ, ບໍ່ພັບເປັນກີບ ແລະ ຍ້ອນດອກຄ້າຍຄືແມງມຸມຊຶ່ງມີກີບດອກຮູບຮີບສົບຢູ່ເທິງໝູ່. ການນຳເອົາສະກຸນນີ້ມາປູກແມ່ນຫາຍາກ.

ສະກຸນ **Cymbidium** Sw. — *

ຊື່ພ້ອງ: ສະກຸນ *Cyperorchis* Blume

ພືດອາໃສບ່ອນຄ້ຳ ຫຼື ເກີດຢູ່ດິນ, ມີການເຕີບໃຫ່ຍດ້ານຂ້າງ, ເກືອບບໍ່ມີລຳເລືອ ຫຼື ມີ ກ່ໍສັ້ນ; ຊະນິດເກີດຢູ່ດິນ ບໍ່ມີຫົວປອມ, ບໍ່ມີລຳເລືອໃຕ້ດິນ ແລະ ບໍ່ມີໃບ ແມ່ນຫາຍາກ. ປົກກະຕິ ມີຫົວປອມແຕ່ຖືກປົດບັງດ້ວຍການຂອງໃບຢູ່ເລື້ອຍໆ, ຫົວປອມມີປ້ອງ 1 ປ້ອງ ຫຼື ຫຼາຍກ່ວາ 1, ມີໃບຈຳນວນໜ້ອຍ ຫາຫຼາຍໃບ. ມີກາບຫຸ້ມຢູ່ຕີນໃບ, ຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ສົບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກປົ່ງຂຶ້ນທາງຂ້າງຈາກສ່ວນລຸ່ມຂອງຫົວປອມ, ແມ່ນພົ້ວມີດອກຈຳນວນໜ້ອຍ ຫາຫຼາຍ. ດອກມີຂະໜາດກາງຫາໃຫ່ຍ, ຢູ່ໃນທ່າປົ້ນ, ສະດຸດຕາເປັນສ່ວນຫຼາຍ. ການດອກແຍກກັນ. ກີບດອກຮູບຮີບສົບບໍ່ມີເດືອຍ, ເໜັງບໍ່ໄດ້, ມີຕີນເສົາເກສອນ. ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ (ຊຶ່ງປະກອບເປັນໂຄງສ້າງອັນດຽວກັນກັບກ້ານຂອງເຕົ້າໄຂ່).

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍຕາເວັນອອກເຂດຮ້ອນ, ຈີນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດ ສະເຕເລຍ. ປະມານ 45 ຊະນິດ; 18 ຊະນິດຢູ່ໄທ, 7 ຊະນິດຢູ່ລາວ, 7 ຊະນິດຢູ່ກຳປູເຈຍ, 19 ຊະນິດຢູ່ຫວຽດນາມ.

ນິເວດ: ພືດອາໃສບ່ອນຄ້ຳເກີດຢູ່ເຂດຕ່ຳ ແລະເຂດພູສູງ ຫຼື ເປັນພືດເກີດຢູ່ດິນໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເວົ້າທາງດ້ານພືດປະດັບ ສະກຸນ C*ymbidium* ກ່ເປັນໜຶ່ງໃນສະກຸນດອກເຜ້ືງທີ່ມີຄວາມສຳຄັນກວ່າໝູ່, ມີຫຼາຍພັນຊອດຊຶ່ງເພີ່ນນຳເອົາມາປູກສຳລັບການອຸດສະຫະກຳດອກໄມ້. ຍ້ອນວ່າພັນຊອດຕ້ອງການອຸນນະພູມຕ່ຳເພື່ອອອກ ດອກໄດ້ດີ, ເພີ່ນຈ່ຶງບ່ເອົາມາປູກຢູ່ເອເຊຍຕາເວັນອອກສ່ຽງໃຕ້. ບາງຊະນິດທີ່ມີດອກສະດຸດຕາກ່ໍຫາຍາກແລ້ວໃນທຳມະຊາດໃນສະພາບປະຈຸບັນນີ້.

ສະກຸນ **Cyrtosia** Blume — *

ພືດເກີດຢູ່ດິນບໍ່ມີໃບ, ບໍ່ມີລຳຕົ້ນ, ມີການເຕີບໃຫ່ຍດ້ານຂ້າງ ແລະມີລຳເລືອໃຕ້ດິນ. ຊໍ່ດອກເປັນຊໍ່ແຕກແໜງ, ດອກຂະໜາດນ້ອຍ, ບໍ່ຢູ່ໃນທ່າປີ້ນ, ອອກສີເຫຼືອງ. ການດອກແຍກກັນ, ດ້ານນອກອ່ອນນຸ້ມ. ກີບດອກຮູບຮີມ ສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງໂຮມເຂົ້າກັນເປັນກ້ອນອ່ອນໆຄ້າຍກ້ອນນ້ຳເຜ້ືງ, ບໍ່ມີກ້ານ, ກ້ານຂອງເຕ້ົາໄຂ່ບໍ່ມີ, ບໍ່ມີວິຊີດີອ້ອມ. ໝາກມີເນ້ືອ, ໄຂບໍ່ໄດ້ເວລາສຸກແລ້ວ.

ການແຈກຢາຍ: ພົບຢູ່ປະເທດສຣີລັງກາ, ເອເຊຍຕາເວັນອອກສ່ຽງໃຕ້, ຍີ່ປຸ່ນ, ມາເລເຊຍ, ຟີລິບປິນ, ປາປົວ ນິວກີເນຍ. ປະມານ 5 ຊະນິດ; 4 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ປ່າໃນເຂດພສຽ.

ຂ້ໍຄວນເອົາໃຈໃສ່: ໃນຈຳນວນດອກເຜ້ືງທີ່ເກີດຢູ່ດິນ ແລະ ບໍ່ມີໃບ, ສະກຸນ *Cyrtosia* ມີຈຸດທີ່ຈຳແນກໄດ້ ຍ້ອນງ່າຕ້ັງຊັນຂ້ຶນ ສົມທົບກັບຢູ່ລະດັບດອກກໍ່ມີດ້ານນອກຂອງການດອກອ່ອນນຸ້ມ. ໝາກມີເນ້ືອ, ມີຮູບໝາກ ກ້ອຍ ກໍ່ເປັນເອກກະລັກສະເພາະອັນໜ່ຶງອີກ. ບໍ່ມີການນຳເອົາສະກຸນນ້ີໄປປູກເລີຍ.

ສະກຸນ **Cystorchis** Blume

ພືດເກີດຢູ່ດິນຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານຂ້າງ, ບາງຄ້ັງກໍ່ບໍ່ມີໃບ (ດັ່ງ ບັນດາຊະນິດທີ່ກ່າວມາໃນປ້ຶມ ເຫ້ັມນ້ີ) ແລະ ບໍ່ມີລຳເລືອໃຕ້ດິນ. ລຳຕົ້ນຖ້າອ່າມີ, ກໍແມ່ນອວບນ້ຳໜ້ອຍໜ່ຶງ, ລຳຕົ້ນຍາວ, ສ່ວນຕີນເລືອໄປ ແລະ ປະກອບເປັນລຳເລືອ, ສ່ວນປາຍຂອງລຳຕົ້ນສ້ັນ, ຕ້ັງຊັນຂ້ຶນ. ໃບຖ້າມີ ແມ່ນມີຈຳນວນໜ້ອຍ, ຈຸ້ມກັນຢູ່ ສ່ວນປາຍຂອງລຳຕົ້ນ ແລະ ຈັດລຽງກັນຕາມແບບກ້ຽວກ້ິນຫອຍ, ມີການຫຸ້ມຢູ່ຕີນ, ບໍ່ມີຂ້ົນ, ຂຽວຕະໜອດ, ມ້ວນເຂ້ົາກັນຕາມລວງຍາວເວລາຍັງຈຸ້ມຢູ່, ອອກສີຊ້ຳເລ້ືອຍໆ. ຊໍ່ດອກອອກຢູ່ປາຍ, ເປັນພ້ືອມີດອກຈຳນວນໜ້ອຍ ຫາໜ້ວຍ. ດອກຂະໜາດນ້ອຍ ຫານ້ອຍໜ້ວຍ, ຢູ່ໃນທ່າປີ້ນ, ດອກບານບໍ່ກວ້າງ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍສ້ັນໆ, ຢູ່ຕີນມີຕຸ່ມ ຄ້າຍຄືກະດັນ 2 ຕຸ່ມ, ແຕ່ລະອັນມີຕຸດນ້ອຍໆຢູ່ຂ້າງໃນ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2 , ຜ່າໄດ້, ມີກ້ານ, ເຕ້ົາໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ປ່ຽງ ຂອງຮອງຮັບບໍ່ໄດ້ແຍກກັນ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງອາມິວຕູ. ປະມານ 20 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ,ກຳປູເຈຍ ຫ ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າເຂດຕ່ຳ ແລະເຂດພູສຽ.

ຂ້ໍຄວນເອົາໃຈໃສ່: ບັນດາຊະນິດຂອງສະກຸນທີ່ພົບຢູ່ໄທ, ເປັນຕົ້ນທີ່ບໍ່ມີໃບ ແລະ ບໍ່ມີຄວາມສຳຄັນຫຍັງ, ເພ່ືນຈຳແນກມັນໄດ້ງ່າຍຍ້ອນຕຸ່ມຄ້າຍຄືກະດັນຢູ່ 2 ຕຸ່ມ ຢູ່ໂຄນຂອງກີບດອກຮູບຮີມສິບ. ບໍ່ໄດ້ມີການນຳເອົາໄປ ປູກເລີຍ.

ສະກຸນ **Deceptor** Seidenf.

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ. ໃບໜາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ ມີຂ້ົນ, ສັບປ່ຽນຕາມລະດູການ, ພັບເຂ້ົາກັນເວລາຍັງຈຸ້ມຢູ່. ຊໍ່ດອກອອກທາງຂ້າງ, ເປັນຊໍ່ແຕກແໜງ ຖ້ືດອກຈຳ ນວນໜາຍ. ດອກຂະໜາດນ້ອຍໜາຍ, ຢູ່ໃນທ່າປີ້ນ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍຄ້າຍຮູບ ຖ້ົງສ້ັນໆ, ເໜັງບໍ່ໄດ້, ປ່ຽງກາງສ້ັນໆ, ຢູ່ຂ້າງໃນ ແລະ ອ້ອມແອ້ມປາກຂອງເດືອຍ, ມີຂ້ົນຍາວເປັນວົງ. ເສົາເກ

ສອນສັ້ນຫຼາຍ, ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: 1 ຊະນິດພົບຢູ່ຫວຽດນາມເທົ່ານັ້ນ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ຢູ່ທີ່ສູງ.

ຂໍ້ຄວນເອົາໃຈໃສ່: ເປັນພືດທີ່ຫິນຫານ, ມີແວດລ້ອມຄ້ຽວກັບສະກຸນ *Acampe*, ແຕ່ມີດອກນ້ອຍຫຼາຍ ແລະ ມີຈຸດພິເສດ ຈຳນວນໜຶ່ງ ດັ່ງ: ປ່ຽງກາງຂອງກີບດອກຮູບຮີມສິບນ້ອຍ ແລະ ມີຂົນແຈກຢາຍເປັນວົງຢູ່ຂ້າງໃນ ແລະ ອ້ອມປາກຂອງເດືອຍ. ອາດບໍ່ມີການນຳເອົາໄປປູກ.

ສະກຸນ **Dendrobium** SW. — *

ຊື່ພ້ອງ: ສະກຸນ *Callista* Lour.; ສະກຸນ *Grastidium* Blume; ສະກຸນ *Pedilonum* Blume

ພືດອາໃສບ່ອນຄ້ຳ ຫຼືເກີດຢູ່ດິນ, ມີການເຕີບໃຫ່ຍດ້ານຂ້າງ, ມີຂະໜາດແຕ່ນ້ອຍຫາໃຫ່ຍ, ມີລຳເລືອຈະແຈ້ງ ຫຼື ບໍ່ມີ. ມີຫົວປອມ ຫຼື ບໍ່ມີ, ຖ້າວ່າມີ ກໍ່ແມ່ນມີປ້ອງ 1 ຫາຫຼາຍປ້ອງ, ປ້ອງດັ່ງກ່າວສັ້ນ ແລະ ຕຸ້ຍ ຫາ ຮຽວ ແລະ ບາງ. ໃບມີຈຳນວນ 1 ໃບ ຫາຫຼາຍໃບ. ກ້ານໃບບໍ່ແມ່ນລຳຮຽວ, ບາງແລະບໍ່ມຸກ, ລຳຕົ້ນຈະມີໃບຫຼາຍ, ໃບຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ ຫຼື ບໍ່ມີ, ບາງຄັ້ງການຫຸ້ມມີຂົນ (ຂົນສີດຳ ຫຼື ຂາວແຕ່ບໍ່ແມ່ນສີເຫຼືອງ ຫຼື ສີແດງອົມສີກະເບົາ ດັ່ງໃນສະກຸນ *Trichotosia*). ກ້ານໃບແຜ່ນໃບ ຫຼືເນື້ອໃບມີຂົນ ແມ່ນຫາຍາກຫຼາຍ, ບາງຄັ້ງມັນກໍເປັນທ່ອນກົມ ຫຼື ໜີບແປດ້ານຂ້າງ, ເກືອບວ່າປ່ຽນໃບຕະຫຼອດ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຢູ່ຂ້າງຈາກສ່ວນເທິງຂອງລຳຕົ້ນ ຫຼື ວ່າເປັນຊໍ່ອອກຢູ່ປາຍ, ເປັນພົ້ວ ຫຼື ວ່າມີດອກດ່ຽວ. ດອກມີຂະໜາດນ້ອຍຫາໃຫຍ່, ມີທ່າປົ້ນ ຫຼື ບໍ່, ນານລົ່ນ ຫຼື ລົ່ນໄວ, ສ່ວນຫຼາຍແມ່ນສະດຸດຕາດີ. ການດອກແຍກກັນ, ປົກກະຕິ ການດອກຂ້າງ ຈະເຊື່ອມຕິດກັນຢູ່ຕີນ, ປະກອບເຂົ້າເປັນຄາງຈະແຈ້ງ (ບາງຄັ້ງກໍ່ຄ້າຍຄືກັບເດືອຍ), ການດອກດ້ານຫຼັງແຍກອອກຈາກການດອກດ້ານຂ້າງທຸກເທື່ອ; ກີບດອກຮູບຮີມສິບບໍ່ມີເດືອຍ, ປົກກະຕິເໜັງບໍ່ໄດ້. ເສົາເກສອນມີຕີນ, ປົກກະຕິ ຕີນຈະຍາວກວ່າເສົາເກສອນເອງ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ສີຣລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ນິວຊີແລັນ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງເກາະຕາຮີຕີ. ປະມານ 900 ຊະນິດ; 153 ຊະນິດຢູ່ໄທ, 68 ຊະນິດຢູ່ລາວ, 22 ຊະນິດຢູ່ກຳປູເຈຍ, 94 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ປ່າປ່ຽນໃບ ຫຼື ປ່າຂຽວຕະຫຼອດປີ ໃນເຂດຕ່ຳ ຫຼື ເຂດພູສູງ. ຍັງພົບບາງຊະນິດເກີດຢູ່ດິນໃນເຂດດິນຫານສັບປົນກັບພືດອື່ນແບບຫ່າງໆ.

ຂໍ້ຄວນເອົາໃຈໃສ່: ບໍ່ມີດອກເຜົ້ງສະກຸນອື່ນໃນເຂດທີ່ປົ້ມເຫຼັ້ມນີ້ເວົ້າເຖິງທີ່ຮີບໂຮມເອົາຊະນິດທີ່ໃຊ້ປະດັບຫຼາຍເທົ່າກັບສະກຸນ *Dendrobium* ນີ້. ສະກຸນໃຫຍ່ນີ້ໄດ້ແບ່ງອອກເປັນຫຼາຍກ່ອ 40 ກຸ່ມ. ຢູ່ໃນເອເຊຍຕາເວັນອອກສ່ຽງໃຕ້, ຊະນິດທີ່ສະດຸດຕາສ່ວນຫຼາຍນອນຢູ່ໃນກຸ່ມ *Dendrobium* (ຕົວຢ່າງ: *D. parishii* Rchb.f.), ກຸ່ມ *Callista* (ຕົວຢ່າງ: *D. chrysotoxum* Lindl.) ແລະກຸ່ມ *Formosae* (ຕົວຢ່າງ: *D. infundibulum* Lindl.). ດອກເຜົ້ງໃນສະກຸນ *Dendrobium* ສີມ້ວງອົມສີແດງຊ້ຳ ຈຳນວນເປັນລ້ານໆທີ່ຖືກຜລິດແບບອຸດສະຫະກຳຢູ່ໄທ ແລະສິງກະໂປ, ແລະ ປະດັບຢູ່ໂຮງແຮມ ແລະ ຮ້ານອາຫານຢູ່ໃນເອເຊຍຕາເວັນອອກສ່ຽງໃຕ້ ແມ່ນພັນຊອດຂອງຊະນິດທີ່ມີຖິ່ນກຳເນີດຢູ່ນິວກີເນຍ ແລະ ອິດສະເຕເລຍ. ປະຈຸບັນ, ຫຼາຍໆຊະນິດຂອງ *Dendrobium* ແມ່ນເລີ້ມຫາຍາກແລ້ວໃນທຳມະຊາດເພາະຖືກເກັບກາຍຂອບເຂດ ແລະ ສິ່ງແວດລ້ອມແບບທຳມະຊາດຂອງມັນກໍຖືກທຳລາຍໄປເຊັ່ນດຽວ.

ສະກຸນ **Dendrochilum** Blume — *

ພືດອາໃສບ່ອນຄ້ຳ ຫຼື ມີຊະນິດເກີດຢູ່ດິນແຕ່ຫາຍາກ, ມີລຳເລືອສັ້ນ ຫາ ຍາວ, ມີກາບເຕີບໃຫຍ່ຢູ່ດ້ານຂ້າງ. ຫົວປອມມີປ້ອງ 1 ປ້ອງ, ໃບ 1 ໃບ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ບາງຄັ້ງໃບພັບເປັນກີບໆ ຫຼື ເປັນທ່ອນກົມ ກໍແມ່ນຫາຍາກ (ມີແຕ່ຢູ່ຟີລິບປິນ), ສັບປ່ຽນຕາມລະດູກາມ, ມ້ວນເຂົ້າກັນຕາມລວງຍາວ ຫຼື ພັບເຂົ້າກັນເອລາ ຍັງຈຸມຢູ່. ຊໍ່ດອກອອກທາງຂ້າງຢູ່ລຸ່ມຂອງຫົວປອມ (ເຣເຕຣັງເທີສ) ຫຼື ອອກຢູ່ປາຍຂອງໜໍ່ອ່ອນ (ຊີນັງເທີສ), ເປັນປະເພດພໍ້ອມີດອກຈຳນວນໜ້ອຍ ຫາໝາຍ, ດອກຈັດລຽງເປັນ 2 ແຖວ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ປົກກະຕິ ດອກອອກສີຂຽວ, ສີເຫຼືອງ ຫຼື ສີເຂຍ. ປົກກະຕິ ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງໄດ້ ຫຼື ບໍ່. ເສົາເກສອນມີແໜງຂ້າງ 2 ແໜງເລື້ອຍໆ. ຕີນເສົາເກສອນບໍ່ມີ ຫຼື ວ່າມີ ກໍ່ສັ້ນ. ກຸ່ມເມັດລະອອງ ຈຳນວນ 4 ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວີຊິດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 280 ຊະນິດ; 2 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ແລະຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳເກີດຢູ່ໃນປ່າຂຽວຕະຫຼອດປີເຂດຕ່ຳ ແລະປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Coelogyne* ; ຕົວແທນຂອງສະກຸນນີ້ມີໜ້ອຍໃນເຂດນີ້. ມັນເປັນພືດອາໃສບ່ອນຄ້ຳທີ່ມີດອກເປັນພໍ້ສັ້ນໆ, ດອກຂະໜາດນ້ອຍສີຂຽວຈືດຈັດລຽງເປັນ 2 ແຖວ. ບາງຊະນິດຂອງສະກຸນນີ້ຊຶ່ງມີຢູ່ເຂດອື່ນເປັນຊະນິດທີ່ຈັບໃຈໝາຍກວ່າເຖິງວ່າດອກຈະມີຂະໜາດນ້ອຍກໍ່ຕາມ.

ສະກຸນ **Didymoplexiella** Garay

ຊື່ພ້ອງ: ສະກຸນ *Leucolaena* Ridl.

ພືດບໍ່ມີໃບ ເກີດຢູ່ດິນ, ຊໍ່ດອກປົ່ງອອກຈາກຫົວຄ້າຍລຳເລືອໃຕ້ດິນ, ເປັນພໍ້ອມີໝາຍດອກ. ດອກບານເປັນລຳດັບຕາມໆກັນ, ມີຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ປົກກະຕິ ດອກອອກສີເຂຍ ຫຼື ອອກສີກຸໝາບ, ກີບດອກຮູບຮີມສົບມີສີຂາວ. ກາບດອກ ແລະກີບດອກເຊື່ອມຕິດຊຶ່ງກັນເຄິ່ງໜຶ່ງຂອງລວງຍາວຢ່າງຕ່ຳ, ຍົກເວັ້ນກາບດອກດ້ານຂ້າງ ຊຶ່ງເຊື່ອມຕິດກັນກັບກີບດອກຢູ່ຕີນເທົ່ານັ້ນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ຮອງຮັບຢູ່ໃກ້ກັບປາຍຂອງເສົາເກສອນ. ຕີນເສົາເກສອນສັ້ນໝາຍ ຫຼື ວ່າບໍ່ມີຕີນຊ້ຳ. ກຸ່ມເມັດລະອອງຈຳນວນ 4, ອ່ອນນຸ້ມ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວີຊິດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ຍີ່ປຸ່ນ, ມາເລເຊຍ, ຊຸມາຕຼາ, ບອກເນໂອ. ປະມານ 5 ຊະນິດ; 2 ຊະນິດຢູ່ໄທ, ສ່ວນຢູ່ລາວ,ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ໃກ້ຄຽງກັບສະກຸນ *Didymoplexis* ແຕ່ມັນແຕກຕ່າງຍ້ອນເສົາເກສອນມີຕີ່ງທີ່ເປັນທີ່ສັງເກດໝາຍ. ບໍ່ໄດ້ມີການນຳເອົາສະກຸນນີ້ໄປປູກ.

ສະກຸນ **Didymoplexiopsis** Seidenf. — *

ພືດເກີດຢູ່ດິນ, ຂາດທາດກລໍ່ລ໋ຟິນ. ຊໍ່ດອກເປັນພໍ້ອມີດອກ 4 ຫາ 10 ດອກ, ປົ່ງຂຶ້ນແຕ່ລຳເລືອໃຕ້ດິນ ຄ້າຍຄືຫົວ. ດອກບານເປັນລຳດັບຕາມໆກັນ. ມີຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ມີສີຂາວ, ກີບດອກຮູບຮີມສົບມີເສັ້ນ ສີແດງ ຫຼື (ສີກະເບົາ?). ກາບດອກ ແລະກີບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ຮອງຮັບຢູ່ໃກ້ປາຍເສົາເກສອນ. ຕີນເສົາເກສອນຍາວໝາຍ. ບໍ່ໄດ້ມີການພັນລະນາກຸ່ມເມັດລະອອງ ໃນທີ່ນີ້.

ການແຈກຢາຍ: ມີຢູ່ໄທ, ຢູ່ຫວຽດນາມ. 1 ຊະນິດ (*D. khiriwongensis*); ຍັງບໍ່ທັນໄດ້ເກັບກຳຢູ່ລາວ ຫຼື ກຳປູເຈຍ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າເທິງພູ (ຄວາມສູງ 800–1.000ມ).

ຂໍ້ຄວນເອົາໃຈໃສ່: ສະກຸນ *Didymoplexiopsis* ແມ່ນສະກຸນທີ່ມີລັກສະນະປະສົມປະສານ ລະຫວ່າງລັກສະນະຂອງສະກຸນ *Didymoplexis* ແລະ ສະກຸນ *Didymoplexiella* ແຕ່ມັນຕ່າງຈາກທັງ 2 ສະກຸນນີ້ດ້ວຍ ການດອກ ແລະກີບດອກແຍກກັນ. ດັ່ງນັ້ນ, ອາດເປັນສິ່ງທີ່ດີ ທີ່ຈະລວມເອົາທັງ 3 ສະກຸນນີ້ເຂົ້າກັນ. ບໍ່ໄດ້ມີການນຳເອົາສະກຸນນີ້ໄປປູກເລີຍ.

ສະກຸນ **Didymoplexis** Griff.

ພືດບໍ່ມີໃບ, ເກີດຢູ່ດິນ. ຊໍ່ດອກປົ່ງອອກຈາກລຳເລືອໃຕ້ດິນຄ້າຍຄືກັບຫົວ, ເປັນປະເພດພົ້ວຖີ່ດອກຈຳນວນໜ້ອຍ ຫາໜາຍ. ດອກບານເປັນລຳດັບຕາມໆກັນ, ດອກຂະໜາດນ້ອຍຢູ່ໃນທ່າປົ້ນ, ປົກກະຕິ ດອກອອກສີກະເບົາ ຫຼື ສີຂາວ. ການດອກ ແລະ ກີບດອກເຊື່ອມຕິດຊຶ່ງກັນ ແລະກັນ ຢ່າງຕ່ຳເຄິ່ງໜຶ່ງຂອງລວຍຍາວ, ຍົກເວັ້ນການດອກດ້ານຂ້າງຊຶ່ງເຊື່ອມຕິດກັບກີບດອກຢູ່ລະດັບຕີນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ຮອງຮັບຈັບຢູ່ໃກ້ປາຍຂອງເສົາເກສອນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ອ່ອນນຸ້ມ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ອາຟຼິກາພາກໃຕ້ ແລະ ພາກຕາເວັນອອກ, ມາດາກັດສະກາ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງໝູ່ເກາະຊາມົວ. ປະມານ 10 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນໃນປ່າຕົບເຂດຕ່ຳ, ບາງຄັ້ງກໍ່ເກີດຢູ່ໃນສຸມໄຜ່.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນໃກ້ຄຽງກັບສະກຸນ *Didymoplexiella* ແຕ່ຕີນເສົາເກສອນຂອງສະກຸນ *Didymoplexiella* ຈະແຈ້ງກວ່າ. ເພິ່ນມັກຫຼົງສະກຸນນີ້ກັບສະກຸນ *Gastrodia*. ບໍ່ໄດ້ມີການນຳເອົາມາປູກ ແຕ່ບາງຄັ້ງ ກໍ່ເກີດເອງໃນສວນພືດສາດໃນເຂດນີ້.

ສະກຸນ **Diglyphosa** Blume — *

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ມີລຳເລືອສັ້ນ. ຫົວປອມມີປ້ອງ 1 ປ້ອງ, ຮຽວໆ, ມີໃບ 1 ໃບ. ໃບບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວຍຍາວເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນປະເພດພົ້ວມີດອກຈຳນວນໜ້ອຍ ຫຼື ໜາຍດອກ (ຫຼື ວ່າຊໍ່ດອກປະເພດຊໍ່ແຕກແໜງ ແມ່ນຫາຍາກທີ່ສຸດ), ຊໍ່ດອກປົ່ງຂຶ້ນແຕ່ລຸ່ມ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ ແລະ ບໍ່ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ພາກຕາເວັນອອກສ່ຽງເໜືອຂອງອິນເດຍ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ. 2 ຊະນິດ; 1 ຊະນິດຢູ່ຫວຽດນາມ [ຊະນິດທີ່ເກີດສະເພາະຢູ່ບ່ອນນີ້ ແມ່ນ: *D. evrardii* (Gagnep.) Tanz & Wang], ສ່ວນຢູ່ໄທ, ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຫາຍາກທີ່ສຸດໃນເຂດເຮົາ, ມັນໃກ້ຄຽງກັບສະກຸນ *Chrysoglossum*, ຊຶ່ງມັນແຕກຕ່າງຢູ່ບ່ອນວ່າຕີນເສົາເກສອນບໍ່ມີເດືອຍໃນບັນດາຈຸດແຕກຕ່າງອັນອື່ນອີກ.

ສະກຸນ **Dilochia** Lindl.

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ ຫຼື ອາໃສບ່ອນຄ້ຳ, ມີລຳເລືອສັ້ນຫຼາຍ. ລຳຕົ້ນຮຽວ, ສ່ວນຫຼາຍສູງ, ບໍ່ມີງ່າ, ບໍ່ມຸກ, ມີໃບຈຳນວນຫຼາຍ. ໃບມີການຫຸ້ມຢູ່ຕີນ, ຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ວ ຫຼືເປັນຊໍ່ແຕກແໜງ, ບາງຄັ້ງກໍ່ມີດອກດ່ຽວ, ອອກຈາກງ່ຳແກ່. ດອກຂະໜາດກາງ ຫາໃຫຍ່, ຢູ່ໃນທ່ຳປີ້ນ, ສະດຸດຕາພໍຄວນ. ການດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂ໋ງ, ມີກ້ານ, ເຕົ້ຳໄຂ່ບໍ່ມີກ້ານ ແລະ ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 6 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ຫວຽດນາມ ແລະ ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ປົກກະຕິ ເປັນພືດເກີດຢູ່ດິນ, ບ່ອນດິນຈືດ ແລະ ມີປ່ຳຕົ້ນໄມ້ນ້ອຍ ແລະ ບ່ອນເປີ່ອມທີ່ມີດິນຈືດ, ຊະນິດອາໃສຄ້ຳໃສ່ຕົ້ນໄມ້ໃຫຍ່ກໍ່ມີໃນເຂດຕ່ຳ ແລະປ່ຳເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນພືດຄ້າຍຄືກັບສະກຸນ *Arundina*, ແຕ່ດອກບໍ່ມີກີບດອກຮູບຮີມສົບຫຸ້ມເອົາເສົາເກສອນ, ຢ່ຳໆໜ້ອຍກໍແມ່ນກຳລະນີ ຊະນິດທີ່ເກີດຢູ່ໄທ; ດອກຂອງສະກຸນ *Dilochia* ບໍ່ບານເທື່ອລະດອກ ແຕ່ມັນກໍ່ກຸ້ມດິນກວ່ຳ. ການນຳເອົຳໄປປູກ ແມ່ນຫຳຍຳກ.

ສະກຸນ **Diplomeris** D.Don

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້ຳງ, ມີຫົວໃຕ້ດິນ. ລຳຕົ້ນສັ້ນ, ມີໃບ 1 ໃບ ຫຼື ຈຳນວນບໍ່ຫຼາຍປານໃດ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກທ້ຳງປາຍ, ເປັນພົ້ວ ຖືດອກບໍ່ຫຼາຍ ຫາດອກດ່ຽວ. ດອກອ່ຳວໃຫຍ່, ຢູ່ໃນທ່ຳປີ້ນ, ສີຂຳວ. ການດອກແຍກກັນ. ກີບດອກກວ້ຳງກວ່ຳການດອກ. ກີບດອກຮູບຮີມສົບມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່ຳໄດ້, ມີກ້ານ, ເຕົ້ຳໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ລິ້ນຂອງຮອງຮັບໃຫຍ່, ເປັນຮູບອານມ້ຳ ແລະ ກ້ຳງໄປຂ້ຳງເທິງ. ຮອງຮັບແບ່ງເປັນ 2 ບ້ຶງແຍກກັນຫ່ຳງໆ, ແຕ່ລະບ້ຶງຈັບຢູ່ປາຍຂອງກ້ານ ຊຶ່ງບໍ່ຕິດກັບກີບດອກຮູບຮີມສົບເລີຍ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ມ່ຽນມ້ຳ, ຈີນ, ວຽດນາມ. ປະມານ 5 ຊະນິດ; 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ໄທ, ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່ຳເປີດເຂດພູສູງ, ໂດຍສະເພາະຢູ່ຕາມໜ້ຳຂອງໂງ່ນຫີນ ທີ່ຢູ່ຮິ່ມ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນຂອງດອກເຜົ້ງທີ່ຫຳຍຳກ ແລະ ງຳມຫຼາຍ, ມີດອກໃຫຍ່ສີຂຳວ. ມັນໃກ້ຄຽງກັບສະກຸນ *Habenaria* ຊຶ່ງມັນຕ່ຳງຍ້ອນ ກີບດອກກວ້ຳງກວ່ຳການດອກ. ການນຳເອົຳໄປປູກແມ່ນຫຳຍຳກທີ່ສຸດ.

ສະກຸນ **Diploprora** Hook.f. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ. ໃບບໍ່ຫຼາຍປານໃດ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທ້ຳງຂ້ຳງ, ເປັນພົ້ວ ຖືດອກບໍ່ຫຼາຍປານໃດ. ດອກນ້ອຍ, ຈຳນວນໜ້ອຍໜຶ່ງບານເວລາດຽວກັນ ແລະ ເປັນລຳດັບຕາມໆກັນ, ຢູ່ໃນທ່ຳປີ້ນ. ການດອກແຍກກັນ. ກີບດອກຮູບຮີມສົບເຊື່ອມຕິດກັບເສົາເກສອນຢ່ຳງແໜ້ນ, ບໍ່ມີເດືອຍ, ອ້ຳລີງຢູ່ທີ່ຕີນກີບດອກນີ້, ສ່ວນປາຍຍາວ ແລະແຄບ, ຢູ່ປາຍສຸດເປັນແງ່ມຄືສ້ອມ ຫຼື ອ່ຳເປັນຮູບບ່ວງ. ເສົາເກສອນບໍ່ມີ

ຕົ້ນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນປານໃດ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍ ແຜ່ນດິນໃຫຍ່ເຂດຮ້ອນ (ບໍ່ນັບແຫຼມມາເລເຊຍ), ໄຕ້ຫວັນ. 2 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ແລະ ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນໜຶ່ງໃນຫຼາຍໆສະກຸນ ທີ່ໃກ້ຄຽງກັບສະກຸນ *Cleisostoma*, ແຕ່ກີບດອກຮູບຮີມສົບມີລັກສະນະສະເພາະຍ້ອນບໍ່ມີເດືອຍເໝືອນດັ່ງໃນຫຼາຍສະກຸນອື່ນ ທີ່ຢູ່ໃນເຄືອຂ່າຍນີ້. ມັນບໍ່ເປັນທີ່ໃຫ້ຄວາມສົນໃຈທາງດ້ານປະດັບເລີຍ.

ສະກຸນ **Dipodium** R.Br. — *

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ ຫຼື ດ້ານປາຍ. ລຳຕົ້ນສັ້ນ ຫາ ຍາວ, ແຕ່ບາງຄັ້ງກໍ່ເລືອຂຶ້ນແບບກ້ຽວກົ້ນຫອຍ, ລຳຕົ້ນບໍ່ມຸກ, ໃບມີຈຳນວນຫຼາຍ (ໃນບາງເຂດ, ຕົວຢ່າງ: ອິດສະເຕເລຍ ແລະ ນິວກີເນຍ, ໄດ້ມີການພົບຊະນິດທີ່ບໍ່ມີໃບ ແລະ ບໍ່ມີລຳຕົ້ນຫາວຂຶ້ນ). ໃບມີການຫຸ້ມຢູ່ຕົ້ນ,ຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈຸມຢູ່, ໃບແຄບ. ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ວ, ມີດອກຈຳນວນຫຼາຍພໍປະມານ. ດອກຂະໜາດກາງ ຫາໃຫຍ່, ຢູ່ໃນທ່າປົ້ນ, ສີໄຂ່ ມີຈຸດສີກະເບົາ ຫຼື ສີມ້ວງ. ຈຸດນັ້ນໆອອກສີເຂັ້ມຢູ່ດ້ານນອກຂອງການດອກ ແລະ ກີບດອກ ຫຼາຍກວ່າດ້ານໃນ. ການດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ຢູ່ກາງມີສັນທີ່ມີຂົນຫຸ້ມ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຕກແຍ່ງ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານເປັນຮູບ Y, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ປາເລົາ, ໝູ່ເກາະໂຊໂລມົງ, ວານົວຕູ, ນິວກາເລໂດເນຍ. ປະມານ 20 ຊະນິດ; 1 ຊະນິດ [ຊະນິດ *D. paludosum* (Griff.) Rchb.f.] ພົບຢູ່ໄທ, ຢູ່ກຳປູເຈຍ ແລະຫວຽດນາມ, ສ່ວນຢູ່ລາວ ຍັງບໍ່ໄດ້ເກັບກຳ.

ນິເວດ: ເກີດໃນປ່າໂຄກຢູ່ພື້ນທີ່ດິນຫາມປະເພດຊຸດໂຊມຂອງເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນໃກ້ຄຽງກັບສະກຸນ *Cymbidium*, ຈຳແນກໄດ້ງ່າຍຍ້ອນດອກມີຈຸດຊຶ່ງເມື່ອຢູ່ຂ້າງໃນຂອງດອກ ມີສີຈືດກວ່າຢູ່ຂ້າງນອກ ແລະ ກີບດອກຮູບຮີມສົບມີຂົນ ແລະ ກີບດອກປ່ຽງຂ້າງກໍ່ມີຂະໜາດນ້ອຍ ແລະ ມີຂົນຢູ່ຕາມຕີນ. ບໍ່ໄດ້ມີການນຳເອົາໄປປູກເລື້ອຍພໍປານໃດ.

ສະກຸນ **Disperis** Sw.

ພືດເກີດຢູ່ດິນຂະໜາດນ້ອຍ, ມີຫົວໃຕ້ດິນ. ລຳຕົ້ນມີໃບ 1 ຫຼື 2 ໃບ. ໃບບໍ່ມີການຫຸ້ມຢູ່ຕົ້ນ, ເກືອບວ່າຈັບພາບກັນ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເອລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ວມີດອກບໍ່ຫຼາຍປານໃດ ຫຼືວ່າມີດອກດ່ຽວ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ. ການດອກແຍກກັນ, ການດອກດ້ານຂ້າງມີເດືອຍ. ກີບດອກຮູບຮີມສົບບໍ່ມີເດືອຍ, ສ່ວນກົກຂອງກີບດອກເຊື່ອມຕິດກັບເສົາເກສອນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອາຟຼິກາເຂດຮ້ອນ ແລະ ພາກໃຕ້, ມາດາກັດສະກາ, ມັດສະກາແຮນ, ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ການໂຣລິນ. ປະມານ 75 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ມີລັກສະນະສະເພາະເດັ່ນໃນຈຳນວນດອກເຜົ້ງທີ່ເກີດຢູ່ດິນ, ມັນເປັນສະກຸນດຽວ ຊຶ່ງກາບດອກດ້ານຂ້າງມີເດືອຍ ແລະມີໂຄງສ້າງສັບສົນຫຼາຍ ຍ້ອນກີບດອກຮູບຮີມສົບ ແລະ ເສົາເກສອນ. ຊະນິດຂອງສະກຸນ *Disperis* ທີ່ເກີດຢູ່ເອເຊຍ ປະກົດວ່າຫາຍາກພໍສົມຄວນໃນທຳມະຊາດ ແລະກໍ່ບໍ່ມີໃຜຮູ້ຈັກເລີຍໃນດ້ານການນຳເອົາໄປປູກ.

ສະກຸນ **Doritis** Lindl. — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານປາຍ ຫຼື ເກີດຢູ່ຫີນ. ລຳຕົ້ນສັ້ນໆ, ຕັ້ງຊັນຂຶ້ນ. ໃບບໍ່ຫຼາຍ, ມີການຫຸ້ມຢູ່ຕົ້ນ, ຈັດລຽງເປັນ 2 ແຖວ, ໃບກວ້າງ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງຈາກລຳຕົ້ນ, ເປັນພົ້ວ ຕັ້ງຊັນຂຶ້ນ, ຖືດອກຈຳນວນຫຼາຍ, ບາງຄັ້ງກໍ່ແມ່ນຊໍ່ແຕກແໜງ. ດອກບານເວລາດຽວກັນ ມີຈຳນວນບໍ່ຫຼາຍ, ດອກຂະໜາດກາງ, ຢູ່ໃນທ່າປົ້ນ, ສະດຸດຕາ, ມີສີອິດແກມສີແດງ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງເປັນ 5 ປ່ຽງ, ສ່ວນກົກຂອງ 2 ປ່ຽງຂ້າງແຄບໆ ຄ້າຍຄືກັນກັບອັງແຕນ. ເສົາເກສອນມີຕີນໃຫຍ່. ກຸ່ມເມັດລະອອງຈຳນວນ 4, ຈັດເປັນ 2 ຄູ່, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ອິນໂດເນເຊຍ, ບອກເນວ. 2 ຊະນິດ; 1 ຫຼື 2 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 1 ຫຼື 2 ຊະນິດຢູ່ຫວຽດນາມ.

ນິເວດ: ພືດເກີດຢູ່ດິນ ຫຼື ຢູ່ຫີນ ໃນປ່າໂຄກ ແລະ ປ່າຄັງ.

ຂໍ້ຄວນເອົາໃຈໃສ່: ດອກເຜົ້ງ ທີ່ຄົນຄຸ້ນເຄີຍສະກຸນນີ້ ໃກ້ຄຽງກັບສະກຸນ *Phalaenopsis* ຫຼາຍ ແລະ ໄດ້ມີການຜະລິດພັນຊອດຫຼາຍພັນ ລະຫວ່າງ 2 ສະກຸນນີ້ແລ້ວ.

ສະກຸນ **Drymoda** Lindl. — *

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລື້ອສັ້ນ. ຫົວປອມຈຸ້ມກັນຖີ່ໆ, ມີປ້ອງ 1 ປ້ອງ, ມີໃບ 1 ໃບຈັບຢູ່ປາຍ, ມີເກັດຫີນປູນຢູ່ນຳເວລາມັນຍັງອ່ອນ. ໃບມີອາຍຸສັ້ນ, ບໍ່ທັນປ່ຳ ເວລາອອກດອກ, ບໍ່ມີກາບຫຸ້ມ ຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນ ຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກປ່ຳຂຶ້ນແຕ່ລຸ່ມຕົ້ນ, ຖືດອກດ່ຽວ. ດອກຂະໜາດນ້ອຍ, ແຕ່ຖ້າທຽບໃສ່ຂະໜາດຂອງຕົ້ນເອງຖືວ່າແມ່ນດອກໃຫຍ່ຢູ່, ຢູ່ໃນທ່າປົ້ນ. ກາບດອກແຍກກັນ, ຈັບຢູ່ປາຍ ຂອງຕີນເສົາເກສອນ. ກີບດອກຕ່າງຈາກກາບດອກຫຼາຍ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງໄດ້ຫຼາຍ. ຕີນເສົາເກສອນຍາວຫຼາຍ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ມຽນມ້າ, ໄທ, ລາວ. 2 ຊະນິດ; 2 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, ສ່ວນຢູ່ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Bulbophyllum*, ມີຊໍ່ດອກ ທີ່ຖືດອກດ່ຽວ, ດອກມີຈຸດພິເສດບ່ອນກາບດອກຂ້າງ ຈັບຢູ່ປາຍຂອງຕີນເສົາເກສອນທີ່ຍາວຫຼາຍ. ເປັນພືດນ້ອຍໆ, ບາງຄັ້ງກໍ່ມີການນຳເອົາໄປປູກຍ້ອນມັນແປກ.

ສະກຸນ **Eparmatostigma** Garay

ພືດອາໃສບ່ອນຄ້ໍ ທີ່ມີກາບເຕີບໃຫຍ່ດ້ານປາຍ. ໃບຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວດີກຍ່ອນລີງ, ຖືດອກຈຳນວນໜາຍ. ດອກນ້ອຍ, ຢູ່ໃນທ່າປົ້ນ, ມັກອອກສີເຫຼືອງ ອົມສີຂາວ. ກາບດອກແຍກກັນ. ກີບດອກຮູບຮົມສົບເຊື່ອມຕິດກັບເສົາເກສອນ, ມີເດືອຍ, ເດືອຍຢູ່ຂ້າງໃນ ບໍ່ມີຮອຍດ້ານ. ເສົາເກສອນບໍ່ມີຕີນ. ລິ້ນຂອງຮອງຮັບດູນຂຶ້ນ, ແປເຂົ້າດ້ານຂ້າງ. ກຸ່ມເມັດລະອອງຈຳນວນ 2 , ມີຮູນ້ອຍໆ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບແບນອກຄ້າຍຄືກັບປາກຂອງພູໄຟນ້ອຍໆ.

ກາບແຈກຢາຍ: ພົບຢູ່ທວງດນາມ. 1 ຊະນິດ, ພົບແຕ່ຢູ່ທວງດນາມເທົ່ານັ້ນ.

ນິເວດ: ບໍ່ຮູ້ຈັກ

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຍັງຂາດຂໍ້ມູນຢູ່, ດອກນ້ອຍ, ເບິ່ງຜິວເຜີນຄ້າຍຄືກັບສະກຸນ *Malleola* ຊຶ່ງມັນແຕກຕ່າງຍ້ອນໂຄງສ້າງບໍ່ທຳມະດາຂອງເສົາເກສອນ, ຈຸດແຕກຕ່າງນີ້ກ່ຳນອນໃນຈຸດແຕກຕ່າງອັນອື່ນໆໜາຍຢ່າງ. ໄດ້ພົບບັນດາຊະນິດຂອງສະກຸນ *Eparmatostigma* ຫວ່າງບໍ່ດົນມານີ້ເທົ່ານັ້ນ ແລະ ປະກົດວ່າບໍ່ໄດ້ມີກາບນຳເອົາໄປປູກເລີຍ.

ສະກຸນ **Epigeneium** Gagnep. — *

ຊື່ພ້ອງ: ສະກຸນ *Sarcopodium* Lindl.

ພືດອາໃສບ່ອນຄ້ໍ, ມີກາບເຕີບໃຫຍ່ດ້ານຂ້າງ, ລຳເລື້ອຍາວ. ຫົວປອມປະກອບມີ 1 ປ້ອງ, ຖືໃບຈຳນວນ 1 ຫາ 3 ໃບ, ຈັບຢູ່ປາຍ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ວຖືດອກຈຳນວນໜ້ອຍຫາບໍ່ໜາຍດອກປານໃດ ຫຼື ມີດອກດ່ຽວ. ໃບຊ້ອນດອກສັ້ນ, ມີຕະໜອດ. ດອກຂະໜາດນ້ອຍຫາໃຫຍ່, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮົມສົບບໍ່ມີເດືອຍ, ເໜັ້ງບໍ່ໄດ້. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ກາບແຈກຢາຍ: ພົບຢູ່ພາກເໜືອຂອງອິນເດຍ, ເນປານ, ເອເຊຍຕາເວັນອອກສ່ຽງໃຕ້ສ່ວນແຜ່ນດິນໃຫຍ່, ມາເລເຊຍ, ຊຸມາຕຼາ, ຊາວາ, ບອກເນວ, ຟີລິບປິນ. ປະມານ 30 ຊະນິດ; 2 ຊະນິດພົບຢູ່ໄທ, 1 ຊະນິດຢູ່ລາວ, 6 ຊະນິດຢູ່ທວງດນາມ, ສ່ວນກຳປູເຈຍຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ໍ ເກີດຢູ່ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ມີສາຍພົວພັນໃກ້ໆກັບສະກຸນ *Dendrobium* ແລະ ສະກຸນ *Flickingeria* ຊຶ່ງມີລັກສະນະສະເພາະຢູ່ທີ່ລຳເລື້ອ ເລື້ອຕາມໜ້າດິນ ແລະ ຫົວປອມກ່ໍມີແຕ່ 1 ປ້ອງເທົ່ານັ້ນ. ດອກມີອາຍຸຍາວກວ່າໃນສະກຸນ *Flickingeria*. ບາງຊະນິດຂອງສະກຸນ *Epigeneium* ຄ້າຍຄືກັບບັນດາຊະນິດຂອງສະກຸນ *Coelogyne* ຫຼາຍ, ແຕ່ມັນແຕກຕ່າງຈາກສະກຸນ *Coelogyne* ດ້ວຍໃບຊ້ອນດອກມີຂະໜາດນ້ອຍໆ ແລະ ບໍ່ລົ່ນໄວ, ດ້ວຍເສົາເກສອນບໍ່ແປ ແລະ ດ້ວຍກຸ່ມເມັດລະອອງບໍ່ມີກ້ານ. ປົກກະຕິ ດອກບໍ່ມີສີຮຸ່ງແຕ່ກ່ໍຍັງເປັນໜ້າຈັບໃຈຢູ່; ໄດ້ມີກາບນຳເອົາບາງຊະນິດໄປປູກເລ້ືອຍຢູ່.

ສະກຸນ **Epipactis** Zinn. — *

ພືດເກີດຢູ່ດິນ ມີການຂະຫຍາຍຕົວດ້ານຂ້າງ, ລຳເລື້ອໃຕ້ດິນ. ລຳຕົ້ນຍາວ, ມີໃບບໍ່ໜາຍປານໃດ, ໃບຈັດລຽງເກືອບແມ່ນຕາມແບບກ້ຽວກົ້ນຫອຍ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະໜອດ, ມ້ວນເຂົ້າ

ກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກເປັນພົ້ວ ຖືດອກຈຳນວນບໍ່ຫຼາຍ ຫາຫຼາຍດອກ. ດອກຂະໜາດ ນ້ອຍ ຫາ ຂະໜາດກາງ, ຢູ່ໃນທ່າປົ້ນ, ປົກກະຕິ ຈະປົ່ນໄປດ້ານດຽວກັນໝົດ. ກາບດອກແຍກກັນ. ກີບດອກຮູບ ຮີມສົບ ບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງເປັນສ່ວນກົກທີ່ມີປ່ຽງຂ້າງ ຫຼື ບໍ່ມີ ແລະ ສ່ວນປາຍຮາບພຽງ ຫຼື ສອດ; ສ່ວນ ປາຍບໍ່ແບ່ງເປັນປ່ຽງ ແລະ ມັກມີຮອຍດ້ານ. ເສົາເກສອນບໍ່ມີຕີນ, ກຸ່ມເມັດລະອອງຈຳນວນ 2, ອ່ອນນຸ້ມ, ມີ ກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອາຟຼິກາເຂດຮ້ອນ ແລະ ອາຟຼິກາພາກໃຕ້, ຢູຣົບ, ອາເມຣິກາເໜືອ, ເອເຊຍເຂດ ອົບອຸ່ນ, ຮີມາລາຢາ, ເອເຊຍຕາເວັນອອກສ່ຽງໃຕ້. ປະມານ 25 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະ ນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າ ເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຄົນຮູ້ດີໃນເຂດອົບອຸ່ນ ຂອງ ຊີກໂລກເໜືອ, ແຕ່ບໍ່ມີທົ່ວໄປໃນເອເຊຍຕາ ເວັນອອກສ່ຽງໃຕ້. ບັນດາຊະນິດຂອງສະກຸນນີ້ທີ່ເກີດໃນເຂດຮ້ອນໃກ້ຄຽງກັບສະກຸນ *Cephalanthera*, ບໍ່ເປັນ ທີ່ໜ້າຈັບໃຈຫຼາຍພໍປານໃດ ແລະ ກໍ່ບໍ່ໄດ້ມີການນຳເອົາໄປປູກ ຍົກເວັ້ນ ໃນ 1 ຫຼື 2 ຊຸດສະສົມວິທະຍາສາດເທົ່າ ນັ້ນ.

ສະກຸນ **Epipogium** R.Br. — *

ພືດບໍ່ມີໃບ, ເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອຄ້າຍຄືຫົວ ຫຼື ຄ້າຍຄືປາກະລັງ. ຊໍ່ດອກມີດອກຈຳ ນວນຫຼາຍຈັດເປັນພົ້ວ (ຢູ່ນອກເຂດເອເຊຍເຂດຮ້ອນ ຊໍ່ດອກຖືດອກ ຈຳນວນ 1ດອກ ຫາ ບໍ່ຫຼາຍດອກປານໃດ). ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ ຫຼື ບໍ່, ອອກສີເຫຼືອງ ຫຼື ສີຂາວ, ມີອາຍຸສັ້ນ. ການດອກແຍກກັນ. ກີບດອກຮູບ ຮີມສົບມີເດືອຍ (ແຕ່ຮູບຜິດປົກກະຕິທີ່ບໍ່ແມ່ນຮູບເດືອຍກໍໄດ້ເກັບກຳມາເຊັ່ນດຽວ), ເໜັງບໍ່ໄດ້. ເສົາເກສອນບໍ່ມີ ຕີນ. ກຸ່ມເມັດລະອອງຈຳນວນ 2, ເປັນເມັດນ້ອຍໆ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈຍຢາຍ: ພົບຢູ່ອາຟຼິກາເຂດຮ້ອນ, ຢູຣົບ, ເອເຊຍແຜ່ນດິນໃຫຍ່, ມາເລເຊຍ, ອິນໂດເນເຊຍ, ຟີລິ ປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະໂຊໂລມົງ, ວານົວຕູ, ຕາເວັນອອກຂອງໝູ່ເກາະຟີຊີ. 3 ຊະນິດ; 1 ຊະນິດ ຄືຊະນິດ *E. roseum* (D.Don) Lindl. ເກີດຢ່າງກ້ວາງຂວາງ ຢູ່ໄທ, ລາວ ແລະ ຫວຽດນາມ, ສ່ວນ ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ ແຕ່ແນ່ນອນວ່າມີດອກເຜົ້ງໃນສະກຸນນີ້ຢູ່.

ນິເວດ: ເປັນພືດເກີດຢູ່ດິນໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ມີແຕ່ຊະນິດ *Epipogium roseum* ຊະນິດດຽວທີ່ເກີດໃນເຂດເຮົາ; ຊະນິດນີ້ປະກົດໃຫ້ ເຫັນ ແລະ ມະຫັບມະຫາຍໄປໄວຈາ ຈົນສາມາດສົມທຽບກັບພວກເຫັດໄດ້. ຊໍ່ດອກບໍ່ເປັນທີ່ຮູ້ຈັກ, ຕົ້ນ ອອກດອກ, ອອກໝາກ ແລະ ຕາຍພາຍໃນອາທິດເລີຍ. ບໍ່ມີການນຳເອົາໄປປູກ.

ສະກຸນ **Eria** Lindl. — *

ຊື່ພ້ອງ: ສະກຸນ *Ascidieria* Seidenf.; ສະກຸນ *Tylostylis* Blume

ພືດອາໃສບ່ອນຄົ້ ຫຼື ເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ມີລຳເລືອສັ້ນ ຫາຍາວ, ປົກກະຕິ ຮາກບໍ່ມຸກ, ສີກະ ເບົາ ແລະ ມີຂົນ. ມີຫົວປອມ ຫຼື ບໍ່ ມີ, ຫົວປອມມີຂໍ້ 1 ຂໍ້ ຫາ ຫຼາຍຂໍ້, ໃບກ້ານ 1 ໃບ ຫາ ຫຼາຍໃບ ຫຼື ບໍ່ມີໃບຊົ້. ໃບກ້ລະນີບໍ່ມີໃບ ແມ່ນລຳຕົ້ນສັ້ນ ຫາຍາວ, ຖືໃບຈຳນວນ 1 ໃບ ຫາຫຼາຍໃບ. ໃບມີການຫຸ້ມຢູ່ຕີນ ຫຼື ບໍ່ມີການ, ຈັດລຽງເປັນ 2 ແຖວ, ການໃບບໍ່ມີຂົນ ຫຼື ມີຂົນ; ແຜ່ນໃບບໍ່ມີຂົນ, ກ້ລະນີ ມີຂົນລຽບຕາມແຄມໃບ ແມ່ນຫາຍາກ, ໃບພັບເປັນກີບໆ ຫຼື ພັບເຂົ້າກັນເວລາຍັງຈູມຢູ່, ແປເຂົ້າທັງດ້ານໜ້າ ແລະ ດ້ານຫຼັງ, ບາງເທື່ອ ໃບເປັນທ່ອນກົມ

ຫຼື ແປໆດ້ານຂ້າງ (ບໍ່ແມ່ນໃນກໍລະນີຢູ່ໄທ ແລະ ອິນດູຈີນ), ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເອລາຍັງຈຸມຢູ່ ຫຼື ບໍ່. ຊໍ່ດອກອອກທາງຂ້າງ ຫຼື ອອກຢູ່ປາຍ, ເປັນພົ້ວ ຫຼື ຖືດອກດ່ຽວ, ຊໍ່ແຕກແໜງຫາຍາກທີ່ສຸດ, ຊໍ່ມີຂົນຢູ່ເລື້ອຍໆ. ປົກກະຕິ ຊໍ່ດອກປົ່ງອອກຈາກຮູນ້ອຍໆຂອງລຳຕົ້ນ. ດອກຂະໜາດນ້ອຍ ຫາກາງ, ຢູ່ໃນທ່າປົ້ນ ຫຼື ບໍ່. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງໄດ້ ຫຼື ບໍ່. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂງ, ມີກ້ານ ຫຼື ບໍ່ມີ, ເຕົ້າໄຂ່ບໍ່ມີກ້ານ, ມີວົງຊີດີອ້ອມ ຫຼື ບໍ່ມີ.

ການແຈກຢາຍ: ພົບ ຢູ່ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອົດສະເຕຼເລຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງເກາະຕາຮີຕີ. ປະມານ 375 ຊະນິດ ; 63 ຊະນິດເກີດຢູ່ໄທ,18 ຊະນິດເກີດຢູ່ລາວ, 6 ຊະນິດຢູ່ກຳປູເຈຍ ແລະ 40 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເກີດຢູ່ໃນປ່າເຂດຕ່ຳ ແລະປ່າເຂດພູສູງ, ມີຫັ້ງຊະນິດເກີດຢູ່ດິນ, ຢູ່ບ່ອນດິນຊຸດໂຊມທີ່ມີປ່າໂຄກໃນດິນຫາມ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນດອກເຜົ້ງທີ່ມີຄວາມຫຼາກຫຼາຍລະດັບສູງ, ໃນແງ່ນີ້ມີແຕ່ສະກຸນ *Dendrobium* ແລະ ສະກຸນ *Bulbophyllum* ເທົ່ານັ້ນທີ່ເໜືອກວ່າ. ຕົງກັນຂ້າມກັບສະກຸນ *Dendrobium* ມີບາງຊະນິດຂອງສະກຸນ *Eria* ເທົ່ານັ້ນທີ່ມີດອກສະດຸດຕາ, ຊະນິດອື່ນສ່ວນຫຼາຍບໍ່ໃຫ້ຄວາມປະທັບໃຈພໍປານໃດ. ຍ້ອນແນວນັ້ນ ຈຶ່ງບໍ່ປະກົດເຫັນເພີ່ນນຳເອົາໄປປູກເລື້ອຍປານໃດ. ຢ່າງໜ້ອຍ, ສະກຸນ *Eria* ກໍ່ແມ່ນສະກຸນສຳຄັນສະກຸນໜຶ່ງຊຶ່ງເພີ່ນພົບໃນທຳມະຊາດຫຼາຍກວ່າໝູ່ໃນບັນດາຕົ້ນດອກເຜົ້ງທີ່ເກີດແບບອາໃສບ່ອນຄ້ຳ ໃນເຂດເອເຊຍຕາເວັນອອກສ່ຽງໃຕ້.

ສະກຸນ **Eriodes** Rolfe

ຊື່ພ້ອງ: ສະກຸນ *Tainiopsis* Schltr.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລື່ອສັ້ນ. ຫົວປອມ ບັນຈຸປ້ອງ 1 ປ້ອງ, ມີໃບ 2 ໃບ. ໃບບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເມື່ອເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງຈາກສ່ວນກົກຂອງຫົວປອມ, ມີຂົນ, ເປັນພົ້ວ ຖືດອກຈຳນວນບໍ່ຫຼາຍປານໃດ ຫຼື ຊໍ່ແຕກແໜງກໍ່ມີແຕ່ຫາຍາກ. ໃບຊ້ອນດອກມີຂົນຫຸ້ມ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ, ດ້ານນອກມີຂົນຫຸ້ມ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງໄດ້. ເສົາເກສອນມີຕີນ ທີ່ຂະຫຍາຍຕົວດີ. ກຸ່ມເມັດລະອອງຈຳນວນ 8, ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວົງຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ມ່ຽນມ້າ, ໄທ, ຈີນ, ຫວຽດນາມ. 1 ຊະນິດ; ພົບຢູ່ໄທ ແລະ ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເກີດໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ ໜ້າສົນໃຈ, ມັນບັນຈຸແຕ່ຊະນິດດຽວເທົ່ານັ້ນ, ຊະນິດ *E. barbata* (Lindl.) Rolfe ຊຶ່ງເພີ່ນບໍ່ສາມາດຫຼົງກັບດອກເຜົ້ງຊະນິດອື່ນໄດ້. ການນຳເອົາໄປປູກກໍ່ມີຢູ່ບາງຄັ້ງຄາວ ແຕ່ບໍ່ມີຄຸນຄ່າດ້ານປະດັບສູງ.

ສະກຸນ **Erythrodes** Blume — *

ຊື່ພ້ອງ: ສະກຸນ *Physurus* Rich.

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ອວບນ້ຳແດ່ເລັກນ້ອຍ, ສ່ວນໂຄນຂອງລຳຕົ້ນເລື່ອຕາມໜ້າດິນ, ປະກອບເປັນລຳເລື່ອ, ສ່ວນປາຍຕັ້ງຊັນຂຶ້ນ. ໃບມີຈຳນວນໜ້ອຍ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະ

ຫຼອດປີ, ມ້ອນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ມີສີຂຽວ. ຊໍ່ດອກອອກຢູ່ປາຍ, ເປັນພົ້ວ, ດອກມີຈຳນວນບໍ່ຫຼາຍປານໃດ ຫາຫຼາຍດອກ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ, ປົກກະຕິ ດອກອອກສີແດງປົນສີເຂຍ, ປ່ຽງກາງຂອງກີບດອກຮູບຮີມສິບມີສີຂາວ. ກາບດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ, ເໜັງບໍ່ໄດ້, ເດືອຍຮຽວໆ, ຕອນປາຍຂອງກີບດອກແບ່ງເປັນ 2 ປ່ຽງ, ເດືອຍຢູ່ຂ້າງໃນ, ບໍ່ມີຕຸດ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮວງຮັບແບ່ງເປັນປ່ຽງແຕ່ ບໍ່ແຍກກັນ.

ການແຈກຢາຍ: ພົບຢູ່ທະວີບອາເມຣິກາພາກກາງ ແລະ ພາກໃຕ້, ຢູ່ສຣີລັງກາ, ຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງໝູ່ເກາະຕົງກາ. ປະມານ 60 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ແລະ ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນພືດປ່າທີ່ຫາຍາກ ແລະ ບໍ່ເປັນທີ່ສັງເກດເລີຍ, ໃກ້ຄຽງກັບສະກຸນ *Herpysma*, ສະກຸນ *Vrydagzynea*, ສະກຸນອື່ນໆ... ຊຶ່ງຈຳແນກໄດ້ຍ້ອນບໍ່ມີຕ່ອມ ຫຼື ຕຸດຢູ່ໃນເດືອຍ.

ສະກຸນ **Erythrorchis** Blume

ພືດບໍ່ມີໃບ, ມີກາບເຕີບໃຫຍ່ຢູ່ດ້ານປາຍ, ເກີດຢູ່ດິນ ຫາອຂຶ້ນ, ຂາດຫາດ ກລໍລໍຟົນ. ລຳຕົ້ນຍາວຫຼາຍ, ມີສ່ວນໃບເປັນເກັດໆ ແລະ ສັ້ນ, ຮາກປົ່ງອອກຈາກປ້ອງແຕ່ລະປ້ອງ . ຊໍ່ດອກອອກທາງຂ້າງ, ແຕກແໜງ; ແກ່ນກາງຂອງຊໍ່ດອກ ແລະ ດອກເອງບໍ່ມີຂົນ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ, ອອກສີເຫຼືອງ. ກາບດອກແຍກກັນ. ກີບດອກຮູບຮີມສິບ ບໍ່ມີເດືອຍ, ເໜັງບໍ່ໄດ້, ເປັນຮູບຈອກ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍ ແຜ່ນດິນໃຫຍ່ເຂດຮ້ອນ, ຍີ່ປຸ່ນ, ອິນໂດເນເຊຍ, ຟີລິບປິນ, ອິດສະເຕເລຍ. ປະມານ 5 ຊະນິດ; 1 ຫຼື 2 ຊະນິດຢູ່ໄທ, ຢູ່ລາວ, ກຳປູເຈຍ ແລະ ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ໃກ້ຄຽງກັບສະກຸນ *Galeola* ແຕ່ ລຳຕົ້ນບໍ່ມີຂົນ ແລະ ດອກມີໂຄງສ້າງແບບເບົ້າບາງກວ່າ.

ສະກຸນ **Esmeralda** Rchb.f. — *

ພືດອາໃສບ່ອນຄ້ຳ ມີກາບເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ບາງຄັ້ງທາວຂຶ້ນ, ໃບຈັດລຽງເປັນ 2 ແຖວ. ໃບບໍ່ມີກາບຫຸ້ມຢູ່ທີ່ໂຄນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຖືດອກບໍ່ຫຼາຍ. ດອກຂະໜາດໃຫຍ່, ສະດຸດຕາ. ກາບດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ທ້ອຍໃສ່ກັບເສົາເກສອນ, ມີຕ່ອມນ້ຳຫວານທີ່ຖືກປິດບັງຢູ່ລຸ່ມຮອຍດ້ານດ້ວຍປ່ຽງກາງ , ຮອຍດ້ານປິ່ນໄປດ້ານຫຼັງ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດເທົ່າໆກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ບູຕານ, ມ່ຽນມ້າ, ຈີນ, ໄທ; 2 ຊະນິດ, 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ໃກ້ຄຽງກັບສະກຸນ *Arachnis*, ແຕ່ໃນສະກຸນ *Esmeralda* ນີ້ປ່ຽງກາງຂອງກີບດອກຮູບຮີມສິບບໍ່ຕັດເປັນມຸມກັບໂຄນຂອງກີບດອກດັ່ງກ່າວ, ມັນແມ່ນໂຄງສ້າງທີ່ແຕກຕ່າງຈາກໂຄງສ້າງ

ຂອງສະກຸນ *Arachnis*. ໄດ້ມີການນຳເອົາໄປປູກເປັນບາງໂອກາດ ແຕ່ບໍ່ມີທົ່ວໄປເໝືອນດັ່ງກໍລະນີ ສະກຸນ *Arachnis*.

ສະກຸນ **Eulophia** R.Br. ex Lindl. — *

ຊື່ພ້ອງ: ສະກຸນ *Donacopsis* Gagnep.

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ບາງຄັ້ງກໍ່ບໍ່ມີໃບ, ມີຫົວປອມຢູ່ພື້ນດິນ ຫຼື ພົ້ນໜ້າດິນສ່ວນໃດສ່ວນໜຶ່ງ, ມີປ້ອງ 1 ປ້ອງຫາຫຼາຍປ້ອງ ຫຼື ລຳເລືອໃຕ້ດິນໃຄ່. ໃບຈຳນວນໜ້ອຍ ຫຼືບໍ່ມີໃບ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ ຫຼືໃບແຄບໆຄ້ໃບຫຍ້າ, ສັບປ່ຽນຕາມລະດູການ, ແລະມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸມຢູ່. ຊໍ່ດອກປ່ຽງຂຶ້ນແຕ່ລຸ່ມຕົ້ນ, ແມ່ນພົ້ວ ຫຼື ຊໍ່ແຕກແໜງ ຖືດອກຈຳນວນໜ້ອຍ ຫາຫຼາຍດອກ, ດອກຂະໜາດກາງ, ມີຫ່າປີ້ນ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ ຫຼື ບໍ່ມີ, ເໜັງບໍ່ໄດ້. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຂງ, ແຕກແງ່ມຢູ່ຕີນ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເຂດຮ້ອນໃນທົ່ວໂລກ (ຂະນິດທີ່ເກີດຢູ່ທະວີບອາເມຣິການມີໜ້ອຍທີ່ສຸດ), ຢູ່ອາຟຼິກາໃຕ້, ໝູ່ເກາະປາຊີຟິກ, ເບື້ອງຕາເວັນອອກຂອງໝູ່ເກາະມຸຍ. ປະມານ 230 ຂະນິດ; 12 ຂະນິດຢູ່ໄທ, 8 ຂະນິດຢູ່ລາວ, 5 ຂະນິດຢູ່ກຳປູເຈຍ, 8 ຂະນິດຢູ່ຫວຽດນາມ.

ນິເວດ: ພືດເກີດຢູ່ດິນໃນປ່າໂຄກ, ບ່ອນມັກມີອາກາດແຫ້ງຕາມລະດູການເລື້ອຍ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃຫຍ່ໃກ້ຄຽງກັບສະກຸນ *Goedorum* ແຕ່ ອາດມີການຫຼົງກັບ ສະກຸນ *Tainia* ໄດ້. ໃນສະກຸນ *Tainia*, ຫົວປອມມີໃບ 1ໃບ (ສະກຸນ *Eulophia* ມີໃບຈຳນວນໜ້ອຍ) ແລະ ດອກມີກຸ່ມເມັດລະອອງທີ່ບໍ່ມີຫຍັງຫຸ້ມຫໍ່ໄວ້ 8 ກ້ອນແທນທີ່ຈະແມ່ນ 2 ກ້ອນ, ມີວິຊີດີອ້ອມຈະແຈ້ງ. ຫຼາຍຂະນິດຂອງສະກຸນ *Eulophia* ທີ່ເກີດຢູ່ອາຟຼິກາ ສະດຸດຕາດີ. ກົງກັນຂ້າມບາງຂະນິດທີ່ເກີດຢູ່ເອເຊຍບໍ່ມີລັກສະນະສະນີ້, ຍ້ອນເຫດຜົນນັ້ນການນຳເອົາໄປປູກຈຶ່ງຫາຍາກ.

ສະກຸນ **Flickingeria** A.D. Hawkes — *

ຊື່ພ້ອງ: ສະກຸນ *Desmotrichum* Blume; ສະກຸນ *Ephemerantha* P.F. Hunt & Summerh.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອຍາວ, ສ່ວນຫຼາຍຕັ້ງຊັນຂຶ້ນ ຫຼືແຕກແໜງ. ຫົວປອມບໍ່ເປັນທີ່ສັງເກດເລີຍ, ເຫຼື້ອມ, ມີປ້ອງ 1 ປ້ອງ, ມີໃບ 1 ໃບ. ບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍ, ສັ້ນ, ມີດອກດ່ຽວ. ດອກຂະໜາດກາງ, ລົ່ນໄວ, ຢູ່ໃນທ່າປີ້ນ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຟີຊິກ, ຕາເວັນອອກຂອງໝູ່ເກາະຊາມົວ. ປະມານ 70 ຂະນິດ; 16 ຂະນິດພົບຢູ່ໄທ, 1 ຂະນິດຢູ່ລາວ, 7 ຂະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳຢູ່ປ່າເຂດຕ່ຳ ແລະ ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນໃກ້ຄຽງກັບສະກຸນ *Dendrobium* , ຫົວປອມມີ 1 ໃບ, ດອກລົ່ນໄວ, ປະມານ 1 ມື້. ສ່ວນຫຼາຍມີຂະນິດເກີດຢູ່ປ່າຟຸ່ມ ຍ້ອນລຳເລືອແຂງ, ແຕກແໜງ ແລະ ມີຮາກປົ່ງອອກຢູ່ສ່ວນລຸ່ມເທົ່ານັ້ນ. ເປັນສະກຸນທີ່ເກີດທົ່ວໆໄປໃນທຳມະຊາດ ແຕ່ບໍ່ໄດ້ມີການນຳມາປູກເລື້ອຍ.

ສະກຸນ **Galeola** Lour. — *

ພືດບໍ່ມີໃບ, ຂາດທາດຄລໍໂລຟິນ, ປະກົດວ່າມີການຂະຫຍາຍຕົວດ້ານປາຍ, ທາວຂຶ້ນ. ລຳຕົ້ນຍາວໜາຍ, ໃນແຕ່ ລະປ້ອງ ມີໃບ ລັກສະນະເກັດສັ້ນໆ ແລະ ມີຮາກປົ່ງອອກ. ຊໍ່ດອກອອກທາງຂ້າງ, ແຕກແໜງ; ກ້ານຊໍ່ດອກ ແລະ ດອກເອງມີຂົນຫຸ້ມ ສ່ອນໃດສ່ອນໜຶ່ງ. ດອກຂະໜາດນ້ອຍ ຫາກາງ, ຢູ່ໃນທ່າປີ້ນ, ອອກສີກະເບົາອົມ ສີເຫຼືອງ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ມຸກໜາຍ, ເປັນຮູບຈອກ. ເສົາເກສອນ ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ອ່ອນນຸ້ມ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊຸດີອ້ອມ.

ການແຈກຢາຍ: ພົບຢູ່ມາດາກັດສະກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟິລິ ປິນ, ປາປົວນິວກີເນຍ. ປະມານ 10 ຊະນິດ; 3 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ຍັງບໍ່ທັນເກັບກຳຢູ່ລາວ ຫຼື ກຳປູເຈຍ.

ນິເວດ: ເກີດຢູ່ປ່າເຂດຕ່ຳ ແລະ ປ່າເຂດພູສູງ, ມັກເກີດຢູ່ປ່າໂຄກແລະ ບ່ອນທີ່ມີເນື້ອເນົ່າ.

ຂໍ້ຄວນເອົາໃຈໃສ່: ສະກຸນ *Galeola* ແມ່ນສະກຸນທີ່ບໍ່ທຳມະດາກວ່າໝູ່ໃນບັນດາຕົ້ນດອກເຜົ້ງທີ່ບໍ່ມີໃບ ແລະ ມີອັດຕາກລໍລໍຟິນຕ່ຳທີ່ທາວຂຶ້ນ, ຊຶ່ງມີລຳຕົ້ນອອກສີເຫຼືອງ ຫຼື ອອກສີກະເບົາອົມສີແດງ, ລຳຕົ້ນອາດ ຍາວກວ່າ 20 ແມັດ. ແມ່ນສະກຸນທີ່ຄ້າຍຄືກັບສະກຸນ *Erythrorchis* ຊຶ່ງມີດອກ ແລະ ກ້ານຂອງຊໍ່ດອກມີ ຂົນຫຸ້ມ.

ສະກຸນ **Gastrochilus** D.Don

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນຫາຍາວ. ໃບມີຈຳນວນໜ້ອຍຫາໜາຍ, ຈັດເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວສັ້ນໆ ສ່ອນໜາຍດິກ, ມີໜາຍດອກ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ ຫຼື ບໍ່. ການດອກແຍກກັນ. ກີບດອກຮູບຮີມສິບແບ່ງເປັນສ່ອນກິກ ແລະ ສ່ອນປາຍ, ສ່ອນກິກເປັນຮູບຈອກເລິກໆ ແລະສ່ອນປາຍເປັນຮູບ ວົງເກືອບມົນ ຫຼື ຮູບສາມລ່ຽມ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ມີຮອຍຈີກຕື້ນໆ ຫຼື ຈຳນວນ 4 ກ້ອນ ແຕ່ຫາຍາກ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊຸດີອ້ອມ.

ການແຈກຢາຍ: ພົບ ຢູ່ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟິລິ ປິນ. ປະມານ 46 ຊະນິດ; 8 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 4 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນ ໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ເກີດຢູ່ປ່າເຂດພູສູງເປັນຕົ້ນຕໍ, ຢູ່ເຂດພູຕ່ຳ ມີໜ້ອຍກວ່າໜາຍ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຮູ້ໄດ້ງ່າຍ ຍ້ອນຕີນຂອງກີບດອກຮູບຮີມສິບ ເປັນຮູບຈອກ. ຊະນິດຕ່າງໆ ຂອງສະກຸນນີ້ສາມາດພົບໄດ້ ໃນໜາຍໆຊຸດສະສົມ ຂອງນັກນິຍົມດອກເຜົ້ງຢູ່.

ສະກຸນ **Gastrodia** R.Br. — *

ພືດບໍ່ມີໃບ ຂາດທາດຄລໍໂລຟິນ, ເກີດຢູ່ດິນ, ຊໍ່ດອກປົ່ງຂຶ້ນຈາກລຳເລືອໃຕ້ດິນທີ່ຄ້າຍຄືຫົວ, ເປັນປະເພດພົ້ວ ມີ ດອກຈຳນວນໜ້ອຍ ຫາໜາຍດອກ ຫຼື ມີດອກດ່ຽວ. ດອກຂະໜາດນ້ອຍ ຫາຂະໜາດກາງ, ບໍ່ຢູ່ໃນທ່າປີ້ນ. ການດອກ ແລະ ກີບດອກເຊື່ອມຕິດກັນ ແຕ່ການດອກຂ້າງເຊື່ອມຕິດກັນເປັນບາງຄັ້ງຄາວຢູ່ຕີນເທົ່ານັ້ນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີຕີນ, ຮອງຮັບຈັບຢູ່ຕີນຂອງເສົາເກສອນ. ກຸ່ມເມັດລະ ອອງຈຳນວນ 2, ມີຮ່ອງ, ຜ່າໄດ້, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ ແລະ ບໍ່ມີວິຊຸດີອ້ອມ.

ການແຈກຢາຍ: ພົບຢູ່ອາຟຼິກາພາກໃຕ້, ສຣິລັງກາ, ເອເຊຍຕາເວັນອອກສ່ຽງໃຕ້, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ອິດສະເຕເລຍ, ນິວຊີແລັນ. ປະມານ 15 ຊະນິດ; 2 ຊະນິດ ຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເກີດຢູ່ປ່າເຂດຕ່ຳ ແລະ ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ໄດ້ມີການຫຼົງກັນລະຫວ່າງສະກຸນນີ້ກັບສະກຸນ *Didymoplexis* ເລື້ອຍໆ, ແຕ່ໃນສະກຸນ *Didymoplexis* ການດອກດ້ານຂ້າງ ສ່ວນຫຼາຍແມ່ນແຍກຈາກກີບດອກ. ບໍ່ໄດ້ມີການນຳເອົາສະກຸນນີ້ໄປປູກ ແຕ່ບາງຄັ້ງຄາວກໍ່ເກີດເອງໃນສວນພືດສາດໃນເຂດນີ້.

ສະກຸນ **Geodorum** Jackson — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນ. ຫົວປອມ ມີຂໍ້ ຈຳນວນຫຼາຍພໍສົມຄວນ, ຂໍ້ສ່ວນໃດໜຶ່ງຢູ່ໃຕ້ດິນ. ໃບມີຈຳນວນໜ້ອຍ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກປົ່ງຂຶ້ນຈາກຕົ້ນຕົ້ນເລີຍ, ເປັນໜໍ່ອ່ອນ, ແມ່ນປະເພດພົ້ອ, ດອກມີແງ່ມປົ່ງໄປດ້ານລຸ່ມ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສິບ ບໍ່ມີເດືອຍ. ເປັນຮູບຈອກຕື້ນໆ, ເໜັງບໍ່ໄດ້. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບ ຢູ່ສຣິລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງໝູ່ເກາະນຸຍ. ປະມານ 8 ຊະນິດ; 3 ຊະນິດພົບຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 4 ຊະນິດຢູ່ຫວຽດນາມ.

ນິເວດ: ເກີດຢູ່ປ່າເຂດຕ່ຳ ແລະ ປ່າເຂດພູສູງ, ໃນປ່າໂຄກບ່ອນທີ່ດິນບໍ່ງາມ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ໃກ້ຄຽງກັບສະກຸນ *Eulophia* ຫຼາຍ ແຕ່ຈຳແນກສະກຸນ *Geodorum* ໄດ້ງ່າຍຍ້ອນປາຍຂອງຊໍ່ດອກກົ່ງລົງລຸ່ມ ແລະ ດອກກໍ່ປິ່ນໜ້າໄປເບື້ອງລຸ່ມ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Goodyera** R.Br.

ຊື່ພ້ອງ: ສະກຸນ *Allochilus* Gagnep.

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ອອບນຳເລັກນ້ອຍ, ປົກກະຕິ ສ່ວນກົກຂອງຕົ້ນ ຈະເລືອຕາມໜ້າດິນ, ປະກອບເປັນລຳເລືອ, ສ່ວນປາຍຕັ້ງຊັນຂຶ້ນ, ໃບມີຈຳນວນໜ້ອຍ. ປົກກະຕິ ໃບຈະຈູ້ມຢູ່ ແລະ ຈັດລຽງແບບກ້ຽວກົ້ນຫອຍ, ຢູ່ຕີນມີການຫຸ້ມ, ບໍ່ມີຂົນ, ຂຽວຕະຫຼອດ, ໃບມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ມີສີຂຽວ ຫຼື ບາງຄັ້ງກໍ່ມີສີກະເບົາ, ບາງຄັ້ງຍັງມີຮອຍສີແຈ້ງກວ່າ ຫຼື ເສັ້ນກ່າງສີເງິນ ຫາ ສີເຫຼືອງຄຳ. ຊໍ່ດອກອອກຢູ່ປາຍ, ເປັນພົ້ອ ມີດອກຈຳນວນໜ້ອຍ ຫາຫຼາຍ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ສີຂຽວ ຫຼື ອອກສີກະເບົາ ຫຼື ສີຂາວ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ສ່ວນກົກຂອງກີບດອກນ້ອຳລົ່ງເລິກ, ຢູ່ຂ້າງໃນຫຸ້ມດ້ວຍຕຸ່ມບາງໆຄ້າຍຄືຂົນ; ປ່ຽງກາງມີຂະໜາດນ້ອຍ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບບໍ່ແບ່ງເປັນປ່ຽງແຍກກັນ.

ການແຈກຢາຍ: ພົບຢູ່ມັດສະກາແຮນ, ຢູ່ຢູຣົບເຂດອົບອຸ່ນ, ຢູ່ທະວີບອາເມຣິກາພາກເໜືອ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງເກາະຕົ່ງກາ. ປະມານ 50 ຊະນິດ; 7 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 5 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າຂຽວຕະຫຼອດປີ ເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ຊື່ຂອງສະກຸນດອກເຜົ້ງກຸ່ມໜຶ່ງ *Goodyerinae* ໄດ້ມາຈາກຊື່ຂອງສະກຸນ *Goodyera* ນີ້ເອງ. ໃນຈຳນວນກຸ່ມນີ້ ມີສະກຸນ *Anoectochilus*, ສະກຸນ *Ludisia* ແລະ ສະກຸນ *Zeuxine*, ມັນບໍ່ງ່າຍທີ່ຈະຈຳແນກຊະນິດຕ່າງໆໃນສະກຸນນີ້ ແລະ ມີຫຼາຍຊະນິດທີ່ປະກົດວ່າຫາຍາກແລ້ວໃນທຳມະຊາດ. ພາຍໃນກຸ່ມ *Goodyerinae*, ສະກຸນ *Goodyera* ແມ່ນໜຶ່ງໃນສະກຸນທີ່ມີຄວາມຫຼາກຫຼາຍກ່ວາໝູ່; ການຈຳແນກຊະນິດຕ່າງໆ ກໍ່ງ່າຍຢູ່ຍ້ອນຈຸ້ມຂົນດ່ຽວ (ຫຼື ແຜ່ນຕຸ່ມຍາວໆ) ຊຶ່ງຫຸ້ມເອົາຂ້າງໃນຂອງຜົ້ງສ່ວນກົກຂອງກົບດອກຮູບຮີມສົບຈົນເກືອບໜົດ ຫຼື ຈົນໝົດ. ໃນບັນດາສະກຸນທີ່ໃກ້ຄຽງກັນນີ້, ຈຳນວນໜຶ່ງບໍ່ມີຂົນແບບນີ້ ຫຼື ອີກຈຳນວນໜຶ່ງມີຈຸ້ມຂົນ 2 ຈຸ້ມແຍກກັນຈະແຈ້ງ. ບັນດາຊະນິດຂອງສະກຸນນີ້ ເຊັ່ນສະກຸນທີ່ມີໃບໆມຍ້ອນເສັ້ນກ່າງກໍ່ໄດ້ຖືກນຳເອົາໄປປູກເປັນບາງໂອກາດ, ສ່ວນວ່າຊະນິດທີ່ມີໃບສີຂຽວແຈ້ງ ເກືອບວ່າບໍ່ໄດ້ຖືກນຳເອົາໄປປູກຈັກເທື່ອເລີຍ.

ສະກຸນ **Grammatophyllum** Blume — *

ສ່ວນຫຼາຍເປັນພືດອາໃສບ່ອນຄ້ຳຂະໜາດໃຫຍ່, ມີການເຕີບໃຫຍ່ດ້ານຂ້າງ ແລະ ມີລຳເລືອສັ້ນຫຼາຍ. ຫົວປອມກ່ຳໃຫຍ່, ບັນຈຸຫຼາຍກ່ວາໜຶ່ງປ້ອງ, ມີໃບໜ້ອຍ ຫາຫຼາຍໃບ. ໃບມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈຸມຢູ່. ຊໍ່ດອກປ່ຳຂຶ້ນແຕ່ລຸ່ມຕົ້ນ, ເປັນພໍ້ມີດອກຫຼາຍ. ດອກຂະໜາດໃຫຍ່, ຢູ່ໃນທ່າປົ້ນ, ປົກກະຕິຈະອອກສີຂຽວ ຫຼື ສີເຫຼືອງ, ມີຈຸດໆສີກະເບົາ ຫຼື ສີແດງຊ້ຳ. ການດອກແຍກກັນ. ກົບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຂງ, ແຕກແຍ່ມ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານຮູບໂຕ U , ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ຕາເວັນອອກຂອງໝູ່ເກາະຟີຊີ. ປະມານ 5 ຊະນິດ; 1 ຊະນິດ (*G. speciosum* Blume) ແຈກຢາຍຢ່າງກ້ວາງຂວາງຢູ່ໄທ ແລະ ລາວ, ສ່ວນຢູ່ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ໃນປ່າເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ຊະນິດທີ່ຄົນຮູ້ດີ *Grammatophyllum speciosum* ຖືວ່າແມ່ນຊະນິດດອກເຜົ້ງທີ່ໃຫຍ່ກວ່າໝູ່ໃນໂລກ. ຕົ້ນທີ່ຂະຫຍາຍດີ ສາມາດມີລວງສູງກວ່າ 3 ແມັດ ແລະ ລວງກ້ວາງຂອງສຸມສາມາດຮອດ 5 ແມັດ. ຢູ່ຕົ້ນຂອງຊໍ່ດອກມັກມີດອກຜິດປົກກະຕິຈຳນວນໜຶ່ງເລື້ອຍໆ ຊຶ່ງມີແຕ່ 2 ກາບ ແລະ 2 ກົບເທົ່ານັ້ນ, ບໍ່ມີກົບດອກຮູບຮີມສົບ ແລະ ເສົາເກສອນກໍ່ມີຂະໜາດຫຼຸດຜ່ອນເດີມ ແລະໃຊ້ບໍ່ໄດ້ອີກ. ມັນເປັນຊະນິດທີ່ເພີ່ນນຳໄປປູກຢ່າງກ້ວາງຂວາງໃນສວນພືດສາດຢູ່ໃນເອເຊຍຕາເວັນອອກສ່ຽງໃຕ້.

ສະກຸນ **Grosourdya** Rchb.f. — *

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນຫຼາຍ. ໃບບໍ່ຫຼາຍ, ມີການຫຸ້ມຢູ່ຕົ້ນ, ແຜ່ຢາຍຢູ່ໃນແຜ່ນພຽງໜຶ່ງ, ໃບບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈຸມຢູ່. ຊໍ່ດອກອອກຫາງຂ້າງ, ເປັນພໍ້ດົກ ຫຼາຍ ຖືດອກນ້ອຍໆ ທີ່ມີຂົນແຂງຄືໜາມ ຫຼື ມີຕູດ, ດອກອອກເທື່ອລະດອກຕາມໆກັນ. ດອກຂະໜາດນ້ອຍ, ອາຍຸສັ້ນ, ຢູ່ໃນທ່າປົ້ນ. ການດອກແຍກກັນ. ກົບດອກຮູບຮີມສົບມີເດືອຍ, ຫ້ອຍໃສ່ກັບເສົາເກສອນ. ເສົາເກສອນຍາວ ແລະ ຮຽວ, ມີຕີນຂະຫຍາຍດີ, ແຕ່ສັ້ນກ່ວາເສົາເກສອນເອງ. ກຸ່ມເມັດລະອອງຈຳນວນ 2, ແຂງ, ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ພາກຕາເວັນອອກສ່ຽງໃຕ້, ອິນໂດເນເຊຍ, ຟີລິບປິນ. ປະມານ 10 ຊະນິດ; 3 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຄ້າຍຄືກັບ ສະກຸນ *Ascochilus* ດ້ວຍຫຼາຍຈຸດ, ແຕ່ເດືອຍມີຝາບາງໆ, ເສົາເກສອນຍາວ ແລະ ກຸ່ມເມັດລະອອງບໍ່ແບ່ງເປັນກ້ອນ. ການນຳເອົາໄປປູກ ແມ່ນຫາຍາກ.

ສະກຸນ **Habenaria** Willd. — *

ຊື່ພ້ອງ: ສະກຸນ *Glossula* Lindl.

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ມັກມີຫົວໃຕ້ດິນຢູ່ເລື້ອຍ. ລຳຕົ້ນສັ້ນ ຫາຍາວ, ມີໃບ 1 ໃບ ຫາຫຼາຍ ໃບພໍຄວນ. ໃບມີການຫຸ້ມຢູ່ຕີນ, ມັກຈັດລຽງແບບກ້ຽວກົ້ນຫອຍຢູ່ເລື້ອຍ, ບໍ່ມີຂົນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນ ຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນປະເພດພົ້ວ, ຖືດອກຈຳນວນໜ້ອຍ ຫາຫຼາຍດອກ. ດອກມີຂະໜາດນ້ອຍ ຫາກາງ, ຢູ່ໃນທ່າປົ້ນ, ປົກກະຕິມີສີຂາວ, ບາງເທື່ອມີກີບດອກຮູບຮີມສົບສີແສດ ຫຼື ສີບົວ. ການດອກແຍກກັນ. ກີບດອກແບ່ງເປັນ 2 ປ່ຽງແຄບໆ ຫຼື ຫຼາຍປ່ຽງກ່ວານັ້ນ ອີກ. ກີບດອກຮູບຮີມສົບ ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊິດີອ້ອມ. ຮອງຮັບແບ່ງເປັນ 2 ປ່ຽງແຍກກັນຈະແຈ້ງ, ແຕ່ລະປ່ຽງຈັບຢູ່ ປາຍ ຂອງກ້ານຕ່າງກັນ ແລະ ແຍກຈາກກີບດອກ ຮູບຮີມສົບ.

ການແຈກຢາຍ: ພົບຢູ່ເຂດຮ້ອນ ແລະ ເກືອບຮ້ອນ ໃນທົ່ວໂລກ. ປະມານ 600 ຊະນິດ; 37 ຊະນິດຢູ່ໄທ, 15 ຊະນິດຢູ່ລາວ, 13 ຊະນິດຢູ່ກຳປູເຈຍ, 28 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າເຂດຕ່ຳ ແລະ ປ່າເຂດພູສູງ ແລະ ໃນສະຖານທີ່ເປີດແປນລຽບຕາມສາຍ ນ້ຳ ຫຼືຢູ່ຕາມເຈ້ຍພູ, ບາງລະດູ ກໍ່ພົບຢູ່ຕາມທົ່ງຫຍ້າແຫ້ງ ແລະ ອື່ນໆ...

ຂໍ້ຄວນເອົາໃຈໃສ່: ເປັນສະກຸນດອກເຜົ້ງທີ່ເກີດຢູ່ດິນສະກຸນໃຫຍ່ກວ່າໝູ່, ມັກມີດອກທີ່ມີປ່ຽງຕ່າງໆສັບສົນ ແລະ ດອກມີຍອຍ, ສ່ວນຫຼາຍດອກມີສີຂຽວ ຫຼື ຂາວ. ບັນດາຊະນິດຈຳນວນໜຶ່ງຖືດອກທີ່ມີສີສັນຫຼາຍ ໝູ່ຖືກນຳ ເອົາໄປປູກເລື້ອຍ. ຫຼາຍຊະນິດທີ່ເກີດຢູ່ເຂດທີ່ລົມມໍລະສຸມແຮງ ພັກຜ່ອນຕະຫຼອດລະດູແລ້ງ; ເມື່ອນຳມາປູກມັນ ຈະຕາຍ ຖ້າຫາກວ່າຖືກຫົດນ້ຳຕະຫຼອດປີ.

ສະກຸນ **Hancockia** Rolfe

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລື້ອຍຍາວ. ຫົວປອມບໍ່ເປັນທີ່ສັງເກດ, ປະກອບດ້ວຍປ້ອງ 1 ປ້ອງ, ມີໃບ 1 ໃບ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວ ເວລາຍັງຈູມຢູ່. ຊໍ່ດອກປົ່ງອອກຈາກໜໍ່ ສະເພາະ, ບໍ່ມີໃບ (ເຮເຕຣັງເທີສ), ມີດອກ 1 ດອກ. ດອກຂະໜາດກາງ, ຢູ່ໃນທ່າ ປົ້ນ. ການດອກແຍກກັນ. ກີບດອກຮູບຮີມສົບມີເດືອຍຍາວ, ເໜັງບໍ່ໄດ້. ເສົາເກສອນມີຕີນສັ້ນໆ. ກຸ່ມເມັດລະ ອອງຈຳນວນ 8, ແຂ໋ງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ຈີນ, ຫວຽດນາມ ແລະ ຍີ່ປຸ່ນ. 1 ຊະນິດ; ພົບຢູ່ວຽດນາມ, ສ່ວນຢູ່ໄທ, ລາວ ຫຼື ກຳປູ ເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຫາຍາກ, ໃກ້ຄຽງກັບສະກຸນ *Tainia*, ຊໍ່ດອກມີ 1 ດອກ ແລະ ກີບດອກຮູບ ຮີມສົບ ມີເດືອຍຍາວໆ.

ສະກຸນ **Hemipilia** Lindl. — *

ພືດເກີດຢູ່ດິນ ມີກາບເຕີບໃຫຍ່ດ້ານຂ້າງ, ມັກມີລຳເລືອໃຕ້ດິນ. ລຳຕົ້ນສັ້ນ, ມີໃບ1 ໃບ. ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ມ້ວນເຂົ້າກັນເວລາຍັງຈຸມຢູ່, ມັກມີຄວາມຫຼາກຫຼາຍຢ່າງຈັບໃຈ. ຊໍ່ດອກອອກທາງປາຍ, ເປັນພົ້ອ ມີດອກບໍ່ຫຼາຍ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ. ກາບດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ລິ້ນຂອງຮອງຮັບໃຫຍ່, ເປັນຮູບຄ້າຍຄືກັບເຂົາ, ແອ່ນໄປຂ້າງເທິງ. ຮອງຮັບເປັນຮູບ ຕິອ V , ບໍ່ມີກ້ານ.

ການແຈກຢາຍ: ພົບຢູ່ມຽນມ້າ, ໄທ, ຈີນ. ປະມານ 16 ຊະນິດ; 1 ຊະນິດຢູ່ໄທ, 2 ຊະນິດຢູ່ຫວຽດນາມ; ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ໃນປ່າເຂດພູສູງ ບ່ອນມີຫີນປູນ.

ຂໍ້ຄວນເອົາໃຈໃສ່: ແມ່ນພືດນ້ອຍເປັນທີ່ຈັບໃຈ, ຄ້າຍຄືກັນ ສະກຸນ *Diplomeris* ຢູ່ຫຼາຍຈຸດ ແຕ່ມີຮອງຮັບແຕກຕ່າງຫຼາຍ ແລະ ກີບດອກບໍ່ກວ້າງກວ່າກາບດອກ. ມັນແຕກຕ່າງຈາກສະກຸນ *Amitostigma* ດ້ວຍລິ້ນຂອງຮອງຮັບເປັນຮູບຄ້າຍຄືກັບເຂົາ ແລະ ແອ່ນໄປຂ້າງເທິງ. ການນຳເອົາໄປປູກແມ່ນຫາຍາກຫຼາຍ.

ສະກຸນ **Herminium** Guett. — *

ພືດເກີດຢູ່ດິນ ມີກາບຂະຫຍາຍຕິວດ້ານຂ້າງ, ມີຫົວໃຕ້ດິນ. ລຳຕົ້ນສັ້ນ, ມີໃບໜ້ອຍ. ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ວຖີ່ດອກຫຼາຍ. ດອກຂະໜາດນ້ອຍຫຼາຍ, ຢູ່ໃນທ່າປີ້ນ, ອອກສີຂາວ ຫຼື ມີສີຂຽວອົມເຫຼືອງ. ກາບດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ສ່ວນປາຍແບ່ງເປັນ 3 ປ່ຽງ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ທະວີບຢູໂຣບ ແລະ ເອເຊຍເຂດອົບອຸ່ນ, ຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 30 ຊະນິດ; 1 ຊະນິດ [*H. lanceum* (Thunb. ex Sw.) Vuijk] ເກີດຢ່າງກ້ວາງຂວາງຢູ່ໄທ ແລະ ຫວຽດນາມ; ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນໃນປ່າໂຄກຂອງເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນຕົ້ນດອກເຜົ້ງທີ່ເກີດຢູ່ດິນທີ່ບໍ່ມີຄວາມສຳຄັນຫຍັງ, ຄ້າຍຄືກັບສະກຸນ *Peristylus* ແຕ່ ກີບດອກຮູບຮີມສິບບໍ່ມີເດືອຍ.

ສະກຸນ **Herpysma** Lindl.

ພືດເກີດຢູ່ດິນ ມີກາບເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ອວບນ້ຳເລັກນ້ອຍ, ສ່ວນໂຄນຂອງລຳຕົ້ນເລືອຕາມໜ້າດິນ, ປະກອບເປັນລຳເລືອ, ສ່ວນປາຍຂອງລຳຕົ້ນຕັ້ງຊັນຂຶ້ນ, ມີໃບບໍ່ຫຼາຍປານໃດ. ໃບແຈກຢາຍຢູ່ຕາມລຳຕົ້ນ, ຕາມແບບກ້ຽວກົ້ນຫອຍ. ຢູ່ສ່ວນທີ່ຕັ້ງຊັນຂຶ້ນ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸມຢູ່, ມີສີຂຽວ. ຊໍ່ດອກອອກທາງປາຍ, ເປັນພົ້ວ ຖີ່ກ້ານສັ້ນໆ ແລະ ດອກບໍ່ຫຼາຍປານໃດ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ, ອອກສີຂາວແກມສີແດງ. ກາບດອກແຍກກັນ. ກີບດອກຮູບຮີມສິບ ມີເດືອຍຍາວ, ເໜັງບໍ່ໄດ້, ເດືອຍຢູ່ຂ້າງໃນ ມີຕຸດນ້ອຍໆຈຳນວນບໍ່ຫຼາຍປານໃດ ຢັ່ງຍາຍຢູ່. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບບໍ່ໄດ້ແບ່ງເປັນ 2 ປ່ຽງ ແຍກກັນ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ເອເຊຍຕາເວັນອອກສ່ຽງໃຕ້, ຊູມາຕຼາ. 1 ຊະນິດ (*H. longicaulis* Lindl.) ພົບຢູ່ໄທ ແລະ ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າຊຽວຕະຫຼອດປີ ຂອງເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນພຽງຊະນິດດຽວຂອງສະກຸນທີ່ບໍ່ເປັນທີ່ສັງເກດເລີຍ, ຄ້າຍຄືກັບສະກຸນ *Vrydagzynea* ແລະ ສະກຸນ *Erythrodes*. ມັນແຕກຕ່າງຈາກ 2 ສະກຸນດັ່ງກ່າວນີ້ ດ້ວຍຈຸດລະອຽດດ້ານໂຄງສ້າງຂອງດອກ. ບາງຄັ້ງກໍ່ມີການນຳເອົາໄປປູກ ແຕ່ກໍ່ບໍ່ມີຄຸນຄ່າທາງດ້ານປະດັບ.

ສະກຸນ **Hetaeria** Blume — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ອວບນ້ຳເລັກນ້ອຍ, ສ່ວນໂຄນຕົ້ນເລືອຕາມໜ້າດິນ ແລະ ປະກອບເປັນລຳເລືອ, ສ່ວນປາຍຕົ້ນຕັ້ງຊັນຂຶ້ນ. ໃບບໍ່ມີໜາຍ, ຈຸ້ມກັນ ແລະ ຈັດລຽງຕາມແບບກ້ຽວກົ້ນຫອຍ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ຊຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸມຢູ່, ມີສີຂຽວ. ຊໍ່ດອກອອກຢູ່ປາຍ, ເປັນພົ້ວມີດອກໜາຍ. ດອກຂະໜາດນ້ອຍໜາຍ, ມີທ່າປົ້ນສ່ວນໃດ ສ່ວນໜຶ່ງ ຫຼື ດອກບໍ່ຢູ່ໃນທ່າປົ້ນ, ອອກສີຂຽວ ຫຼື ອອກສີກະເບົາ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນດ້ານໜ້າມີແຜ່ນລາແມ່ນ 2 ແຜ່ນ, ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ. ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງເກາະຕາຮິຕິ. ປະມານ 20 ຊະນິດ; 7 ຊະນິດເກີດຢູ່ໄທ, 3 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ຢູ່ໃນປ່າຊຽວຕະຫຼອດປີ ເຂດຕ່ຳ ແລະ ປ່າເຂດພູສູງ, ບາງຄັ້ງກໍ່ເກີດຢູ່ຕາມໄງ່ນຫີນທີ່ມີໄຄເກີດຢູ່ນຳ ໃນປ່າລຽບແຄມນ້ຳ.

ຂໍ້ຄວາມຫຍໍ້: ມີນິເວດຄ້າຍຄືກັບຊະນິດມີໃບຊຽວຂອງສະກຸນ *Anoectochilus*, ສະກຸນ *Goodyera* ແລະ ອື່ນໆ... ແຕ່ດອກມີຂະໜາດນ້ອຍໜາຍ ແລະບໍ່ຢູ່ໃນທ່າປົ້ນ.

ສະກຸນ **Holcoglossum** Schltr. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ. ໃບມີຈຳນວນບໍ່ໜາຍປານໃດ ຫາໜາຍ, ຈັດລຽງເປັນ 2 ແຖວ, ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່, ຮູບຜ່າຫາງຂວາງເປັນ 3 ລ່ຽມ ຫຼື ເປັນທ່ອນກົມມີຮ່ອງຢູ່ດ້ານເທິງ. ຊໍ່ດອກອອກຫາງຂ້າງ, ເປັນພົ້ວ ຖືດອກຈຳນວນໜ້ອຍ ຫາໜາຍດອກ. ດອກຂະໜາດກາງ ຫາໃຫຍ່, ຢູ່ໃນທ່າປົ້ນ, ສະດຸດຕາ, ມັກມີສີຂາວ ຫຼື ອອກສີເຫຼືອງ. ການດອກແຍກກັນ. ກີບດອກຮູບຮີມສິບເໜັງບໍ່ໄດ້, ມີເດືອຍ, ເດືອຍຢູ່ຂ້າງໃນ ບໍ່ມີຮອຍດ້ານ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຕ່ລະອັນມີຮູຍາວ ແລະ ແຄບ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ພາກຕາເວັນອອກສ່ຽງໃຕ້, ໄຕ້ຫວັນ. ປະມານ 12 ຊະນິດ; 2 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 5 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ, ເກີດຢູ່ປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນຕົ້ນດອກເຜົ້ງທີ່ຈັບໃຈ ໃນເຄືອຂ່າຍຂອງສະກຸນ *Vanda* ແລະ ສະກຸນ *Aerides*; ຢ່າງໜ້ອຍກໍ່ແມ່ນໃນກໍລະນີຢູ່ໃນເຂດພວກເຮົາ, ສະກຸນ *Holcoglossum* ນີ້ແຕກຕ່າງ 2 ສະກຸນດັ່ງກ່າວນີ້ ຢູ່ບ່ອນໃບເປັນທ່ອນກົມ ຫຼື ເປັນຮູບເຂັມ. ບໍ່ໄດ້ມີການນຳເອົາສະກຸນນີ້ໄປປູກແບບທົ່ວໆໄປເໝືອນດັ່ງສະກຸນ *Aerides* ຫຼື ສະກຸນ *Vanda*.

ສະກຸນ **Hygrochilus** Pfitzer — *

ພືດອາໃສບ່ອນຄ້ຳ ຫຼື ເກີດຢູ່ດິນ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນໜາຍ, ໃບບໍ່ໜາຍ, ຈັດລຽງເປັນ 2 ແຖວ, ໃບມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ່ວ ຖືດອກບໍ່ໜາຍ. ດອກຂະໜາດກາງ, ສະດຸດຕາພໍຄວນ. ການດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ທ້ອຍໃສ່ກັບເສົາເກສອນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ເກືອບມີຂະໜາດເທົ່າໆກັນ, ຈັດລຽງເປັນ 2 ກ້ອນ, ແຂ້ງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານສັ້ນ ແລະ ໃຫຍ່, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ມ່ຽນມ້ຳ, ໄທ, ລາວ ແລະ ຫວຽດນາມ. 1 ຊະນິດ [*H. parishii* (Veitch & Rchb.f.) Pfitzer] ພົບຢູ່ໄທ, ລາວ ແລະ ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Esmeralda*, ຊຶ່ງສະກຸນ *Hygrochilus* ແຕກຕ່າງຍ້ອນລຳຕົ້ນສັ້ນເປັນຕົ້ນຕໍ. ໄດ້ມີການນຳເອົາໄປປູກເລື້ອຍພໍສົມຄວນ.

ສະກຸນ **Hylophila** Lindl. — *

ຊື່ພ້ອງ: ສະກຸນ *Dicerostylis* Blume

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ອວບນ້ຳເລັກນ້ອຍ, ສ່ວນໂຄນຕົ້ນເລືອຕາມໜ້າດິນ, ປະກອບເປັນລຳເລືອ, ສ່ວນປາຍຕົ້ນຕັ້ງຊັນຂຶ້ນ. ໃບມີໜ້ອຍ, ຈຸ້ມກັນ ແລະ ຈັດລຽງຕາມແບບກ້ຽວກົ້ນຫອຍ, ມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ມີສີຂຽວ. ຊໍ່ດອກອອກຢູ່ປາຍ, ເປັນປະເພດພົ່ວ ມີດອກຈຳນວນບໍ່ໜາຍປານໃດ ຫາຈຳນວນໜາຍ. ດອກຂະໜາດນ້ອຍໜາຍ ຫານ້ອຍ, ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສົບເປັນຮູບຖ້ວຍເລິກ, ເໜັງບໍ່ໄດ້. ບາງຄັ້ງ, ເສົາເກສອນມີຕິ່ງຊຶ່ງພໍເປັນທີ່ສັງເກດໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບບໍ່ມີປີ້ງແຍກກັນຈະແຈ້ງ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 5 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ຢູ່ໃນປ່າຂຽວຕະຫຼອດປີເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ນອນໃນສາຍກ່ຽວພັນກັບສະກຸນ *Goodyera* ແລະ ແມ່ນສະກຸນທີ່ຍາກທາງດ້ານອະນຸກົມວິຖານ, ຈຳແນກມັນໄດ້ງ່າຍຍ້ອນກີບດອກຮູບຮີມສົບທີ່ເປັນຮູບຖ້ວຍ.

ສະກຸນ **Ipsea** Lindl.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ. ຫົວປອມຢູ່ໃຕ້ດິນ, ບໍ່ສະໝ່ຳສະເໝີ, ມີປ້ອງ 1 ປ້ອງ ຫຼື ໜາຍກວ່ານັ້ນ. ໃບມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ພັບເປັນກີບໆ, ບາງຄັ້ງກໍ່ຫ່ຽວພ້ອມໆກັບເວລາບານ. ຊໍ່ດອກປົ່ງອອກແຕ່ໂຄນຂອງຫົວປອມ, ເປັນພົ່ວ ມີດອກບໍ່ໜາຍ ຫຼື ຖືດອກດ່ຽວ. ດອກຂະໜາດກາງ ຫາໃຫຍ່, ຢູ່ໃນທ່າປົ້ນ, ສະດຸດຕາ. ການດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງເປັນ 3 ປ່ຽງ. ກຸ່ມເມັດລະອອງຈຳນວນ 8, ແຂ້ງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ ແລະ ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ ສຣີລັງກາ, ອິນເດຍ, ໄທ. 3 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ຍັງບໍ່ທັນໄດ້ເກັບກຳ (ກໍລະນີຢູ່ ອິນເດຍ ແລະ ສຣີລັງກາ, ມັນເກີດຢູ່ດິນໃນທີ່ງຫຍ້າ ໃນເຂດພູສູງ). ຂໍ້ຄວນເອົາໃຈໃສ່: ການຄົ້ນພົບຊະນິດໃໝ່ຂອງສະກຸນ *Ipsea* ຢູ່ໄທໃນໄລຍະຫຼັງໆນີ້ (ຊະນິດ *I. thailandica* Seidenf.) ໄດ້ເປັນທີ່ຕົກຕະລຶງພໍຄວນ, 2 ຊະນິດຂອງສະກຸນນີ້ທີ່ຮູ້ມາກ່ອນແລ້ວ ເຫັນວ່າ ຢູ່ສຣີລັງກາ ແລະ ພາກໃຕ້ຂອງອິນເດຍ. ຊະນິດ *I. thailandica* ມີດອກສີຈືດໆ ບໍ່ເປັນທີ່ສັງເກດເລີຍ, ຕ່າງຈາກຊະນິດກ່ອນນັ້ນ ຊຶ່ງມີດອກສີເຫຼືອງຮຸ່ງ, ສະດຸດຕາ. ສະກຸນນີ້ໃກ້ຄຽງກັບສະກຸນ *Pachystoma* ຫຼາຍ ແລະ ການທີ່ແຍກ 2 ສະກຸນ ນີ້ຈາກກັນ ກໍ່ອະທິບາຍໄດ້ຍາກ.

ສະກຸນ **Lecanorchis** Blume — *

ພືດບໍ່ມີໃບ ເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນຢູ່ໃຕ້ດິນ ແລະ ຕັ້ງຊັນຂຶ້ນ. ຊໍ່ດອກອອກເປັນພົ້ວ ຫຼື ຊໍ່ດອກແຕກແໜງ, ຄ້າຍເຫຼັກລວດ, ອອກສີດຳ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ, ຢູ່ຕົ້ນຂອງດອກມີໂຄງສ້າງ ຄ້າຍສາຍສ້ອຍ, ຂ້າງນອກອອກສີກະເບົາ ຫຼື ສີອິດ, ຂ້າງໃນສ່ວນຫຼາຍຈະອອກສີຂາວ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ປາຍກີບດອກມີຂົນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວົງຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກເຂດຮ້ອນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວ ນິວກີເນຍ. ປະມານ 20 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ; ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ໃນປ່າຊຽວຕະຫຼອດປີ ໃນເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ແຍກຈາກໝູ່ຍ້ອນໂຄງສ້າງຄ້າຍຄືສາຍສ້ອຍຢູ່ຕົ້ນຂອງດອກ, ຊຶ່ງແມ່ນລັກສະນະສະເພາະອັນດຽວໃນບັນດາຕົ້ນດອກເຜົ້ງທີ່ບໍ່ມີໃບ. ບໍ່ໄດ້ມີການນຳເອົາໄປປູກເລີຍ.

ສະກຸນ **Lesliea** Seidenf.

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນຫຼາຍ. ໃບມີບໍ່ຫຼາຍ, ມີການຫຸ້ມຢູ່ຕົ້ນ, ຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງຈາກລຳຕົ້ນ, ເປັນພົ້ວ ຖືດອກບໍ່ຫຼາຍປານໃດ. ດອກບານເປັນລຳດັບຕາມໆກັນ, ຈຳນວນໜ້ອຍໜຶ່ງບານໃນເວລາດຽວ, ດອກຂະໜາດນ້ອຍ. ການດອກແຍກກັນ. ກີບດອກຮູບຮີມສິບ ມີເດືອຍສັ້ນ, ເໜັງບໍ່ໄດ້, ແບ່ງເປັນປ່ຽງຈະແຈ້ງ, ຢູ່ໂຄນຂອງປ່ຽງກາງ ຂອງກີບດອກຮູບຮີມສິບ, ມີຮອຍດ້ານຊຶ່ງແບ່ງເປັນ 2 ແງ່ມ ແລະ ຢູ່ໂຄນຂອງປ່ຽງຂ້າງ ຂອງກີບດອກດ້ານກ່າວ ມີຕິ່ງເປັນເສັ້ນຍາວ. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວົງຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ. 1 ຊະນິດ, ພົບຢູ່ໄທເທົ່ານັ້ນ.

ນິເວດ: ຍັງບໍ່ທັນໄດ້ເກັບກຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນ ໃກ້ຄຽງກັບສະກຸນ *Phalaenopsis*; ມັນມີດອກນ້ອຍຊຶ່ງແຕກຕ່າງຈາກດອກຂອງສະກຸນ *Phalaenopsis* ດ້ວຍຈຸດລະອຽດທີ່ມີຢູ່ຕາມກີບດອກຮູບຮີມສິບ ແລະ ຢູ່ລະດັບຮູບຮ່າງຂອງກ້ານຂອງເຕົ້າໄຂ່. ປະກົດວ່າແມ່ນພືດທີ່ຫາຍາກ.

ສະກຸນ **Liparis** Rich. — *

ພືດອາໃສບ່ອນຄ້ຳ ຫຼື ເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນ ຫາຍາວ. ຫົວປອມ ບັນຈຸປ້ອງ 1 ປ້ອງຫາບໍ່ຫຼາຍປ້ອງປານໃດ, ໃບ 1 ຫາບໍ່ຫຼາຍໃບປານໃດ. ໃບມີການຫຸ້ມຢູ່ຕົ້ນ ຫຼື ບໍ່ມີ, ບໍ່ມີຂົນ, ພັບເປັນກີບໆ ຫຼື

ບໍ່, ສັບປ່ຽນຕາມລະດູການ ຫຼື ບໍ່, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ (ຣິດສະເຕຣັງເທີສ ຫຼື ຊີນັ່ງເທີ ສ), ຫາຍາກຢູ່ນິວກີເນຍ (ເຣເຕຣັງເທີສ), ເປັນປະເພດພົ້ອ ຖືດອກບໍ່ຫຼາຍປານໃດ ຫາຫຼາຍ, ດອກບານເທື່ອລະ ດອກ ແລະ ມີໃບຊ້ອນດອກແປໆຈັບກັນຖີ່ໆ ແລະ ຈັດລຽງເປັນ 2 ແຖວ. ດອກຂະໜາດນ້ອຍ ຫາ ນ້ອຍຫຼາຍ, ຢູ່ ໃນທ່າປີ້ນ. ການດອກແຍກກັນ, ປົກກະຕິ ການດອກແຄບໆ ແລະປາຍປິ່ນອອກນອກ. ກີບດອກຮູບຮີມສົບບໍ່ມີ ເດືອຍ, ເໜັງບໍ່ໄດ້, ສ່ອນປາຍປິ່ນລົງດ້ານລຸ່ມ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນອນ 4, ແຂງ, ບໍ່ມີ ກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ເກີດຢູ່ທຸກໆບ່ອນ (ຍົກເວັ້ນຢູ່ນິວຊີແລັນ). ປະມານ 250 ຊະນິດ; 31 ຊະນິດຢູ່ໄທ, 9 ຊະນິດ ຢູ່ລາວ, 8 ຊະນິດຢູ່ກຳປູເຈຍ, 31 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນ ຫຼື ອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນຕົ້ນດອກເຜົ້ງທີ່ມີດອກນ້ອຍ. ເວົ້າທົ່ວໄປ ດອກຄືກັນໝົດ, ສ່ວນລຸ່ມຂອງ ກີບດອກຮູບຮີມສົບຂະໜານໃຫ້ກັບເສົາເກສອນ ແລະ ສ່ວນປາຍຕັດເປັນມຸມກັບເສົາເກສອນ. ການນຳເອົາໄປ ປູກແມ່ນຫາຍາກ ຍ້ອນຊະນິດສ່ວນຫຼາຍມີດອກບໍ່ເປັນທີ່ສັງເກດເລີຍ.

ສະກຸນ **Listera** R.Br.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ມີລຳເລືອໃຕ້ດິນ. ລຳຕົ້ນສັ້ນ, ມີ 2 ໃບ. ໃບຈັບເກືອບພາບກັນ, ມີການ ຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກເປັນພົ້ອ ຖື ດອກຈຳນວນໜ້ອຍຫາຫຼາຍດອກ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ. ການດອກແຍກກັນ. ກີບດອກຮູບຮີມສົບ ບໍ່ມີເດືອຍ, ເໜັງບໍ່ໄດ້, ປົກກະຕິ ປາຍແບ່ງເປັນ 2 ປ່ຽງ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ອ່ອນ ນຸ້ມ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອະເມຣິກາເໜືອ ເຂດອົບອຸ່ນ, ຢູ່ໂຣບ, ເອເຊຍ ເຂດອົບອຸ່ນ, ຣັດເຊຍ, ຈີນ, ຍີ່ປຸ່ນ, ຫວຽດ ນາມ. ປະມານ 20 ຊະນິດ; 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ໄທ, ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ໃນປ່າ.

ຂໍ້ຄວນເອົາໃຈໃສ່: ຖ້າເບິ່ງຜິວເຜີນ ໃບທີ່ຈັບພາບກັນ ຊຶ່ງຈັບຢູ່ລຳຕົ້ນອັນສັ້ນໆ ຂອງສະກຸນ *Listera* ຄ້າຍຄື ກັບເບ້ຍພືດຂອງຕົ້ນໄມ້ອື່ນຫຼາຍກວ່າ ຕົ້ນດອກເຜົ້ງເອງ ເວລາມັນບໍ່ມີດອກ. ຕົ້ນຕໍ ສະກຸນນີ້ ບໍ່ແມ່ນສະກຸນທີ່ ເກີດຢູ່ເຂດຮ້ອນ, ມີແຕ່ພົບຢູ່ສະຖານທີ່ໜຶ່ງຂອງຫວຽດນາມເທົ່ານັ້ນ.

ສະກຸນ **Ludisia** A. Rich. — *

ຊື່ພ້ອງ: ສະກຸນ *Haemaria* Lindl.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ອວບນ້ຳເລັກນ້ອຍ, ສ່ວນໂຄນເລືອຕາມໜ້າດິນ, ປະ ກອບເປັນລຳເລືອ, ສ່ວນປາຍຕັ້ງຊັນຂຶ້ນ, ມີໃບຈຳນວນໜ້ອຍ. ໃບສ່ອນຫຼາຍຈຸ້ມກັນຢູ່ປາຍລຳຕົ້ນ, ຈັດລຽງຕາມ ແບບກຽວກົ້ນຫອຍ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ປົກ ກະຕິ ມີສີຂຽວຊ້ຳ ຫຼື ສີກະເບົາ, ກ່ຳໆສີເງິນ, ສີດຳ ຫຼື ສີກຸຫຼາບ, ມີກ່ຳໆເສັ້ນຂວາງຈຳນວນໜ້ອຍໜຶ່ງ ຫຼື ບໍ່ມີຊ້ຳ. ຊໍ່ ດອກອອກທາງປາຍ, ເປັນພົ້ອຖືດອກຈຳນວນໜ້ອຍ ຫາຫຼາຍດອກ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ, ມີສີ ຂາວ, ຮອຍເມັດລະອອງ ມີສີເຫຼືອງຮຸ່ງ. ການດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ບິດແບບບໍ່ເຄົ່ງ ຄືກັນ. ເສົາເກສອນດ້ານໜ້າ ບໍ່ມີແຜ່ນລາແມນ, ບິດແບບບໍ່ເຄົ່ງຄື; ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳ ນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບ ບໍ່ມີປ່ຽງແຍກກັນຢ່າງຈະແຈ້ງເລີຍ.

ການແຈກຢາຍ: ພົບຢູ່ມ່ຽນມ້າ, ໄທ, ຫວຽດນາມ, ແຫຼມມາເລເຊຍ, ຊຸມາຕຼາ. 1 ຊະນິດ [*L. discolor* (Ker. Gawl.) A.Rich.] ເກີດທົ່ວໄປຢູ່ໄທ ແລະ ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ໃນປ່າໂຄກ ລຽບແຄມນ້ຳ ໃນເຂດຕ່ຳຫຼາຍກວ່າ.

ຂໍ້ຄວນເອົາໃຈໃສ່: ມີພຽງຊະນິດດຽວຂອງສະກຸນ, ຊະນິດ *L. discolor* ທີ່ຖືກນຳເອົາໄປປູກຢ່າງກວ້າງຂວາງ, ຕົ້ນຕ່ຳແມ່ນຍ້ອນໃບງາມຫຼາຍ. ເໝືອນກັບສະກຸນໃກ້ຄຽງ, ສະກຸນ *Macodes*, ດອກນ້ອຍໆງາມໆ ບໍ່ມີຄວາມເຄິ່ງຄີຢ່າງແປກປະຫຼາດ. ໃນສະກຸນ *Macodes*, ເສົາເກສອນມີແຜ່ນລາແມນ 1 ຄູ່ ຊຶ່ງບໍ່ມີຢູ່ໃນສະກຸນ *Ludisia*. ອີງຕາມຄວາມເຫັນຂອງ Ormerod (ໃນໜັງສືຂຽນຫານັກຄົ້ນຄວ້າກ່ຽວຂ້ອງ), ຊະນິດທີ່ເກີດຢູ່ຫວຽດນາມ ຊຶ່ງເພິ່ນຈຳແນກຊື່ວ່າແມ່ນ *L. discolor* ໃນຕົວຈິງແມ່ນຊະນິດໜຶ່ງຂອງສະກຸນ *Macodes* ທີ່ບໍ່ທັນຈຳແນກຊື່. ໃນໄລຍະລໍຖ້າການພິມ ການຄົ້ນພົບນີ້ ເປັນທາງການ, ພວກເຮົາຍັງບໍ່ທັນໄດ້ຈັດເອົາສະກຸນ *Macodes* ເຂົ້າໃນປຶ້ມແນະນຳພາກສະໜາມເທື່ອນີ້ເທື່ອ.

ສະກຸນ **Luisia** Gaudich. — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ໃບໜາຍພໍປານກາງ ຈັດລຽງເປັນ 2 ແຖວ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ. ເປັນທ່ອນກົມ, ສັບປ່ຽນຕາມລະດູການ. ຊໍ່ດອກອອກທາງຂ້າງ, ສັ້ນໆ, ແມ່ນປະເພດພົ້ວ ຫຼື ດອກດ່ຽວ. ດອກຂະໜາດນ້ອຍ ຫາກາງ, ຢູ່ໃນທ່າປົ້ນ, ປົກກະຕິອອກສີຂຽວ, ກີບດອກຮູບຮີມສົບສີກະເບົາ. ການດອກແຍກກັນ. ກີບດອກຮູບຮີມສົບເຊື່ອມຕິດກັບເສົາເກສອນ, ບໍ່ມີເດືອຍ, ແປໆ, ແບ່ງເປັນສ່ວນກົກ ແລະ ສ່ວນປາຍຊຶ່ງມີໂຄງສ້າງ ແລະຄວາມໜາແຕກຕ່າງກັນສົມຄວນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຂງ, ມີຮອຍຈີກສັ້ນໆ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍເຂດຮ້ອນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ຕາເວັນອອກຂອງເກາะຊາມົວ. ປະມານ 30 ຊະນິດ; 14 ຊະນິດຢູ່ໄທ, 6 ຊະນິດຢູ່ລາວ, 10 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຮູ້ໄດ້ງ່າຍຍ້ອນໃບເປັນທ່ອນກົມ ແລະ ຊໍ່ດອກສັ້ນໆ, ມີດອກແປກຕ່າງຈາກໝູ່ ແລະຄ້າຍຄືກັນຫຼາຍພາຍໃນຊະນິດສ່ວນຫຼາຍຂອງສະກຸນດຽວກັນນີ້. ການນຳເອົາໄປປູກກໍ່ມີເປັນບາງຄັ້ງຄາວ ເຖິງວ່າຄຸນຄ່າທາງດ້ານປະດັບຈະມີອັນຈຳກັດຢູ່.

ສະກຸນ **Macropodanthus** L.O. Williams

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ, ລຳຕົ້ນສັ້ນ. ໃບຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ວ ຖືດອກຈຳນວນໜ້ອຍ ຫາຫຼາຍດອກ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສົບມີເດືອຍ, ທ້ອຍໃສ່ກັບຕີນຂອງເສົາເກສອນ, ເດືອຍບໍ່ຕໍ່ເນື່ອງກັບລະດັບຕີນຂອງເສົາເກສອນ, ຕີນເສົາເກສອນຍາວຫຼາຍ. ລິ້ນຂອງຮອງຮັບຍາວຫຼາຍ ເປັນຮູບສົບນິກ. ກຸ່ມເມັດລະອອງຈຳນວນ 2, ມີຮູແຄບໆ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໝູ່ເກาะອັນດາມັນ ແລະ ໝູ່ເກาะນິໂກບາ, ແຫຼມມາເລເຊຍ, ຊຸມາຕຼາ, ຊາວາ, ບອກເນໂອ, ຟີລິບປິນ. 6 ຊະນິດ; 2 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ໃກ້ຄຽງກັບສະກຸນ *Cryptopylos* ແລະ ສະກຸນ *Pteroceras*, ຮູ້ໄດ້ງ່າຍຍ້ອນລິ້ນຍາວໆ ຂອງຮອງຮັບ. ການນຳເອົາໄປປູກມີເປັນບາງຄັ້ງຄາວ.

ສະກຸນ **Malaxis** Soland. ex Sw. — *

ຊື່ພ້ອງ: ສະກຸນ *Anaphora* Gagnep.; ສະກຸນ *Crepidium* Blume; ສະກຸນ *Dienia* Lindl.; ສະກຸນ *Fingardia* Szlach.; ສະກຸນ *Glossochilopsis* Szlach.; ສະກຸນ *Microstylis* (Nutt.) Eaton; ສະກຸນ *Oberonioides* Szlach.; ສະກຸນ *Seidenfia* Szlach.

ພືດອາໃສບ່ອນຄ້ຳ ຫຼືເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລື່ອສັ້ນໆ ຫາຍາວໆ. ລຳຕົ້ນຍາວມີໃບບໍ່ຫຼາຍປານໃດ ຫາ ໃບຫຼາຍ. ມີຫົວປອມ ຫຼື ບໍ່ມີ, ບັນຈຸປ້ອງ 1 ປ້ອງຫາຈຳນວນບໍ່ຫຼາຍປ້ອງປານໃດ ຫຼື ກໍລະນີມີຫົວປອມ, ລຳຕົ້ນສັ້ນ ຫາຍາວ (ກໍລະນີລຳຕົ້ນຍາວ, ມັນຈະເລື່ອຕາມໜ້າດິນ). ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ (ຫຼື ບໍ່ພັບເປັນກີບໆຊ້ຳສຳລັບຊະນິດທີ່ເກີດຢູ່ເຂດອື່ນ), ຊຽວຕະຫຼອດປີ, ພັບເຂົ້າກັນເວລາຍັງຈູມຢູ່, ມີສີຂຽວ, ສີກະເບົາຈືດໆ ຫຼື ສີແດງຊ້ຳ, ບາງຄັ້ງກໍ່ມີແຊກຕາມລວງຍາວ ສີຈືດກວ່າ ຫຼື ມີຈຸດຊ້ຳກວ່າ. ຊໍ່ດອກອອກຢູ່ປາຍ, ເປັນພົ່ວ ມີດອກຫຼາຍ. ດອກຂະໜາດນ້ອຍຫານ້ອຍທີ່ສຸດ, ບໍ່ຢູ່ໃນທ່າປີ້ນ, ສ່ວນຫຼາຍອອກສີຂຽວ ຫຼື ສີແດງຊ້ຳໆ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ປົກກະຕິ ຢູ່ຕີນຂອງກີບດອກນີ້ມີ 2 ປ່ຽງ ຊຶ່ງໜີບເຂົ້າກັບເສົາເກສອນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວີຊີດີອ້ອມ.

ການແຈກຢາຍ: ເກີດຢູ່ທຸກໆບ່ອນ (ແຕ່ບໍ່ເກີດຢູ່ນິວຊີແລັນ). ປະມານ 30 ຊະນິດ; 21 ຊະນິດຢູ່ໄທ, 4 ຊະນິດຢູ່ລາວ, 4 ຊະນິດຢູ່ກຳປູເຈຍ, 6 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດທີ່ເກີດຢູ່ດິນ ໃນປ່າຊຽວຕະຫຼອດປີ ໃນເຂດຕ່ຳ ແລະ ເຂດພູສູງເປັນຕົ້ນຕໍ, ບາງຊະນິດກໍ່ອາໃສບ່ອນຄ້ຳຢູ່ຕາມປ່າໄມ້ທີ່ມີໄຄເກີດຢູ່ນຳ.

ຂໍ້ຄວນເອົາໃຈໃສ່: ເປັນພືດຂະໜາດນ້ອຍ, ບາງຄັ້ງມີໃບໜ້າປະທັບໃຈ ແລະ ປົກກະຕິ ດອກບໍ່ເປັນທີ່ສັງເກດພໍປານໃດ ອອກສີຂຽວ ຫຼື ສີແດງຊ້ຳ, ສະກຸນ *Malaxis* ແມ່ນໜຶ່ງໃນຈຳນວນສະກຸນຕົ້ນດອກເຜົ້ງທີ່ດອກບໍ່ຢູ່ໃນທ່າຕັ້ງ; ລັກສະນະນີ້ບໍ່ມີຫຼາຍ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Malleola** J.J.Sm. & Schltr. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ. ໃບມີຈຳນວນໜ້ອຍ ຫາຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ແຜ່ຢາຍຢູ່ໃນແຜ່ນພຽງດຽວ, ບໍ່ມີຂົນ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຫາງໆ ຂ້າງ, ເປັນພົ່ວຖີ ດອກຈຳນວນໜ້ອຍ ຫາຫຼາຍ ຫຼື ແມ່ນຊໍ່ແຕກແໜງ ແຕ່ຫາຍາກກວ່າ, ປົກກະຕິ ຊໍ່ດອກຢ່ອນລົງ. ດອກຂະໜາດນ້ອຍ ຫານ້ອຍຫຼາຍ, ຢູ່ໃນທ່າປີ້ນ, ອອກສີເຫຼືອງ ແລະ ມີຮອຍສີກະເບົາອົມແດງ. ການດອກແຍກກັນ. ກີບດອກຮູບຮີມສິບເຊື່ອມຕິດກັບເສົາເກສອນ, ປາຍກີບນີ້ກົ່ງລົງ, ມີເດືອຍ, ເດືອຍຢູ່ຂ້າງໃນ, ບໍ່ມີຮອຍດ້ານ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຂງ, ແຕກແງ່ມ ຫຼື ບໍ່, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວີຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 20 ຊະນິດ; 6 ຊະນິດຢູ່ໄທ, 4 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເກີດຢູ່ໃນປ່າຊຽວຕະຫຼອດໃນເຂດຕ່ຳ ຫຼື ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນພືດຂະໜາດນ້ອຍ, ປົກກະຕິ ລຳຕົ້ນແຜ່ຢາຍຕາມແຜ່ນໜຶງນອນ ແລະ ຊໍ່ດອກ ຢ່ອນລົງ. ດອກຂະໜາດນ້ອຍຄ້າຍຄືກັບຊໍ່ດອກຂອງສະກຸນ *Robiquetia*; ທັງສອງສະກຸນແຕກຕ່າງກັນຍ້ອນ ປາຍຂອງກີບດອກຮູບຮີມສິບກິ່ງລົງ ແລະ ກຸ່ມເມັດລະອອງບໍ່ແຕກແງ່ມເລິກປານໃດ. ການນຳເອົາໄປປູກບໍ່ມີ ເລື້ອຍປານໃດ.

ສະກຸນ **Micropera** Lindl. — *

ຊື່ພ້ອງ: ສະກຸນ *Camarotis* Lindl.

ພືດເກີດຢູ່ດິນ ຫີ ອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວໜາຍ, ທັງມີຮາກປົ່ງອອກຕາມລອງ ຍາວ, ລຳຕົ້ນທາວຂຶ້ນກໍ່ມີເລື້ອຍຢູ່. ໃບມີຈຳນວນໜາຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີກ້ານ, ສັບ ປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຖືດອກຈຳນວນໜ້ອຍ ຫາ ໜາຍ. ດອກຂະໜາດນ້ອຍ, ປົກກະຕິ ບໍ່ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ, ເໜັງບໍ່ ໄດ້, ຝາດ້ານໜ້າຂອງເດືອຍມີຮອຍດ້ານ ຊຶ່ງປົກກະຕິ ຈະປະກອບດ້ວຍແຜ່ນລາແມນຂະໜານກັນ 2 ແຜ່ນ, ເດືອຍຢູ່ຂ້າງໃນ ມີແຜ່ນຂັ້ນຕາມລວງຍາວ. ເສົາເກສອນມີລິ້ນຂອງຮອງຮັບຍາວໆ ເປັນຮູບສິບນົກ. ເສົາເກສອນ ມີຕີນສັ້ນ. ກຸ່ມເມັດລະອອງຈຳນວນ 4, ມີຂະໜາດເກືອບເທົ່າໆກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີ ກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອົດສະເຕລເລຍ, ໝູ່ເກາະໂຊໂລມົງ. ປະມານ 10 ຊະນິດ; 4 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນ ຫຼື ອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ, ສ່ວນໜາຍມັກມີຢູ່ໃນປ່າໂຄກ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ໃກ້ຄຽງກັບສະກຸນ *Cleisostoma*, ດອກບໍ່ເປັນທີ່ສັງເກດ, ແຕ່ມີລັກສະນະສະ ເພາະຢູ່ໂຄງສ້າງດ້ານໃນຂອງເດືອຍ ແລະ ມີລິ້ນຂອງຮອງຮັບຍາວໆ. ຊະນິດສ່ວນໜາຍ ທີ່ມີລຳຕົ້ນຍາວທາວ ຂຶ້ນ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Microsaccus** Blume

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນ ຍາວ, ໃບໜາຍ, ຈັດເປັນ 2 ແຖວ. ໃບແປ ເຂົ້າດ້ານຂ້າງ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງ ຂ້າງ, ເປັນຊໍ່ສັ້ນມີ 2 ດອກ. ດອກຂະໜາດນ້ອຍ ຫານ້ອຍໜາຍ, ຢູ່ໃນທ່າປົ້ນ, ສີຂາວ. ການດອກແຍກກັນ, ບາງ ຄັ້ງການດອກຂ້າງເຊື່ອມຕິດກັບເດືອຍ ຂອງກີບດອກຮູບຮີມສິບຢູ່ລະດັບຕີນການ. ກີບດອກຮູບຮີມສິບມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດເທົ່າກັນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍ ແຜ່ນດິນໃຫຍ່ ພາກຕາເວັນອອກສ່ຽງໃຕ້, ແຫຼມມາເລເຊຍ, ຊຸມາຕຼາ, ຊາວາ, ບອກເນໂອ, ຟີລິບປິນ. ປະມານ 13 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ກຳປູເຈຍ, 1 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ລາວ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຈຳແນກໄດ້ງ່າຍດ້ວຍໃບແປເຂົ້າດ້ານຂ້າງ, ຈັບກັນຖີ່ໆ ແລະ ຊໍ່ດອກຖື 2 ດອກນ້ອຍໆສີຂາວ. ບາງຄັ້ງກໍ່ພົບໃນຊຸດສະສົມດອກເຜິ້ງ, ແຕ່ຄຸນຄ່າທາງດ້ານປະດັບຕ່ຳໜາຍ.

ສະກຸນ **Mischobulbum** Schltr. — *

ພືດເກີດຢູ່ດິນ ມີກາມເຕີບໃຫຍ່ດ້ານຂ້າງ, ລຳເລື້ອສັ້ນ. ຫົວປອມ ມີປ້ອງ 1 ປ້ອງ, ມີໃບ 1 ໃບ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ບໍ່ມີກ້ານ, ມີຮູບຫົວໃຈ, ເປັນຈຸດໆ. ຊໍ່ດອກປົ່ງຂຶ້ນເປັນໜໍ່ສະເພາະ, ບໍ່ມີໃບ (ເຮເຕຣັງເທີສ), ເປັນພົ້ວ ຖືດອກຈຳນວນ 2 ຫາບໍ່ຫຼາຍດອກປານໃດ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ, ປົກກະຕິ ອອກສີຂຽວ, ສີກະເບົາ ຫຼື ອອກສີເຫຼືອງ, ສ່ວນກີບດອກຮູບຮີມສົບມີສີຈືດກວ່າ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ. ເພັ້ງບໍ່ໄດ້, ມີສັນ 2 ຫຼື 3 ສັນຢ່າງຈະແຈ້ງ, ສັນມັກເປັນຄື້ນເລື້ອຍໆ. ຕີນເສົາເກສອນຍາວ. ກຸ່ມເມັດລະອອງຈຳນວນ 8, ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ພາກຕາເວັນອອກສ່ຽງເໜືອຂອງອິນເດຍ, ຈີນ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. 8 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າຂຽວຕະຫຼອດປີໃນເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Tainia*, ມັນແຕກຕ່າງຍ້ອນໃບຮູບຫົວໃຈ ແລະ ບໍ່ມີກ້ານ. ເປັນພືດທີ່ໃຫ້ຄວາມປະທັບໃຈພໍຄວນ, ປະກົດວ່າຫາຍາກໃນທຳມະຊາດ ແລະ ບໍ່ມີໃຜຮູ້ຈັກຫາງດ້ານການປູກ.

ສະກຸນ **Monomeria** Lindl. — *

ຊື່ພ້ອງ: ສະກຸນ *Acrochaene* Lindl.

ພືດອາໃສບ່ອນຄ້ຳ ມີກາມເຕີບໃຫຍ່ດ້ານຂ້າງ, ລຳເລື້ອຍາວ. ຫົວປອມ ມີປ້ອງ 1 ປ້ອງ, ມີໃບ 1 ໃບ ຈັບຢູ່ປາຍ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກປົ່ງຂຶ້ນແຕ່ຕີນຂອງຫົວປອມ, ເປັນພົ້ວ ຖືດອກຈຳນວນບໍ່ຫຼາຍປານໃດ ຫາຫຼາຍ. ດອກຂະໜາດນ້ອຍ ຫາຂະໜາດກາງ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຕ່າງຈາກກາບດອກຫຼາຍ. ກີບດອກຮູບຮີມສົບ ບໍ່ມີເດືອຍ, ເພັ້ງໄດ້. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 2 ຫຼື 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ມ່ຽນມ້າ, ໄທ, ຫວຽດນາມ. ປະມານ 3 ຊະນິດ; 2 ຊະນິດຢູ່ໄທ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ມັນອາດຈະຕ່າງຈາກສະກຸນ *Bulbophyllum*, ແຕ່ຈຳແນກໄດ້ຍ້ອນປະສົມປະສານ ລັກສະນະຂອງຊໍ່ດອກ ທີ່ເປັນພົ້ວ ແລະ ກຸ່ມເມັດລະອອງ ທີ່ຕິດຫ້ອຍກັບກ້ານ ຂອງເຕົ້າໄຂ່ ຊຶ່ງມີວິຊີດີອ້ອມ. ໄດ້ມີການນຳເອົາໄປປູກບ່ອນລະເລັກລະນ້ອຍຢູ່.

ສະກຸນ **Myrmechis** Blume

ພືດເກີດຢູ່ດິນ ຫຼື ອາໃສບ່ອນຄ້ຳຂະໜາດນ້ອຍຫຼາຍ ແລະ ມີກາມເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ບາງຄັ້ງໂຄນລຳຕົ້ນເລື້ອຕາມໜ້າດິນ. ໃບນ້ອຍຫຼາຍ, ມີຈຳນວນໜ້ອຍ, ຢາຍຢູ່ຕາມລວງຍາວຂອງລຳຕົ້ນ ຫຼື ວ່າຈຸ້ມກັນຢູ່ໃກ້ປາຍ, ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ມີສີຂຽວຊ້ຳ (ໃນພາກຕາເວັນອອກສ່ຽງໃຕ້ຂອງເຂດທີ່ພົບເຫັນສະກຸນນີ້) ຫຼື ມີເສັ້ນກ່າງສີເງິນ ຫຼື ສີຄຳ. ຊໍ່ດອກອອກຫາງປາຍ, ເປັນພົ້ວ ຖືດອກຈຳນວນໜ້ອຍ. ດອກນ້ອຍ, ຢູ່ໃນທ່າປົ້ນ, ມີສີຂາວ. ກາບດອກເຊື່ອມຕິດກັນ ຫຼື ແຍກກັນ.

ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ມີຕຸດ 2 ອັນຢູ່ທີ່ໂຄນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວົງດີອ້ອມ. ຮອງຮັບແບ່ງອອກເປັນ 2 ບົ້ງແຍກກັນຈະແຈ້ງ, ແຕ່ລະອັນມີຕິ່ງອອກທາງຂ້າງອີກ.

ການແຈກຢາຍ: ພົບຢູ່ຍີ່ປຸ່ນ, ເອເຊຍຕາເວັນອອກເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວ ນິວກີເນຍ. ປະມານ 6 ຊະນິດ; 1 ຊະນິດຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າຂຽວຕະຫຼອດປີ ຂອງ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ແຕກຕ່າງຈາກສະກຸນ *Zeuxine* ແລະ ສະກຸນ *Cheirostylis* ຢູ່ລະດັບໂຄງສ້າງຂອງຮອງຮັບ: ປ່ຽງຂອງຮອງຮັບຈັບຢູ່ບ່ອນມີຕິ່ງຂ້າງ. ຕ່າງຈາກສະກຸນ *Myrmechis* ແລະ ສະກຸນ *Zeuxine*, ສະກຸນ *Cheirostylis* ມີລຳເລື່ອໃຄ່ຫຼາຍ, ເຊັ່ນດຽວກັນ ສຳລັບຕິ່ງ 2 ອັນທີ່ຢູ່ປາຍຂອງເສົາເກສອນ. ບໍ່ໄດ້ມີການນຳເອົາສະກຸນນີ້ໄປປູກເລີຍ.

ສະກຸນ **Neogyna** Rchb.f.

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານຂ້າງ, ລຳເລື່ອສັ້ນ. ຫົວປອມ ບໍ່ເປັນທີ່ສັງເກດ, ປະກອບດ້ວຍປ້ອງດ່ຽວ, ຖືໃບ 2 ໃບ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກປົ່ງອອກຢູ່ປາຍຂອງໜໍ່ໃໝ່ (ໂປຼເຕຣັງເທີສ), ເປັນພົ້ອ ຖືດອກບໍ່ຫຼາຍປານໃດ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ, ສີຂາວ, ບໍ່ບານຫຼາຍ. ກາບດອກແຍກກັນ, ເປັນຮູບຖ້ວຢູ່ຕີນ ກາບດອກ. ກີບດອກຮູບຮີມສົບ ບໍ່ມີເດືອຍ, ເປັນຮູບຖ້ວຢູ່ຕີນ, ເໜັງບໍ່ໄດ້, ແບ່ງເປັນ 3 ປ່ຽງ, ປ່ຽງຂ້າງຮັດເອົາເສົາເກສອນ. ສ່ວນປາຍຂອງເສົາເກສອນເປັນຮູບໝວກ ກວມເອົາຮອຍເມັດລະອອງ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວົງດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ພູຕານ, ຈີນ, ໄທ, ລາວ. 1 ຊະນິດ [*N. gardneriana* (Lindl.) Rchb.f.]; ພົບຢູ່ໄທ ແລະ ລາວ, ສ່ວນຢູ່ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ຊະນິດ *Neogyna gardneriana* ອາດຖືວ່າເປັນຊະນິດພິເສດຂອງສະກຸນ *Coelogyne* ຫຼາຍກວ່າ ຊຶ່ງຕົ້ນຕໍມີເອກກະລັກຢູ່ທີ່ຮູບຮ່າງຂອງກາບດອກ. ບາງໂອກາດກໍ່ເຫັນສະກຸນນີ້ ໃນຊຸດສະສົມດອກເຜົ້າຢູ່.

ສະກຸນ **Nephelaphyllum** Blume

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລື່ອສັ້ນ. ຫົວປອມ ມີປ້ອງ 1 ປ້ອງ, ມີໃບ 1 ໃບ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວ ເວລາຍັງຈູມຢູ່, ບໍ່ມີກ້ານ, ເປັນຮູບຫົວໃຈ, ມັກມີຈຸດດ່າງ. ຊໍ່ດອກປົ່ງອອກຈາກໜໍ່ສະເພາະ ບໍ່ມີໃບ (ເຣເຕຣັງເທີສ), ເປັນພົ້ອມີ 2 ດອກຫາບໍ່ຫຼາຍດອກປານໃດ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວົງດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ. ປະມານ 15 ຊະນິດ; 3 ຊະນິດຢູ່ໄທ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າຂຽວຕະຫຼອດປີ ເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Mischobulbum*; ມັນແຕກຕ່າງກັບສະກຸນນີ້ ຍ້ອນດອກບໍ່ຢູ່ໃນທ່າປົ້ນ, ມີດອກທີ່ມີເດືອຍ. ບາງຄັ້ງກໍ່ໄດ້ມີການນຳເອົາໄປປູກ ຍ້ອນໃບເປັນໜ້າຈັບໃຈ.

ສະກຸນ **Nervilia** Comm. ex Gaudich. — *

ພືດເກີດຢູ່ດິນ, ມີລຳເລືອໃຕ້ດິນ. ໜໍ່ປີ່ໆໃໝ່ມີໃບ 1 ໃບ. ໃບມີຮູບເກືອບມົນ ຫຼື ຮູບຫົວໃຈ, ມີຂົນ ຫຼື ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ບາງຄັ້ງມີຈຸດຢາຍຢູ່. ເວລາອອກດອກ, ໃບບໍ່ມີ. ຊໍ່ດອກເປັນປະເພດພົ້ອ ຖືດອກຈຳນວນ 2 ຫາຫຼາຍດອກ ຫຼື ຖືດອກດ່ຽວ, ປົກກະຕິ ມັນອອກດອກຍາມລະດູຝົນ, ດອກອອກກ່ອນໃບປີ່ໆ. ດອກຂະໜາດນ້ອຍ ຫາກາໆ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮີມສົບ ບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີຊັ້ນອ້ອມ.

ການແຈກຢາຍ: ພົບຢູ່ທະວີບ ອາຟຼິກກາເຂດຮ້ອນ, ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອົດສະເຕຼເລຍ, ໝູ່ເກາະປາຊີຟິກ, ເບື້ອງຕາເວັນອອກຂອງເກາະຕາຮີຕີ. ປະມານ 65 ຊະນິດ; 9 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 3 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ຕາມເຈ້ຍໜູ, ໃນປ່າ, ໃນທີ່ໆຫຍ້າທີ່ມີດິນຊຸດໂຊມ ຫຼື ອື່ນໆ..., ເວົ້າທົ່ວໄປ ຢູ່ບ່ອນຕ່ຳກວ່າລະດັບຄວາມສູງຈາກໜ້ານ້ຳທະເລ 1.000 ແມັດ.

ຂໍ້ຄວນເອົາໃຈໃສ່: ຈຳແນກໄດ້ງ່າຍຍ້ອນຮູບຂອງໃບ, ໃບປີ່ໆຫຼັງຈາກໄລຍະອອກດອກ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Neuwiedia** Blume

ພືດເກີດຢູ່ດິນ, ມີການເຕີບໃຫຍ່ດ້ານຂ້າງ, ບໍ່ມີລຳເລືອ. ລຳຕົ້ນສັ້ນ, ຖືໃບຈຳນວນບໍ່ຫຼາຍປານໃດ ຫາຫຼາຍ, ຈັດລຽງກັນຕາມແບບກ້ຽວກົ້ນຫອຍ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ອຖື ຫຼາຍດອກ. ດອກຂະໜາດນ້ອຍ ຫາກາໆ, ຢູ່ໃນທ່າປົ້ນ, ບໍ່ບານຫຼາຍ, ມີສີຂາວ ຫຼື ສີເຫຼືອງ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ບໍ່ແບ່ງເປັນປ່ຽງ, ກ້ວາງກວ່າກີບດອກອື່ນ. ເສົາເກສອນບໍ່ມີຕີນ. ຮອຍເມັດລະອອງສົມບູນເພດ ມີຈຳນວນ 3, ເມັດລະອອງບໍ່ກ້ອນເຂົ້າກັນ ແລະ ເປັນຝຸ່ນໃຜມັນ.

ການແຈກຢາຍ: ພົບຢູ່ ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 10 ຊະນິດ; 2 ຊະນິດຢູ່ໄທ, 4 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າຂຽວຕະຫຼອດປີທີ່ຊຸ່ມແລະຢູ່ເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເພິ່ນຈຳແນກໄດ້ຈາກທຸກໆສະກຸນອື່ນຂອງຕົ້ນດອກເຜົ້ງ ຍ້ອນຮອຍເມັດລະອອງ ສົມບູນເພດ 3 ຮອຍ. ມັນບໍ່ໃຫ້ຄວາມປະທັບໃຈຫຍັງ ພິເສດ ແລະ ໃນການປູກ, ຈະຮັກສາບໍ່ໃຫ້ມັນຕາຍກໍແມ່ນຍາກແລ້ວ, ດັ່ງນັ້ນຈຶ່ງບໍ່ມັກເຫັນສະກຸນນີ້ປານໃດ.

ສະກຸນ **Oberonia** Lindl. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນ ຫຼືບາງຄັ້ງກໍ່ຍາວ ແລະ ຂະຫຍາຍຕົວດີ. ລຳຕົ້ນສັ້ນ ຫາຍາວ, ຖືໃບຈຳນວນໜ້ອຍ ຫາຫຼາຍ. ໃບຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ແປເຂົ້າດ້ານຂ້າງ, ສົບປ່ຽນຕາມລະດູການ ຫຼື ບໍ່, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ອ ຖືດອກຫຼາຍ, ດອກເລັ້ມບານແຕ່ປາຍຊໍ່ລົງລຸ່ມ. ດອກຂະໜາດນ້ອຍ ຫານ້ອຍຫຼາຍທີ່ສຸດ, ຢູ່ໃນທ່າປົ້ນ ຫຼື ບໍ່, ດອກມີສີຂຽວ, ສີກະເບົາ, ສີສົ້ມ (ອິນສີແດງ), ສີເຫຼືອງ ຫຼື ອອກສີຂາວ, ຈັບເປັນວົງຢູ່ເລື້ອຍໆ. ກາບດອກແຍກກັນ. ກີບດອກຮູບຮີບສົບບໍ່ມີ

ເດືອຍ, ເໜັງບໍ່ໄດ້, ເສົາເກສອນສັ້ນໆ, ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ລະດັບເສັ້ນອາຍັນຂອງທະວີບອາຟຼິກກາ (ມີ 1 ຊະນິດ) ແລະ ຢູ່ ເອເຊຍ, ຕະເວັນ ອອກຂອງໝູ່ເກາະຕິວໂມຕູ . ປະມານ 300 ຊະນິດ; 36 ຊະນິດຢູ່ໄທ, 7 ຊະນິດຢູ່ລາວ, 2 ຊະນິດຢູ່ກຳປູເຈຍ, 24 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳຢູ່ໃນປ່າ ເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ມີລັກສະນະສະເພາະເດັ່ນຫຼາຍ, ຈຳແນກໄດ້ງ່າຍ ຍ້ອນໃບແປເຂົ້າດ້ານ ຂ້າງ ແລະ ຊໍ່ດອກຄ້າຍຄືຫາງໝູ, ອອກຢູ່ປາຍ, ຖືດອກນ້ອຍທີ່ສຸດ. ການນຳເອົາໄປປູກກໍ່ມີເປັນບາງໂອກາດ ຍ້ອນມັນແປກ.

ສະກຸນ **Ornithochilus** (Lindl.) Benth. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນຫຼາຍ. ໃບບໍ່ມີຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມ ຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຫຼື ຊໍ່ແຕກ ແໜງ. ດອກຂະໜາດນ້ອຍ ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສິບເໜັງໄດ້, ມີເດືອຍຢູ່ສ່ວນ ກາງ, ຢູ່ໃກ້ກັບປາກຂອງເດືອຍມີຮອຍດ້ານ ເປັນຮູບໝອນ, ມີຂົນຫຸ້ມ, ເດືອຍຢູ່ຂ້າງໃນ ບໍ່ມີຮອຍດ້ານ, ປ່ຽງກາງ ຂອງກີບດອກຮູບຮີມສິບ ເປັນຮູບສີ່ຫຼ່ຽມ ສ່ວນໃດສ່ວນໜຶ່ງ ຫຼື ເປັນຮູບວີ ທັງມີແຂ້ວບໍ່ສະໝ່ຳສະເໝີ ຫຼື ມີແຄມ ເປັນຍອຍໆ. ເສົາເກສອນມີຕີນສັ້ນຫຼາຍ. ກຸ່ມເມັດລະອອງຈຳນວນ 4, ຂະໜາດຕ່າງກັນຫຼາຍ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍແຜ່ນດິນໃຫຍ່ ພາກຕາເວັນອອກສ່ຽງໃຕ້, ແຫຼມມາເລເຊຍ, ຊຸມ ຕຼາ, ບອກເນໂອ. 3 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 2 ຊະນິດຢູ່ຫວຽດນາມ. ສ່ວນຢູ່ກຳປູເຈຍ ຍັງບໍ່ທັນ ໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ເກີດໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນພືດ ທີ່ມີແວດລ້ອມຂອງສະກຸນ *Phalaenopsis*, ແຕ່ມີດອກທີ່ມີເອກກະລັກເດັ່ນ ຍ້ອນ ກີບດອກຮູບຮີມສິບ ມີເດືອຍຢູ່ກາງ. ຊະນິດເກີດທົ່ວໄປ *O. difformis* (Wall. ex Lindl.) Schltr. ຈຳ ແນກໄດ້ງ່າຍຍ້ອນກີບດອກຮູບຮີມສິບເປັນຍອຍໆ. ໄດ້ມີການນຳເອົາຊະນິດນີ້ ໄປປູກຢ່າງກວ້າງຂວາງ, ສ່ວນອ່ຳ ຊະນິດອື່ນນັ້ນ ຍັງບໍ່ທັນມີຄົນຮູ້ຈັກຫຼາຍ.

ສະກຸນ **Otochilus** Lindl. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານຂ້າງ, ລຳເລື້ອຍາວ. ຫົວປອມ ມີປ້ອງ 1 ປ້ອງ, ມີໃບ 2 ໃບ, ຫົວປອມ ໃໝ່ປົ່ງອອກຈາກຫົວທີ່ເກົ່າກວ່າຢູ່ໃກ້ເບື້ອງປາຍ. ໃບບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມ ລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກທາງປາຍຈາກໜໍ່ໃໝ່ (ຊິນ໌ງເທີສ), ເປັນພົ້ວ ມີດອກຫຼາຍດອກ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງ ບໍ່ໄດ້, ແບ່ງເປັນສ່ວນກີກ ແລະ ສ່ວນປາຍ, ສ່ວນກີກອ້ຳລີ ມີປ່ຽງຂ້າງ ແລະ ສ່ວນປາຍຮາບພຽງ, ບໍ່ແບ່ງເປັນ ປ່ຽງ. ກຸ່ມເມັດລະອອງຈຳນວນ 4, ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍ ແຜ່ນດິນໃຫຍ່ເຂດຮ້ອນ. 5 ຊະນິດ; 3 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 1 ຊະ ນິດຢູ່ກຳປູເຈຍ, 4 ຊະນິດຢູ່ຫວຽດນາມ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນພືດທີ່ມີແວດລ້ອມບໍ່ທຳມະດາ, ທັງມີຫົວປອມ ປົ່ງອອກຈາກປາຍຫົວປອມອື່ນອີກ ເຮັດໃຫ້ເປັນຕ່ອງໂສ້ຍາວ. ລັກສະນະຕ່ອງໂສ້ແບບນີ້ ຍັງພົບນຳບາງຊະນິດ ຂອງສະກຸນໃກ້ຄຽງ, ຄື ສະກຸນ *Pholidota* ອີກ, ແຕ່ໃນສະກຸນ *Pholidota*, ເສົາເກສອນສັ້ນ ແລະ ໜາ, ແລະ ສ່ວນກົກຂອງກົບດອກຮູບຮີມ ສົບບໍ່ມີປ່ຽງຂ້າງແບບຈະແຈ້ງ. ການນຳເອົາສະກຸນນີ້ໄປປູກບໍ່ມີເລື້ອຍປານໃດ.

ສະກຸນ **Pachystoma** Blume — *

ພືດເກີດຢູ່ດິນ, ລຳເລືອໃຕ່ຢູ່ໃຕ້ດິນ, ເກືອບບໍ່ມີລຳຕົ້ນ ມີແຕ່ໜໍ່ໃໝ່ຊຶ່ງມີໃບ 1 ຫາ 2 ໃບ. ໃບມີກາບຫຸ້ມຢູ່ຕີນ, ໃບແຄບໆ, ບໍ່ມີຂົນ, ພັບເປັນກົບໆ, ລົ່ນເວລາອອກດອກ. ຊໍ່ດອກປົ່ງຂຶ້ນຈາກລຳເລືອ, ປົກກະຕິ ມັນຈະຢູ່ຫ່າງຈາກໜໍ່ໃໝ່ທີ່ມີໃບ, ເປັນພົ້ອຖືດອກຈຳນວນໜ້ອຍ ຫາຫຼາຍດອກ, ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ທຸກໆ ສ່ວນຂອງດອກມີຂົນຫຸ້ມ ນັບທັງເສົາເກສອນ. ການດອກແຍກກັນ. ກົບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ຢູ່ທີ່ໂຄນກົບມີທີ່ງຢູ່ຖັດກັບຮອຍດ້ານຂອງຕີນເສົາເກສອນ. ກົບດອກຮູບຮີມສົບແບ່ງເປັນ 3 ປ່ຽງ, ປ່ຽງກາງມີສັນ ທີ່ມີຕຸດຈຳນວນ 5 ຫາ 7 ອັນ. ກຸ່ມເມັດລະອອງຈຳນວນ 8, ແຂ້ງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວົງຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍຕາເວັນອອກສ່ຽງໃຕ້, ອິນດູຈີນ, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອົດສະເຕຼເລຍ, ຕາເວັນອອກ ຂອງເກາະ ນິວກາເລໂດເນຍ. ປະມານ 6 ຊະນິດ (ຫຼື ເປັນໄປໄດ້ແມ່ນ 1 ຊະນິດເທົ່ານັ້ນ); 1 ຊະນິດ (ຊະນິດ *P. pubescens* Blume) ເກີດຢູ່ໄທ, ລາວ, ກຳປູເຈຍ ແລະ ຫວຽດນາມ.

ນິເວດ: ພືດເກີດຢູ່ທົ່ງທີ່ມີຫຍ້າສູງ ໃນເຂດຕ່ຳ, ບ່ອນທີ່ຖືກໄຟໃໝ້ເປັນບາງໄລຍະ.

ຂໍ້ຄວນເອົາໃຈໃສ່: ໃບຄືກັນກັບໃບຂອງຕົ້ນຫຍ້າ ແຕ່ອາດເຮັດໃຫ້ຜິດພາດໄດ້ໃນການຈຳແນກຍ້ອນໃບມັກລົ່ນ ເວລາອອກດອກ, ເວລານັ້ນອາດຈະເຂົ້າໃຈຜິດວ່າແມ່ນດອກເຜິ້ງບໍ່ມີໃບ. ຊໍ່ດອກຖືດອກທີ່ບໍ່ເປັນໜ້າສົງເກດເລີຍ.

ສະກຸນ **Panisea** Lindl. — *

ຊື່ພ້ອງ: ສະກຸນ *Zetagyne* Ridl.

ພືດອາໃສບ່ອນຄ້ຳ ຫຼື ເກີດຢູ່ຫີນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນ. ຫົວປອມ ມີປ້ອງດຽວ, ຖືໃບ 1 ຫາ 2 ໃບ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສົບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍຂອງໜໍ່ໃໝ່ (ຊິນັ້ງເທິສ), ເປັນພົ້ອ ຖືດອກບໍ່ຫຼາຍ ຫຼື ມີດອກດ່ຽວເທົ່ານັ້ນກໍ່ມີເລື້ອຍຢູ່. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ. ການດອກແຍກກັນ, ປົກກະຕິ ອອກສີຂຽວ ຫຼື ມີສີຂາວ. ກົບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ບໍ່ແບ່ງເປັນປ່ຽງ ຫຼືແບ່ງເປັນປ່ຽງຂ້າງນ້ອຍໆ, ຖ້າເບິ່ງທາງຂ້າງເຫັນວ່າຕີນຂອງກົບດອກຮູບຮີມສົບເປັນຮູບ S. ປາຍຂອງເສົາເກສອນເປັນຮູບໝວກປົກກອມເອົາຮອຍເມັດລະອອງ, ບາງຄັ້ງກໍ່ມີຕິ່ງຂ້າງອີກ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂ້ງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວົງຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ. 7 ຊະນິດ; 4 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 3 ຊະນິດຢ่ູຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດພູຕ່ຳ ແລະ ເຂດພູສູງ, ບາງຄັ້ງກໍ່ເກີດຢ่ູນຳໂງ่ນຫີນ.

ຂໍ້ຄວນເອົາໃຈໃສ່: ເປັນພືດໃກ້ຄຽງກັບສະກຸນ *Coelogyne*, ມີດອກບໍ່ເປັນທີ່ສັງເກດ ຊຶ່ງມີຈຸດເດັ່ນ ຢູ່ກີບດອກຮູບຮີມສິບຮາບພຽງ, ບໍ່ມີປ່ຽງຂ້າງ ຫຼື ມີປ່ຽງຂ້າງນ້ອຍໆແຕ່ບໍ່ຕັ້ງຊັນຂຶ້ນ, ຊຶ່ງຮັດເອົາເສົາເກສອນ ດັ່ງໃນສະກຸນ *Coelogyne*. ບໍ່ໄດ້ມີການນຳເອົາໄປປູກເລື້ອຍປານໃດ.

ສະກຸນ **Paphiopedilum** Pfitzer — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ ຫຼື ອາໃສບ່ອນຄ້ຳ, ແຕ່ມີໜ້ອຍກວ່າ, ມີລຳເລື່ອຈະແຈ້ງ ຫຼື ບໍ່ມີຊັດ. ຮາກມຸກຫຼາຍ ແລະ ມີຂົນຫຸ້ມ, ບໍ່ແຕກແໜງ. ລຳຕົ້ນສັ້ນໆ. ໃບຈຳນວນໜ້ອຍ, ມີການຫຸ້ມຢູ່ຕົ້ນ, ຈັດລຽງເປັນ 2 ແຖວ, ບໍ່ມີຂົນ ຫຼື ມີຂົນຢາຍຢູ່ຕາມແຄມ, ຂຽວຕະຫຼອດປີ, ພັບເຂົ້າກັນເອລາຍັງຈູມຢູ່, ມັກມີຈຸດໆຢາຍຢູ່ເລື້ອຍໆ. ຊໍ່ດອກອອກຢູ່ປາຍ, ເປັນພົ້ວຖືດອກຈຳນວນໜ້ອຍ ຫາຫຼາຍ ຫຼື ວ່າມີດອກດ່ຽວ. ດອກຂະໜາດໃຫຍ່ ຫາໃຫຍ່ຫຼາຍ, ຢູ່ໃນທ່າປີ້ນ, ບາງຄັ້ງດອກບານຕິດຕໍ່ກັນ. ການດອກຂ້າງເຊື່ອມຕິດກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ເປັນຮູບເກືອບຫຸ້ມ. ເສົາເກສອນກົ່ງລີງລຸ່ມໄປຫາງປາກຂອງກີບດອກຮູບຮີມສິບ, ຢູ່ໂຄນຂອງກີບດອກນີ້ມີຕຸ່ງ ຄ້າຍຮູບເຂນ. ເສົາເກສອນບໍ່ມີຕີນ. ຖົງເມັດລະອອງສົມບູນເພດມີ 2 ຖົງ, ເມັດລະອອງບໍ່ຈັບຕິດເຂົ້າກັນເປັນກຸ່ມເມັດລະອອງ ແຕ່ກໍ່ມີທາດເມືອກເຮັດໃຫ້ໜຽວຢູ່.

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍຕາເວັນອອກເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະໂຊໂລມົງ. ປະມານ 70 ຊະນິດ; 13 ຊະນິດຢູ່ໄທ, 6 ຊະນິດຢູ່ລາວ, 3 ຊະນິດຢູ່ກຳປູເຈຍ, 19 ຊະນິດຢູ່ຫວຽດນາມ.

ນິເວດ: ພືດເກີດຢູ່ດິນໃນປ່າເຂດຕ່ຳ ແລະ ເຂດພູສູງ, ບ່ອນທີ່ມັກມີຜາຫີນປູນຊັນ. ນອກນັ້ນຍັງມີຊະນິດທີ່ເກາະທ້ອຍນຳຕົ້ນໄມ້ໃຫຍ່ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເກືອບໝົດທຸກຊະນິດຂອງສະກຸນນີ້ເປັນທີ່ນິຍົມຫຼາຍຂອງນັກສະສົມດອກເຜົ້າ, ຍ້ອນແນວນັ້ນຊະນິດສ່ວນຫຼາຍໃນສະກຸນນີ້ ຈຶ່ງປະເສີນໜ້າກັບບັນຫາຈະສູນພັນໃນທຳມະຊາດຢູ່.

ສະກຸນ **Papilionanthe** Schltr. — *

ພືດເກີດຢູ່ດິນ ຫຼື ອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ມັກທາວຂຶ້ນ. ໃບມີຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈູມຢູ່, ເປັນທ່ອນກົມ. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຖືດອກຈຳນວນໜ້ອຍ ຫຼື ມີດອກດ່ຽວ. ດອກຂະໜາດກາງ ຫາໃຫຍ່, ຢູ່ໃນທ່າປີ້ນ, ສະດຸດຕາ. ການດອກແຍກກັນ. ກີບດອກຮູບຮີມສິບເໜັງບໍ່ໄດ້, ມີເດືອຍ, ເດືອຍຢູ່ຂ້າງໃນ ມີຮອຍດ້ານ. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຕ່ລະອັນມີຝາອັດສັ້ນໆ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດ້ອມ.

ການແຈກຢາຍ: ພົບຢູ່ ສຣິລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ຊຸມາຕຼາ, ບອກເນໂອ, ໝູ່ເກາະລະຫວ່າງຊາວາ ແລະ ຕີມໍ (Lesser Sunda). ປະມານ 10 ຊະນິດ; 3 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນ, ໃນປ່າທາມ ຫຼື ໃນບ່ອນມີຫີນ ໃນປ່າເຂດຕ່ຳ ຫຼື ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນນ້ອຍ ແຕ່ສຳຄັນທາງດ້ານປະດັບ, ມັນໃກ້ຄຽງກັບສະກຸນ *Vanda* ແລະ ສະກຸນ *Holcoglossum*, ຊຶ່ງມັນແຕກຕ່າງຍ້ອນລຳຕົ້ນຍາວ ແລະ ມີໃບເປັນທ່ອນກົມ. ໄດ້ມີການນຳໃຊ້ ສະກຸນນີ້ເຂົ້າໃນການຜະສົມພັນຊອດຫຼາຍຢູ່.

ສະກຸນ **Pecteilis** Raf. — *

ຊື່ພ້ອງ: ສະກຸນ *Parhabenaria* Gagnep.

ພືດເກີດຢູ່ດິນ ມີກາບເຕີບໃຫຍ່ດ້ານຂ້າງ, ມີຫົວໃຕ້ດິນ. ລຳຕົ້ນສັ້ນ ຫຼື ຍາວ, ໃບໜ້ອຍ ຫາຫຼາຍໃບ. ໃບມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກຫາງປາຍ, ເປັນພົ້ວຖີ ດອກແຕ່ໜ້ອຍ ຫາຫຼາຍດອກ. ດອກມີຂະໜາດກາງ ຫາໃຫຍ່, ຢູ່ໃນທ່າປີ້ນ, ສະດຸດຕາ, ປົກກະຕິມີສີຂາວ. ກາບດອກແຍກກັນ. ກີບດອກຮູບຮີມລົບມີເດືອຍ, ເໜັງບໍ່ໄດ້, ບໍ່ແບ່ງເປັນປ່ຽງ ຫຼື ແບ່ງເປັນ 3 ປ່ຽງ, , ປ່ຽງຂ້າງ ມັກມີຍອຍໆຢູ່ຕາມແຄມ. ເສົາເກສອນບໍ່ມີຕີນ, ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮວງຮັບແບ່ງເປັນ 2 ບົ້ງ ຮູບໝອນຈັດຢູ່ໃກ້ໆກັນ.

ການແຈກຢາຍ: ພົບຢູ່ເອເຊຍເຂດຮ້ອນ, ຍີ່ປຸ່ນ. ປະມານ 6 ຊະນິດ; 3 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 2 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນ ໃນທີ່ໆຫຍ້າ ຢູ່ລະດັບຕ່ຳຫຼາຍກວ່າທີ່ສູງ.

ຂໍ້ຄວນເອົາໃຈໃສ່: ເປັນຕົ້ນດອກເຜົ້ງເກີດຢູ່ດິນທີ່ແປກ, ໃກ້ຄຽງກັບສະກຸນ *Habenaria* ຊຶ່ງມັນແຕກຕ່າງ ຍ້ອນຮູບຮ່າງຂອງຮວງຮັບ. ໄດ້ມີການນຳເອົາໄປປູກຫຼາຍຢູ່ ແຕ່ໃນທຳມະຊາດມັນຍັງເຫຼືອພຽງແບບຫ່າງໆ ຍ້ອນການເກັບເກີນຂອບເຂດ.

ສະກຸນ **Pelatantheria** Ridl. — *

ພືດອາໃສບ່ອນຄ້ຳ ມີກາບເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວຫຼາຍ. ໃບມີຫຼາຍ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສົບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່, ໃບສັ້ນ. ຊໍ່ດອກອອກຫາງຂ້າງ, ເປັນພົ້ວສັ້ນ ຖືດອກຈຳນວນໜ້ອຍ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ. ກາບດອກແຍກກັນ. ກີບດອກຮູບຮີມລົບ ເຊື່ອມຕິດ ກັບເສົາເກສອນຢ່າງແໜ້ນໜາ, ມີເດືອຍ, ເດືອຍຢູ່ຂ້າງໃນ ມີແຜ່ນບາງໆແບ່ງເດືອຍຕາມລວງຍາວ; ຝາດ້ານຫຼັງ ຂອງເດືອຍ ໃກ້ໆກັບປາກຂອງເດືອຍ ມີຮອຍດ້ານເປັນແຜ່ນກວ້າງ. ເສົາເກສອນບໍ່ມີຕີນ. ປາຍຂອງເສົາເກສອນ ມີຕິ່ງຮຽວ ແລະ ກົ່ງ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນປານໃດ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ ພາກຕາເວັນຕົກສ່ຽງໃຕ້, ຊຸມາຕຼາ. 5 ຊະນິດ; 4 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 4 ຊະນິດຢູ່ຫວຽດນາມ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ພືດມີລຳຕົ້ນຍາວ, ມີໃບສັ້ນ, ມີຊໍ່ດອກສັ້ນ ຖືດອກຈຳນວນໜ້ອຍ. ຖ້າເບິ່ງຜິວເຜີນ ດອກບໍ່ຕ່າງຫຍັງກັບດອກຂອງສະກຸນ *Cleisostoma* ແລະ ຖ້າອີງໃສ່ວ່າ ຊະນິດ *C. gjellerupii* J J.Sm. ທີ່ເກີດຢູ່ນິວກີເນຍ ມີນິເວດເກືອບວ່າອັນດຽວກັນກັບຂອງສະກຸນ *Pelatantheria*, ມັນອາດຫຼີກບໍ່ໄດ້ ທີ່ຈະຕ້ອງ ໄດ້ເຊື່ອມສະກຸນ *Pelatantheria* ກັບສະກຸນ *Cleisostoma*. ບາງຄັ້ງຄາວກໍ່ໄດ້ມີການນຳເອົາສະກຸນນີ້ ໄປ ປູກໃນຊຸດສະສົມດອກເຜົ້ງຢູ່.

ສະກຸນ **Pennilabium** J.J. Sm. — *

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍ, ມີກາບເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນຫຼາຍ ຫຼື ຍາວກໍ່ມີ ແຕ່ຫາຍາກ. ໃບມີ ຈຳນວນໜ້ອຍ ຫາບໍ່ຫຼາຍປານໃດ, ຈັດລຽງເປັນ 2 ແຖວ, ມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສົບປ່ຽນຕາມລະດູການ,

ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ອ ຖືດອກຈຳນວນບໍ່ຫຼາຍປານໃດ. ດອກອອກເທື່ອລະ ດອກໆ ເທື່ອລະ 2 ດອກ ເປັນລຳດັບຕາມໆກັນ. ປົກກະຕິ ໃບຂ້ອນດອກຈັດລຽງເປັນ 2 ແຖວ. ດອກຂະໜາດ ນ້ອຍ, ມີອາຍຸສັ້ນ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ, ເດືອຍຢູ່ຂ້າງໃນ ບໍ່ມີຮອຍ ດ້ານ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ເປັນກ້ອນດຽວ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີ ດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ ພາກຕາເວັນຕົກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ. ປະມານ 10 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເພິ່ນຈຳແນກຊະນິດທີ່ເປັນຕົວແທນຂອງສະກຸນນີ້ ໄດ້ງ່າຍຍ້ອນປ່ຽງຂ້າງຂອງກີບດອກ ຮູບຮີມສິບ ມີແຄມເປັນຍອຍນ້ອຍໆ ຫຼື ເປັນວັກໆຄືແຂ້ວ. ການນຳເອົາໄປປູກ ແມ່ນຫາຍາກ.

ສະກຸນ **Peristylus** Blume

ພືດເກີດຢູ່ດິນ, ມັກມີຫົວຢູ່ໃຕ້ດິນເລື້ອຍໆ. ລຳຕົ້ນຍາວ, ມີໃບຈຳນວນໜ້ອຍ ຫາຫຼາຍ. ໃບມີກາບຫຸ້ມຢູ່ຕີນ, ປົກ ກະຕິ ຈະຈຸ້ມກັນຢູ່, ມັກຈັດລຽງຕາມແບບກ້ຽວກົ້ນຫອຍເລື້ອຍໆ, ໃບບໍ່ມີຂົນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມ ລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ອ ຖືດອກຈຳນວນໜ້ອຍ ຫາຫຼາຍ. ດອກຂະໜາດນ້ອຍ, ຢູ່ ໃນທ່າປົ້ນ, ປົກກະຕິ ມີສີຂຽວ, ສີຂາວ, ຫຼື ອອກສີກະເບົາ ຫຼື ອອກສີເຫຼືອງ. ກາບດອກແຍກກັນ. ກີບດອກຮູບຮີມ ສິບບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງອອກເປັນ 3 ປ່ຽງ ; ສ່ວນຫຼາຍ ເດືອຍສັ້ນ, ປຸ້ມນິນ ຫຼື ວ່າເປັນຮູບຫຼອດ ຍາວແລະແຄບໆ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີ ອ້ອມ. ຮວງຮັບແບ່ງເປັນ 2 ບົ້ງ, ເປັນຮູບໝອນ ແຍກກັນຈະແຈ້ງ ແຕ່ເຊື່ອມຕິດກັບໂຄນຂອງກີບດອກຮູບຮີມ ສິບ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ອິນດູຈີນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອີດສະເຕເລຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງເກາະຕາຮີຕີ. ປະມານ 70 ຊະນິດ; 13 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 7 ຊະນິດຢູ່ກຳປູເຈຍ, 10 ຊະນິດຢູ່ຫວຽດນາມ.

ນິເວດ: ເກີດຢູ່ດິນໃນປ່າ ແລະ ຢູ່ຕາມສະຖານທີ່ເປີດແປນ ແລະ ຊຸ່ມຊື້ນດີ ໃນເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບສະກຸນ *Habenaria* ຫຼາຍ ແລະ ຖືກຈັດເປັນອີງປະກອບຂອງສະ ກຸນນີ້ ແຕ່ດອກຂອງທັ້ງ 2 ສະກຸນນີ້ບໍ່ມີຄວາມໝາຍຫຍັງ. ມັນຈະຕ່າງກັນຢູ່ລະດັບໂຄງສ້າງຂອງເສົາເກສອນເທົ່ານັ້ນ. ຫຼາຍໆຊະນິດຂອງສະກຸນ *Peristylus* ມີເດືອຍສັ້ນ, ໃຄ່ ແລະ ເປັນຮູບຖົງ; ລັກສະນະດັ່ງກ່າວນີ້ບໍ່ພົບນຳ ສະກຸນ *Habenaria* ທີ່ເກີດຢູ່ເອເຊຍຕາເວັນອອກສ່ຽງໃຕ້.

ສະກຸນ **Phaius** Lour. — *

ພືດເກີດຢູ່ດິນ ຫຼື ອາໃສບ່ອນຄ້ຳ, ມີກາບເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນໆ. ຫົວປອມສັ້ນ ແລະອີວະ ຫຼື ຍາວ ຫຼື ບໍ່ມີຫົວປອມເລີຍ; ຫົວປອມບັນຈຸປ້ອງຫຼາຍກວ່າ 1 ປ້ອງ, ຖືໃບຈຳນວນໜ້ອຍ. ຖ້າກໍລະນີບໍ່ແມ່ນລຳຍາວ, ໃບມີ ຈຳນວນໜ້ອຍ ຫາບໍ່ຫຼາຍປານໃດ. ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນ ເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ ຫຼື ອອກແຕ່ລຸ່ມຕົ້ນ, ເປັນພົ້ອ ຖືດອກຈຳນວນໜ້ອຍ ຫາຫຼາຍດອກ. ດອກຂະໜາດກາງ ຫາໃຫຍ່, ມີທ່າປົ້ນ, ສະດຸດຕາເລື້ອຍໆ. ກາບດອກແຍກກັນ, ກີບດອກຮູບຮີ

ມສິບ ມີເດືອຍ ຫຼື ບໍ່, ກີບຕິດກັບໂຄນຂອງເສົາເກສອນ, ສ່ວນລຸ່ມຮັດເຂົ້າກັບເສົາເກສອນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ທະວີບອາຟຼິກກາເຂດຮ້ອນ, ມາດາກັດສະກາ, ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອົດສະເຕຼເລຍ, ພາກຕາເວັນອອກຂອງເກາະຕາຮີຕີ. ປະມານ 45 ຊະນິດ; 5 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 6 ຊະນິດຢູ່ຫວຽດນາມ, ສ່ວນ ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ຫຼື ອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ ຫຼື ເກີດຢູ່ດິນ ໃນສະຖານທີ່ເປີດແປນຂອງເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ຊະນິດ *Phaius tankervilleae* (Banks ex L'Hér.) Blume ເປັນຊະນິດ ທີ່ຄົນນິຍົມປູກທົ່ວໄປ, ສ່ວນວ່າ ຊະນິດອື່ນໆມີການນິຍົມປູກໜຸດນີ້. ສະກຸນ *Phaius* ໃກ້ຄຽງກັບສະກຸນ *Calanthe*, ແຕ່ ປະກົດວ່າດອກແຕກຕ່າງກັນຍ້ອນວ່າເສົາເກສອນບໍ່ຕິດກັບກີບດອກຮູບຮີມສິບ ແລະ ກີບດອກຍັງຫຸ້ມເອົາເສົາເກສອນສ່ວນໃດສ່ວນໜຶ່ງອີກ.

ສະກຸນ **Phalaenopsis** Blume — *

ຊື່ພ້ອງ: ສະກຸນ *Kingiella* Rolfe; ສະກຸນ *Kingidium* P.F.Hunt; ສະກຸນ *Polychilos* Breda, Kuhl & Hasselt

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ບາງຊະນິດບໍ່ມີໃບເລີຍຕະໜອດລະດູແລ້ງ. ລຳຕົ້ນສັ້ນໆ. ໃບມີຈຳນວນໜ້ອຍ, ມີການຫຸ້ມຢູ່ຕີນ, ຈັດລຽງເປັນ 2 ແຖວ, ມັກມີແຜ່ນໃບກວ້າງ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງຈາກລຳຕົ້ນເອງ, ເປັນພົ້ວ ຫຼື ຊໍ່ແຕກແໜງ. ດອກອອກໄລ່ເລ່ຍກັນ, ຂະໜາດນ້ອຍ ຫາໃຫຍ່, ຢູ່ໃນທ່າປັ້ນ, ສະດຸດຕາ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ (ກ່ຳລະນີສະກຸນ *Kingidium*) ຫຼື ບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງເປັນປ່ຽງຈະແຈ້ງ, ມີຮອຍດ້ານແບ່ງເປັນ 2 ປ່ຽງ ຫຼື ວ່າຮອຍດ້ານມີຍອຍໆຢູ່ລະດັບຕີນຂອງປ່ຽງກາງຂອງກີບດອກຮູບຮີມສິບ ແລະ ຍັງມີຮອຍດ້ານແບ່ງເປັນແງ່ມຢູ່ລະຫວ່າງປ່ຽງຂ້າງຂອງກີບດອກເລື້ອຍໆ. ສ່ວນລຸ່ມຂອງປ່ຽງຂ້າງຂອງກີບດອກມີຮອຍດ້ານແບບລຽບງ່າຍ. ເສົາເກສອນມີຕີນທີ່ຂະຫຍາຍຕົວດີ. ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມບໍ່ຈະແຈ້ງປານໃດ ຫຼື ຈຳນວນ 4 (ຫາຍາກແດ່), ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອົດສະເຕຼເລຍ. ປະມານ 45 ຊະນິດ; 4 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 8 ຊະນິດຢູ່ຫວຽດນາມ, ສ່ວນ ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູຕ່ຳ, ມັກມີຢູ່ບ່ອນຮົ່ມເລື້ອຍໆ.

ຂໍ້ຄວນເອົາໃຈໃສ່: ເປັນໜຶ່ງໃນສະກຸນທີ່ໄດ້ຮັບຄວາມນິຍົມສູງ, ຖືກນຳໄປຜະລິດເປັນພັນຊອດຢ່າງກວ້າງຂວາງ. ຊະນິດສ່ວນໜາຍຂອງສະກຸນນີ້ແມ່ນຫາຍາກແລ້ວຕາມແບບທຳມະຊາດ ຍ້ອນໄດ້ຖືກເກັບໂດຍບໍ່ຄຳນຶງເຖິງຜົນກະທົບ ແລະ ຍ້ອນນິເວດເດີມໆຂອງມັນຖືກທຳລາຍເຊັ່ນດຽວ.

ສະກຸນ **Pholidota** Lindl. ex Hook. — *

ເປັນພືດອາໃສບ່ອນຄ້ຳ ຫຼື ເກີດຢູ່ດິນ ແຕ່ຫາຍາກແດ່, ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນໜາຍ ຫາຍາວ. ຫົວປອມ ມີປ້ອງ 1 ປ້ອງ. ໃບຈຳນວນ 1 ຫຼື 2, ບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ ຫຼື ບໍ່, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກອອກແຕ່ລຸ່ມຕົ້ນ (ເຣເຕຣັງເທີສ) ຫຼື ອອກຢູ່ປາຍ (ຊິ

ນ້ຽເທິສ ຫຼື ຣິສເຕຣ້ຽເທິສ), ເປັນປະເພດພົ້ອ ຖືດອກຈຳນວນໜ້ອຍ ຫາຫຼາຍດອກ, ດອກມີຂະໜາດນ້ອຍ ຫາ ກາງ, ຢູ່ໃນທ່າປີ້ນ. ກາບດອກແຍກກັນ. ກີບດອກຮູບຮີມສິບ ບໍ່ມີເດືອຍ, ເໜ້ຽບໍ່ໄດ້, ແບ່ງເປັນສ່ວນກີກ ແລະ ສ່ວນປາຍ, ສ່ວນກີກເປັນຮູບຈອກ ແລະ ບໍ່ມີປ່ຽງຂ້າງ ແລະ ສ່ວນປາຍ ແປ ແລະ ງໍເຂົ້າດັ່ງຮູບຂໍ. ເສົ້າເກສອນ ມີຕີນສັ້ນໆ ຫຼື ບໍ່ມີຕີນ, ມີປາຍແປ ເປັນຮູບໜອກ. ກຸ່ມເມັດລະອອງຈຳນວນ 4, ແຂ້, ມີກ້ານ, ເຕົ້າໄຂ່ມີກ້ານ ຫຼື ບໍ່ມີ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງເກາະຕາຮີຕີ. ປະມານ 28 ຊະນິດ; 6 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 9 ຊະນິດຢູ່ຫວຽດນາມ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ ໂດຍສະເພາະ ມີຫຼາຍໃນພູສູງ; ຍັງພົບຢູ່ ຕາມໂງ່ນຫີນ ແລະ ບ່ອນຜາຊັນ ທີ່ມີໄຄເກີດຢູ່.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ໃກ້ຄຽງກັບສະກຸນ *Coelogyne* ແຕ່ດອກບໍ່ສະດຸດຕາເທົ່າ, ດອກມີ ກີບດອກຮູບຮີມສິບ ທີ່ມີລັກສະນະສະເພາະ. ບາງຄັ້ງຄາວກໍ່ມີການນຳເອົາໄປປູກ.

ສະກຸນ **Phreatia** Lindl. — *

ພືດມີການເຕີບໃຫຍ່ດ້ານປາຍ ແລະ ດ້ານຂ້າງ, ບໍ່ມີລຳເລືອ ຫຼື ມີລຳເລືອສັ້ນໆ ຫາຍາວ. ລຳຕົ້ນສັ້ນຫຼາຍ ຫຼື ຍາວ. ຫົວປອມມີຫຼາຍ ຫຼື ບໍ່ມີເລີຍ, ປະກອບດ້ວຍປ້ອງແຕ່ 1 ຫາບໍ່ຫຼາຍປ້ອງປານໃດ. ກ້ານໃບ ມີຫົວປອມ, ໃບມີ ຈຳນວນ 1 ຫາຈຳນວນໜ້ອຍ; ກ້ານໃບບໍ່ມີຫົວປອມ, ໃບມີຈຳນວນບໍ່ຫຼາຍ ຫາມີໃບດົກ. ໃບມີການຫຸ້ມຢູ່ຕີນ, ບໍ່ມີ ຂົນ, ຊະນິດມີໃບໜີບແປເຂົ້າຫາງຂ້າງແມ່ນຫາຍາກ (ກ້ານໃບນີ້ພົບຢູ່ນິວກີເນຍ), ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈຸມຢູ່, ດອກຂະໜາດນ້ອຍ ຫານ້ອຍຫຼາຍ, ຢູ່ໃນທ່າປີ້ນ, ມີສີຂາວ ຫຼື ອອກສີຂຽວ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ ຫຼື ບໍ່ມີ, ເໜ້ຽບໍ່ໄດ້. ເສົ້າເກສອນມີຕີນ. ກຸ່ມເມັດລະອອງຈຳ ນວນ 8, ແຂ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ພາກຕາເວັນອອກສ່ຽງເໜືອ, ເອເຊຍຕາເວັນອອກເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ນິວຊີແລັນ, ໝູ່ເກາະປາຊີຟິກ, ພາກຕາເວັນອອກ ຂອງເກາະຕາຮີຕີ. ປະມານ 150 ຊະນິດ; 3 ຊະນິດຢູ່ໄທ, 3 ຊະນິດຢູ່ຫວຽດນາມ, ຍັງບໍ່ທັນໄດ້ເກັບກຳຢູ່ລາວ ຫຼື ກຳປູເຈຍ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າຍ້ວຕະຫຼອດປີ ເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນພືດທີ່ບໍ່ເປັນທີ່ສັງເກດ, ປົກກະຕິ ພົ້ວດອກດົກ, ດອກສີຂາວຂະໜາດນ້ອຍທີ່ສຸດ. ສະ ກຸນ *Phreatia* ແມ່ນໜຶ່ງໃນຈຳນວນໜ້ອຍຂອງສະກຸນດອກເຜົ້ງທີ່ມີພາກສ່ວນອະໄວຍະວະກ່ຽວກັບການເຕີບ ໃຫຍ່ຫຼາກຫຼາຍກວ່າພາກສ່ວນດອກ. ມັນໃກ້ຄຽງກັບສະກຸນ *Thelasis* ແຕ່ດອກບໍ່ຫົນຫານເທົ່າ, ມີຕີນເສົ້າເກ ສອນຈະແຈ້ງ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Platanthera** Rich. — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານປາຍ, ມີຫົວໃຕ້ດິນ ຫຼື ບໍ່ມີ. ລຳຕົ້ນສັ້ນ ຫາຍາວ, ມີໃບໜ້ອຍ; ໃບມີການຫຸ້ມ ຢູ່ຕີນ, ບໍ່ມີຂົນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍ, ເປັນພົ້ວ ຖືດອກຈຳນວນໜ້ອຍ ຫາຫຼາຍດອກ. ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ, ຊະນິດທີ່ພົບຢູ່ເອເຊຍ ມີດອກສີຂາວ ຫຼື ສີຂຽວ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ, ເໜ້ຽບໍ່ໄດ້, ບໍ່ແບ່ງເປັນປ່ຽງ. ເສົ້າເກສອນບໍ່ມີຕີນ, ກຸ່ມ

ເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ. ຮອງຮັບມີແຜ່ນໜ້າວ້ຳລິ່ງ ສ່ວນໃດ ສ່ວນໜຶ່ງ.

ການແຈກຢາຍ: ພົບຢູ່ທະວີບຢູຣິບເຂດອົບອຸ່ນ, ທະວີບເອເຊຍ ແລະ ອະເມຣິກາເໜືອ, ອາຟຼິກກາ, ເອເຊຍ ແຜ່ນດິນໃຫຍ່, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ. ປະມານ 40 ຊະນິດ; 2 ຊະນິດເກີດຢູ່ ໄທ, 1 ຊະນິດຢູ່ຫວ່ງດນາມ, ສ່ວນ ຢູ່ລາວ ແລະ ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າເປີດຂອງເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນ *Platanthera* ຕ່າງຈາກສະກຸນ *Habenaria* ແລະ ສະກຸນ *Peristylus* ຢູ່ລະ ດັບໂຄງສ້າງຂອງຮອງຮັບ. 2 ຊະນິດທີ່ເກີດໃນເຂດພວກເຮົາ ເປັນຕົ້ນທີ່ບໍ່ໜ້າສົງເກດເລີຍ, ມີດອກນ້ອຍໆສີ ຂຽວ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Pleione** D.Don — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ ຫຼື ເກີດນຳບ່ອນມີຫີນ ຫຼື ເກີດຢູ່ດິນ, ປົກກະຕິ ບໍ່ມີລຳເລືອຈະ ແຈ້ງ. ຫົວປອມ ມີປ້ອງ 1 ປ້ອງ, ມີໃບ 1 ຫຼື 2 ໃບ, ອາຍຸສັ້ນ. ໃບບໍ່ມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນຕາມລະດູ ການ, ມ້ວນເຂົ້າກັນຕາມລວງຍາວ ເວລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍຂອງໜໍ່ໃໝ່ (ໂປເຕຣັງເທີສ), ປົກກະຕິ ຊໍ່ ດອກຖືດອກດ່ຽວເທົ່ານັ້ນ. ດອກໃຫຍ່, ຢູ່ໃນທ່າປີ້ນ, ສະດຸດຕາ. ການດອກແຍກກັນ, ມີສີກຸຫຼາບ, ສີແດງຊ້ຳ, ສີ ຂາວ ຫຼື ສີເຫຼືອງ. ກີບດອກຮູບຮີມລົບບໍ່ມີເດືອຍ, ເໜັງບໍ່ໄດ້, ເປັນແຜ່ນດຽວ ຫຼື ແບ່ງເປັນ 3 ປ່ຽງ, ສ່ວນກີກຮັດໃສ່ ກັບເສົາເກສອນ. ປາຍເສົາເກສອນແໜມເປັນຮູບໝວກ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂ໋ງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ບູຕານ, ມ່ຽນມ້າ, ຈີນ, ໄທ, ລາວ, ໄຕ້ຫວັນ. ປະມານ 18 ຊະນິດ; 3 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 2 ຊະນິດຢູ່ຫວ່ງດນາມ; ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ຕາມຕົ້ນໄມ້ ທີ່ມີໄຄ ເກີດຢູ່ແລ້ວ ຫຼື ຕາມໂງ່ນຫີນ ໃນເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນຕົ້ນດອກເຜົ້ງເກີດຢູ່ບ່ອນເຢັນທີ່ໜ້າຈັບໃຈ ແລະ ມີຄົນນິຍົມສົມຄວນ, ມີ ດອກໃຫຍ່ຄ້າຍຄືກັບສະກຸນ *Coelogyne*, ພົບຫຼາຍ ໃນພູຣິມາລາຢາ ແລະ ຈີນ ພາກໃຕ້. ການນຳເອົາໄປປູກ ມີທົ່ວໆໄປ ໃນເຂດພູມອາກາດອົບອຸ່ນ.

ສະກຸນ **Plocoglottis** Blume — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນ ຫາສັ້ນຫຼາຍ. ມີຫົວປອມ ຫຼື ບໍ່ມີ, ປະກອບດ້ວຍປ້ອງ 1ປ້ອງ ຫາບໍ່ຫຼາຍປ້ອງປານໃດ, ມີໃບ 1 ຫາຈຳນວນໜ້ອຍ. ກໍລະນີບໍ່ມີຫົວປອມ, ລຳຕົ້ນຍາວ ຖືໃບຈຳນວນ ໜ້ອຍ ຫາຫຼາຍໃບ. ໃບມີການຫຸ້ມຢູ່ຕົ້ນ ຫຼື ບໍ່ມີການຫຸ້ມ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ ຫຼື ໃບ ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈຸມຢູ່, ມີສີຂາວ, ບາງຄັ້ງກໍ່ມີສີແດງຊ້ຳ ຫຼື ມີແຊກຫາງ ຂວາງສີຂາວອົມຂຽວ ຫຼື ມີຈຸດເຫຼືອງຈືດຢາຍຢູ່. ຊໍ່ດອກອອກຫາງຂ້າງ, ອອກຈາກສ່ວນລຸ່ມຂອງຕົ້ນ, ເປັນປະ ເພດພົ້ວ ຖືຫຼາຍດອກ, ດອກບານເປັນລຳດັບຕາມໆກັນ. ດອກຂະໜາດກາງ, ຢູ່ໃນທ່າປີ້ນ, ການດອກແຍກກັນ. ກີບດອກຮູບຮີບສົບບໍ່ມີເດືອຍ, ຫ້ອຍຈັບກັບເສົາເກສອນ, ກະຕຸ້ນໄດ້ງ່າຍ. ເສົາເກສອນມີຕີນສັ້ນໆ ຫຼື ບໍ່ມີ. ກຸ່ມ ເມັດລະອອງຈຳນວນ 4 ແຂ໋ງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ພາກຕາເວັນຕົກຂອງ ເຂດປາຊີຟິກ. ປະມານ 40 ຊະນິດ; 5 ຊະນິດຢູ່ໄທ, 1 ຊະນິດຢູ່ກຳປູເຈຍ, ສ່ວນຢູ່ລາວ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນໃນປ່າເຂດຕ່ຳ ແລະ ເຂດພູສູງ, ປົກກະຕິຢູ່ບ່ອນຮົ່ມ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ມີລັກສະນະສະເພາະເດັ່ນ ແລະ ແປກໝູ່ຫຼາຍ, ສາມາດຈຳແນກໄດ້ງ່າຍ ຍ້ອນ ກີບດອກຮູບຮີບສິບນ້ອຍໆ ແລະ ກະຕຸ້ນໄດ້ງ່າຍ, ຊຶ່ງມັນຈະດີດຂຶ້ນຂ້າງເທິງໄປຫາເສົາເກສອນຢ່າງກະທັນຫັນເມື່ອຖືກຊຸນ ແລະ ມັນກໍ່ບໍ່ກັບມາທ່າເດີມເລີຍຖ້າວ່າບໍ່ບັງຄັບມັນ.

ສະກຸນ **Poaephyllum** Ridl.

ຊື່ພ້ອງ: ສະກຸນ *Lectandra* J.J.Sm.

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນຫຼາຍ. ລຳຕົ້ນຍາວ, ຮຽວ ແລະ ຖີ່ໃບຫຼາຍ. ໃບມີກາບຫຸ້ມຢູ່ຕົ້ນ, ຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່, ແຄບ. ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ອຮຽວຄືເສັ້ນລວດ. ດອກບານເປັນລຳດັບຕາມໆກັນ, ຂະໜາດນ້ອຍ, ຢູ່ໃນທ່າປົ້ນ, ປົກກະຕິ ອອກສີຂຽວ ຫຼື ອອກສີບົວ ໂດຍມີກີບດອກຮູບຮີມສິບສີຂາວ. ກາບດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີຕົ້ນ. ກຸ່ມເມັດລະອອງຈຳນວນ 8, ແຂ໋ງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວົງດີອັອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ. ປະມານ 7 ຊະນິດ; 1 ຊະນິດຢູ່ໄທ, ຍັງບໍ່ທັນໄດ້ເກັບກຳຢູ່ລາວ, ຫວຽດນາມ ຫຼື ກຳປູເຈຍ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ຢູ່ໃນປ່າຂຽວຕະຫຼອດປີ ໃນເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ຄ້າຍຄືກັບສະກຸນ *Appendicula* ຫຼາຍ, ຕ່າງແຕ່ວ່າກຸ່ມເມັດລະອອງຈຳນວນ 8, ແລະ ກີບດອກຮູບຮີມສິບບໍ່ມີຕິ່ງຢູ່ທີ່ໂຄນ. ແມ່ນສະກຸນທີ່ດອກບໍ່ມີຄວາມໝາຍຫຍັງໝົດ, ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Podochilus** Blume — *

ພືດອາໃສບ່ອນຄ້ຳຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນ. ລຳຕົ້ນຍາວ, ບໍ່ມຸກ, ຖີ່ໃບຈຳນວນຫຼາຍ, ແຕກແໜງ ຫຼື ບໍ່. ໃບມີກາບຫຸ້ມຢູ່ຕົ້ນ, ຈັດລຽງເປັນ 2 ແຖວ, ບໍ່ມີຂົນ, ແປເຂົ້າດ້ານໜ້າ ແລະ ດ້ານຫຼັງ ຫຼື ຖືກໜີບເຂົ້າດ້ານຂ້າງ, ສັບປ່ຽນຕາມລະດູການ ຫຼື ຂຽວຕະຫຼອດປີ, ພັບເຂົ້າກັນເວລາຍັງຈູມຢູ່, ປົກກະຕິ ໃບຍາວ ໜຸດ 1 ເຊັ່ນ. ຊໍ່ດອກອອກຢູ່ປາຍ, ບາງຄັ້ງກໍ່ອອກດ້ານຂ້າງຄືກັນ, ເປັນພົ້ອ ຖ້ດອກຈຳນວນໜ້ອຍຫາບໍ່ຫຼາຍດອກ ປານໃດ ຫຼື ອ່າແມ່ນດອກດ່ຽວ. ປົກກະຕິ ດອກຈະບານເປັນລຳດັບຕາມໆກັນ, ດອກຂະໜາດນ້ອຍຫຼາຍ, ຢູ່ໃນທ່າປົ້ນ, ດອກມັກບານຍາກເລື້ອຍໆ , ດອກອອກສີຂາວ, ມີຈຸດແດງຊ້ຳຢູ່ປາຍ. ກາບດອກດ້ານຂ້າງເຊື່ອມຕິດກັນຢູ່ໂຄນ, ປະກອບເປັນຄາງອອກໄປ, ບາງຄັ້ງກາບດອກຫຼັງກໍ່ເຊື່ອມຕິດກັບກາບດອກຂ້າງຄືກັນອີກ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີຕົ້ນ. ກຸ່ມເມັດລະອອງຈຳນວນ 4, ແຂ໋ງ, ມີກາບເປັນຫຼອດຫຸ້ມໄວ້, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວົງດີອັອມ.

ການແຈກຢາຍ: ພົບຢູ່ເອເຊຍເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ. ປະມານ 60 ຊະນິດ; 3 ຊະນິດຢູ່ໄທ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າຂຽວຕະຫຼອດປີ ໃນເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນໃກ້ຄຽງກັບ ສະກຸນ *Appendicula*. ມັນເປັນຕົ້ນນ້ອຍໆ ທີ່ມີດອກນ້ອຍທີ່ສຸດ ອອກສີຂາວ, ເກືອບວ່າເປັນຕົ້ນໄມ້ທີ່ບໍ່ມີຄຸນຄ່າທາງດ້ານປະດັບຈັກໜ້ອຍເລີຍ, ດັ່ງນັ້ນ ຈຶ່ງເຫັນວ່າການນຳເອົາ ໄປປູກ ແມ່ນຫາຍາກ.

ສະກຸນ **Polystachya** Hook. — *

(ຂໍ້ສັງເກດ: ແມ່ນສະກຸນໃຫຍ່ແລະມີຄວາມຫຼາກຫຼາຍລະດັບສູງ, ໂດຍສະເພາະໃນອາຟຼິກກາເຂດຮ້ອນ. ການພັນ ລະນາສະກຸນນີ້ຈະເຈາະຈົງໃສ່ ຊະນິດ ທີ່ເກີດຢູ່ເອເຊຍ). ເປັນພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານຂ້າງ, ລຳ ເລືອສັ້ນຫຼາຍ. ຫົວປອມສັ້ນ, ມີປ້ອງຫຼາຍກວ່າ 1 ປ້ອງ, ຖືໃບບໍ່ຫຼາຍ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມ ລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກຢູ່ປາຍ (ຊໍນັ້ງເທີສ), ແມ່ນພົ້ວ ມີດອກຫຼາຍ ຫຼື ຊໍ່ແຕກແໜງ. ດອກຂະໜາດນ້ອຍ, ບໍ່ຢູ່ໃນທ່າປີ້ນ, ມີຄາງຈະແຈ້ງ, ອອກສີເຫຼືອງ. ການດອກແຍກກັນ. ກີບດອກຮົ່ມສົບ, ເໜັງ ບໍ່ໄດ້, ບໍ່ມີເດືອຍ, ເສົາເກສອນບໍ່ມີຕີນ, ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີ ອ້ອມ.

ການແຈກຢາຍ: ພົບຢູ່ຕາມເສັ້ນອາຍັນ (ຍົກເວັ້ນນິວກີເນຍ, ອິດສະເຕເລຍ ແລະ ເຂດປາຊີຟິກພາກຕາເວັນ ອອກ), ມີຫຼາຍຢູ່ໄທ, ລາວ ແລະ ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດພູຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ຊະນິດ *Polystachya concreta* ຊຶ່ງອາດແມ່ນ ຊະນິດດຽວຂອງສະກຸນນີ້ ທີ່ເກີດຢູ່ເອ ເຊຍ, ແມ່ນໜຶ່ງ ໃນຈຳນວນທີ່ເກີດຢ່າງກວ້າງຂວາງກວ່າໝູ່ ໃນຕະກຸນຕົ້ນດອກເຜົ້ງ, ເພິ່ນໄດ້ພົບຢູ່ເກືອບທົ່ວ ເຂດອາຍັນ. ແມ່ນຕົ້ນທີ່ບໍ່ເປັນໜ້າສັງເກດເລີຍ, ຄຸນຄ່າດ້ານປະດັບກໍ່ຕ່ຳ.

ສະກຸນ **Pomatocalpa** Breda, Kull & Hasselt — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ ຫຼື ຍາວ. ໃບຈຳນວນໜ້ອຍ ຫາຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນໃບ, ບໍ່ມີຂົນ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນປະເພດພົ້ວ ຫຼື ຊໍ່ ແຕກແໜງ, ດອກຂະໜາດນ້ອຍ, ຢູ່ໃນທ່າປີ້ນ ຫຼື ບໍ່. ການດອກແຍກກັນ. ກີບດອກຮູບຮົ່ມສົບເຊື່ອມຕິດກັບເສົາ ເກສອນ, ມີເດືອຍ, ຝາດ້ານຫຼັງຂອງເດືອຍມີແຜ່ນລາແມນບາງໆ ທີ່ບໍ່ມີຂົນ ຕັ້ງຊັນຂຶ້ນ. ເສົາເກສອນບໍ່ມີຕີນ. ກຸ່ມ ເມັດລະອອງຈຳນວນ 4, ຈັດເປັນ 2 ກ້ອນ ຂະໜາດບໍ່ເທົ່າກັນປານໃດ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີ ອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອິດສະເຕ ເລຍ, ຕາເວັນອອກຂອງໝູ່ເກາະຊາມົວ. ປະມານ 35 ຊະນິດ; 9 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 3 ຊະນິດຢູ່ ຫວຽດນາມ, ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ຢູ່ໃນປ່າເຂດຕ່ຳ, ເກາະຢູ່ຕາມຕົ້ນໄມ້ທີ່ເກີດແບບທ່າງໆເຊັ່ນດຽວ.

ຂໍ້ຄວນເອົາໃຈໃສ່: ແມ່ນສະກຸນທີ່ໃກ້ຄຽງກັບສະກຸນ *Cleisostoma* ອີກສະກຸນໜຶ່ງ, ດອກຂະໜາດນ້ອຍ, ສ່ວນຫຼາຍມີສີຈືດໆ, ມີລັກສະນະສະເພາະເດັ່ນຢູ່ເດືອຍຂອງກີບດອກຮູບຮົ່ມສົບ, ມີແຜ່ນລາແມນບາງໆຕັ້ງຊັນ ຂຶ້ນຢູ່ໃນເດືອຍ. ຊະນິດສ່ວນຫຼາຍຂອງສະກຸນບໍ່ເປັນໜ້າຈັບໃຈຫຼາຍປານໃດ, ດັ່ງນັ້ນ ມັນຈຶ່ງຖືກຄົນເກັບໂດຍບໍ່ ເຈດຕະນາຫຼາຍກວ່າ, ຕົ້ນມັນກໍ່ຄ້າຍຄືກັບຕົ້ນໃນສະກຸນໃກ້ຄຽງຊຶ່ງມີດອກສະດຸດຕາກວ່າ.

ສະກຸນ **Porpax** Lindl. — *

ພືດອາໃສບ່ອນຄ້ຳ ຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລື້ອສັ້ນ. ຫົວປອມ ມີປ້ອງ 1 ປ້ອງ, ຖືໃບ 2 ໃບ, ປົກກະຕິ ໃບມີຮູບແຜ່ນມົນ, ໜີບຕິດກັບເປືອກຂອງຕົ້ນໄມ້ ທີ່ມັນທ້ອຍເກາະໃສ່, ຕົ້ນມັກມີເສັ້ນໃຍຄ້າຍຕາໜ່າງຫຸ້ມໄວ້. ໃບບໍ່ມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່, ມີອາຍຸສັ້ນ. ຊໍ່ດອກອອກທາງປາຍ, ປົ່ງອອກຈາກໜໍ່ໃໝ່ (ຊີນັງເທີສ ແລະ ໂປຼເຕຣັງເທີສ) ຫຼື ຈາກຫົວປອມທີ່ແກ່ແລ້ວ, ຖືດອກດ່ຽວ. ດອກຂະໜາດນ້ອຍ, ຢູ່ໃນທ່າປັ້ນ ຫຼື ບໍ່. ທັງ 3 ກາບດອກເຊື່ອມຕິດກັນຢູ່ຕົ້ນ ຮອດໜຶ່ງສ່ວນສາມຂອງລວຍາວ, ຂ້າງນອກມີຂົນຫຸ້ມ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີຕົ້ນ. ກຸ່ມເມັດລະອອງຈຳນວນ 8, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວີຊິດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍເຂດຮ້ອນ ພາກຕາເວັນອອກ, ບອກເນວ. ປະມານ 11 ຊະນິດ; 7 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ມີລັກສະນະເດັ່ນ ຂອງພືດເຕ້ຍ, ມີຫົວປອມແປໆ ແລະ ໜີບຕິດກັບເປືອກຂອງຕົ້ນໄມ້ທີ່ມັນເກີດຢູ່ນຳ. ດອກສີຈືດໆ ມີລັກສະນະສະເພາະ ຢູ່ທີ່ກາບດອກເຊື່ອມຕິດກັນເປັນຫຼອດທີ່ປິດບັງ ກີບດອກຮູບຮີມສິບອີກ. ໄດ້ມີການນຳເອົາໄປປູກຍ້ອນມັນແປກ.

ສະກຸນ **Pristiglottis** Cretz . & J.J.Sm.

ຊື່ພ້ອງ: ສະກຸນ *Cystopus* Blume

ພືດເກີດຢູ່ດິນ, ຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານຂ້າງ. ລຳຕົ້ນຍາວ, ອວບນ້ຳແດ່ເລັກນ້ອຍ, ໂຄນຂອງຕົ້ນເລື້ອຕາມໜ້າດິນ, ປະກອບເປັນລຳເລື້ອ, ສ່ວນປາຍຕົ້ນຕັ້ງຊັນຂຶ້ນ, ມີໃບບໍ່ຫຼາຍ. ໃບແຈກຢາຍຢູ່ສ່ວນຕັ້ງຊັນຂອງລຳຕົ້ນ ຫຼືຈຸ້ມຢູ່ປາຍ, ຈັດລຽງຕາມແບບກ້ຽວກົ້ນຫອຍ, ມີກາບຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ຂຽວຕະຫຼອດປີ, ມ້ວນເຂົ້າກັນຕາມລວຽງຍາວເວລາຍັງຈູມຢູ່, ຂອບໃບມັກເປັນຢັກເລື້ອຍໆ, ປົກກະຕິ ໃບມີສີຂຽວຊ້ຳ, ບາງຄັ້ງກ່າງກາງຂອງໃບອອກສີຂາວ. ຊໍ່ດອກອອກຢູ່ປາຍ, ເປັນພົ້ວຖືດອກຈຳນວນໜ້ອຍ ຫາບໍ່ຫຼາຍດອກປານໃດ, ດອກຂະໜາດນ້ອຍ ຫາຂະໜາດກາງ, ຢູ່ໃນທ່າປັ້ນ, ມີສີຂາວ (ຊະນິດເກີດຢູ່ນິວກີເນຍມີສີຂຽວ ຫຼື ອອກສີຟ້າອີກ). ກາບດອກເຊື່ອມຕິດກັນ ຫຼື ບ. ກີບດອກຮູບຮີມສິບມີເດືອຍ ຫຼື ປົກກະຕິ ບໍ່ມີເດືອຍ, ເໜັງບໍ່ໄດ້, ຢູ່ຕົ້ນຂອງແຜ່ນດ້ານອ້ຳລີງມີຕຸດ 2 ອັນ, ສ່ວນກາງກົ້ມຄືຫຼອດຍາວໆທີ່ມີແຄມເປັນຢັກໆ ຮູບແຂ້ວ ຫຼືເປັນຍອຍ; ກ້ອນນີມີເດືອຍ ມັນຈະແບ່ງເປັນ 2 ສ່ວນ (2 ຫ້ອງ). ເສົາເກສອນບໍ່ມີຕົ້ນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວີຊິດີອ້ອມ. ຮອງຮັບບໍ່ແບ່ງເປັນປ່ຽງແຍກກັນຢ່າງຈະແຈ້ງ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງໝູ່ເກາະຊາມົວ. ປະມານ 15 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າຂຽວຕະຫຼອດປີ ຂອງ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ດອກຄ້າຍຄືກັບດອກຂອງສະກຸນ *Anoectochilus* ແຕ່ ປ່ຽງໜ້າຂອງຮອງຮັບບໍ່ໄດ້ແບ່ງເປັນ 2 ສ່ວນແຍກກັນ. ເປັນຕົ້ນທີ່ຄົນບໍ່ຮູ້ຈັກເລີຍ ແລະ ບໍ່ປະກົດວ່າມີການນຳເອົາໄປປູກດ້ວຍ.

ສະກຸນ **Pteroceras** Hasselt ex Hassk. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ ຫາຍາວ. ໃບມີຈຳນວນໜ້ອຍ ຫາໜາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ແປໆເຂົ້າດ້ານໜ້າ ແລະ ດ້ານຫຼັງ ຫຼື ໃບເກືອບເປັນທ່ອນກົມກໍ່ມີ ແຕ່ຫາຍາກ, ພັບເຂົ້າກັນເອລາຍັງຈູມຢູ່. ຊໍ່ດອກບໍ່ມີຂົນ ຫຼື ມີຂົນຫຸ້ມ, ເປັນພົ້ວ ຖືດອກຈຳນວນໜ້ອຍ ຫາ ໜາຍດອກ, ດອກອອກເປັນລຳດັບຕາມໆກັນ, ມີ 1 ຫຼື ໜາຍກວ່າ 1 ດອກ, ອອກໃນເອລາດຽວກັນ, ແຕ່ຊໍ່ດອກທີ່ຖືດອກດ່ຽວ ຫາຍາກກວ່າ. ດອກຂະໜາດນ້ອຍ ຫາຂະໜາດກາງ, ມີອາຍຸສັ້ນ, ປົກກະຕິ ດອກຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສິບມີເດືອຍ, ທ້ອຍໃສ່ເສົາເກສອນ, ເດືອຍຢູ່ໃນ ບໍ່ມີຮອຍດ້ານ. ຄວາມຍາວຂອງຕົ້ນເສົາເກສອນເທົ່າກັບເຄິ່ງໜຶ່ງ ຂອງເສົາເກສອນເອງຢ່າງຕ່ຳ. ກຸ່ມເມັດລະອອງຈຳນວນ 2, ແຕກແຍ່ມ, ຈຳນວນ 4 ແມ່ນຫາຍາກ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍແຜ່ນດິນໃຫຍ່ ພາກຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ. ປະມານ 20 ຊະນິດ; 4 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເກີດຢູ່ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ມີດອກໜ້າຈັບໃຈ ແຕ່ອາຍຸສັ້ນ, ໃກ້ຄຽງກັບສະກຸນ *Brachypeza* ແລະ ສະກຸນ *Macropodanthus*, ມີລັກສະນະສະເພາະຍ້ອນ ຕົ້ນເສົາເກສອນຍາວ ແລະ ເດືອຍຈັດຢູ່ຕາມສາຍ ຂອງຕົ້ນເສົາເກສອນ. ການນຳເອົາໄປປູກບໍ່ມີເລື້ອຍປານໃດ.

ສະກຸນ **Renanthera** Lour. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ປົກກະຕິ ລຳຕົ້ນຍາວໜາຍ. ໃບມີໜາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ທີ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນປະເພດຊໍ່ແຕກແໜງ, ມີໜາຍດອກ. ດອກຂະໜາດນ້ອຍ ຫາຂະໜາດກາງ, ຢູ່ໃນທ່າປົ້ນ ຫຼື ບໍ່, ມີສີຮຸ່ງ (ສີແສດ) ອົມສີແດງ ຫຼື ສີເຫຼືອງ, ມີຮອຍສີແດງ. ການດອກແຍກກັນ, ການດອກຂ້າງມັກມີເນື້ອທີ່ກວ້າງກວ່າການດກາງ. ກີບດອກຮູບຮີມສິບເປັນຮູບຖ້ວຍ, ເໜັງບໍ່ໄດ້, ຢູ່ຂ້າງໃນ ບໍ່ມີຮອຍດ້ານ, ສັ້ນກວ່າການດອກໜາຍ, ປົກກະຕິ ປ່ຽງກາງຂອງກີບດອກມີຂະໜາດນ້ອຍ ແລະ ກົ່ງລົ່ງ. ເສົາເກສອນສັ້ນ ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ມີຂະໜາດເທົ່າໆກັນ ຫຼື ໜຸດລົ່ນກັນໜ້ອຍໜຶ່ງ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ພາກຕາເວັນອອກສ່ຽງເໜືອຂອງອິນເດຍ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ໝູ່ເກາະໂຊໂລມົງ. ປະມານ 15 ຊະນິດ; 3 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 4 ຊະນິດຢູ່ຫວຽດນາມ, ຍັງບໍ່ທັນເກັບກຳຢູ່ກຳປູເຈຍ.

ນິເວດ: ພືດອາໃສບ່ອນຄ້ຳ ເກີດຢູ່ປ່າເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນພືດທີ່ມີການປູກໜາຍຢູ່ ບໍ່ແມ່ນຍ້ອນດອກໃຫຍ່ ແຕ່ແມ່ນຍ້ອນດອກມີສີຮຸ່ງ ຊຶ່ງແມ່ນສີແດງ ຫຼື ເຫຼືອງໂດຍມີຮອຍສີແດງ. ການດອກດ້ານຂ້າງກວ້າງກວ່າການດອກຫຼັງໜາຍ ເຮັດໃຫ້ດອກມີລັກສະນະສະເພາະທີ່ເຫັນງ່າຍອີກອັນໜຶ່ງ. ຊະນິດສ່ວນໜາຍຂອງສະກຸນນີ້ ປະກົດວ່າຫາຍາກໃນທຳມະຊາດ, ອາດຈະແມ່ນຍ້ອນການເກັບແບບທຳລາຍ ໂດຍເປັນປະຫວັດການມາແລ້ວ.

ສະກຸນ **Renantherella** Ridl. — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ປົກກະຕິ ລຳເລື້ອຍຂາວໜາຍ. ໃບມີໜາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່, ມີປາຍແຫຼມ. ຊໍ່ດອກອອກຫາງ ຂ້າງ, ເປັນພົ້ອຖືດອກບໍ່ໜາຍປານໃດ. ດອກບານເທື່ອລະດອກ ຫຼື ສອງດອກຕໍ່ເທື່ອ, ຂະໜາດນ້ອຍຫາກາງ, ບໍ່ຢູ່ໃນທ່າປີ້ນ. ການດອກແຍກກັນ, ການດອກຂ້າງກວ້າງ ແລະ ສັ້ນກວ່າການດອກກາງເລັກນ້ອຍ. ກີບດອກຮູບຮີມສິບເປັນຮູບຖ້ວຍ, ເໜັງບໍ່ໄດ້, ຂ້າງໃນບໍ່ມີຮອຍດ້ານ, ສັ້ນກວ່າການດອກໜາຍ, ປ່ຽງຂ້າງຍາວ ແລະ ປ່ຽງກາງ ແຄບໆ ແລະ ໂກບເຂົ້າ. ເສົາເກສອນຍາວ ແລະ ຮຽວ, ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ ປານໃດ, ແຂ້ງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວົງດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ມາເລເຊຍ, ບອກເນວ. ມີ 1 ຊະນິດເທົ່ານັ້ນ.

ນິເວດ: ພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ , ເກາะນຳໂງ່ນຫີນ ຢູ່ຮິ່ມອີກ.

ຂໍ້ຄວນເອົາໃຈໃສ່: ຕ່າງຈາກສະກຸນ *Renanthera* ຊຶ່ງເປັນສະກຸນໃກ້ຄຽງ ຢູ່ບ່ອນເສົາເກສອນຮຽວ ແລະ ປາຍໃບແຫຼມ, ປາຍໃບບໍ່ແບ່ງເປັນ 2 ປ່ຽງ, ເປັນຕົ້ນທີ່ບໍ່ສະດຸດຕາພໍເທົ່າໃດ ແລະ ຖືການນຳເອົາໄປປູກໜຸດ ສະກຸນ *Renanthera*.

ສະກຸນ **Rhomboda** Lindl.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ. ລຳເລື້ອຍຍາວ, ອອບນ້ຳເລັກນ້ອຍ, ສ່ວນໂຄນຂອງລຳຕົ້ນເລື້ອຕາມໜ້າ ດິນ, ປະກອບເປັນລຳເລື້ອ, ສ່ວນປາຍຕັ້ງຊັນຂຶ້ນ, ໃບບໍ່ໜາຍ. ໃບເຕົ້າໂຮມກັນຢູ່ປາຍຕົ້ນ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະໜອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່, ມີສີຂຽວຊ້ຳ ຫຼື ອອກສີມະເບີ, ປົກກະຕິ ກ່າງ ກາງ ມີສີຂາວ ຫຼື ສີແດງ. ຊໍ່ດອກອອກຢູ່ປາຍ, ເປັນພົ້ອ ຖືດອກໜາຍ. ດອກຂະໜາດນ້ອຍ. ປົກກະຕິ ດອກຢູ່ໃນ ທ່າປີ້ນສ່ວນໃດສ່ວນໜຶ່ງ (ກີບດອກຮູບຮີມສິບປິ່ນໄປທາງຂ້າງ), ອອກສີມະເບີ, ກີບດອກອື່ນ ແລະ ກີບດອກ ຮູບຮີມສິບມີສີຂາວ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ຢູ່ໂຄນມີຕຸດ 2 ອັນ, ຢູ່ຂ້າງ ໃນສ່ວນກາງມີສັນ 2 ອັນຂະໜານກັນ, ຢູ່ຂ້າງນອກ ດ້ານຂ້າງມີສັນຕ່ຳ. ດ້ານໜ້າຂອງເສົາເກສອນມີແຜ່ນລາ ແມນບາງໆຕາມລວງຍາວ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວົງດີ ອ້ອມ. ຮອງຮັບແບ່ງເປັນ 2 ປ່ຽງແຍກກັນຈະແຈ້ງ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີ ເນຍ, ອິດສະເຕເລຍ, ໝູ່ເກาะໂຊໂລມົງ. ປະມານ 20 ຊະນິດ; 2 ຊະນິດຢູ່ໄທ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວຫຼື ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດເກີດຢູ່ດິນ ໃນປ່າຂຽວຕະໜອດປີໃນເຂດພູຕ່ຳ ແລະເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເພີ່ນຈຳແນກຊະນິດຂອງສະກຸນນີ້ໂດຍອີງໃສ່ສະກຸນ *Anoectochilus* ຫຼື ສະກຸນ *Hetaeria*. ມັນຕ່າງຈາກສະກຸນ *Anoectochilus* ຢູ່ບ່ອນວ່າສັນດ້ານຂ້າງຊຶ່ງມີຢູ່ນຳກີບດອກຮູບຮີມສິບບໍ່ມີ ແຂ້ວ ຫຼື ຍອຍ ແລະ ຕ່າງຈາກສະກຸນ *Hetaeria* ຢູ່ບ່ອນວ່າຢ່າງໜ້ອຍດອກກໍ່ຢູ່ໃນທ່າປີ້ນສ່ວນໃດສ່ວນໜຶ່ງ. ໃນສະກຸນ *Hetaeria*, ມີ ແຜ່ນຕຸ່ມເປັນ 2 ກຸ່ມ ຫຼື ໜາຍກວ່ານັ້ນ ຢູ່ຕີນຂອງກີບດອກຮູບຮີມສິບ; ຢູ່ໃນສະກຸນ *Rhomboda* ມີຕຸດດ່ຽວ 2 ອັນ. ໃບຂອງຊະນິດຕ່າງໆໃນສະກຸນ *Hetaeria* ບໍ່ມີກ່າງກາງສີຂາວ ຫຼື ສີແດງ ເໝືອນດັ່ງທີ່ມີທົ່ວໆໄປໃນສະກຸນ *Rhomboda*. ສະກຸນ *Zeuxine* ກໍ່ໃກ້ຄຽງກັບສະກຸນ *Rhomboda* ຄືກັນ ຕ່າງແຕ່ກີບດອກຮູບຮີມສິບບໍ່ມີສັນ ຊຶ່ງເຫັນແຈ້ງນຳສະກຸນ *Rhomboda* ແລະ ໃບກໍ່ບໍ່ມີກ່າງກາງສີຂາວ ຫຼື ສີ ບົວ. ນອກນັ້ນ, ປະກົດວ່າ ກຸ່ມເມັດລະອອງຂອງສະກຸນ *Rhomboda* ບໍ່ໄດ້ຕິດກັບກ້ານຂອງເຕົ້າໄຂ່ ເໝືອນດັ່ງ

ທີ່ເປັນປົກກະຕິໃນສະກຸນ *Zeuxine*. ບໍ່ໄດ້ມີການນຳເອົາສະກຸນ *Rhomboda* ໄປປູກ ເຖິງວ່າບາງຊະນິດຈະມີໃບງາມໜ້າຈັບໃຈຫຼາຍກໍ່ຕາມ.

ສະກຸນ **Rhynchogyna** Seidenf. & Garay

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ຢ່ອນລົງ. ໃບຈຳນວນຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ເປັນທ່ອນກົມ, ສັບປ່ຽນຕາມລະດູການ. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຫຼື ຊໍ່ແຕກແໜງ, ຖືດອກບໍ່ຫຼາຍປານໃດ ຫາຫຼາຍ. ດອກນ້ອຍ, ຢູ່ໃນທ່ຳປີ້ນ. ການດອກແຍກກັນ. ກີບດອກຮູບຮີມສິບເໜັງບໍ່ໄດ້, ມີເດືອຍ, ຝາດ້ານຫຼັງຂອງເດືອຍໃກ້ ກັບປາກຂອງເດືອຍ ມີຮອຍດ້ານແຜ່ນໃຫຍ່. ເສົາເກສອນມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ໄທ, ຫວຽດນາມ, ແຫຼມມາເລເຊຍ. 2 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າຊຽວຕະຫຼອດປີ ປະເພດແທ້ງ ແລະ ໃນປ່າຜັດປ່ຽນໃບ, ຢູ່ຕາມໂງ່ນຫີນໃນເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ສະກຸນ *Rhynchogyna* ຄ້າຍຄືກັບຊະນິດທີ່ມີໃບເປັນທ່ອນກົມຂອງສະກຸນ *Cleisostoma* ຫຼາຍ, ມັນກໍ່ແຕກຕ່າງກັບສະກຸນນີ້ ຢູ່ທີ່ຂ້າງໃນຂອງເດືອຍບໍ່ມີແຜ່ນຂັ້ນຕົ້ນຕໍ. ສະກຸນນີ້ ຍັງພົບຢູ່ໃນການສະສົມຈຳນວນໜຶ່ງ ແຕ່ກໍ່ບໍ່ມີຄຸນຄ່າດ້ານປະດັບສູງປານໃດ.

ສະກຸນ **Rhynchostylis** Blume — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ, ຖືໃບຫຼາຍ ຈັດລຽງເປັນ 2 ແຖວ. ໃບມີການຫຸ້ມຢູ່ຕົ້ນ, ບໍ່ມີຂົນ, ສັບປ່ຽນກັນຕາມລະດູການ, ພັບເຂົ້າກັນເອລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ. ຖືດອກຫຼາຍ. ດອກຂະໜາດກາງ, ສະດຸດຕາ. ການດອກແຍກກັນ. ກີບດອກຮູບຮີມສິບ ມີເດືອຍ, ເໜັງບໍ່ໄດ້, ບໍ່ມີປ່ຽງຂ້າງ, ປ່ຽງກາງ ແປເຂົ້າດ້ານໜ້າ ແລະ ດ້ານຫຼັງ. ເສົາເກສອນມີຕີນສັ້ນ. ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມ, ແຂງ, ບໍ່ມີກ້ານ, ກ້ານເຕົ້າໄຂ່ແລບໆ ເປັນຮູບເສັ້ນ, ເຫວີ່ອອກຢູ່ປາຍ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍແຜ່ນດິນໃຫຍ່ ພາກຕາເວັນອອກສ່ຽງໃຕ້, ແຫຼມມາເລເຊຍ, ຊູມາຕຼາ, ຊາວາ, ບອກເນໂອ, ຟີລິບປິນ. 4 ຊະນິດ; 3 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 3 ຊະນິດຢູ່ກຳປູເຈຍ, 3 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ, ບາງຄັ້ງກໍ່ມີຢູ່ໃນປ່າເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນ ທີ່ຄົນນຳໄປປູກຢ່າງກວ້າງຂວາງ, ໃກ້ຄຽງກັບສະກຸນ *Aerides* ຊຶ່ງມັນແຕກຕ່າງຢູ່ ກີບດອກຮູບຮີມສິບບໍ່ແບ່ງເປັນ 3 ປ່ຽງ ແລະ ຕີນເສົາເກສອນສັ້ນ.

ສະກຸນ **Robiquetia** Gaudich. — *

ພືດອາໃສບອ່ນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ, ຖືໃບຈຳນວນໜ້ອຍ ຫາຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕົ້ນ, ໃບແຜ່ຢາຍຕາມແຜ່ນພຽງດຽວ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວດົກ, ຖືດອກຈຳນວນຫຼາຍ, ຊໍ່ແຕກແໜງແມ່ນຫາຍາກ, ປົກກະຕິ ຊໍ່ດອກຢ່ອນລົງ. ດອກຂະໜາດນ້ອຍ, ຢູ່ໃນທ່ຳປີ້ນ. ການດອກແຍກກັນ. ກີບດອກຮູບຮີມສິບເຊື່ອມຕິດກັບເສົາເກ

ສອນ, ມີເດືອຍ, ເດືອຍຢູ່ຂ້າງໃນ ມີຮອຍດ້ານ ຫຼື ບໍ່ມີ, ຮອຍດ້ານໃຄ່ຢູ່ເບື້ອງປາຍ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ແຕກແຍ່ງ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ຍາວກວ່າກຸ່ມເມັດລະອອງ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງໝູ່ເກາະຕົງກາ. ປະມານ 40 ຊະນິດ; 3 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 2 ຊະນິດຢູ່ກຳປູເຈຍ, 2 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູຕ່ຳ .

ຂໍ້ຄວນເອົາໃຈໃສ່: ມີບາງລັກສະນະ ທີ່ແຍກສະກຸນ *Robiquetia* ແລະ ສະກຸນ *Malleola*. ສະກຸນ *Robiquetia* ມີຄວາມຫຼາກຫຼາຍທາງດ້ານຮູບຮ່າງ ແລະ ທາງດ້ານສີຂອງດອກຫຼາຍກວ່າ. ການນຳເອົາສະກຸນນີ້ໄປປູກກໍ່ມີຢູ່ເປັນບາງໂອກາດ.

ສະກຸນ **Saccolabiopsis** J.J.Sm.

ພືດອາໃສບອ່ນຄ້ຳທີ່ນ້ອຍທີ່ສຸດ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນຫຼາຍ. ໃບມີໜ້ອຍ, ຈັດລຽງເປັນ 2 ແຖວ, ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວມີຫຼາຍດອກ, ຊໍ່ແຕກແໜງເປັນອັນຫາຍາກ. ດອກນ້ອຍຫຼາຍ, ຢູ່ໃນທ່າປົ້ນ, ບາງໆ. ການດອກແຍກກັນ. ກີບດອກຮູບຮີມສິບເຊື່ອມຕິດກັບເສົາເກສອນ, ມີເດືອຍ, ເດືອຍຢູ່ຂ້າງໃນ ບໍ່ມີຮອຍດ້ານ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດແຕກຕ່າງກັນຫຼາຍ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ພາກຕາເວັນອອກສ່ຽງເໜືອຂອງອິນເດຍ, ເອເຊຍຕາເວັນອອກສ່ຽງໃຕ້, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ພາກຕາເວັນອອກຂອງໝູ່ເກາະຟິຊີ. ປະມານ 10 ຊະນິດ; 1 ຊະນິດຢູ່ໄທ, ຍັງບໍ່ທັນໄດ້ເກັບກຳຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ.

ນິເວດ: ເປັນພືດອາໃສບອ່ນຄ້ຳ ເກີດຢູ່ໃນປ່າ ເຂດຕ່ຳ ແລະ ເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ແມ່ນພືດທີ່ບໍ່ສຳຄັນຫຍັງ, ໃກ້ຄຽງກັບສະກຸນ *Malleola* ຊຶ່ງມັນຕ່າງຍ້ອນຮູບຮ່າງຂອງກຸ່ມເມັດລະອອງ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Sarcoglyphis** Garay — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ, ມີໃບບໍ່ຫຼາຍ. ໃບຈັດເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນ ເວລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວມີດອກຫຼາຍ. ດອກນ້ອຍ ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກຮູບຮີມສິບເຊື່ອມຕິດກັນກັບເສົາເກສອນຢ່າງແໜ້ນໜາ, ເດືອຍຢູ່ຂ້າງໃນ ມີແຜ່ນຂັ້ນຕາມລວງຍາວ, ຝາດ້ານຫຼັງຂອງເດືອຍ ໃກ້ກັບປາກເດືອຍ ມີຮອຍດ້ານແຜ່ນໃຫຍ່. ເສົາເກສອນບໍ່ມີຕີນ. ລິ້ນຂອງຮອງຮັບ ປະກອບເປັນສັນສູງໆ ຢູ່ປາຍຂອງເສົາເກສອນ, ເຮັດໃຫ້ຮູບຊົງຄ້ຳ ໝອກກັນກະທົບ ຖ້າເບິ່ງດ້ານຂ້າງ. ກຸ່ມເມັດລະອອງຈຳນວນ 4, ມີຂະໜາດເກືອບເທົ່າໆກັນ, ຈັດເປັນ 4 ກ້ອນ, ແຂງ, ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອິນເດຍ, ເອເຊຍແຜ່ນດິນໃຫຍ່ ພາກຕາເວັນຕົກສ່ຽງໃຕ້, ແຫຼມມາເລເຊຍ, ຊຸມາຕຼາ, ຊາວາ, ບອກເນອ. ປະມານ 10 ຊະນິດ; 3 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 2 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເກີດໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ ຕ່າງຈາກສະກຸນ ທີ່ໃກ້ຄຽງຫຼາຍ, ຄືສະກຸນ *Cleisostoma* ດ້ວຍລິ້ນຂອງຮອງຮັບມີຮູບແບບບໍ່ປົກກະຕິ. ດອກນ້ອຍ ແຕ່ມີສີສັນໜ້າຈັບໃຈ. ການນຳເອົາໄປປູກແມ່ນຫາຍາກ.

ສະກຸນ **Schoenorchis** Reinw. ex Blume — *

ພືດອາໃສບອ່ນຄ້ໍ ຂະໜາດນ້ອຍ, ມີການເຕີບໃຫຍ່ດ້ານປາຍ. ລຳເລືອສັ້ນຫຼາຍ ຫຼື ຍາວ. ໃບມີຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ແປເຂົ້າດ້ານຫຼັງ ແລະ ດ້ານໜ້າ ຫຼື ເປັນທ່ອນກົມໆ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເອລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຫຼື ເປັນຊໍ່ແຕກແໜງ. ດອກຂະໜາດນ້ອຍ ຫາ ນ້ອຍຫຼາຍ, ຢູ່ໃນທ່າປົ້ນ, ບາງຄັ້ງມີສີຮຸ່ງ. ການດອກແຍກກັນ. ກີບດອກຮູບຮີມສົບມີເດືອຍ, ເໜັງບໍ່ໄດ້, ຍາວເທົ່າໆກັບກີບດອກ ຫຼື ຍາວກວ່າຊ້ໍ, ເດືອຍຢູ່ຂ້າງໃນບໍ່ມີຮອຍດ້ານ, ຢູ່ຂ້າງໃນໃກ້ໆກັບສ່ວນປາຍ, ມີຝາຂັ້ນຕາມລວງຍາວ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ຂະໜາດເກືອບເທົ່າໆກັນ, ຈັດເປັນ 2 ກ້ອນ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ສຣິລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ໝູ່ເກາະປາຊີຟິກ, ຕາເວັນອອກຂອງໝູ່ເກາະຊາມົວ. ປະມານ 20 ຊະນິດ; 8 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 6 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບອ່ນຄ້ໍ ເກີດໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນດອກເຜົ້ງຂະໜາດນ້ອຍທີ່ສຸດ, ມີບາງຊະນິດທີ່ມີຜູ້ນິຍົມເອົາໄປປູກເປັນບາງໂອກາດ. ສະກຸນນີ້ຄ້າຍຄືກັບສະກຸນ *Smitinandia* ແລະ ສະກຸນ *Abdominea*; ໃນ 2 ສະກຸນນີ້, ຮອຍດ້ານຕັ້ງຊັນຂຶ້ນ ອັດປາກ ຂອງ ເດືອຍໄວ້ສ່ວນໃດສ່ວນໜຶ່ງ, ຕົງກັນຂ້າມໃນສະກຸນ *Schoenorchis* ບໍ່ມີຮອຍດ້ານແບບນີ້.

ສະກຸນ **Seidenfadenia** Garay — *

ພືດອາໃສບ່ອນຄ້ໍ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ, ໃບຈຳນວນບໍ່ຫຼາຍປານໃດ ຈັດລຽງເປັນ 2 ແຖວ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ເກືອບເປັນທ່ອນກົມ, ເປັນຮ່ອງ, ພັບເຂົ້າກັນ ເອລາຍັງຈຸມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວຕັ້ງຂຶ້ນ ຖືດອກຈຳນວນຫຼາຍ. ດອກຂະໜາດກາງ, ສະດຸດຕາ. ການດອກແຍກກັນ. ກີບດອກຮູບຮີມສົບ ມີເດືອຍ ປິ່ນໄປດ້ານໜ້າ, ເໜັງບໍ່ໄດ້, ແບ່ງເປັນ 3 ປ່ຽງ, ປ່ຽງຂ້າງນ້ອຍຫຼາຍ, ເປັນຮູບແຂ້ວ, ສ່ວນປ່ຽງກາງໃຫຍ່. ຕີນເສົາເກສອນບໍ່ເປັນທີ່ສັງເກດເລີຍ. ລິ້ນຂອງຮອງຮັບ ປະກອບເປັນສັນ ຊຶ່ງບໍ່ເປັນທີ່ສັງເກດເລີຍ, ຢູ່ປາຍເປັນຮູບກ່ຽວຖ້າເບິ່ງດ້ານຂ້າງ. ກຸ່ມເມັດລະອອງຈຳນວນ 2, ແຕກແງ່ມ, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ມ່ຽນມ້າ, ໄທ. 1 ຊະນິດ [*S. mitrata* (Rchb.f.) Garay], ພົບຢູ່ໄທ, ສ່ວນຢູ່ລາວ, ກຳປູເຈຍ ຫຼື ຫວຽດນາມ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດອາໃສບ່ອນຄ້ໍ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ຊະນິດ *Seidenfadenia mitrata* ເປັນພືດທີ່ງາມ, ພົບເຫັນທົ່ວໆໄປ ແລະ ແຜ່ຂະຫຍາຍຢ່າງກວ້າງຂວາງຢູ່ໄທ. ດ້ານນິເວດນັ້ນຄ້າຍຄືກັບສະກຸນ *Holcoglossum*, ແຕ່ວ່າດອກຂອງມັນຊ້ໍພັດ ມີເດືອຍປິ່ນໄປດ້ານໜ້າ ຄ້າຍຄືກັບດອກຂອງສະກຸນ *Aerides*. ສະກຸນ *Seidenfadenia* ແຕກຕ່າງຈາກ 2 ສະກຸນນີ້ດ້ວຍສັນທີ່ປະກອບຈາກລິ້ນຂອງຮອງຮັບ ຢູ່ປາຍຂອງເສົາເກສອນ (ເໝືອນດັ່ງ ໃນສະກຸນ *Sarcoglyphis* ຊຶ່ງບໍ່ໄດ້ໃກ້ຄຽງຫຼາຍກັບສະກຸນ *Seidenfaden* ເລີຍ). ສະກຸນ *Seidenfadenia* ນີ້ຖືກເອີ້ນດັ່ງນີ້ ຍ້ອນໄດ້ຊື່ມາ

ຈາກຊື່ ຂອງນັກການທູດ ແລະ ນັກພືດສາດຄົນເດນມາກ ຜູ້ໜຶ່ງ ທີ່ມີຊື່ວ່າ: Gunnar Seidenfaden ຊຶ່ງເປັນຜູ້ທີ່ ໄດ້ອອກແຮງຫຼາຍກວ່າໝູ່ໃນການເສີມຂະຫຍາຍຄວາມຮູ້ທາງດ້ານຕົ້ນດອກເຜົ້ງໃນເຂດເອເຊຍແຜ່ນດິນໃຫຍ່ ພາກຕາເວັນອອກສ່ຽງໃຕ້, ໂດຍສະເພາະກ່ຽວກັບດອກເຜົ້ງ ຂອງປະເທດໄທ.

ສະກຸນ **Smitinandia** Holttum — *

ພືດອາໃສບ່ອນຄ້ຳ ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນຍາວ. ໃບມີຫຼາຍ, ຈັດລຽງເປັນ 2 ແຖວ, ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈຸ່ມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຖືດອກຫຼາຍ. ດອກຂະໜາດນ້ອຍທານ້ອຍຫຼາຍ, ຢູ່ໃນທ່າປົ້ນ. ການດອກແຍກກັນ. ກີບດອກມີເດືອຍ. ເໜັງບໍ່ໄດ້, ມີລວຍາວ ເທົ່າໆກັບກີບດອກ ຫຼື ຍາວກວ່າອີກ, ເດືອຍຢູ່ຂ້າງໃນ ມີຮອຍດ້ານ, ປາກຂອງເດືອຍຖືກອັດສ່ອນໃດສ່ອນໜຶ່ງ ດ້ວຍຮອຍດ້ານ ທີ່ຕັ້ງຊັນຂຶ້ນ ຢູ່ລະດັບໂຄນ ຂອງປ່ຽງກາງຂອງກີບດອກຮູບຮີມສິບ. ເສົາເກສອນບໍ່ມີຕີນ. ກຸ່ມ ເມັດລະອອງຈຳນວນ 4, ຂະໜາດບໍ່ເທົ່າກັນ, ຈັດເປັນ 2 ກ້ອນ, ແຂ້, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍ ແຜ່ນດິນໃຫຍ່ເຂດຮ້ອນ, ບອກເນວ, ຊູລາເວຊີ. 3 ຊະນິດ; 2 ຊະນິດຢູ່ໄທ, 2 ຊະນິດຢູ່ລາວ, 1 ຊະນິດຢູ່ກຳປູເຈຍ, 2 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ສະກຸນ *Smitinandia* ນີ້ຄ້າຍຄື ກັບສະກຸນ *Schoenorchis*, ແຕ່ອາດຈຳແນກມັນໄດ້ ຍ້ອນຮອຍດ້ານໃຫຍ່ ຢູ່ລະດັບໂຄນຂອງປ່ຽງກາງ ຂອງກີບດອກຮູບຮີມສິບ ຊຶ່ງເກືອບຕັນເອົາໝົດປາກຂອງ ເດືອຍ. ບາງຄັ້ງກໍ່ພົບເຫັນ ໃນບ່ອນທີ່ມີການປູກດອກເຜົ້ງ ແຕ່ອາດຈະແມ່ນໂດຍບັງເອີນຫຼາຍກວ່າ.

ສະກຸນ **Spathoglottis** Blume — *

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ ແລະ ມີລຳເລືອສັ້ນຫຼາຍ. ຫົວປອມ ມີປ້ອງຫຼາຍກວ່າ 1 ປ້ອງ, ຝັງຢູ່ໃຕ້ ດິນສ່ອນໃດສ່ອນໜຶ່ງ, ມີໃບ 1 ຫາ 3 ໃບ. ໃບມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ສັບປ່ຽນຕາມລະດູການ, ມ້ວນເຂົ້າກັນຕາມລວຍາວເວລາຍັງຈຸ່ມຢູ່. ຊໍ່ດອກປ່ຳຂຶ້ນແຕ່ລຸ່ມຕົ້ນ, ເປັນພົ້ວ ຖືດອກຈຳນວນໜ້ອຍ ຫາຫຼາຍ, ດອກບານພ້ອມໆກັນຈຳນວນໜ້ອຍໜຶ່ງ. ດອກຂະໜາດກາງ, ຢູ່ໃນທ່າປົ້ນ, ສີຂາວ, ສີເຫຼືອງ ຫຼື ສີມ້ວງອົມ ສີແດງຊ້ຳ. ການດອກແຍກກັນ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້, ແບ່ງເປັນ 3 ປ່ຽງຈະແຈ້ງ, ມີຮອຍ ດ້ານ 1 ຄູ່ຢູ່ຕີນຂອງປ່ຽງກາງ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 8, ແຂ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊິດີອ້ອມ.

ການແຈກຢາຍ: ພົບຢູ່ສຣິລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ຕາເວັນອອກຂອງໝູ່ເກາະຊາມົວ ແລະ ໝູ່ເກາະນຸຍ. ປະມານ 30 ຊະນິດ; 6 ຊະນິດຢູ່ໄທ, 3 ຊະນິດຢູ່ລາວ, 3 ຊະນິດຢູ່ກຳປູເຈຍ, 5 ຊະນິດຢູ່ຫວຽດນາມ.

ນິເວດ: ເປັນພືດເກີດຢູ່ດິນ, ມີໃນປ່າໂຄກ ໂດຍສະເພາະຢູ່ລຽບຕາມແຄມປ່າ, ຕົ້ນຕໍມີຢູ່ໃນເຂດຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນສະກຸນທີ່ຄົນຮູ້ຈັກຫຼາຍ, ຈຳແນກໄດ້ງ່າຍຍ້ອນກີບດອກຮູບຮີມສິບມີຮອຍດ້ານ 1 ຄູ່ ຢູ່ຕີນຂອງປ່ຽງກາງ. ບາງຊະນິດເກີດທົ່ວໄປຕາມແຄມທາງໃນເຂດປ່າ ແລະ ຍ້ອນແນວນັ້ນ ສະກຸນນີ້ຈຶ່ງນອນໃນ ດອກເຜົ້ງຈຳນວນໜ້ອຍຊຶ່ງຖືກຄົນລົບກວນຢູ່ເລື້ອຍ.

ສະກຸນ **Spiranthes** Rich. — *

ພືດເກີດຢູ່ດິນ ມີກາບເຕີບໃຫຍ່ດ້ານຂ້າງ. ລຳຕົ້ນປ່ຽງອອກຈາກຈຸ້ມຮາກ, ຮາກມຸກຫຼາຍ. ໃບມີໜ້ອຍຈັດເປັນຈຸ້ມ ແຜ່ອອກຢູ່ຕີນຕົ້ນ, ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ຂຽວຕະຫຼອດ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກ ອອກຢູ່ປາຍ, ເປັນປະເພດພົ້ວ ຖືດອກຫຼາຍ. ດອກນ້ອຍ, ຈັບຕາມແບບກ້ຽວກົ້ນຫອຍຢ່າງແໜ້ນໜາ, ຢູ່ໃນຫ່າ ປົ້ນ, ມີສີຂາວ ຫຼື ສີບົວ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງບໍ່ໄດ້, ຢູຕີນມີຕຸດ 2 ອັນ. ເສົາ ເກສອນບໍ່ມີຕີນ, ກຸ່ມເມັດລະອອງຈຳນວນ 2, ອ່ອນນຸ້ມ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ທະວີບ ອາເມຣິກາເໜືອ, ຢູຣົບ, ເອເຊຍ, ອົດສະເຕຼເລຍ, ນິວຊີແລັນ, ໝູ່ເກາະປາຊີ ຟິກ, ຕາເວັນອອກຂອງໝູ່ເກາະຊາມົວ. ປະມານ 30 ຊະນິດ; 1 ຊະນິດ [*S. sinensis* (Pers.) Ames] ແຜ່ຢ່າງ ກ້ວາງຂວາງ ຢູ່ໄທ ແລະ ຫວຽດນາມ; ສ່ວນຢູ່ລາວ ຫຼື ກຳປູເຈຍ ຍັງບໍ່ທັນເກັບກຳ.

ນິເວດ: ພືດເກີດຢູ່ດິນ ຢູ່ຕາມທົ່ງຫຍ້າໃນເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ດອກນ້ອຍໆຈັບຕາມແບບກ້ຽວກົ້ນຫອຍ ຢ່າງແໜ້ນໜາເປັນລັກສະນະສະເພາະປະຈຳ ຂອງສະກຸນ *Spiranthes* ຢ່າງຈະແຈ້ງ. ການນຳເອົາໄປປູກກໍ່ເຫັນເປັນບາງໂອກາດ, ບາງຄັ້ງກໍ່ພົບຮອດໃນສະ ພາບເປັນຫຍ້າເຮື້ອຢູ່ໃນເຕົ້າດອກໄມ້ ປະປົນກັບຕົ້ນດອກເຜົ້ງຊະນິດອື່ນ.

ສະກຸນ **Stereochilus** Lindl. — *

ພືດອາໃສບ່ອນຄ້ຳ ມີກາບເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນ, ມີໃບບໍ່ຫຼາຍປານໃດ. ໃບຈັດລຽງເປັນ 2 ແຖວ, ມີ ກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກທາງຂ້າງ, ເປັນພົ້ວ ຖືດອກຫຼາຍ. ດອກຂະໜາດນ້ອຍ, ຢູ່ໃນທ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮີມສົບເຊື່ອມຕິດກັບເສົາເກ ສອນຢ່າງແໜ້ນໜາ, ມີເດືອຍ, ເດືອຍຢູ່ຂ້າງໃນ, ປົກກະຕິ ມີແຜ່ນຂັ້ນຕາມລວງຍາວ; ຝາດ້ານຫຼັງຂອງເດືອຍ ໃກ້ໆກັບປາກເດືອຍ ມີຮອຍດ້ານແຜ່ນໃຫຍ່ໆ. ເສົາເກສອນບໍ່ມີຕີນ. ລິ້ນຂອງຮອງຮັບຍາວ, ຄ້າຍຮູບສົບນົກ. ກຸ່ມ ເມັດລະອອງຈຳນວນ 4, ເກືອບເທົ່າໆກັນ, ຈັດເປັນ 4 ກ້ອນ, ແຂ້ງ, ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍ ແຜ່ນດິນໃຫຍ່ເຂດຮ້ອນ. ປະມານ 6 ຊະນິດ; 2 ຊະນິດຢູ່ໄທ, 1 ຊະນິດຢູ່ ຫວຽດນາມ, ສ່ວນຢູ່ລາວ ຫຼື ຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ຄ້າຍຄືກັບສະກຸນ *Pelatantheria*, ສະກຸນ *Rhynchogyna* ແລະ ສະກຸນ *Sarcoglyphis*, ນັບເປັນສະກຸນນ້ອຍອື່ນອີກທີ່ແຕກຕ່າງຈາກສະກຸນ *Cleisostoma*. ສະກຸນ *Stereochilus* ມີລັກສະນະສະເພາະເດັ່ນດ້ວຍລິ້ນຂອງຮອງຮັບຍາວໆເປັນຕົ້ນຕໍ. ມີບາງຊະນິດທີ່ເພີ່ນໄດ້ພົບໃນການສະສົມ.

ສະກຸນ **Stereosandra** Blume

ພືດບໍ່ມີໃບ, ເກີດຢູ່ດິນ. ລຳເລືອໃຕ້ດິນ, ຄ້າຍຄືຫົວ. ຊໍ່ດອກອອກທາງປາຍ, ເປັນພົ້ວ ຖືດອກຫຼາຍ. ດອກຂະໜາ ດນ້ອຍ, ຢູ່ໃນທ່າປົ້ນ, ບານບໍ່ຫຼາຍ, ອອກສີຂາວໂດຍມີແຊກສີອິດ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີ ເດືອຍ, ເໜັງບໍ່ໄດ້, ບໍ່ແບ່ງເປັນປ່ຽງ, ຢູ່ໂຄນມີຕຸດ 2 ອັນ. ເສົາເກສອນບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 2, ຜ່າໄດ້, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກເຂດຮ້ອນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີ ເນຍ, ໝູ່ເກາະໂຊໂລມົງ. 1 ຊະນິດ (*S. javanica* Blume) ພົບຢູ່ໄທ ແລະ ຫວຽດນາມ; ຍັງບໍ່ທັນໄດ້ເກັບກຳຢູ່ ລາວ ຫຼື ກຳປູເຈຍ.

ນິເວດ: ພືດເກີດຢູ່ດິນ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ເປັນຕົ້ນໃຫຍ່ ບໍ່ມີໃບ, ມັນຕ່າງຈາກສະກຸນໃກ້ຄຽງ, ສະກຸນ *Epipogium*, ກີບດອກຮູບຮີມສິບບໍ່ມີເດືອຍ. ສຳລັບທັງ 2 ສະກຸນ ເຕົ້າໄຂ່ໃຄ່ ເວລາດອກກຳລັງບານ. ບໍ່ມີການນຳເອົາໄປປູກເລີຍ.

ສະກຸນ **Sunipia** Buch.-Ham. ex Sm. — *

ຊື່ພ້ອງ: ສະກຸນ *Ione* Lindl.

ພືດອາໃສບ່ອນຄ້ຳ ຫຼື ບາງຄັ້ງກໍ່ເກີດຢູ່ບ່ອນມີຫີນ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລື່ອຈະແຈ້ງດີ. ຫົວປອມ ມີ ປ້ອງ 1 ປ້ອງ, ມີໃບ 1 ໃບ ຈັບຢູ່ປາຍ. ໃບບໍ່ມີການຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກປົ່ງຂຶ້ນຈາກໂຄນ ຂອງຫົວປອມ, ເປັນພົ້ອ ຫຼື ມີດອກດ່ຽວ. ດອກຂະໜາດນ້ອຍ ຫາໃຫຍ່, ຢູ່ໃນທ່າປົ້ນ ຫຼື ບໍ່. ການດອກແຍກກັນ. ປົກກະຕິ ກີບດອກແຕກຕ່າງຈາກການດອກໜາຍ. ກີບດອກຮູບຮີມສິບບໍ່ມີເດືອຍ, ເໜັງບໍ່ໄດ້. ເສົາເກສອນມີຕີນສັ້ນ ຫຼື ບໍ່ມີຕີນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ຈັດເປັນ 2 ຄູ່, ແຕ່ລະຄູ ມີກ້ານ, ມີວິຊີດີອ້ອມ ຫຼື ບໍ່ມີ ຫຼື ທັງ 2 ຄູ່ມີວິຊີດີອ້ອມຮ່ວມກັນ ແລະ ບໍ່ມີກ້ານ.

ການແຈກຢາຍ: ພົບຢູ່ອິນເດຍ, ເນປານ, ບູຕານ, ເອເຊຍແຜ່ນດິນໃຫຍ່ພາກຕາເວັນອອກສ່ຽງໃຕ້ (ບໍ່ມີຢູ່ມາເລເຊຍ), ໄຕ້ຫວັນ. ປະມານ 22 ຊະນິດ; 14 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 3 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍ ຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ເປັນສ່ວນໜາຍ ໃນປ່າເຂດພູສູງໜາຍ.

ຂໍ້ຄວນເອົາໃຈໃສ່: ເບິ່ງຜິວເຜີນ, ສະກຸນນີ້ຄ້າຍຄື ກັບສະກຸນ *Bulbophyllum*, ຈຳແນກມັນໄດ້ງ່າຍຍ້ອນ ໂຄງສ້າງຂອງກຸ່ມເມັດລະອອງ ບໍ່ທຳມະດາ (ເບິ່ງບົດພັນລະນາຂ້າງເທິງ). ບັນດາຊະນິດຊຶ່ງກ້ານຂອງເຕົ້າໄຂ່ບໍ່ ຕິດກັບວິຊີດີອ້ອມຮ່ວມກັນ ຖືກຈັດຢູ່ໃນສະກຸນຕ່າງຫາກ ເອີ້ນວ່າ ສະກຸນ *Ione*. ການນຳເອົາສະກຸນນີ້ໄປປູກມີຢູ່ ແຕ່ຫາຍາກ.

ສະກຸນ **Taeniophyllum** Blume — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານປາຍ. ລຳຕົ້ນສັ້ນໆ. ຊໍ່ດອກອອກທາງຂ້າງ, ອອກຈາກລຳຕົ້ນ, ເປັນພົ້ອ ຖືດອກຈຳນວນໜ້ອຍ ຫາໜາຍ, ດອກບານເປັນລຳດັບຕາມໆກັນ. ດອກຂະໜາດນ້ອຍ ຫາກາງ, ບາງຄັ້ງດອກມີອາຍຸສັ້ນ, ຢູ່ໃນທ່າປົ້ນ ຫຼື ບໍ່. ການດອກເຊື່ອມຕິດກັນ ຫຼື ບໍ່. ກີບດອກຮູບຮີມສິບມີເດືອຍ, ເໜັງບໍ່ໄດ້, ເສົາເກສອນບໍ່ມີຕີນ. ລິ້ນຂອງຮອງຮັບເປັນຮູບສິບນິກ, ສັ້ນໆ ຫາຍາວ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມ.

ການແຈກຢາຍ: ພົບຢູ່ອາຟຼິກກາເຂດຮ້ອນ (1 ຊະນິດ), ສຣິລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟິລິບປິນ, ປາປົວນິວກີເນຍ, ອິດສະເຕເລຍ, ພາກຕາເວັນອອກຂອງເກາະຕາຮີຕີ. ປະມານ 170 ຊະນິດ; 8 ຊະນິດຢູ່ໄທ, 1 ຊະນິດຢູ່ກຳປູເຈຍ, 5 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວຍັງບໍ່ທັນໄດ້ ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູສູງ, ສ່ວນໜາຍມັກທ້ອຍນຳງ່ຳໄມ້ນ້ອຍ, ຫຼື ມີນຳ ຕົ້ນໄມ້ກິນໝາກ, ນຳຕົ້ນໄມ້ທີ່ເກີດທ່າງໆ ຫຼື ຕົ້ນໄມ້ນ້ອຍໆ...

ຂໍ້ຄວນເອົາໃຈໃສ່: ໃນຈຳນວນຕົ້ນດອກເຜົ້ງທີ່ເກີດຢູ່ດິນ ແລະ ບໍ່ມີໃບ ທີ່ພົບໃນເອເຊຍຕາເວັນອອກສ່ຽງໃຕ້ ນີ້, ເພີ່ນສາມາດຈຳແນກສະກຸນ *Taeniophyllum* ໄດ້ງ່າຍຍ້ອນ ກີບດອກຮູບຮີມສິບມີເດືອຍ. ຄົນບໍ່ຮູ້ຈັກ ຊະ ນິດສ່ວນໜາຍໃນສະກຸນນີ້ ແລະ ການນຳເອົາໄປປູກກໍ່ແມ່ນຫາຍາກ.

ສະກຸນ **Tainia** Blume — *

ຊື່ພ້ອງ: ສະກຸນ *Ania* Lindl.; ສະກຸນ *Ascotainia* Ridl.

ພືດເກີດຢູ່ດິນ ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນຫາຍາວ. ຫົວປອມ ມີປ້ອງ 1 ປ້ອງ ຫຼື ຫຼາຍກວ່ານັ້ນ, ມີໃບ 1 ໃບ. ໃບມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ພັບເປັນກີບໆ, ຂຽວຕະຫຼອດປີ, ສ່ວນຫຼາຍມັກມີກ້ານຍາວ, ມ້ວນເຂົ້າກັນຕາມລວງຍາວເວລາຍັງຈູມຢູ່. ຊໍ່ດອກມີຢູ່ຕາມໜໍ່ສະເພາະ, ໜໍ່ບໍ່ມີໃບ (ເຮເຕຣັງເທີສ) ຫຼື ອອກຫາງຂ້າງຈາກໂຄນຂອງຫົວປອມ, ເປັນປະເພດພົ້ວຖືດອກຈຳນວນໜ້ອຍຫາຫຼາຍ. ດອກຂະໜາດນ້ອຍຫາໃຫຍ່, ຢູ່ໃນຫ່າປົ້ນ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ ຫຼື ມີເດືອຍສັ້ນ, ເໜັງບໍ່ໄດ້. ເສົາເກສອນມີຕີນສັ້ນໆ ຫາຍາວ. ກຸ່ມເມັດລະອອງຈຳນວນ 8, ແຂງ, ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: ພົບ ຢູ່ສຣີລັງກາ, ເອເຊຍແຜ່ນດິນໃຫຍ່ເຂດຮ້ອນ, ຍີ່ປຸ່ນ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ປາປົວນິວກີເນຍ, ອົດສະເຕຼເລຍ, ໝູ່ເກາະໂຊໂລມົງ. ປະມານ 24 ຊະນິດ; 6 ຊະນິດຢູ່ໄທ, 1 ຊະນິດຢູ່ລາວ, 6 ຊະນິດຢູ່ຫວຽດນາມ, ສ່ວນຢູ່ກຳປູເຈຍຍັງບໍ່ທັນໄດ້ເກັບກຳ.

ນິເວດ: ພືດເກີດຢູ່ດິນ ໃນປ່າເຂດຕ່ຳ ແລະ ເຂດພູສູງ.

ຂໍ້ຄວນເອົາໃຈໃສ່: ສະກຸນນີ້ມີທັງນິເວດຂອງສະກຸນ *Chrysoglossum* ແລະ ລັກສະນະຂອງດອກ ຂອງສະກຸນ *Eulophia*; ມັນແຕກຕ່າງຈາກ 2 ສະກຸນນີ້ ຍ້ອນມີ ກຸ່ມເມັດລະອອງມີຈຳນວນ 8. ບໍ່ເຫັນມີການນຳເອົາໄປປູກເລື້ອຍປານໃດ.

ສະກຸນ **Thaia** Seidenf.

ພືດເກີດຢູ່ດິນ ບໍ່ມີໃບ, ຂະໜາດໃຫຍ່, ມີຫົວໃຕ້ດິນ. ຊໍ່ດອກເປັນພົ້ວ ຖືດອກຈຳນວນຫຼາຍ, ບາງຄັ້ງກໍແຕກງ່າ. ດອກບານຕາມໆກັນ, ແຕ່ລະຄັ້ງຈະບານໜ້ອຍ, ດອກຂະໜາດນ້ອຍ, ຢູ່ໃນປ່າປົ້ນ, ອອກສີຂຽວ. ກາບດອກແຍກກັນ. ກີບດອກຮູບຮີມສົບບໍ່ມີເດືອຍ, ເໜັງໄດ້, ບໍ່ແບ່ງເປັນປ່ຽງ, ຢູ່ສ່ວນໂຄນມີສັນຕາມລວງຍາວ, ແຕ່ລະອັກໆເປັນຮູບແຂ້ວຢູ່ຕີນ. ຕີນຂອງເສົາເກສອນສັ້ນ, ຮອງຮັບມີຕິ່ງຮູບລິ້ນແຄບໆຈັບຢູ່ຕາມແຄມຢູ່ສ່ວນລຸ່ມ, ກຸ່ມເມັດລະອອງຈຳນວນ2, ອ່ອນນຸ້ມ, ບໍ່ມີກ້ານ, ເຕົ້າໄຂ່ບໍ່ມີກ້ານ, ບໍ່ມີວິຊີດີອ້ອມ.

ການແຈກຢາຍ: 1 ຊະນິດ (*T. saprophytica* Seidenf.) ເທົ່ານັ້ນເປັນທີ່ຮູ້ຈັກຢູ່ໄທ.

ນິເວດ: ພືດເກີດຢູ່ດິນລະຫວ່າງໂງ່ນຫີນປູນໃນປ່າຂອງເຂດພູຕ່ຳ.

ຂໍ້ຄວນເອົາໃຈໃສ່: ເປັນພືດຫາຍາກ ແລະ ບໍ່ຄົນຮູ້ຈັກພໍເທົ່າໃດ, ໃກ້ຄຽງກັບສະກຸນ *Aphyllorchis* ແລະ ສະກຸນ *Cephalanthera* ແລະ ຕ່າງຈາກສອງສະກຸນນີ້ດ້ວຍກີບດອກຮູບຮີມສົບບໍ່ແບ່ງເປັນປ່ຽງ ແລະ ດ້ວຍຕິ່ງຢູ່ແຄມເບື້ອງລຸ່ມຂອງຮອງຮັບ.

ສະກຸນ **Thecopus** Seidenf. — *

ພືດອາໃສບ່ອນຄ້ຳ, ມີການເຕີບໃຫຍ່ດ້ານຂ້າງ, ລຳເລືອສັ້ນໆ. ຫົວປອມ ມີປ້ອງ 1 ປ້ອງ, ຖືໃບ 1 ໃບ. ໃບບໍ່ມີກາບຫຸ້ມຢູ່ຕີນ, ບໍ່ມີຂົນ, ສັບປ່ຽນຕາມລະດູການ, ພັບເຂົ້າກັນເວລາຍັງຈູມຢູ່. ຊໍ່ດອກອອກຈາກຕີນຂອງຫົວປອມ, ເປັນພົ້ວຢ່ອນລົງ, ມີດອກບໍ່ຫຼາຍຫາຫຼາຍດອກ. ດອກຂະໜາດກາງ, ອອກສີຂຽວ, ມີຮອຍສີແດງຊ້ຳ ຫຼື ສີກະເບົາ. ກີບຂ້າງແຍກກັນ. ກີບດອກຮູບຮີມສົບຫ້ອຍກັບປາຍຂອງຕີນເສົາເກສອນ ຊຶ່ງເປັນຮູບຫໍ່, ບໍ່ມີເດືອຍ. ປາຍຂອງເສົາເກສອນເປັນຮູບໝວກເຫຼັກ, ມີຕິ່ງໃຫຍ່ 2 ອັນ. ກຸ່ມເມັດລະອອງຈຳນວນ 4, ແຂງ, ບໍ່ມີກ້ານ, ເຕົ້າໄຂ່ມີກ້ານ, ມີວິຊີດີອ້ອມຂະໜາດນ້ອຍຫຼາຍ.

ການແຈກຢາຍ: ພົບຢູ່ເອເຊຍຕາເວັນອອກສ່ຽງໃຕ້ສ່ວນແຜ່ນດິນໃຫຍ່, ຢູ່ແຫຼມມາເລເຊຍ, ບອກເນອ, 2 ຊະນິດ; 1 ຊະນິດຢູ່ໄທ, 1 ຊະນິດຢູ່ຫວຽດນາມ, ສ່ວນຢູ່ລາວ ຫຼື ກຳປູເຈຍຍັງບໍ່ທັນໄດ້ເກັບກຳ.

ນິເວດ: ເປັນພືດອາໃສບ່ອນຄ້ຳ ໃນປ່າເຂດຕ່ຳ ແລະ ເຂດພູຕ່ຳ.

